# ພະຈັນເທິງໜ້ານ້ຳ

## ໂຮມເລື່ອງສັ້ນປະທັບໃຈຈາກຍີ່ປຸ່ນ



ສະເຫນີໂດຍ ອຸທິນ ບຸນຍາວົງ

# ພະຈັນເທິງໜ້ານ້ຳ

## ໂຮມເລື່ອງສັ້ນປະທັບໃຈຈາກຍີ່ປຸ່ນ


ສະເຫນີໂດຍ

**ອຸທິນ ບຸນຍາວົງ**



ອຸປະຖຳໂດຍ

**ມຸນນິທິໂຕໂຢຕາ**

**THE TOYOTA FOUNDATION**

1999

# ພະຈັນເທິງໜ້ານ້ຳ

ໂຮມເລື່ອງສັ້ນປະທັບໃຈຈາກຍີ່ປຸ່ນ

ສະເຫນີໂດຍ : ອຸທິນ ບຸນຍາວົງ

ຜູ້ແປ : ອຸທິນ ບຸນຍາວົງ
ເລໂກະ ອູເອດະ

ພິມດີດ/ຈັດໜ້າ : ມາລີ ທອງທຸມມາ

ຈາກປຶ້ມ : Modern Japanese Stories - An Anthology
edited by Ivan Morris; illustrated by Masakazu Kuwata. CHARLES E. TUTTLE COMPANY

ພິມທີ່ ເຄ - ເອັສ ການພິມ ໂທ: 222759

ຕາມ : ລອພ 21/ພທປ 210499

ພິມເທື່ອທຳອິດ ພຶດສະພາ 1999

ຈຳນວນພິມ 1.000 ຫົວ

ສະຫງວນລິຂະສິດໂດຍ **ອຸທິນ ບຸນຍາວົງ**

ອຸປະຖຳໂດຍ **ມູນນິທິ ໂຕໂຢຕາ**

**The Toyota Foundation**

# ເຖິງຜູ້ອ່ານ

ເລື່ອງສັ້ນຍີ່ປຸ່ນ ທີ່ສະເຫນີຕໍ່ທ່ານຜູ້ອ່ານໃນປື້ມຫົວນີ້ ກໍ່ວ່າເປັນເລື່ອງເດັ່ນ ຫລື ເປັນຕົວແທນໄດ້ສ່ວນຫນຶ່ງ ຂອງວັນນະຄະດີຍີ່ປຸ່ນ. ທຸກເລື່ອງໄດ້ຮັບການແປເປັນພາສາຕ່າງປະເທດ, ໂດຍສະເພາະຈັດລວມຢູ່ໃນຊຸດວັນນະກໍາແປ ທີ່ຮັບຮູ້ໂດຍອົງການຢູເນສະໂກ (UNESCO) ໃນຖານະເປັນຕົວ ແທນຂອງວັນນະກໍາຍີ່ປຸ່ນ. ປື້ມຫົວນີ້ ກໍ່ວ່າເປັນການເລີ່ມຕົ້ນສະເຫນີ ວັນນະກໍາຍີ່ປຸ່ນ ໂດຍສະເພາະເລື່ອງສັ້ນ, ເຖິງແມ່ນວ່າຈໍານວນເລື່ອງບໍ່ຫລາຍ, ແຕ່ການໃຫ້ໂອກາດແກ່ນັກອ່ານຊາວລາວໄດ້ຮູ້ຈັກ ຫລື ເຂົ້າເຖິງວັນນະຄະດີຍີ່ປຸ່ນນັ້ນ ເປັນເລື່ອງສໍາຄັນ. ຜ່ານມາກໍມີການພິມ ປື້ມຍີ່ປຸ່ນເປັນພາສາລາວ ແຕ່ເປັນຈໍາພວກນິທານ ຫລືເລື່ອງສໍາລັບ ເຍົາວະຊົນເປັນສ່ວນໃຫຍ່, ສ່ວນເລື່ອງສັ້ນສໍາລັບນັກອ່ານທົ່ວໄປ ເກືອບບໍ່ມີເລີຍ. ປື້ມຫົວນີ້ ຈຶ່ງເປັນການຕອບສະຫນອງຄວາມຮຽກຮ້ອງຂອງນັກອ່ານຊາວລາວ ໂດຍສະເພາະນັກສຶກສາທີ່ສົນໃຈໃນ ວັນນະຄະດີຕ່າງປະເທດ.

ໂຮມເລື່ອງສັ້ນຊຸດນີ້ ໄດ້ຮັບການອຸປະຖໍາດ້ານການແປ ແລະດ້ານການພິມ ໂດຍມູນນິທິໂຕໂຢຕາແຫ່ງປະເທດຍີ່ປຸ່ນ. ຜູ້ດໍາເນີນໂຄງການຂໍຂອບໃຈ ມູນນິທິນີ້ເປັນຢ່າງສູງ, ແລະ ຫວັງວ່າປື້ມຫົວນີ້ ຈະຊ່ວຍໃຫ້ປະຊາຊົນລາວເຂົ້າໃຈວັນນະຄະດີ ແລະ ວັດທະນະທໍາຍີ່ປຸ່ນຫລາຍຂຶ້ນ.

**ອຸທິນ ບຸນຍາວົງ**

## ສາລະບານ


ໃນຜ້າອ້ອມ ( Swaddling Clothes ) 1
**ມິຊິມະ ຢູກິໂອະ.** Mishima Yukio

ທ້າວເຊເບກັບຫມາກນ້ຳເຕົ້າ (ແປຈາກພາສາຍີ່ປຸ່ນ Seibei to Hyotan ) 11
**ຊິກະ ນາໂອຢະ.** Shiga Naoya

ການປັບປຸງ ( Under Reconstruction ) 19
**ໂມຣິ ໂອກາອິ** Mori Ogai

ດອກໄອ່ມຸກປ່ຽນສີ ( Hydrangea ) 31
**ນາງາອິ ກາຟູ.** Nagai Kafu

ນາງໃນອູບແກ້ວ ( In a small Art Gallery ) 56
**ນາງາອິ ທັດຊຸໂອະ.** Nagai Tatsuo

ພະຈັນເທິງໜ້ານ້ຳ ( The moon on the water ) 66
**ຄາວະບາຕະ ຢາສຸນາຣິ.** Kawabata Yasunari

ດອກຊຸບາກິ ( The Camelia ) 83
**ຊາໂຕມິ ຕົນ** Satomi Ton

ຈົດຫມາຍໃນຖັງຊີມັງ (Letter found in a cement-barrel) 90
**ຮາຢາມະ ໂຢຊິກິ.** Hayama Yoshiki

ໃນກາງເມືອງ ( Downtown ) 98
**ຮາຢາຊິ ຟູມິໂກະ** Hayashi Fumiko

ລົດພະລັງຖ່ານ ( The Charcoal Bus ) 122
**ອິບຸເຊະ ມາສຸຈິ** Ibuse Masuji

# ໃບຜ້າອ້ອມ

ໂດຍ ***ມິຊິມະ ຢູກິໂອະ***

ຜົວຂອງໂຕຊິໂກະນັ້ນ ຄານຳແຕ່ວຽກຢູ່ເລີຍໆ. ແມ່ນແຕ່ຄືນນີ້ ເຂົາກໍຕ້ອງຟ້າວໄປຕໍ່ ເພາະມີນັດໄວ້ແລ້ວ ແລະ ປ່ອຍໃຫ້ເມຍຂີ່ລົດຕັ໊ກ ຊີ້ກັບເມືອເຮືອນຄົນດຽວ. ມັນກໍເປັນແນວນັ້ນແຫລະ ເມື່ອໄປແຕ່ງດອງ ກັບສິລະປິນນັກສະແດງ ທັງເປັນຄົນເຈົ້າຊູ້ທ່າທາງດີ.

ໂຕຊິໂກະຄິດໄປແບບໂງ່ໆ ໂດຍກະເອົາວ່າຜົວຈະຢູ່ກັບເຮືອນກັບ ຊານໃນຍາມກາງຄືນ, ແຕ່ຜູ້ ເປັນຜົວກໍຄວນຈະຮູ້ວ່າ ຄືນນີ້ນາງບໍ່ຢາກ ກັບເຮືອນຄົນດຽວເລີຍ - ເຮືອນຊຶ່ງເບິ່ງແລ້ວ ບໍ່ເປັນຕາຢູ່ ທັງນີ້ເພາະ ເຄື່ອງພາຍໃນມີແຕ່ແບບຕາເວັນຕົກ, ສ່ວນພື້ນຊ້ຳມີແຕ່ຮອຍເລືອດ ແປດເປື້ອນ.

ນາງເປັນຄົນມັກຕົກໃຈອ່ອນໄຫວງ່າຍມາຕັ້ງແຕ່ນ້ອຍ; ເພາະ ນິໄສຕື່ນກັງວົນເປັນປະຈຳ ນີ້ແຫລະ ນາງຈຶ່ງບໍ່ຕຸ້ຍຄືເຂົາ. ແມ່ນແຕ່ດຽວນີ້ ນາງເປັນຜູ້ໃຫຍ່ເຕັມຄີງແລ້ວ ແຕ່ກໍຍັງຄີງບາງຮ່າງນ້ອຍ ຫລາຍກວ່າ

ທີ່ຈະມີເນື້ອມີໜັງສົມບູນ. ການມີຈິດໃຈທີ່ກະທົບກະເທືອນງ່າຍ ຂອງນາງນັ້ນ ແມ່ນແຕ່ຄົນທີ່ບໍ່ລຶ້ງກັນ ກໍຍັງຮູ້ໂລດ.

ຄືນນີ້ ໂຕຊິໂກະໄປຫາຜູ້ເປັນຜົວຢູ່ບາເຕັ້ນລຳໃນຕອນຫົວຄ່ຳ ແລ້ວນາງກໍເກືອບຫົວໃຈຢຸດ ເຕັ້ນ ເມື່ອພົບວ່າ ຜົວພວມເວົ້າ "ເລື່ອງນັ້ນ" ສູ່ໝູ່ຟັງຢູ່. ເຂົາຢູ່ໃນທ່ານັ່ງດູດຢາພົ່ນຄວັນກຸ່ມໆ ນຸ່ງເຄື່ອງປານ ຄົນມາຈາກອາເມລິກາແທ້ໆ ຈົນນາງເຫັນເຂົາເກືອບວ່າເປັນຄົນແປກໜ້າໄປ.

"ມັນກໍໂພດອີ່ຫລີເວີ້ຍ ! " ເຂົາເລົ່າທັງເຮັດທ່າທາງ ປານວ່າຕັ້ງໃຈຈະຊວງເສັງກັບສຽງຂອງວົງດົນຕີ. "ຄົນລ້ຽງ ລູກໃຫ້ພວກເຮົາຄົນໃໝ່ ມາຈາກສຳນັກງານຈັດຫາວຽກງານ, ມາຮອດທຳອິດ ກໍເຫັນທ້ອງສວດອື່ງລື່ງ ປານວ່າ ຍັດໝອນໄວ້ໃຕ້ເສື້ອກິໂມໂນະເອົາໂລດ. ສົມພໍວ່າເປັນຫຍັງ ຢູ່ໄປຢູ່ໄປຈຶ່ງເຫັນລາວກິນຫລາຍກວ່າພວກເຮົາກິນລວມກັນທັງໝົດເຮືອນເລີຍ. ກິນເຂົ້າແຕ່ລະເທື່ອ ເອົາຈົນກ້ຽງຖ້ວຍກ້ຽງຈານ, ແລ້ວລາວກໍເວົ້າວ່າທີ່ຕົນເອງກິນຫລາຍ ກໍ ເພາະເປັນໂລກ "ກະເພາະລື່ງ" ວ່າຊັ້ນ. ຕົກມາຮອດຫວ່າງມື້ຊືນ ຢູ່ບໍ່ຢູ່ກໍມີສຽງໂອຍຄາງດັງມາແຕ່ຫ້ອງເດັກນ້ອຍ, ເຮົາຟ້າວຫລູບເຂົ້າໄປກໍເລີຍເຫັນຜູ້ກ່ຽວໝູບຢູ່ກັບພື້ນ ທັງຮ້ອງ ທັງເອົາມືລູບທ້ອງເປັນປ່ອນໆຢູ່. ສ່ວນລູກເຮົານອນດີ້ນແດ່ວໆຢູ່ຕຽງ ທັງຮ້ອງໄຫ້ແງ້ໆດ້ວຍຄວາມຕົກໃຈ. ເບິ່ງມັນສັບສົນວຸ່ນວາຍໄປໝົດ !"

"ເປັນອັນວ່າ ຄວາມລັບກໍຖືກເປີດເຜີຍຕອນນີ້ !" ໝູ່ຄົນໜຶ່ງຊຶ່ງເປັນນັກສະແດງຮູບເງົາຄື ກັນກັບຜົວຂອງໂຕຊິໂກະດອດຂຶ້ນ.

"ກໍຊິຊັ້ນຕວ່າ ! ເຮົາຕົກໃຈແຮງ ເພາະມົວໄປເຊື່ອເລື່ອງໂລກກະເພາະຂອງລາວເອົາແທ້ເອົາວ່າ. ແຕ່ເຮົາກໍຟ້າວຣື້ຜ້າພົມຜືນງາມອອກ, ແລ້ວເອົາຜ້າອື່ນມາປູໃຫ້ລາວນອນ, ເບິ່ງລາວຮ້ອງສຽງດັ່ງລັບທິບ. ກວ່ານາຍຫມໍຈະມາຮອດ ເດັກກໍອອກມົ້ມທ້ອງແມ່ແລ້ວ, ຫ້ອງຈຶ່ງ ເປື້ອນເລືອດໄປທົ່ວ ປານວ່າ ໂຮງຂ້າສັດເອົາໂລດ."

"ເປັນຊັ້ນຕື ! " ຫມູ່ອີກຄົນຫນຶ່ງເວົ້າເສີມຕື່ມ ແລ້ວທັງຫມົດກໍເລີຍຫົວກັນໂຄບໆ.

ໂຕຊິໂກະ ຮູ້ສຶກເຄືອງໆ ເມື່ອໄດ້ຍິນຜົວເອົາເລື່ອງເປັນຕາຫນ່າຍດັ່ງນີ້ ມາເລົ່າພັນລະນາ ໃຫ້ເປັນເລື່ອງຕະຫລົກມ່ວນຊື່ນໄປ. ນາງຫລັບຕາລົງແລ້ວກໍຫລິງເຫັນພາບແອນ້ອຍເກີດໃຫມ່ ນອນຢູ່ຕໍ່ຫນ້າ. ເທິງພື້ນໃນຫ້ອງນັ່ງຫລິ້ນມີຮາງ ນ້ອຍໆຫຸ້ມດ້ວຍເຈ້ຍ ຫນັງສືພິມທີ່ເປື້ອນເລືອດ !

ນາງຮູ້ຄັກແນ່ວ່າ ນາຍຫມໍເຮັດແບບນີ້ ແມ່ນໂດຍຕັ້ງໃຈ ເພາະນາຍຫມໍເອງນັ້ນຄຶດຊັງຫນັງຫນ້າແມ່ຍິງໃຈງ່າຍທີ່ມີລູກໂດຍບໍ່ມີພໍ່ຈຶ່ງສັ່ງໃຫ້ຜູ້ຊ່ວຍເອົາເຈ້ຍຫນັງສືພິມມາຫໍ່ແອນ້ອຍ ແທນຜ້າອ້ອມ. ນາງເຫັນວ່າ ການເຮັດແບບນີ້ ໂຫດຫ້ຽມເກີນໄປສຳລັບເດັກເກີດໃຫມ່, ດັ່ງນີ້ ນາງຈຶ່ງພະຍາຍາມຂົ່ມຈິດຂົ່ມໃຈໃຫ້ເຊົາອະເຫຍືອງ ແລ້ວໄປເອົາຜ້າທີ່ອ່ອນນຸ່ມຜືນໃຫມ່ໆ ຈາກຕູ້ມາຫໍ່ຫຸ້ມແອນ້ອຍ ແລ້ວອູ້ມໄປວາງລົງຕັ່ງນອນ. ນາງເຮັດໄປດັ່ງນີ້ ກໍຕໍ່ເມື່ອຜູ້ ເປັນຜົວໄດ້ອອກຈາກເຮືອນໄປແລ້ວ. ນາງບໍ່ກ້າບອກໃຫ້ຜົວຮູ້ເລີຍ ເພາະຢ້ານຜົວເວົ້າໃຫ້ວ່ານາງເປັນຄົນໃຈອ່ອນ ມີແຕ່ສົງສານຄົນອື່ນຈົນເກີນໄປ. ແນວໃດກໍຕາມພາບເຫດການທັງ ຫມົດກໍຍັງປາກົດຢູ່ໃນຫ້ວງນຶກຂອງນາງ, ແລະ ຄືນນີ້

ນາງກໍນັ່ງຊຶງ ເພາະຄິດເຫັນພາບຍ້ອນຫລັງ ທັງທີ່ວົງດົນຕີແຈ໊ສນັ້ນດັງອຶກກະທຶກ ແລະ ຜູ້ຜົວກໍຍັງເວົ້າລົມກັບຫມູ່ເພື່ອນຢູ່. ນາງຮູ້ດີວ່າຈະບໍ່ລືມໄດ້ຈັກເທື່ອ ພາບຂອງແອນ້ອຍເປື້ອນ ເລືອດນອນອິດ ຢູ່ໃນທໍ່ເຈ້ຍຫນັງສືພິມ ທີ່ພື້ນຫ້ອງນັ້ນໄດ້ເລີຍ, ມັນຄືໂຮງຂ້າສັດອີ່ຫລີ. ໂຕຊິໂກະ ຜູ້ມີຊີວິດອັນອົບອຸ່ນແວດລ້ອມໄປ ດ້ວຍຄວາມອຸດົມສົມບູນຕະຫລອດມາຮູ້ສຶກອີ່ຕົນສົງສານແອນ້ອຍຜູ້ອາພັບຄົນນີ້ທີ່ສຸດ.

"ເຮົາຜູ້ດຽວແທ້ໆ ທີ່ໄດ້ເຫັນຄວາມອັບໂຊກຂອງແອນ້ອຍ" ນາງຮ່ຳຮອນກັບຕົວເອງ. "ຜູ້ເປັນແມ່ບໍ່ໄດ້ເຫັນເລີຍ ທີ່ເຂົາເອົາລູກໃສ່ທໍ່ຫນັງສືພິມນອນໄວ້, ສ່ວນແອນ້ອຍ ກໍບໍ່ຮູ້ເລື່ອງຮູ້ລາວ. ມີແຕ່ເຮົາຜູ້ດຽວເທົ່ານັ້ນ ທີ່ຈະຕ້ອງຈື່ຈຳພາບອັນຫນ້າອະເຫຍືອງນີ້ໄປຈົນຕາຍ. ເມື່ອແອນ້ອຍໃຫຍ່ຂຶ້ນ ແລະ ຢາກຮູ້ວ່າ ຕົນເກີດມາຢ່າງໃດ ກໍຈະບໍ່ມີໃຜບອກໄດ້ເລີຍ ກ້າວ່າເຮົາເອງ ກໍເປັນຄົນຫນຶ່ງ ທີ່ອັດອຳໄວ້. ມັນກໍແປກທີ່ເຮົາມີຄວາມຮູ້ສຶກວ່າ ຕົນເອງມີສ່ວນຜິດນຳ. ແຕ່ແນວໃດກໍຕາມເຮົາເອງກໍໄດ້ອູ້ມແອນ້ອຍຂຶ້ນມາຈາກພື້ນ ເອົາຜ້າອ້ອມມາຕຸ້ມໃຫ້ຢ່າງດີແລ້ວເອົາວາງລົງຕັ່ງນວມ... ຊິເອົາປານໃດອີກ !"

ສອງຜົວເມຍພາກັນອອກມາຈາກບາເຕັ້ນລຳ ຝ່າຍເມຍກ້າວຂຶ້ນລົດຕັ໊ກຊີ້ ຊຶ່ງຜົວເອີ້ນໃຫ້.

"ໄປສົ່ງທີ່ອູຊີໂກເມະ " ຜົວບອກຄົນຂັບລົດ ແລ້ວອັດປະຕູໃຫ້ພ້ອມ.

ໂຕຊິໂກະ ອ່ວາຍຫນ້າໄປຫາຜົວທີ່ພວມ ຍິ້ມຢູ່ເຜີຍໃຫ້ເຫັນແຂ້ວຂາວເຕັມປາກ. ນາງນັ່ງລົງອີງເບາະນວມ ດ້ວຍຄວາມຮູ້ສຶກຫມົ່ນຫມອງເລັກໆຢູ່ໃນໃຈ ທັງນີ້ ຍ້ອນສຳນຶກວ່າ ຊີວິດຄູ່ ຂອງນາງຢູ່ໃນກຸາ

ນະສະດວກສະບາຍເກີນໄປ. ມັນຍາກທີ່ຈະພັນລະນາອອກມາເປັນຄຳເວົ້າ, ນາງຈຶ່ງຄິດຢູ່ແຕ່ໃນໃຈ. ນາງຫລຽວຫລັງໄປເບິ່ງຜົວອີກເທື່ອຫນຶ່ງ ເຫັນຜົວຍ່າງວັບໆໄປຫາລົດທີ່ຈອດຢູ່, ບໍ່ດົນຮ່າງຂອງຜົວທີ່ນຸ່ງເສື້ອຕາກາໂລ ກໍລັບຫາຍໄປໃນທ່າມກາງຜູ້ຄົນ ທີ່ຍ່າງ ໄປມາຍ່າງສັບສົນ.

ລົດຕຸ໊ກຊີ້ ແລ່ນໄປຕາມກະຫນົນຊຶ່ງສອງຂ້າງທາງ ມີບາຕັ້ງລຽນກັນໄປ, ຕໍ່ມາກໍຜ່ານໂຮງມະຫໍລະສົບ ຊຶ່ງຜູ້ຄົນຍັງພາກັນຍືນອໍຢູ່ທາງຍ່າງ. ເຖິງແມ່ນວ່າ ການສະແດງຫາກໍຢຸດລົງ ແຕ່ໄຟຟ້າກໍມອດລົງຫມົດແລ້ວ, ແກວນີ້ ຈຶ່ງມືດໆມົວໆ ເລີຍພາໃຫ້ເຫັນດອກຊາກຸລະ ທຽມທີ່ເອ້ຢ້ອງໄວ້ ເປັນພຽງເຈ້ຍສີຂາວເທົ່ານັ້ນເອງ.

"ກ້າຫາກວ່າເດັກນ້ອຍຜູ້ນີ້ ບໍ່ຮູ້ຈັກສະພາບການເກີດຂອງຕົວເອງກໍຕາມ, ແຕ່ໃຫຍ່ມາ ມັນກໍຄົງບໍ່ກ້າວໄປໄກຢູ່ຫັ້ນແຫລະ." ນາງຄຶດກັບໄປຫາເລື່ອງເກົ່ານີ້ອີກ. "ເຈ້ຍຫນັງສືພິມ ເປື້ອນເລືອດທີ່ໃຊ້ແທນຜ້າອ້ອມຈະເປັນສັນຍະລັກຂອງຊີວິດເຂົາໄປຕະຫລອດຊາດເລີຍ. ແຕ່ເປັນຫຍັງເຮົາຈຶ່ງຕ້ອງມາເປັນຫ່ວງເປັນໃຍກັບເຂົາແທ້ລະ. ອາດເພາະວ່າເຮົາວິຕົກກັງວົນ ບໍາອະນາຄົດຂອງລູກເຮົາເອງຊັ້ນຕີ້. ສົມມຸດວ່າອີກຊາວປີຂ້າງຫນ້າ ລູກຊາຍເຮົາໃຫຍ່ເປັນບ່າວ ມີການສຶກສາດີ, ແລ້ວມື້ຫນຶ່ງໂຊກຊາຕາພາໃຫ້ໄປເຈີເດັກນ້ອຍຄົນນີ້ ຊຶ່ງມີອາຍຸສ່ຳຄຽວກັນ ແລ້ວກໍບັງເອີນເດັກນ້ອຍອາພັບຄົນນີ້ ເອົາມີດແທງລູກເຮົາ..."

ຄືນນັ້ນ ຟ້າມືດຄື້ມ, ເປັນຄືນເດືອນເມສາ ທີ່ອາກາດອົບອຸ່ນ, ແຕ່ຄວາມຄິດເລື່ອນລອຍ ເຮັດໃຫ້ໂຕຊິໂກະ ຮູ້ສຶກເຢັນເຢືອກ ແລະຫົດຫູ່ໃຈຈົນຕົນຕົວສັ່ນ.

"ບໍ່ໄດ້ ! ເຮົາຕ້ອງຊ່ອຍລູກເຮົາເມື່ອຮອດຕອນນັ້ນ" ນາງຄຶດຢູ່ໃນໃຈ " ອີກ 20 ປີ, ອາຍຸ ຂອງເຮົາກໍຕ້ອງ 43 ເຮົາຈະໄປນຳຫາທ້າວນັ້ນໃຫ້ພໍ້ ແລ້ວເລົ່າເລື່ອງໃຫ້ຟັງ ແຕ່ຕົ້ນຈົນຮອດ ປາຍ. ເຮົາຈະບອກທ້າວນຳວ່າ ເຮົາເອົາທ້າວອອກຈາກທໍ່ເຈ້ຍໜັງສືພິມ ແລ້ວເອົາຜ້າອ້ອມ ຕຸ້ມໃຫ້ຢ່າງດີ."

ຕັ໊ກຊີ້ ແລ່ນໄປຕາມກະໜົນທີ່ກວ້າງໃຫຍ່ ທ່າມກາງຄວາມມືດ. ສອງຂ້າງທາງເປັນ ສວນສາທາລະນະດ້ານໜຶ່ງ ແລະ ອີກດ້ານໜຶ່ງ ເປັນຄູອ້ອມລາຊະວັງ. ໂຕຊິໂກະ ແນມສາຍຕາໄປໄກໆ ເບິ່ງແສງໄຟ ທີ່ເປັນຍິບຍັບຕາມອາຄານສູງໆ.

"ອີກ 20 ປີຂ້າງໜ້າ ທ້າວນ້ອຍຜູ້ອັບໂຊກນີ້ ຈະມີຊີວິດທີ່ຕໍ່າຕ້ອຍ, ລໍາບາກ ບໍ່ມີເພື່ອນມິດ ແລະ ພີ່ນ້ອງ. ໃນເມື່ອເກີດມາຢ່າງນີ້ແລ້ວ ຊິໃຫ້ດີຈັ່ງໃດໄດ້. ທ້າວຈະເລາະລ່ອງໄປຢ່າງໄຮ້ຈຸດໝາຍປາຍທາງ ທັງດ່າໂຄດພໍ່ໂຄດແມ່ທີ່ເຮັດໃຫ້ເອົາເກີດມາ."

ໂຕຊິໂກະ ມັກຄຶດໄປໃນແງ່ຮ້າຍສະເໝີ. ນາງມັກຄຶດແບບນີ້ ອັນພາໃຫ້ທໍລະມານຈິດໃຈ ຢູ່ເລີຍໆ. ລົດຕັ໊ກຊີ້ແລ່ນຜ່ານບໍລິເວນສະຖານ ທູດອັງກິດໄປ, ແລ້ວນາງກໍເຫັນແຖວຕົ້ນຊາກຸລະ ອັນລືຊື່ ເຜີຍຄວາມ ງາມອັນບໍລິສຸດ ປາກົດເດັ່ນຢູ່ຕໍ່ໜ້າ. ນາງຕັດສິນໃຈບອກໃຫ້ລົດຢຸດ ປຸ໊ບ ປັ໊ບ ເນື່ອງຈາກຄຶດຢາກເລາະຊົມດອກໄມ້ທ່າມກາງຄືນ ເດືອນມືດ ຕາມລໍາພັງ. ນັບເປັນການ ຕັດສິນໃຈທີ່ຜິດທໍາມະດາສໍາລັບ ແມ່ຍິງ ທີ່ມັກຕື່ນຕົກໃຈໄວຄືນນີ້, ແຕ່ຂະນະນັ້ນ ນາງພວມຢູ່ໃນສະພາບອາລົມ ທີ່ສັບສົນປັ່ນປ່ວນ ແລະ ບໍ່ຢາກກັບເມືອເຮືອນ. ຄືນນີ້ ນາງມີຄວາມຄຶດ ສະຫລອກກອກວົນວຽນຢູ່ໃນຈິດໃຈນໍາດ້ວຍ.

ຮ່າງຄືງອັນສູງສະຫງ່າ ຍ່າງຂ້າມກະຫນົບກວ້າງໃຫຍ່ໄປຄົນດຽວ. ຕາມປົກກະຕິນັ້ນ ໂຕຊິໂກະ ຈະຂ້າມກະຫນົບໂດຍຈອງແຂນຂອງຫມູ່ໄປ, ແຕ່ວ່າ ຄືນນີ້ນາງຍ່າງລັດຂ້າງລັດຫລັງ ລົດໄປຍ່າງຄ່ອງແຄ່ວ ແລະ ພຽງບຶດດຽວກໍມາຮອດສວນ ທີ່ມີເຂດຕິດກັບຄູອ້ອມລາຊະວັງ. ສວນນີ້ ມີຊື່ວ່າ ຊິໂດຣິງະ ຟຸຊິ ຫລື ປ່າຂອງນົກພັນໂຕ.

ຄືນນີ້ ສວນທັງຫມົດກາຍເປັນປ່າດອກຊາກຸລະ, ມັນບານເຮືອງເຮື່ອເປັນພວງຂາວເປືອ ຢູ່ໃນເງົາພຸ່ມພູ່ຂອງຄືນເດືອນແຮມ. ໂຄມເຈ້ຍທີ່ໄຕ້ໄວ້ລະຫວ່າງຕົ້ນໄມ້ນັ້ນ ມອດຫມົດແລ້ວ ຍັງເຫລືອແຕ່ໄຟຟ້າຫລອດນ້ອຍໆ ສີແດງເຫລືອງຂຽວ ຮຸ່ງພໍສະຫລົວຢູ່ຕາມພົ້ວດອກໄມ້. ຂະນະນີ້ ເປັນເວລາກາຍສິບໂມງໄປດຶກແລ້ວ. ຜູ້ຄົນທີ່ມາຊົມເບິ່ງດອກຊາກຸລະ ຕ່າງພາກັນກັບ ເມືອເກືອບຫມົດ. ພວກທີ່ຍັງເຫລືອ ກໍເລາະໄປເລາະມາ, ບາງທີກໍເຕະແກ້ວເປົ່າອອກໄປຂ້າງທາງ ຫລື ບໍ່ກໍຢຽບຍ່ຳເສດເຈ້ຍຕາມພື້ນໄປ.

"ເຈ້ຍຫນັງສືພິມຕວ່າ ..." ນາງຄິດໄປຫາເຫດການນັ້ນອີກ "ເຈ້ຍມີເລືອດແປດເປື້ອນ ! ຊີວິດຂອງຜູ້ຊາຍຄົນຫນຶ່ງ ຈະພັງທະລາຍລົງແນ່ນອນ ກ້າເຂົາຄືນນັ້ນ ບັງເອີນໄປຮູ້ວ່າເຂົາເອງກຳເນີດຂຶ້ນມາຢ່າງຕ້ອຍຕ່ຳ ເກືອງຂະຫນາດມີເຈ້ຍຫນັງສືພິມຫຸ້ມຫໍ່ ແທນທີ່ຈະແມ່ນຜ້າອ້ອມອັນອ່ອນນຸ່ມ. ສ່ວນເຮົາເອງຊ້ຳຕ້ອງມາປົດອຳຄວາມລັບນີ້ ອັນເປັນສະພາບທີ່ແທ້ຈິງ ກ່ຽວກັບການເກີດຂອງເຂົາໄປຕະຫລອດຊີວິດ."

ໂຕຊິໂກະ ຍ່າງໄປທັງຄິດໄປເລື້ອຍໆ. ຜູ້ຄົນທີ່ຍັງເຫລືອໃຫ້ເຫັນນັ້ນ ສ່ວນຫລາຍເລາະໄປເປັນຄູ່ ແລະ ບໍ່ມີຜູ້ໃດສົນໃຈນາງເລີຍ. ນາງ

ຫລຽວເຫັນຊາຍຍິງຄູ່ຫນຶ່ງ ນັ່ງຮຽງກັນຢູ່ຕັ່ງຫີນ. ທັງສອງພາກັນແນມເບິ່ງນ້ຳ ທ່າມກາງຄວາມມືດ ແທນທີ່ຈະເບິ່ງດອກໄມ້ບານເຕັມຕົ້ນ. ໂຕຊິໂກະ ແນມສາຍຕາໄປຟາກຮ່ອງນ້ຳເບື້ອງນັ້ນ ອັນເປັນເຂດລາຊະວັງ ທີ່ມີຕົ້ນໄມ້ສູງໃຫຍ່. ເງົາຕົ້ນໄມ້ເປັນສີມມືມ ສູງຂຶ້ນໄປເທິງຟ້າ ຍາມລາຕີ. ນາງຍ່າງເລາະໄປຕາມທາງແຄບໆ ລອດກິ່ງດອກຊາກຸລະທີ່ບານເປັນຕາອອນຊອນຢູ່ເທິງຫົວໄປ.

ເມື່ອມາຮອດຕັ່ງຫີນ ທີ່ຕັ້ງຢູ່ບ່ອນລັບຕາ ນາງສັງເກດເຫັນສິ່ງໃດສິ່ງຫນຶ່ງເປັນສີມມືມຢູ່ຕັ່ງນັ້ນ. ທຳອິດນາງຄຶດວ່າ ເປັນກອງດອກໄມ້ກອງຫນຶ່ງ ຫລື ບໍ່ ກໍແມ່ນເຄື່ອງນຸ່ງທີ່ຄົນມາທ່ຽວໄດ້ລືມໄວ້. ແຕ່ເມື່ອຍ່າງເຂົ້າໄປໃກ້ໆ ນາງຈຶ່ງຮູ້ວ່າ ແມ່ນຄົນທີ່ພວມນອນຢູ່. ນາງຄຶດວ່າຄົງແມ່ນພວກຂີ້ເຫລົ້າເມົາຢາ ທີ່ມັກມາອາໄສນອນຕາມບ່ອນສາທາລະນະ, ແຕ່ເມື່ອເບິ່ງຄັກໆແລ້ວ ບໍ່ຄືຊິແມ່ນເພາະມີເຈ້ຍຫນັງສືພິມປົກຄຸມຢູ່ຢ່າງຮຽບຮ້ອຍ, ແລະ ສີຂາວໆ ຂອງເຈ້ຍນັ້ນແຫລະ ທີ່ດຶງຄວາມສົນໃຈຂອງນາງໃຫ້ສັງເກດຄັກໆຕື່ມອີກ. ນາງເຂົ້າໄປຢືນໃກ້ໆຫົງກົ້ມ ລົງເບິ່ງຮ່າງທີ່ນອນຢູ່ຕັ່ງນັ້ນ. ປາກົດວ່າ ເປັນຊາຍນຸ່ງ ເສື້ອຍືດແຂນຍາວ ນອນອົດຢູ່ ໂດຍມີເຈ້ຍຫນັງສືພິມຫລາຍແຜ່ນປູຮອງ ແລະອີກຫລາຍແຜ່ນປົກຄຸມຕົວ. ຊາຍຄົນນີ້ ຄືຈະມາຍຶດເອົາບ່ອນນີ້ເປັນບ່ອນຫລັບນອນ ຕັ້ງແຕ່ຕອນຍ່າງເຂົ້າລະດູບານໃຫມ່ພຸ້ນ ເປັນຕົ້ນມາ.

ໂຕຊິໂກະ ເບິ່ງຜົມຍາວທັງຫຍຸ້ງສັບສົນ ແລະ ບາງບ່ອນກໍຕິດກັນເປັນກ້ອນຂອງຊາຍຄົນນີ້ ດ້ວຍຄວາມຮູ້ສຶກທີ່ບອກບໍ່ຖືກ. ບ່າຂອງເຂົາທີ່ຢູ່ພາຍໃນເສື້ອຍືດ ມີອາການຂຶ້ນລົງຕາມຈັງຫວະຫາຍໃຈບາດ

ໜັກໆ. ສາຍຕາຂອງນາງສອດໄປເຫັນແຜ່ນເຈ້ຍໜັງສືພິມ ທີ່ຮອງຮ່າງອັນຫລັບຢູ່ນັ້ນ ເລີຍກາຍເປັນວ່ານາງເຫັນ ພາບແອ ນ້ອຍເກີດໃໝ່ພວມນອນຢູ່ໃນ "ຜ້າອ້ອມເຈ້ຍ" ທີ່ພື້ນຫ້ອງຂຶ້ນມາທັນໃດ. ນາງເຫັນວ່າຄວາມຮູ້ສຶກສັງຫອນໃນໃຈຂອງຕົນ ກັບກາຍເປັນຄວາມຈິງຂຶ້ນມາແລ້ວ - ໜ້າຜາກຂາວມ້ານຂອງຊາຍທີ່ນອນຢູ່ນັ້ນ ເດັ່ນຢູ່ໃນຄວາມມືດສະຫລົວ, ເປັນໜ້າຜາກຂອງຄົນຍັງໜຸ່ມຢູ່ ແຕ່ກໍມີຮອງຮອຍຂອງຄວາມທຸກຍາກກາກກຳ. ໂສ້ງສີກາກີ ທີ່ເຂົານຸ່ງຢູ່ນັ້ນ ຮື້ຂຶ້ນສູງແດ່ ເລີຍເຫັນຕີນທີ່ບໍ່ມີກຸ໊ງເທົ້າ ມີແຕ່ເກີບກິລາເກົ່າໆເທົ່ານັ້ນ. ນາງເບິ່ງບໍ່ເຫັນໜ້າເຫັນຕາຂອງເຂົາຄັກປານໃດ ເລີຍຄຶດຢາກເຫັນໃຫ້ມັນເຕັມຕາຈົນອົດໄວ້ບໍ່ໄດ້.

ໂຕຊິໂກະ ຍ່າງອ້ອມໄປທາງຫົວ ແລ້ວກົ້ມລົງເບິ່ງ. ຊາຍນັ້ນນອນເອົາໜ້າແນບໃສ່ທ່ອນແຂນທັງສອງເບື້ອງ, ແຕ່ນາງກໍຍັງພໍເຫັນໄດ້ວ່າ ເຂົາຍັງຢູ່ໃນໄວເປັນບ່າວ, ອາຍຸຄົງບໍ່ຫລາຍປານໃດເພາະສັງເກດເຫັນຄິ້ວດຳດົກໜາ ແລະ ດັງຄົມ, ຮີມສົບກໍປາກົດມີຊີວິດຊີວາດ້ວຍພະລັງຂອງຄວາມເປັນບ່າວເຕັມຄີງ. ແຕ່ເພາະນາງຫຍັບເຂົ້າໃກ້ເກີນໄປ ເລີຍໄປຊຸນເຈ້ຍໜັງສື ພິມເກີດສຽງດັງຂຶ້ນ ທ່າມກາງຄວາມງຽບສະຫງັດ. ທັນໃດຊາຍຄົນນັ້ນ ຕື່ນຍຸບ ແລະ ມືນຕາຂຶ້ນ, ເມື່ອເຫັນວ່າມີແມ່ຍິງມາຢືນໃກ້ໆຕົວ ເຂົາກໍຟ້າວລຸກຂຶ້ນນັ່ງປຸ໊ບປັ໊ບ, ຕາໃສໆຈ້ອງເບິ່ງຢ່າງບໍ່ພັບ.

ວິນາທີຕໍ່ມາ ມືອັນມີພະລັງແຂງແຮງກໍຄວ້າຈັບຂໍ້ມືຂອງໂຕຊິໂກະໄວ້ແໜ້ນໆ. ນາງບໍ່ຮູ້ສຶກຫວາດຫວັ່ນໃນໃຈແມ່ນແຕ່ໜ້ອຍ, ບໍ່ຮູ້ສຶກແມ່ນແຕ່ຢາກຂັດຂວາງຕ້ານຕໍ່ເຂົາ ເພື່ອເອົາຕົວຫລຸດພົ້ນ.

ຄວາມຄິດອັນຫນຶ່ງແວັບເຂົ້າສູ່ຫ້ວງນຶກ - ເປັນອັນວ່າ ໃນທີ່ສຸດໄລຍະເວລາຊາວປີທີ່ວ່ານັ້ນ ກໍໄດ້ຜ່ານພົ້ນໄປແລ້ວຊັ້ນຫວະນີ້ !

ປ່າໃນສວນຂອງເຂດລາຊະວັງ ມືດປານກໍາຕາ ທັງມິດງຽບ.

# ທ້າວເຊເບ ກັບ ຫມາກນ້ຳເຕົ້າ

ໂດຍ ***ຊິກະ ນາໂອຢະ***

ນິທານເລື່ອງນີ້ ແມ່ນເລື່ອງທ້າວນ້ອຍຜູ້ຊື່ວ່າ ເຊເບກັບຫມາກນ້ຳເຕົ້າ. ພາຍຫລັງມາ ຄືເມື່ອມີເລື່ອງຕໍ່ໄປນີ້ເກີດຂຶ້ນແລ້ວ. ເຊເບເຊົາຫລິ້ນກັບຫມາກນ້ຳເຕົ້າ. ແຕ່ໃນບໍ່ດົນ ກໍມີອັນມາແທນຫມາກນ້ຳເຕົ້ານັ້ນຄື ການແຕ້ມຮູບ, ປັດຈຸບັນນີ້ ລາວມົວແຕ່ແຕ້ມຮູບ ຄືດັ່ງເຄີຍມົວຫລິ້ນກັບຫມາກນ້ຳເຕົ້າ ເມື່ອຄາວກ່ອນພຸ້ນ.

x x x

ພໍ່ແມ່ຮູ້ດີວ່າ ເຊເບມັກຊື້ຫມາກນ້ຳເຕົ້າມາເລື້ອຍໆ.

ລາວມີຫມາກນ້ຳເຕົ້າທີ່ຍັງມີເປືອກຫຸ້ມຢູ່ປະມານ 10 ຫນ່ວຍ, ລາຄາລະຫວ່າງ 15 ປີ້ ເຖິງ 34 ປີ້ ຕໍ່ຫນ່ວຍ. ລາວເຈາະຮູໃສ່ບ່ອນຂົ້ວຢ່າງລະອຽດ ທັງເອົາແກ່ນອອກຈົນຫມົດ.



ກ່ອນອື່ນ ລາວເອົາໃບຊາມາໂພະໃສ່ຫມາກນ້ຳເຕົ້າ ເພື່ອໃຫ້ກິ່ນ ຂີວຫມົດໄປ, ຫລັງຈາກ ນັ້ນກໍເອົາເຫລົ້າຕິດກົ້ນຈອກທີ່ເຫລືອຈາກພໍ່ ກິນມາເຊັດຖູ.

ເຊເບຫລົງໄຫລນຳຫມາກນ້ຳເຕົ້າເອົາແທ້ໆ. ມື້ຫນຶ່ງ ຂະນະລາວ ຍ່າງໄປຕາມກຸະຫນົນ ແຄມທະເລ, ບັງເອີນສາຍຕາເສືອດໄປພົບສິ່ງ ຫນຶ່ງ ຈົນລາວເອງຕື່ນຍຸບ, ສິ່ງນັ້ນຄືຫົວລ້ານ ຂອງພໍ່ເຖົ້າຄົນຫນຶ່ງ ທີ່ອອກມາຈາກຕູບ ເຊິ່ງປຸກຮຽງກັນຢູ່ແຄມທະເລ. ເຊເບຄິດວ່າຫມາກ ນ້ຳເຕົ້ານີ້ ຈັ່ງແມ່ນໃຫຍ່ພິລຶກ, ຄິດໂດຍທີ່ບໍ່ທັນຮູ້ສຶກຫຍັງ ເມື່ອຮູ້ສຶກແລ້ວ ລາວເອງຕົກໃຈ. ພໍ່ເຖົ້າຜູ້ນັ້ນຍ່າງທັງແກວ່ງຫົວລ້ານ ເຂົ້າຮ່ອມກຸດໄປ. ທັນໃດ ເຊເບຮູ້ສຶກຢາກຫົວ ແລ້ວກໍຫົວ ຂຶ້ນດັງໆຢູ່ຜູ້ດຽວ. ລາວທັງແລ່ນ ທັງຫົວໄປປະມານເຄິ່ງຫລັກ ແຕ່ກໍຍັງບໍ່ເຊົາຫົວ. ຍ້ອນຕິດອົກຕິດໃຈ ເຖິງຂະຫນາດນີ້, ເມື່ອເຫັນຫມາກນ້ຳເຕົ້າຫ້ອຍຢູ່ຕາມຮ້ານ ລາວກໍຕ້ອງ ແວ່ຢືນເບິ່ງ, ເຖິງແມ່ນວ່າຈະເປັນຮ້ານຂາຍເຄື່ອງເກົ່າ ຫລືຂາຍຜັກ ຫລື ຂາຍເຄື່ອງຍ່ອຍ ຫລືຂາຍເຂົ້າຫນົມ ຫລືຂາຍຫມາກນ້ຳເຕົ້າ ໂດຍສະ ເພາະກໍຕາມ.

ເຊເບຍັງເປັນເດັກຊັ້ນປະຖົມ ອາຍຸ 12 ປີ. ຫລັງຈາກເລີກຮຽນ ແລ້ວ ລາວມັກເລາະໄປຕາມໃນເມືອງເພື່ອເບິ່ງຫມາກນ້ຳເຕົ້າ ແທນທີ່ ຈະຫລິ້ນກັບຫມູ່.

ຍາມຕອນຄ່ຳ ລາວນັ່ງຂັດທະຫມາດຢູ່ແຈຫ້ອງນັ່ງຫລິ້ນ ຈັດ ການເຊັດຖູຫມາກນ້ຳເຕົ້າ ແລ້ວກໍເອົາເຫລົ້າຣາຍໃສ່ຫນ້ອຍຫນຶ່ງ, ເອົາຜ້າເຊັດມືຫໍ່ຫຸ້ມ ແລ້ວມ້ຽນໃສ່ໃນກະປ໋ອງ, ຕໍ່ມາກໍ ວາງໄວ້ກ້ອງໂຕະ ອາຍອຸ່ນ ແລ້ວລາວຈຶ່ງເຂົ້ານອນ. ເຊົ້າມື້ຕໍ່ໄປ ລາວລຸກແລ້ວ ກໍເປີດກະ

ປ່ອງ ເບິ່ງໝາກນ້ຳເຕົ້າທັນທີ. ເປືອກໝາກນ້ຳເຕົ້າມີນ້ຳຄ້າຍຄືເຫື່ອອອກມາ. ເຊເບແຍງເບິ່ງ ດົນໆ ຫລັງຈາກນັ້ນ ກໍເອົາເຊືອກມາມັດຫ້ອຍໄວ້ ພໍໃຫ້ກຶກແດດຢູ່ກ້ອງຫລັງຄາ ແລ້ວຈຶ່ງໄປໂຮງຮຽນ.

ເມືອງທີ່ເຊເບຢູ່ນັ້ນ ເປັນເມືອງການຄ້າທີ່ມີທ່າເຮືອ, ເອີ້ນວ່າເປັນເມືອງຢູ່ແຕ່ກໍມີເນື້ອທີ່ນ້ອຍໆ, ຍ່າງໄປປະມານ 20 ນາທີ ກໍສຸດເຂດທາງຍາວຂອງເມືອງ. ເພາະສະນັ້ນ ເຖິງ ແມ່ນວ່າມີເຮືອນຂາຍໝາກນ້ຳເຕົ້າຫລາຍ, ແຕ່ເມື່ອເຊເບຕັ້ງໃຈຍ່າງເລາະເບິ່ງແລ້ວ ລາວກໍຄົງເຫັນໝາກນ້ຳເຕົ້າທັງໝົດ.

ລາວບໍ່ສົນໃຈໝາກນ້ຳເຕົ້າເກົ່າປານໃດ. ລາວສົນໃຈໜ່ວຍທີ່ຍັງມີເປືອກຫຸ້ມ ແລະ ຍິ່ງບໍ່ທັນເຈາະຮູກໍຍິ່ງດີ. ພິເສດໄປກວ່ານັ້ນ ລາວມີແຕ່ໝາກນ້ຳເຕົ້າທີ່ມີຮູບຮ່າງທຳມະດາ.

ພໍ່ຂອງເຊເບເປັນຊ່າງໄມ້. ເມື່ອແຂກທີ່ມາຫາພໍ່ເຫັນເຊເບເຊັດກູໝາກນ້ຳເຕົ້າຢູ່ຂ້າງໆ ພໍ່ແຂກຈຶ່ງເວົ້າວ່າ : "ຍ້ອນເປັນເດັກນ້ອຍຕື້ນໍ້, ສຳລັບລາວແລ້ວ ຖ້າເວົ້າກ່ຽວກັບໝາກນ້ຳເຕົ້າກໍຕ້ອງແມ່ນ ແນວນີ້ ລາວຈຶ່ງຊິມັກ ແມ່ນຕວ່າ"

ພໍ່ລາວວາງໜ້າໄປຫາແລະເວົ້າຢ່າງອາຍໆວ່າ :

"ມັກຫລິ້ນໝາກນ້ຳເຕົ້າ ທັງໆທີ່ຍັງເປັນເດັກນ້ອຍ."

ສ່ວນແຂກກໍເວົ້າວ່າ : "ລູກເອີຍ ! ບໍ່ຄັກເດີ, ມີຫລາຍໜ່ວຍ ແຕ່ບໍ່ເປັນຕາອອນຊອນ, ຄວນຈະຊື້ແນວແປກໆແດ່ ."

ເຊເບເວົ້າຢ່າງບໍ່ຫ່ວງວ່າ : "ຈັ່ງຊີ້ແຫລະ ຈຶ່ງຄັກ."

ພໍ່ເຊເບກັບແຂກລົມກັນເລື່ອງໝາກນ້ຳເຕົ້າຕໍ່.

ພໍ່ເຊເບເວົ້າວ່າ:

"ຫມາກນ້ຳເຕົ້າຂອງບາຄົນທີ່ວາງສະແດງເມື່ອຕອນລະດູບານໃຫມ່ ນັ້ນ ພິລຶກອີ່ຫລີ !"

"ແມ່ນລະ ໃຫຍ່ແທ້ໆ."

"ທັງໃຫຍ່ ທັງຍາວເດີ."

ເຊເບໄດ້ຍິນກໍຄຶດຢາກຫົວ, ເພາະວ່າເມື່ອເຊເບເຫັນຫມາກນ້ຳເຕົ້າຫນ່ວຍນັ້ນພຽງ ຫນ້ອຍດຽວກໍ່ຮູ້ໂລດວ່າ ມັນເປັນຫມາກນ້ຳເຕົ້າທຳມະດາ ແລ້ວລາວກໍອອກຈາກຫັ້ນໄປ. ລາວບໍ່ຮູ້ຊ້ຳວ່າ ບາຄົນແມ່ນໃຜ.

"ຫມາກນ້ຳເຕົ້າຫນ່ວຍນັ້ນບໍ່ຄັກດອກ, ມີແຕ່ໃຫຍ່ຊື່ໆ." ລາວເວົ້າ, ສ່ວນພໍ່ໄດ້ຍິນແລ້ວກໍ ຮ້າຍ ທັງກົ້ງຕາໃສ່.

"ແມ່ນຫຍັງວະ, ບໍ່ເຂົ້າໃຈຫຍັງກໍບໍ່ຕ້ອງເວົ້າ !"

ເຊເບ ບໍ່ເວົ້າຫຍັງອີກພໍຄວາມ.

ມື້ຫນຶ່ງ ໃນເວລາທີ່ເຊເບຍ່າງໄປຕາມຮ່ອມນ້ອຍໆ, ລາວພົບເຫັນຫມາກນ້ຳເຕົ້າ ປະມານ 20 ຫນ່ວຍ ທີ່ຫ້ອຍຢູ່ຂ້າງຮົ້ວ ດ້ານຫລັງຮ້ານນ້ອຍຂອງແມ່ເຖົ້າຄົນຫນຶ່ງ ເຊິ່ງຂາຍຫມາກກະກິແຫ້ງ ແລະ ຫມາກກ້ຽງຢູ່ດ້ານຫນ້າ.

"ຂໍເບິ່ງຫນ້ອຍຫນຶ່ງແດ່." ເຊເບເວົ້າແລ້ວເຂົ້າໄປເບິ່ງແຕ່ລະຫນ່ວຍ. ໃນນັ້ນ ມີຫນ່ວຍຫນຶ່ງ ທີ່ຍາວປະມານຫ້ານິ້ວ ມີຮູບຮ່າງທຳມະດາ, ແຕ່ສຳລັບລາວມັນມີອັນດຶງດູດ.

ລາວຮູ້ສຶກຫົວໃຈຕື່ນເຕັ້ນ ແລະ ຖາມວ່າ :

"ຫນ່ວຍນີ້ລາຄາເທົ່າໃດ ?"

ແມ່ເຖົ້າຕອບວ່າ :

"ເຈົ້າຍັງເປັນເດັກນ້ອຍຢູ່, ຫລຸດໃຫ້ເປັນ 10 ບີ້ສາ."

"ຈັ່ງຊັ້ນ ຢ່າຂາຍໃຫ້ຜູ້ອື່ນເດັດຂາດເດີ, ຊິໄປເອົາເງິນມາດຽວນີ້."

ໃນເວລາບໍ່ດົນລາວກໍແລ່ນກັບມາ ທັງເສົ່າທັງຫນ້າແດງ, ຫລັງຈາກເອົາຫມາກນ້ຳ ເຕົ້າແລ້ວກໍແລ່ນເມືອເຮືອນ.

ພາຍຫລັງນັ້ນມາ ເຊເບຕ້ອງເອົາຫມາກນ້ຳເຕົ້າຕິດໂຕໄປນຳ ສະເຫມີ. ລາວເອົາໄປໂຮງຮຽນນຳ, ບາງເທື່ອລາວເຊັດກູມັນຢູ່ກ້ອງໂຕະ ຂະນະຮຽນຫນັງສື, ຄູປະຈຳຫ້ອງເຫັນດັ່ງນັ້ນ ກໍຮ້າຍຢ່າງໃຫຍ່ ເພາະເປັນຊົ່ວໂມງວິຊາສິລະທຳ.

ສຳລັບຄູທີ່ມາຈາກເມືອງອື່ນແລ້ວ ການທີ່ຄົນພື້ນການເມືອງນີ້ສົນໃຈຫມາກນ້ຳເຕົ້ານັ້ນ ເປັນເລື່ອງທີ່ຍອມຮັບບໍ່ໄດ້. ຄູຜູ້ນີ້ມັກເວົ້າສິລະທຳຂອງຊາມຸໄຣ, ແລະ ເມື່ອນັກສະແດງ ຄູໂມ ເອໂມນມາສະແດງ ເພິ່ນກໍໄປທີ່ໂຮງລະຄອນໃນເຂດບັນເທີງ ເພື່ອຟັງການລຳພື້ນເກືອບທຸກມື້. ເພາະສະນັ້ນ ເພິ່ນບໍ່ຮ້າຍປານໃດ ໃນເມື່ອນັກຮຽນລຳພື້ນດັ່ງ ກ່າວໃນເດີ່ນກິລາ, ແຕ່ໃນເລື່ອງຫມາກນ້ຳເຕົ້າຂອງເຊເບແລ້ວ ເພິ່ນຮ້າຍຈົນສຽງສັ່ນ.

"ໂຕເປັນຄົນຈ້າ, ເປັນຄົນບໍ່ມີອະນາຄົດ." ຄູເວົ້າແລ້ວກໍຄວ້າເອົາຫມາກນ້ຳເຕົ້າ ທີ່ເຊເບເຊັດກູຢ່າງດີນັ້ນໄປເລີຍ.

ເຊເບບໍ່ກ້າຮ້ອງໄຫ້.

ເຊເບກັບເມືອເຮືອນດ້ວຍໃບຫນ້າມ້ານໆ. ລາວນັ່ງຢູ່ໂຕະອາຍອຸ່ນບໍ່ມີເຫື່ອແຮງຈະເຮັດຫຍັງ. ຕໍ່ມາບໍ່ດົນ ຄູກໍຫອບເຄື່ອງມາຫາພໍ່ເຊເບ, ພໍດີກີກຕອນພໍ່ລາວອອກໄປວຽກ.

ຄູເວົ້າທັ່ງໃສ່ແມ່ວ່າ : "ເລື່ອງຈັ່ງຊີ້ ທາງຄອບຄົບຕ້ອງຮັບຜິດຊອບ..."

ແມ່ມີແຕ່ຟັງຢ່າງນອບນ້ອມ.

ເຊເບຮູ້ສຶກຢ້ານ ທັງເສືອດຕາເບິ່ງຄູທັງຄາງກະໄຕສັ່ນ ແລະນັ່ງຫົດຢູ່ແຈຫ້ອງ. ດ້ານຫລັງຂອງຄູມີຫມາກນ້ຳເຕົ້າທີ່ງູແລ້ວຫ້ອຍໄວ້ຢ່າງຫລວງຫລາຍທີ່ເສົາເຮືອນ. ເຊເບເປັນຫ່ວງຢ້ານແຕ່ວ່າເພິ່ນຈະເຫັນຫມາກນ້ຳເຕົ້າ.

ຄູໃຊ້ອາລົມຮ້ອນແຮງຫລາຍ, ສຸດທ້າຍເພິ່ນເລີຍບໍ່ເຫັນຫມາກນ້ຳເຕົ້ານັ້ນຊ້ຳ ແລະກັບໄປເລີຍ. ເຊເບຮູ້ສຶກຫວາງໃຈ, ສ່ວນແມ່ເຊເບສະອື້ນໄຫ້ ແລະ ຈົ່ມວ່າຢ່າງບໍ່ພໍໃຈ.

ໃນບໍ່ດົນ ພໍ່ເຊເບກໍກັບມາແຕ່ບ່ອນເຮັດວຽກ ພໍ່ຮູ້ເລື່ອງນີ້ແລ້ວລາວຈຶ່ງຕີເຊເບຢ່າງຮຸນແຮງ. ພໍ່ດ່າເຊເບວ່າ : "ຈັ່ງແມ່ນຈ້າ, ເຮັດແບບນີ້ບໍ່ມີມື້ຈະເລີນດອກ, ໄປ ! ອອກຈາກເຮືອນ ໄປ !."

ພໍພໍ່ເຊເບເຫັນຫມາກນ້ຳເຕົ້າ ທີ່ຫ້ອຍຢູ່ເສົາເຮືອນ ລາວກໍເອົາໄມ້ແສ້ມາຟາດແຕກເທື່ອລະຫນ່ວຍ. ຫນ້າເຊເບມ້ານລົງ ແລະບໍ່ເວົ້າຫຍັງ.

ຕໍ່ມາຄູເອົາຫມາກນ້ຳເຕົ້າທີ່ຍຶດມາຈາກເຊເບນັ້ນກື້ມໃຫ້ ຕາເກົ້າຜູ້ເບິ່ງແຍງໂຮງຮຽນ ຄືກັບວ່າເປັນສິ່ງທີ່ຫນ້າອະເຫຍືອງ, ຕາເກົ້າເອົາເມືອເຮືອນແລ້ວຫ້ອຍໄວ້ຢູ່ເສົາໃນຫ້ອງນ້ອຍໆມືດໆ.

ປະມານ 2 ເດືອນຜ່ານໄປ, ຕາເກົ້າບໍ່ມີເງິນໃຊ້, ລາວຄິດຢາກຂາຍຫມາກນ້ຳເຕົ້າ ໃນລາຄາເທົ່າໃດກໍໄດ້, ລາວຈຶ່ງເອົາໄປໃຫ້ຮ້ານຂາຍເຄື່ອງເກົ່າເບິ່ງ. ເຈົ້າຂອງຮ້ານພິຈາລະນາເບິ່ງຢ່າງລະອຽດ,

ຫລັງຈາກນັ້ນກໍເຮັດໜ້າເສີຍໆ ຍື່ນໝາກນ້ຳເຕົ້າຄືນ ແລ້ວເວົ້າວ່າ :

"ກ້າວ່າລາຄາ 5 ເຢັນກໍຊິເອົາໄວ້."

ຕາເກົ້າຕົກໃຈ, ແຕ່ລາວເປັນຄົນສະຫລາດ ຈຶ່ງເຮັດໜ້າເສີຍແລ້ວຕອບວ່າ :

"ກ້າ 5 ເຢັນ, ຊິບໍ່ມີໃຜຂາຍມັນດອກ."

ເຈົ້າຂອງຮ້ານຂຶ້ນລາຄາເປັນ 10 ເຢັນທັນທີ, ແຕ່ຕາເກົ້າບໍ່ຍອມ. ສຸດທ້າຍ ຮ້ານຂາຍ ເຄື່ອງເກົ່າໄດ້ຊື້ໝາກນ້ຳເຕົ້າ ໃນລາຄາ 50 ເຢັນ.

ຕາເກົ້າດີໃຈຢູ່ເລີກໆ ຄືກັບວ່າໄດ້ຮັບເງິນເດືອນເທົ່າກັບ 4 ເດືອນຂອງນາຍຄູ ແຕ່ລາວເຮັດທ່າທາງເສີຍ ແລະ ບໍ່ໃຫ້ທັງນາຍຄູ ແລະ ທັງເຊເບຮູ້ເລື່ອງນີ້, ເພາະສະນັ້ນຈຶ່ງບໍ່ມີໃຜຮູ້ເລີຍວ່າ ໝາກນ້ຳເຕົ້າໄປເຖິງໃສແລ້ວ. ແຕ່ຕາເກົ້າກໍຄິດບໍ່ເຖິງວ່າ ເຈົ້າຂອງຮ້ານຂາຍເຄື່ອງເກົ່າ ໄດ້ຂາຍໝາກນ້ຳເຕົ້າໃຫ້ເສດຖີຢູ່ໃນເມືອງໄປໃນລາຄາ ຕັ້ງ 600 ເຢັນ.

× × ×

ປັດຈຸບັນນີ້ ເຊເບມືວນຳແຕ່ການແຕ້ມຮູບ, ເມື່ອເຊເບແຕ້ມຮູບ, ລາວບໍ່ມີຄວາມຮູ້ສຶກທີ່ເປັນອະຄະຕິຕໍ່ຄູ ຫລື ຕໍ່ພໍ່ທີ່ໄດ້ທັບໝາກນ້ຳເຕົ້າອັນແສນແພງຂອງລາວແຕກມຸ່ນໄປຫລາຍໜ່ວຍ.

ສ່ວນພໍ່ລາວເລີ່ມຈົ່ມວ່າ ແຮງຂຶ້ນໆ ທີ່ເຊເບມືວແຕ້ມຮູບ.

ແປໂດຍ **ເລໂກະ ອູເອດະ**

ຮຽບຮຽງໂດຍ **ອຸທິນ ບຸນຍາວົງ**

# ການປັບປຸງ

ໂດຍ ***ໂມຣິ ໂອກາອິ***

ຝົນຫາກໍເຊົາຕົກເມື່ອເທສະມິນຕີ ວາຕະນາເບະ ລົງຈາກລົດລາງປະຈຳທາງຕໍ່ໜ້າໂຮງລະຄອນຄາບູກິ. ເຂົາຟ້າວຍ່າງທັງລະມັດລະວັງເພື່ອຫລີກບວກນ້ຳ ຜ່ານຄຸ້ມໂກບິກິ ມຸ່ງໜ້າໄປທາງກະຊວງຄົມມະນາຄົມ. ຂະນະຍ່າງເລາະໄປຕາມແຄມຮ່ອງເຫມືອງ ເຂົາກໍຄຶດວ່າ ພັດຕາຄານຕ້ອງຢູ່ບໍລິເວນນີ້ຢ່າງແນ່ນອນ. ເຂົາຈື່ວ່າເຄີຍເຫັນປ້າຍຢູ່ແຈກະຫນົນບ່ອນໃດບ່ອນຫນຶ່ງຢ່ານນີ້.

ຕາມກະຫນົນມີຄົນພຽງເບົາບາງ. ເຂົາຍ່າງກາຍຊາວໜຸ່ມກຸ່ມຫນຶ່ງທີ່ນຸ່ງເຄື່ອງຕາມແບບຕາເວັນຕົກ. ພວກເຂົາລົມກັບສຽງດັງຫນວກຫູ ແລະເບິ່ງຄືວ່າ ທັງຫມົດຫາກໍອອກມາຈາກໂຮງການ. ຕໍ່ມາມີຍິງສາວໃນຊຸດກິໂມໂນະ ພ້ອມທັງແພສີສົດໃສແລ່ນສຸຍໄປຈົນເກືອບຕຳກັບເຂົາ. ນາງອາດເປັນສາວບໍລິການຢູ່ຮ້ານນ້ຳຊາໃນແຖວນີ້. ສ່ວນລົດລາກຄັນຫນຶ່ງກໍແລ່ນກາຍຫລັງເຂົາໄປ.


1961

ໃນທີ່ສຸດ ເຂົາກໍເຫັນປ້າຍທີ່ຂຽນອັກສອນໄປ ຕາມທາງນອນ ແບບຕາເວັນຕົກວ່າ "ເຊໂຢເກັນ ໂຣແຕນ" ດ້ານຫນ້າຂອງຕົວຕຶກປິ່ນໄປທາງຮ່ອງເຫມືອງ ໂດຍມີໂຄງໄມ້ຄ້ຳແບບຕັນຢູ່. ທາງເຂົ້າດ້ານຂ້າງນັ້ນຕໍ່ໃສ່ທາງຮ່ອມ. ດ້ານນອກຂອງຕຶກມີຂັ້ນໄດສະຫລຽງສອງເບື້ອງທີ່ ປະກອບເຂົ້າກັນເປັນລັກສະນະສາມລ່ຽມປາຍຕັດ. ທີ່ຫົວຂັ້ນໄດແຕ່ລະເບື້ອງມີປະຕູແກ້ວ. ວາຕະນາເບະລັງເລໃຈຢູ່ຂະນະຫນຶ່ງແລ້ວຈຶ່ງເຂົ້າປະຕູຊ້າຍມື ບ່ອນທີ່ຂຽນບອກວ່າ "ທາງ ເຂົ້າ" .

ຂ້າງໃນ ເຂົາພົບວ່າ ບ່ອນຍ່າງກວ້າງຂວ້າງດີ ຢູ່ຂ້າງປະຕູມີຜ້າເຊັດເກີບວາງຢູ່ຫລາຍຜືນ, ກັດໄປກໍແມ່ນຜ້າເຊັດຕີນແບບຕາເວັນຕົກຜືນໃຫຍ່. ເກີບຂອງວາຕະນາເບະເປື້ອນຕົມ ເພາະຝົນຕົກ ເຂົາຈຶ່ງເຊັດຈົນກ້ຽງດ້ວຍຜ້າທັງສອງຢ່າງນັ້ນ. ເປັນທີ່ຮູ້ກັນວ່າ ໃນຜັດຕາຄານນີ້ ທຸກຄົນຍຶດຖືປະຕິບັດຕາມ ທຳນຽມຕາເວັນຕົກ ຄືໃສ່ເກີບເຂົ້າໄປໃນຫ້ອງໂລດ.

ບໍ່ມີສິ່ງໃດບອກວ່າ ມີຜູ້ຄົນຢູ່ບ່ອນນີ້, ແຕ່ກໍມີສຽງຕອກຄ້ອນ ແລະສຽງເລື່ອຍໄມ້ດັງມາແຕ່ໄກ. ວາຕະນາເບະ ຄຶດວ່າສະຖານທີ່ພວມຢູ່ໃນໄລຍະປັບປຸງສ້ອມແປງ.

ເຂົາກ້າຢູ່ບຶດຫນຶ່ງ, ແຕ່ບໍ່ມີໃຜມາຕ້ອນຮັບ ເຂົາຈຶ່ງຍ່າງໄປຈົນສຸດຫ້ອງ ແລ້ວກໍຢຸດຢູ່ ເພາະບໍ່ຮູ້ວ່າຊິລ້ຽວໄປທາງໃດ. ທັນໃດນັ້ນ ເຂົາສັງເກດເຫັນຊາຍຄົນຫນຶ່ງກືຜ້າເຊັດມື ຢືນອີງຝາຢູ່ບໍ່ຫ່າງປານໃດ, ເຂົາຈຶ່ງເຂົ້າໄປຫາ.

" ຂ້ອຍໂທລະສັບສັ່ງຈອງບ່ອນໄວ້ແລ້ວແຕ່ວານນີ້."

ຊາຍຄົນນີ້ ຫັນມາເອົາໃຈໃສ່ເປັນພິເສດ ທັງເວົ້າວ່າ "ໂດຍແມ່ນ

ແລ້ວ. ທ່ານຈອງໂຕະ ຢູ່ຊັ້ນສອງ. ເຊີນໄປທາງນີ້ ຂະນ້ອຍ."

ພະນັກງານບໍລິການ ພາຂຶ້ນຂັ້ນໄດໄປອີກຊັ້ນຫນຶ່ງ ໂດຍຍ່າງນຳຫລັງເຂົາໄປ. ວາຕະນາເບະຄິດວ່າ ຊາຍຄົນນີ້ ຕ້ອງຮູ້ຈັກວ່າ ເຂົາເອງແມ່ນໃຜ. ລູກຄ້າໃນຮ້ານອາຫານມີ ຈຳນວນຫນ້ອຍ ຍາມເມື່ອມີການສ້ອມແປງເຊັ່ນນີ້. ໃນຂະນະທີ່ວາຕະນາເບະຂຶ້ນຂັ້ນໃດນັ້ນ ສຽງຕຶ້ງຕ້າງຈາກການທຳງານຂອງກຳມະກອນ ດັງແຮງຫລາຍປານຫູຊິຫນວກ.

" ເປັນບ່ອນທີ່ອຶກກະທຶກສົມຄວນເນາະ" ເຂົາອວ່າຍມາເວົ້າກັບພະນັກງານທີ່ຢູ່ທາງຫລັງ.

" ອີກບໍ່ດົນດອກທ່ານ, ຫ້າໂມງຄົນເຫລົ່ານີ້ກໍເມືອແລ້ວ. ທ່ານຈະບໍ່ຖືກລົບກວນເລີຍ ເວລາຮັບປະທານອາຫານ."

ເມື່ອທັງສອງຂຶ້ນໄປສຸດຂັ້ນໄດແລ້ວ ພະນັກງານບໍລິການຟ້າວຍ່າງກາຍວາຕະນາເບະ ໄປໄຂປະຕູຢູ່ດ້ານຊ້າຍມືໃຫ້. ມັນເປັນຫ້ອງຂະຫນາດໃຫຍ່ ຫລຽວອອກໄປເຫັນຮ່ອງເຫມືອງ ເຕັມຕາ. ປາກົດວ່າຫ້ອງນີ້ອາວກວ້າງໄປສຳລັບສອງຄົນ. ອ້ອມໂຕະນ້ອຍສາມຫນ່ວຍ ມີຕັ່ງນັ່ງຈັດໄວ້ຈຳນວນຫລາຍທີ່ສຸດເທົ່າທີ່ຈະສາມາດບຣຸດກັນໄດ້ຢູ່ອ້ອມແຕ່ລະໂຕະ. ບ່ອນລຸ່ມຊື່ ປ່ອງຢ້ຽມມີຕັ່ງຊາລົງໃຫຍ່ ແລະ ກົດໄປນັ້ນກໍ ມີກະຖາງຕົ້ນອະງຸ່ນເຕັ້ຍໆ ທີ່ມີຫມາກເປັນພວງ ດົກຫນາ.

ພະນັກງານບໍລິການຍ່າງຜ່ານຫ້ອງໄປໄຂປະຕູອີກດ້ານຫນຶ່ງ ແລະ ກ່າວວ່າ : " ນີ້ ແມ່ນຫ້ອງຮັບປະທານຈັດໄວ້ສຳລັບທ່ານ" ວາຕະນາເບະ ຍ່າງນຳຫລັງເຂົາໄປເບິ່ງ. ຫ້ອງນີ້ ນ້ອຍພໍດີເຫມາະສຳລັບສອງຄົນ, ຢູ່ກາງເຄິ່ງມີໂຕະທີ່ຈັດໄວ້ຢ່າງລະອຽດຮຽບຮ້ອຍ ປູດ້ວຍຜ້າສອງຊັ້ນປະດັບດ້ວຍກະຕ່າດອກໄມ້ເປັນພຸ່ມຫລາຍສີສັນ.

ວາຕະນາເບະກັບຄືນມາທີ່ຫ້ອງໃຫຍ່ ດ້ວຍຄວາມຮູ້ສຶກພໍອົກພໍໃຈ. ພະນັກງານຂໍຕົວອອກໄປ, ວາຕະນາເບະ ຈຶ່ງຢູ່ຄົນດຽວຕາມ ລຳພັງ, ແລ້ວທັນໃດນັ້ນສຽງຕຶ້ງຕ້າງກໍຢຸດລົງ. ເຂົາເບິ່ງໂມງ, ມັນເປັນເວລາຫ້າໂມງພໍດີ ຍັງມີເວລາອີກເຄິ່ງຊົ່ວໂມງ ຈຶ່ງຈະຮອດຍາມນັດໝາຍ, ເຂົາກຸອດເອົາຢາຊິກາອອກຈາກກັບຢູ່ເທິງໂຕະ ແກະປາຍອອກແລ້ວໄຕ້ດູດ.

ນັບເປັນເລື່ອງບໍ່ປົກກະຕິປານໃດ ທີ່ເຂົາບໍ່ຮູ້ສຶກຕື່ນເຕັ້ນແມ່ນແຕ່ໜ້ອຍດຽວ. ມັນຄືກັບວ່າບໍ່ແມ່ນເລື່ອງສຳຄັນຫຍັງເລີຍ ທີ່ຄົນຜູ້ນັ້ນຈະມານັ່ງຢູ່ກັບເຂົາໃນຫ້ອງນີ້, ເຂົາບໍ່ຫ່ວງກັງວົນແມ່ນແຕ່ໜ້ອຍດຽວວ່າ ຄົນຜູ້ນັ້ນຈະເປັນໜ້າຈັ່ງໃດ ທີ່ເຂົາຈະໄດ້ພໍ້ຢູ່ອີກຟາກເບື້ອງໜຶ່ງຂອງກະຕ່າດອກໄມ້. ເຂົາແປກຕ່າງໃນໃຈທີ່ຕົນເອງໃຈເຢັນເສີຍຢູ່.

ເຂົາພົ່ນຄວັນຢາອອກຢ່າງສະບາຍອາລົມ ທັງຍ່າງໄປທີ່ປ່ອງຢ້ຽມ ແລ້ວໄຂອອກ. ມີທ່ອນໄມ້ກອງຢູ່ເບື້ອງລຸ່ມ. ຊຶ່ງກັບບ່ອນນີ້ເປັນທາງເຂົ້າສູ່ປະຕູໃຫຍ່, ນ້ຳໃນຮ່ອງເໝືອງປາກົດ ວ່າສະຫງົບງຽບ. ຢູ່ຟາກເບື້ອງນັ້ນ ເຂົາເຫັນເຮືອນໄມ້ຕັ້ງລຽນກັນເປັນແຖວ, ເບິ່ງຊິງເປັນບ່ອນນັດພົບລັບໆ ຂອງຊາຍ - ຍິງ. ນອກຈາກຍິງຄົນໜຶ່ງ ເຈ່ຍລູກຍ່າງໄປມາຊ້າໆ ຢູ່ນອກ ເຮືອນຫລັງໜຶ່ງແລ້ວ ກໍບໍ່ປາກົດວ່າມີຜູ້ໃດອື່ນເລີຍ. ໄກອອກໄປດ້ານຂວາມື ອາຄານກໍ່ດ້ວຍດິນຈີ່ສີແດງຫລັງມະຫຶມາບັງສາຍຕາເຂົາໄວ້, ມັນແມ່ນຫໍພິພິທະພັນທາງນາວາ.

ວາຕະນາເບະນັ່ງລົງຕັ່ງຍາວ ກວາດສາຍຕາໄປທົ່ວຫ້ອງ. ຝາເຮືອນປະດັບດ້ວຍຮູບແຕ້ມຫລາກຫລາຍຊະນິດເຊັ່ນ : ນົກກາເວົາ

ຈັບຢູ່ເທິງຕົ້ນໄມ້, ຮູບແຕ້ມກ່ຽວກັບເທບນິຍາຍ, ຮູບແຫລວ; ຮູບແຕ້ມເປັນກໍ້ຂະໜາດນ້ອຍ ແລະ ບໍ່ກວ້າງ ເມື່ອເອົາມາຫ້ອຍຝາສູງໆ ຈຶ່ງເປັນສີເຂັ້ມໆ ຄືກັບວ່າ ສ່ວນລຸ່ມຖືກພັບໄວ້ບໍ່ໃຫ້ເຫັນ. ເທິງຂອບປະຕູມີພຸດທະວັດຈະນະຂຽນ ໃສ່ຂອບຂະໜາດໃຫຍ່ໄວ້. ວາຕະນາເບະຄິດວ່ານີ້ແມ່ນສະຖານທີ່ສະສົມສິລະປະ.

ເອົາບັ່ງດູດຢາຕໍ່ໄປໄລຍະໜຶ່ງ ທັງຮູ້ສຶກສະບາຍອີກສະບາຍໃຈ, ແລ້ວຕໍ່ມາກໍມີສຽງ ດັງຂຶ້ນ, ປະຕູໄຂອອກ - ແມ່ຍິງຄົນນັ້ນເອງ.

ນາງໃສ່ໝວກເຟືອງໃບໃຫຍ່ປະດັບດ້ວຍໝາກປັດ ດ້ານໃນຂອງເສື້ອຄຸມສີດອກເລົາ ນັ້ນ ເອົາສັງເກດເຫັນວ່າ ນາງນຸ່ງເສື້ອກັກ. ກະໂປງຂອງນາງກໍສີດອກເລົາຄືກັນ. ນາງຖືຄັນ ຮົ່ມນ້ອຍໆ ທີ່ມີຍອຍຫ້ອຍຕິດ. ວາຕະນາເບະ ເຮັດໃບໜ້າຍິ້ມ, ວາງຢາຊິກາແລ້ວລຸກຈາກຕັ່ງຍາວ.

ສະຕີຊາວເຢຍລະມັນ ເອົາມ່ານບັງຕາອອກ ແລະງວາກໄປຫາພະນັກງານບໍລິການຜູ້ ທີ່ພານາງມາຍັງຫ້ອງນີ້ ຊຶ່ງພວມຢືນຢູ່ຂ້າງປະຕູ, ຕໍ່ມານາງສົ່ງສາຍຕາໄປຫາວາຕະນາ ເບະ. ຕາຄູ່ນັ້ນ ເປັນສີນ້ຳຕານ ອັນເປັນດວງຕາຂອງແມ່ຍິງຜົມສີດຳອົມແດງ. ຕາຄູ່ນີ້ເອົາເຄີຍຈ້ອງເບິ່ງເລື້ອຍໆ ໃນຄັ້ງອະດີດ, ເກືອບປານນັ້ນ ເອົາກໍຍັງບໍ່ຈື່ວັນຕ່າງໆ ຕອນຢູ່ເບີລິນ ນະຄອນຊຶ່ງເຄີຍມີເງົາຂອງເອົາ ທັງສອງຄຽງຄູ່ກັນໄປ.

"ຂໍໂທດທີ່ໃຫ້ເຈົ້າຄອຍກ້າ" ນາງຟ້າວກ່າວເປັນພາສາເຢຍລະມັນ.

ນາງຍ້າຍຄັນຮົ່ມໄປໃສ່ມືຊ້າຍ ແລະ ເດ່ນິ້ວມືຂວາທີ່ສຸບຖົງມືອອກໄປຢ່າງແຂງ ກະດ້າງ, ວາຕະນາເບະຄິດວ່າທັງໝົດນັ້ນ ແມ່ນຢື່ນ

ໄປຫາ ພະນັກ ງານບໍລິການ ແລະ ເຂົາເອງກໍຈັບບໍ່ມືນາງ ຢ່າງສຸພາບ ຮຽບຮ້ອຍ.

" ກ້າອາຫານກຽມພ້ອມແລ້ວ ບອກຂ້ອຍເດີ " ວາຕະນາເບະ ອວ່າຍໄປຫາງປະຕູແລ້ວບອກ. ພະນັກງານກົ້ມຫົວແລ້ວ ອອກຈາກ ຫ້ອງໄປ.

" ດີໃຈອີ່ຫລີ ທີ່ໄດ້ພົບເຈົ້າ " ເຂົາເວົ້າເປັນພາສາເຢຍລະມັນ.

ຝ່າຍຍິງໂຍບຄັບຣິ່ມລົງເທິງຕັ່ງນັ່ງຢ່າງບໍ່ຈິ່ງຈຽມ ແລ້ວນັ່ງລົງ ຕັ່ງຍາວ ທັງກອບຫາຍໃຈເບົາໆ. ນາງເອົາແຂນສອກເທົ້າເທິງໂຕະ ແລ້ວແນມເບິ່ງຫນ້າວາຕະນາເບະ ຢ່າງມິດໆ ສ່ວນເຂົາດຶງຕັ່ງມາ ໃກ້ ໂຕະ ແລ້ວນັ່ງລົງ. ຕໍ່ມາຂະນະຫນຶ່ງ ນາງຈຶ່ງກ່າວຂຶ້ນວ່າ : "ມິດອີ່ ຫລີເນາະຢູ່ບ່ອນນີ້. "

" ເຂົາພວມປັບປຸງສ້ອມແປງ " ວາຕະນາເບະວ່າ "ຕອນຂ້ອຍ ມາຮອດນັ້ນ ມີສຽງດັງ ຕຶ້ງຕ້າງຄັບທີບ. "

" ຊັ້ນຫວະ, ຈັ່ງຊັ້ນມັນກໍອະທິບາຍທຸກຢ່າງແຈ່ມແຈ້ງແລ້ວ, ສະຖານທີ່ມັນພາໃຫ້ຄົນ ສັບສົນຂຶ້ນຕື່ມ. ບໍ່ແມ່ນວ່າຂ້ອຍເປັນຄົນ ປະເພດມິດງຽບພິເສດສຸດໃດເດີ. "

" ເຈົ້າມາຮອດຍີ່ປຸ່ນມື້ໃດ ? "

" ແຕ່ມື້ກ່ອນ, ແລະ ມາມື້ວານນີ້ ບັງເອີນຂ້ອຍເຫັນ ເຈົ້າຢູ່ກາງ ກະຫນົບ. "

" ແລ້ວເຮັດຈັ່ງໃດຈຶ່ງມາຮອດພີ້ລະ ? "

" ເອີ ຄືວ່າ ຂ້ອຍມາຢູ່ວະລາດີວົສຕົກ ຕັ້ງແຕ່ທ້າຍປີກາຍນີ້ແລ້ວ."

" ຂ້ອຍຄຶດວ່າ ເຈົ້າຍັງຮ້ອງເພງຢູ່ໂຮງແຮມນັ້ນຢູ່ ."

" ແມ່ນລະ. "

" ເບິ່ງແລ້ວ ເຈົ້າບໍ່ຊິງຊິຢູ່ຄົນດຽວ, ເຈົ້າຢູ່ກັບຄະນະບໍ ? "

" ບໍ່ນ່າ, ຂ້ອຍບໍ່ຢູ່ກັບຄະນະ, ແຕ່ຂ້ອຍກໍ່ບໍ່ຢູ່ລຳພັງຄົນດຽວ. ຂ້ອຍມາກັບຊາຍຄົນ ຫນຶ່ງ, ຄວາມຈິງເຈົ້າກໍຮູ້ຈັກລາວ " ນາງລັງເລໃຈຢູ່ຂະນະຫນຶ່ງແລ້ວເວົ້າຕໍ່ "ຂ້ອຍມາກັບ ໂກຊິນສະກິ. "

" ເອີ ຄົນໂປໂລຍຜູ້ນັ້ນ, ຈັ່ງຊັ້ນຂ້ອຍຕ້ອງເອີ້ນເຈົ້າວ່າ ມາດາມໂກຊິນສະກາຍາ, ແມ່ນຕວ່າບັດນີ້. "

" ຢ່າຊູ່ຄິດໂງ່ໆ ນ່າ, ພຽງແຕ່ວ່າຂ້ອຍຮ້ອງເພງ ແລ້ວໂກຊິນສະກິກໍຫລິ້ນດົນຕີໃສ່ປະສານກັນໄປ. "

" ເຈົ້າແນ່ໃຈບໍ່ວ່າ ມີພຽງທໍ່ນັ້ນ ? "

" ເອະ ! ເຈົ້າຫມາຍຄວາມວ່າ ຂ້ອຍກັບລາວມີຫຍັງມ່ວນຊື່ນ ແລະ ມີຄວາມສຸກນຳກັນ ຫວະ ? ເອີ ... ຂ້ອຍກໍບໍ່ເວົ້າດອກວ່າ ມັນບໍ່ເກີດຂຶ້ນຈັກເທື່ອແບບນັ້ນນ່າ. "

" ບໍ່ແມ່ນເລື່ອງປະຫລາດຈັກດີ້ ຂ້ອຍຄິດຢູ່ແລ້ວວ່າ ລາວມາໂຕກຽວນຳເຈົ້າ. "

" ແມ່ນລະ ພວກເຮົາທັງສອງຢູ່ໂຮງແຮມ ອາອິໂກະກຸຊັງ. "

" ແຕ່ລາວກໍປ່ອຍໃຫ້ເຈົ້າອອກມາຄົນດຽວເນາະ. "

" ເຈົ້າກະດາຍ... ຂ້ອຍພຽງແຕ່ໃຫ້ລາວຫລິ້ນດົນຕີ ປະສານໃສ່ເວລາຂ້ອຍຮ້ອງເພງ ກໍທໍ່ນັ້ນ. "

ວາຕະນາເບະ ຄິດວ່າ ກ້າເຂົາຫລິ້ນປີອາໂນ ເປັນຄູ່ໄປນຳເວລານາງຮ້ອງເພງໄປດັ່ງນີ້ ຕະຫລອດ ເຂົາກໍ່ເປັນຄູ່ນາງໃນແງ່ອື່ນໄດ້ຄືກັນ.

" ຂ້ອຍບອກເຂົາວ່າ ຂ້ອຍເຫັນເຈົ້າຢູ່ແຖວກິນຊະ " ນາງເວົ້າຕໍ່

".ແລະ ປາກົດວ່າ ເຂົາຢາກພົບກັບເຈົ້າອີ່ຫລີໃດ."

" ຂໍຢ່າໃຫ້ຂ້ອຍມີໂອກາດນັ້ນເທາະ."

" ຢ່າຄຶດຍາກ ! ເຂົາບໍ່ຂາດເງິນ ຫລື ສິ່ງໃດໆ ດອກ."

" ກໍ່ບໍ່ວ່າ ... ແຕ່ອາດເປັນໄປໄດ້ໃນບໍ່ດົນ ກ້າເຂົາຢູ່ໃນເມືອງນີ້ " ວາຕະນາເບະ ກ່າວຍິ້ມໆ " ແລ້ວເຈົ້າມີແຜນຊິໄປໃສຕໍ່ ?"

" ຂ້ອຍຊິໄປອາເມລິກາ. ທຸກຄົນບອກວ່າ ຢູ່ຍີ່ປຸ່ນນີ້ ບໍ່ມີຄວາມຫວັງຫຍັງ. ດັ່ງນີ້ ຂ້ອຍ ຈຶ່ງບໍ່ກະວ່າຊິໄດ້ວຽກເຮັດຢູ່ເມືອງນີ້."

" ເຈົ້າເວົ້າຖືກ. ອາເມລິກາ ເປັນບ່ອນດີທີ່ຄວນໄປ ກົດຈາກປະເທດລັດເຊຍ. ຍີ່ປຸ່ນຍັງຫລ້າຫລັງຫລາຍ ຍັງຢູ່ໃນລະຫວ່າງປັບປຸງເທັນຕວ່າ."

" ເວົ້າຫຍັງຈັ່ງຊັ້ນ ! ກ້າເຈົ້າບໍ່ລະວັງປາກ ຂ້ອຍຊິບອກຄົນຢູ່ອາເມລິກາວ່າ ສຸພາບບຸ ລຸດຊາວຍີ່ປຸ່ນ ຍອມຮັບວ່າ ປະເທດຂອງຕົນຫລ້າຫລັງ. ແທ້ແລ້ວຂ້ອຍຊິບອກວ່າ ເຈົ້າຫນ້າທີ່ ຂອງລັດຖະບານເປັນຜູ້ເວົ້າ. ເຈົ້າເປັນຄົນຂອງລັດຖະບານແມ່ນຕ່ວາ ?"

" ແມ່ນແລ້ວ. ຂ້ອຍຢູ່ໃນວົງການຂອງລັດຖະບານ."

" ແລະ ປະພຶດຕົນຢ່າງຖືກຕ້ອງ, ບໍ່ມີຂໍ້ສົງໄສຕວ່າເນາະ ?"

" ເປັນຈັ່ງຊັ້ນແທ້. ແຕ່ຄືນນີ້ ຍົກເວັ້ນເປັນພິເສດ."

" ຂ້ອຍໄດ້ຮັບກຽດສູງອີ່ຫລີ " ນາງຄ່ອຍໆ ແກະດຸມຊິບມືຍາວໆແລ້ວຖອດອອກ ແລະ ເດ່ມືຂວາໄປຫາວາຕະນາເບະ ເປັນມືທີ່ຮຽວງາມທັງຂາວ ແລະ ມີສະຫງ່າລາສີ. ເຂົາຈັບມືນາງໄວ້ແຫນ້ນ ແລະ ແປກໃຈທີ່ມືເຢັນຈ້ອຍໆ. ນາງບໍ່ຖອນມືກັບ ແຕ່ຈ້ອງເບິ່ງເຂົາຢ່າງບໍ່ພັບ ຕາ. ຕາສີນ້ຳຕານຄູ່ໃຫຍ່ ປາກົດຄືວ່າໃຫຍ່ກວ້າງອອກເປັນສອງເທົ່າ.

" ຢາກໃຫ້ຂ້ອຍຫອມແກ້ມບໍ່ ? " ນາງກ່າວ.

ວາຕະນາເບະ ເຮັດໜ້າອຶດອັດ : "ພວກເຮົາພວມຢູ່ໃນຍີ່ປຸ່ນ " ເຂົາວ່າ.

ໂດຍບໍ່ມີສັນຍານໃດໆ ປະຕູໄຂອອກປຸ໊ບປັ໊ບ ແລ້ວພະນັກງານບໍລິການກໍເຂົ້າມາ "ໂຕະອາຫານຈັດສຳເລັດແລ້ວ ຂະນ້ອຍ. "

" ພວກເຮົາພວມຢູ່ໃນຍີ່ປຸ່ນ " ວາຕະນາເບະ ກ່າວຊ້ຳອີກ. ເຂົາລຸກຂຶ້ນ ແລະ ພານາງເຂົ້າໄປຍັງຫ້ອງຮັບປະທານອາຫານ. ພະນັກງານເປີດໄຟຢູ່ຊື່ຫົວຮຸ່ງຂຶ້ນ.

ນາງນັ່ງລົງຕັ່ງກົງກັນຂ້າມກັບວາຕະນາເບະ ແລະ ເບິ່ງໄປອ້ອມຫ້ອງ.

" ເຂົາເຈົ້າເອົາຫ້ອງຢູ່ຕ່າງຫາກໃຫ້ພວກເຮົາ " ນາງເວົ້າທັງຫົວຍິ້ມ "ຕື່ນເຕັ້ນເນາະ!" ນາງຢຽດຫລັງໃຫ້ຊື່ແລ້ວແນມເບິ່ງໜ້າວາຕະນາເບະ ທັງຢາກຮູ້ວ່າ ເຂົາຈະຕອບອອກມາ ຢ່າງໃດ.

" ຂ້ອຍເຊື່ອວ່າ ມັນເປັນເລື່ອງບັງເອີນ " ເຂົາກ່າວດ້ວຍທ່າທີສະຫງົບ.

ພະນັກງານບໍລິການສາມຄົນ ເອົາໃຈໃສ່ໃຫ້ຄວາມສະດວກແກ່ແຂກທັງສອງຢ່າງບໍ່ຂາດໄລຍະ. ຜູ້ໜຶ່ງຫຍິບເຫລົ້າເຊີຣີ, ອີກຜູ້ໜຶ່ງສິ່ງໝາກແຕງໃຫ້, ແລະ ຜູ້ທີສາມ ກໍສິນລະວົນຢູ່ອ້ອມໆຂ້າງຕະ ຫລອດເວລາ.

" ສະຖານທີ່ນີ້ ມີຊີວິດຊີວາຍ້ອນພະນັກງານບໍລິການ " ເຂົາວ່າ.

" ແມ່ນລະ, ແລະ ປາກົດວ່າ ບໍ່ໄດ້ເລື່ອງຈັກດີ້ " ນາງກ່າວ ແລະ ເລີ່ມກິນໝາກ ແຕງ. " ພວກເຂົາຂີ້ຮ້າຍສ່ຳໆ ກັນກັບພວກ ຢູ່ໂຮງແຮມ

ທີ່ຂ້ອຍພັກທັ້ນແຫລະ. "

" ຂ້ອຍຄິດວ່າ ພວກເຂົາຄົງອັດຈັງຫວະເຈົ້າກັບໂກຊິນສະກິ ຢູ່ເລື້ອຍໆ, ຄືຢູ່ບໍ່ຢູ່ກໍເຂົ້າມາໃນຫ້ອງ ໂດຍບໍ່ເຄາະປະຕູກ່ອນ... "

" ເຈົ້າເຂົ້າໃຈຜິດແລ້ວໃນເລື່ອງນີ້. ເອີ... ຫມາກແຕງສຸກນີ້ ແຊບອີ່ຫລີ. "

" ຢູ່ອາເມລິກາ, ຄັນຕື່ນເຊົ້າມາເຈົ້າຊິມີຂອງກິນເປັນກອງຕັ້ງໄວ້ ກ້າໂລດ. "

ການລົມກັນຂອງທັງສອງດຳເນີນໄປເລື້ອຍໆ, ໃນທີ່ສຸດພະນັກ ງານກໍເອົາສະຫລັດຫມາກໄມ້ມາ ແລະ ຫຍິບເຫລົ້າຊຳປາຍໃຫ້.

" ເຈົ້າຫວງແມ່ນບໍ່ ? ຫວງແມ່ນແຕ່ເລື່ອງເລັກໆ ນ້ອຍໆ " ຝ່າຍຍິງກາມຂຶ້ນປຸ໊ບປັ໊ບ. ຕະຫລອດເວລາທັງສອງກິນໄປລົມກັນໄປ. ນາງຈື່ໄດ້ວ່າ ທັງສອງເອງ ເຄີຍນັ່ງເຊິ່ງຫນ້າກັນ ດັ່ງໃນຂະນະນີ້ມາ ຄັ້ງຫນຶ່ງ ຄືເມື່ອເລີກຈາກໂຮງລະຄອນ ແລ້ວກໍພາກັນເຂົ້າຫ້ອງອາຫານ ຕອນຢູ່ເຢຍລະມັນ. ມີບາງເທື່ອທັງສອງຜິດກຽງກັນ ແຕ່ກໍຕົກລົງກັນ ໄດ້ໃນທີ່ສຸດ. ນາງຢາກໃຫ້ເປັນເລື່ອງເວົ້າຢອກກັນຊື່ໆ ແຕ່ນ້ຳສຽງຂອງ ນາງກໍຊົງເອົາຈິງເອົາຈັງ, ນາງຈຶ່ງຮູ້ສຶກຫນ້າອາຍ.

ວາຕະນາເບະ ຍົກຈອກເຫລົ້າຊຳປາຍສູງພົ້ນກະຕ່າດອກໄມ້ແລ້ວ ກ່າວສຽງດັງຟັງແຈ້ງວ່າ : "ໂກຊິນສະກິນ... "

ຝ່າຍຍິງຍົກຈອກຂຶ້ນດ້ວຍອາການສະຫງົບ, ຍິ້ມຫລາໆ ປາກົດ ທີ່ໃບຫນ້າ, ມືຂ້າງຫນຶ່ງສັ່ນດິດໆ ຢູ່ກ້ອງໂຕະ

× ×

×

ເວລາຫາກໍແປດໂມງເຄິ່ງເທົ່ານັ້ນ ເມື່ອລົດຄັນຫນຶ່ງຄັນດຽວ ສີດໍາ ແລ່ນໄປຊ້າໆ ຕາມ ກະຫນົນກິນຊະ ທ່າມກາງທະເລ ແຫ່ງແສງ ສີເປັນຍິບຍັບ, ຢູ່ຕັ່ງດ້ານຫລັງມີຍິງຄົນຫນຶ່ງນັ່ງຢູ່, ໃບຫນ້າຂອງ ນາງມີມ່ານບັງໄວ້.

# ດອກໄຂ່ມຸກປ່ຽນສີ

ໂດຍ : ***ນາງງາອິ ກາຟູ່***

ມື້ຫນຶ່ງຂ້ອຍຍ່າງເລາະຢູ່ຄຸ້ມໂຄມາໂກເມະ, ເມື່ອກ້າວເຂົ້າປະຕູໂຂງໄປໃນວັດແຫ່ງ ຫນຶ່ງ ຂ້ອຍເລີຍໄປພໍ້ເຂົາໂດຍບັງເອີນ. ເຂົາຜູ້ນີ້ແມ່ນຊຸຊຸຊາວະ ໂຊກິຈິ ນັກສີຊໍ ຊຶ່ງຂ້ອຍເຄີຍ ໄປຮຽນນຳ ເມື່ອປະມານຊາວປີມາແລ້ວ. ໂຊກິຈິຍັງມີຊີວິດຢູ່. ຂ້ອຍຈື່ໄດ້ວ່າ ເຂົາເຄີຍປາກົດຕົວໃນເວທີຕ່າງໆ ເປັນບາງຄັ້ງບາງຄາວ.

" ມາພໍ້ເຈົ້າຢູ່ບ່ອນແປກອີ່ຫລີ " ຂ້ອຍທັວງລາວຂຶ້ນກ່ອນ " ເບິ່ງເຈົ້າແລ້ວ ເຫັນວ່າ ຊິວສະບາຍດີ. "

" ເອີ ກໍສະບາຍດີ ຂອບໃຈ ຂ້ອຍຍັງຄຶດເຫັນທີ່ເຈົ້າ ເຮັດດີນຳທຸກຢ່າງຄາວນັ້ນ ແລະ ຄິດຢູ່ວ່າ ຊິໄປຢາມ. "

" ແມ່ນແທ້ບໍ່ວ່າ ເຈົ້າເຊົາສີຊໍແລ້ວ ? "

" ແມ່ນລະ ຂ້ອຍເຫັນວ່າ ມັນສຸດສ້ອຍລົງ ກໍເລີຍຕັດສິນໃຈເຊົາຫັງທີ່ຍັງພໍຫລີ້ນໄດ້ຢູ່. "

" ດີຄືກັນ. ບັດນີ້ເຈົ້າເຮັດຫຍັງຊັ້ນ ? "


M. KUWATA
1961

" ເອີ ກໍມີໂຮງ**ເກອິຊະ**ເກົ່າໆ ຫລັງຫນຶ່ງຢູ່ນອກໂຢຊຸຢະ ພຸ້ນ. "

" ອັນນັ້ນລະດີກວ່າ ຫາກິນໂດຍເປັນນັກດົນຕີຫລາຍຕໍ່. ທຸກມື້ນີ້ຄົນເຮົາເກັ່ງຢ່າງດຽວ ບໍ່ກ້າວໄປຮອດໃສດອກ ເຈົ້າມີສາຍຕາໄກອີ່ຫລີ."

" ເຈົ້າເວົ້າຈັ່ງຊັ້ນກໍກຶກ, ເລື່ອງມັນມີເຫດຜົນຫລາຍ ສິ່ງຫລາຍຢ່າງ. ທຳອິດ ຂ້ອຍກໍ ເກືອບບໍ່ຮູ້ຊິເຮັດຫຍັງຕໍ່ໄປ. ແຕ່ດຽວນີ້ຂ້ອຍເຫັນວ່າ ຕົນເອງຄຶດກຶກທີ່ປ່ຽນອາຊີບ. "

" ເຈົ້າມາຢາມບ່ອນຝັງສົບໃຜບໍ ? "

" ແມ່ນລະ ເຈົ້າເດ້ ຄອບຄົວກໍຂຶ້ນກັບວັດນີ້ບໍ ? "

" ກໍບໍ່ດອກ ຄືວ່າ ຂ້ອຍເອງກໍເກົ້າແກ່ລົງ, ເຫັນວ່າ ຂອງອັນໃດກໍແພງຂຶ້ນ ທັງບໍ່ມີຄ່າຫຍັງເລີຍເມື່ອຊື້ມາແລ້ວ. ຄິດມາແລ້ວກໍຫນ່າຍຈຶ່ງຍ່າງເລາະໄປເລື້ອຍໆ ເພື່ອເບິ່ງບ່ອນຝັງສົບ. "

" ຊັ້ນຕີ້ ຫມູ່ເພື່ອນຄົງລ່ວງລັບໄປປະຫມົດແລ້ວ ແມ່ນບໍ່ ? "

" ໂຊກິຈິ ເຈົ້າເວົ້າປານວ່າ ນັກກະວີ ຂ້ອຍຈື່ບໍ່ລືມໃດ, ເຈົ້າເຄີຍ**ຂຽນກະວີໄຮກຸ** ແມ່ນຕ່ວາ ? "

" ບໍ່ແມ່ນດອກ ສຳລັບຂ້ອຍ ໄຮກຸ ກໍຄືກ້າວຈາກແກ້ວເຫລົ້າ ແລ້ວເຂົ້າບ່ອນນອນໂລດ. "

ພວກເຮົາພາກັນຍ່າງອ້ອມລານວັດ ແລ້ວໄປສູ່ບ່ອນຝັງສົບ. ແມ່ເກົ້າຄົນຫນຶ່ງພວມກື ທູບຢືນກ້າໂຊກິຈິຢູ່. ລາວເອົານ້ຳມົນທົດຫລັກ

---

**ເກອິຊະ** : ສາວບໍລິການ ທີ່ຕ້ອນຮັບແຂກດ້ວຍປະເພນີ ແລະ ສິລະປະດົນຕີຍີ່ປຸ່ນ.

**ໄຮກຸ** : ບົດກະວີແບບຫນຶ່ງຂອງຍີ່ປຸ່ນ

ຫີນທີ່ຂຸມຝັງສົບ ແລະ ປ່ຽນດອກໄມ້ຢູ່ບັ້ງໄມ້ໄຜ່. ຫລັກຫີນທີ່ຈາລຶກຊື່ແມ່ຍິງຫລັກນີ້ ບໍ່ແມ່ນຫລັກເກົ່າແກ່ປານໃດ.

" ຂຸມຝັງສົບແມ່ຂອງເຈົ້າບໍ ? " ຂ້ອຍຖາມໂດຍບໍ່ໃສ່ໃຈ.

" ບໍ່, ບໍ່ແມ່ນດອກ " ໂຊກິຈິ ເວົ້າທັງເອົາຫມາກປັດອອກມາຈາກແຂນເສື້ອກິໂມໂນະ "ຂ້ອຍບໍ່ບອກຄົນທົ່ວໄປເລີຍ, ແຕ່ສຳລັບເຈົ້າຂໍບອກວ່າ ນີ້ແມ່ນນາງເກອິຊະ ຜູ້ຊຶ່ງຂ້ອຍເຄີຍຮັກເຄີຍກະຫນອມແຕ່ຄາວນັ້ນພຸ້ນ ຝັງຢູ່ບ່ອນນີ້. "

" ເຈົ້າເອງກໍເຖົ້າລົງໃດ່ ໂຊກິຈິ. "

" ກໍແຫ້ລະເວີ້ຍ ຂ້ອຍເປັນຜູ້ເຖົ້າແລ້ວເດ້, ແຕ່ຢ່າຫົວຂວັນເດີ " ໂຊກິຈິຄຸກເຂົ່າລົງ ສັ່ນຫມາກປັດທັງຈົ່ມຄາຖາ. ເມື່ອລຸກຂຶ້ນຢືນ ລາວເວົ້າວ່າ " ຄວາມຈິງກໍຄືວ່າ ຂ້ອຍປັກຫລັກຫີນນີ້ ໂດຍບໍ່ໄດ້ບອກເມຍເລີຍ. "

" ຫວະ ! ເລື່ອງນີ້ ເປັນຫນ້າສົນໃຈອີຫລີ. "

" ຂ້ອຍຊິວ່າບໍ່ເປັນກໍບໍ່ໄດ້. ພໍ່ແມ່ຂ້ອຍເອງແທ້ໆ ຕາຍໄປແລ້ວຫລາຍປີ ແຕ່ກໍບໍ່ໄດ້ປັກ ຫລັກຫີນໃຫ້ເລີຍ. ແລ້ວຄົນອາຍຸສ່ຳຂ້ອຍມາປັກຫລັກຫີນໃຫ້ແມ່ຍິງທີ່ນາງເອງບໍ່ໄດ້ຂໍຮ້ອງ... ຂ້ອຍເອງກໍເກືອບວ່າສະດຸ້ງຍຸບໆ ພຸ້ນໃດ. ຂ້ອຍຫມົດເງິນໄປຕັ້ງ 20 ເຢັນ ຄືຄ່າຫລັກຫີນ 10 ເຢັນ, ມອບໃຫ້ວັດ 5 ເຢັນ ແລ້ວກໍຄ່າອັນນີ້ອັນນັ້ນອີກ. "

" ລາວປະຈຳຢູ່ໂຮງໃດລະ ? "

" ຢູ່ໂຮງຟູຊະຮານະ, ໃນເຂດໂຢຊິ, ລາວຊື່ວ່າ ໂຄະໂຊະໂນະ "

" ຂ້ອຍຄິດວ່າ ເຄີຍໄດ້ຍິນຊື່ນີ້ . "

" ຄືຊິບໍ່ເຄີຍດອກ, ລາວບໍ່ແມ່ນເກອິຊະປະເພດທີ່ເຈົ້າຈະໄປຫາ.

ບ່ອນທີ່ລາວຢູ່ບໍ່ແມ່ນ ຂັ້ນດີ, ລາວເອງກໍບໍ່ມີຫຍັງພິເສດ. ເຈົ້າຄິດເບິ່ງກໍໄດ້ວ່າ ແມ່ນແຕ່ຂ້ອຍເອງກໍຍັງອາຍທີ່ອອກ ໄປໃສນຳກັບແລ້ວມີຄົນເຫັນ. ຄົນທີ່ສາຍຕາມີລະດັບ ຈະບອກໄດ້ໂລດວ່າ ສາວເກອິຊະຊັ້ນດີ ເປັນແນວໃດພຽງແຕ່ມາບເຫັນ."

ຟາກກະຫນົບເບື້ອງນັ້ນ ມີຮ້ານຫມີ່ແບບສະໄຫມເກົ່າຢູ່ຮ້ານຫນຶ່ງພ້ອມສວນ ທີ່ມີພຸ່ມໄມ້ຕຶບຫນາປານວ່າເປັນບ່ອນກ້າເບ້ຍໄມ້. ພວກເຮົາພາກັນຍ່າງເລາະໄປຕາມທາງ ທີ່ປູດ້ວຍຫີນເປັນແຜ່ນ ມຸ່ງສູ່ເຮືອນນ້ອຍທີ່ມີລະບຽງອ້ອມ. ຢູ່ບ່ອນນັ້ນເອງ ທີ່ຂ້ອຍໄດ້ຍິນເລື່ອງ ທັງຫມົດຂອງໂຊກິຈິ.

x x

x

ໂຊກິຈິເລົ່າວ່າ :

ປະມານສິບສີ່ ຫລື ສິບຫ້າປີມາແລ້ວ. ຕອນນັ້ນຂ້ອຍອາຍຸສາມສິບປີ. ບໍ່ແມ່ນຢູ່ເຂດ ໂຢຊິ ທີ່ຂ້ອຍພົບລາວເທື່ອທຳອິດ. ລາວຢູ່ຊິຕາຍະ ແລະ ບອກວ່າຕົນເອງຊື່ ຄິມິກະ, ຕອນນັ້ນ ຂ້ອຍໄປຫາລາວ ເປັນບາງຄັ້ງບາງຄາວ ຄືເມື່ອອອກຈາກເຮືອນເຈົ້າໄປ ແລ້ວກໍແວະ ເພື່ອດື່ມເລັກໆນ້ອຍໆ ເຈົ້າຄົງຊິຈີ່ຕີ້. ຂ້ອຍມີສາວເກອິຊະ ເປັນຂາປະຈຳຢູ່ຊິມ ບາຊິ ຊື່ວ່າ ມາຣຸຈິ. ສາວນັ້ນອາຍຸເຕີບຫນຶ່ງແລ້ວ, ສ່ວນຂ້ອຍຍັງເປັນບ່າວເຕັມຄີງ ທັງເລືອດຮ້ອນ, ໃຜລະຊິໄປອອນຊອນກັບວາດເປັນເອື້ອຍໃຫຍ່ແບບນັ້ນໄດ້. ລາວບໍ່ແມ່ນຄົນປະເພດທີ່ ເຈົ້າຈະເສຍສະຫລະທຸກ

ຢ່າງໃຫ້ໄດ້. ເອີ ເວົ້າແລ້ວ ຂ້ອຍກໍໄດ້ຮ່ວມຊີວິດກັບລາວຫັ້ນລະ, ແລະ ນາງເທື່ອເມື່ອມີເງິນແຮກົງແດ່ ກໍແມ່ນເງິນທີ່ໄດ້ຈາກເຈົ້າ ແລະ ບັນດາທ່ານອື່ນໆ ນັ້ນລະ, ຂ້ອຍກໍຫລອຍໄປຫາສາວເກອິຊະລາຄາກຶກໆ. ເຈົ້າຮູ້ຕື້ເນາະ ວ່າຂ້ອຍມີສາວເກອິຊະຂາ ປະຈຳຢູ່ແລ້ວ ແຕ່ກໍເສືອກໄປເລາະຫາສາວອື່ນໆອີກ. ເຈົ້າເອງກໍຮູ້ຕວ່າວ່າ ລົດຊາດມັນມີອັນ ພິເສດຈັ່ງໃດ ຍາມເມື່ອຍາດໂອກາດໄດ້ແລ້ວ ແວ່ເຂົ້າຮ້ານກຶກໆ. ເຈົ້າວ່າບໍ່ ?

ມັນກໍເປັນໄປຈັ່ງຊັ້ນແຫລະ ທີ່ຂ້ອຍໄດ້ນອນນຳຄິມິກະ ເທື່ອທຳອິດຢູ່ໂຮງນ້ອຍໆ ທີ່ຕີນ ໂພນວັດຢູຊິມະ. ຂ້ອຍບໍ່ອາດໄປມົວເລືອກຢູ່ເລີຍ ເພາະໄປຮອດກໍສິບໂມງແລ້ວ ແລະ ຕ້ອງກັບ ເມືອເວລາສິບສອງໂມງ. ບໍ່ວ່າຜູ້ໃດກໍຈະເຮັດແບວນັ້ນ ຂ້ອຍຈະແນມເບິ່ງແຕ່ໂມງ ນາງເທື່ອກໍຈັດແຈງທຸກຢ່າງກຽມພ້ອມໃນຂະນະທີ່ນັ່ງກ້າຢູ່ ຫັງດູດຢາກຸ້ນໆ, ແລະ ເມື່ອລາວກ້າວເຂົ້າ ປະຕູມາ ຂ້ອຍກໍຈະໄປຫາໂລດ. ສ່ວນຫລາຍ ກໍເຮັດແບບນີ້ລະ ກັບລາວ, ຂ້ອຍຈະຄອງກ້າຢູ່ຄາວຫນຶ່ງ, ແລະໃນທີ່ສຸດ ຜູ້ທີ່ປາກົດຕົວເຂົ້າມານັ້ນ ມັກຈະສັກກວ່າທີ່ຄາດຄະເນໄວ້. ຂ້ອຍຍັງຈື່ທຸກສິ່ງທຸກຢ່າງໄດ້ດີ. ລາວນຸ່ງກິໂມໂນະ ທີ່ຫາກໍຍ້ອມສີມາໃຫມ່ໆ ສ່ວນຄໍ ແລະ ແຂນເສື້ອຍັບຍູ່, ຜ້າຮອງຄໍດ້ານໃນກິໂມໂນະນັ້ນເປື້ອນ, ລາວເປັນຄົນຫນຶ່ງໃນບັນດາຜູ້ທີ່ອາພັບ ຕ້ອງອອກຈາກເຮືອນ ໄປຫັງກາງເວັນແລະກາງຄືນ ເພື່ອຂາຍຮ່າງຄີງຕະຫລອດຫັງວິນຍານ ຢູ່ທີ່ໂຮງເກອິຊະ. ຊົງຜົມຂອງລາວເກົ່າເປັນມວຍ ແລະ ຮັດດ້ວຍເສັ້ນລວດຢູ່ດ້ານຫນ້າ. ແບບນີ້ແນມເຫັນຢ່າງແຈ່ມແຈ້ງວ່າ ຜົມຂອງລາວນັ້ນ ບາງຂະຫນາດໃດ. ສ່ວນຂົນຕາ ຍາວ, ດວງຕາມົນໃຫຍ່, ໃບຫນ້າ

ນ້ອຍບາງຂາວ ແລະ ເສົ້າຫມອງວາດໃດວາດຫນຶ່ງ. ຄົນ້ອຍຍາວ. ບ່າກົ່ງລົງຈົນເຫັນວ່າ ເສື້ອກິໂມໂນະນັ້ນ ຫລົມຫລາຍຢູ່ບ່ອນຄໍ ປານວ່າຊຸ່ງສອງຄົນກໍໄດ້. ນັບວ່າລາວເປັນຄົນທີ່ບອບ ບາງປານສິ່ງຂອງທີ່ແຕກຫັກໄດ້ງ່າຍ. ລາວເວົ້າຫນ້ອຍ; ເອົາແຕ່ກົ້ມຫນ້າເບິ່ງພື້ນຢູ່ເລື້ອຍໆ. ປາກົດຄືວ່າ ບໍ່ຄ່ອຍລົ້ງກັບວຽກນີ້ປານໃດ. ເຈົ້າເອງຄົງຊິຄິດວ່າ ລາວເປັນສາວຂີ້ອາຍ. ຂ້ອຍຮູ້ສຶກອີ່ຕົນລາວແຕ່ເວລາທຳອິດ. ລາວບໍ່ແມ່ນຄົນທີ່ມີທ່າທາງວ່າ ຈະຢູ່ໃນອາຊີບນີ້ໄດ້ດົນເລີຍ.

ອັນນັ້ນແຫລະ ແມ່ນຈຸດເລີ່ມຕົ້ນຂອງຄວາມຜິດພາດຂອງຂ້ອຍ. ຄົນເຮົາບໍ່ອາດເວົ້າວ່າ ຜູ້ນັ້ນຜູ້ນີ້ ເປັນແນວໃດໂດຍເບິ່ງດ້ານນອກ. ແຕ່ກໍມີຢູ່ບໍ່ຫລາຍທີ່ສາມາດເວົ້າໄດ້. ຍົກເວັ້ນບາງຄົນນີ້.

" ເຈົ້າບໍ່ຊົງຊິເປັນຈັ່ງຊັ້ນເລີຍ. ເຈົ້າປ່ອຍໃຫ້ລາວຫລອກ ກິນຕັບໄດ້ຫວະ ? " ຂ້ອຍເວົ້າດອດໃສ່.

ເຈົ້າເວົ້າວ່າ ຂ້ອຍກືກຫລອກ. ຂ້ອຍເຊື່ອຄືເຈົ້າວ່າ. ຂ້ອຍບໍ່ຄິດວ່າລາວຕັ້ງໃຈຊິຕົ້ມ ຂ້ອຍດອກ. ແຕ່ລາວກໍເປັນຄົນທີ່ຂ້ອຍຕັດຂາດບໍ່ໄດ້. ລາວເກືອບເຮັດໃຫ້ຂ້ອຍເປັນຄາຕະກອນ. ແມ່ນແຕ່ດຽວນີ້. ຄິດມາແລ້ວຂ້ອຍກໍຂົນຫນາວແຕກເຍື່ອບ. ຂ້ອຍລອດມາໄດ້ກໍເພາະມີຜູ້ອື່ນໄປຂ້າລາວສາກ່ອນ. ຊື່ຂອງຂ້ອຍບໍ່ໄດ້ມີສ່ວນກ່ຽວຂ້ອງເລີຍ. ແຕ່ຄະດີຄາຕະກຳບາງເກອິຊະ ຢູ່ເຂດໂຢຊິ ກໍເປັນຂ່າວໃນຫນ້າຫນັງສືພິມ. ເຈົ້າອາດຊິໄດ້ເຫັນແລ້ວ. ຕອນນັ້ນລາວໃຫ້ຂ້ອຍ ຊອຍຍ້າຍບ່ອນຢູ່ຈາກຊິຕາຍະໄປຢູ່ເຂດໂຢຊິ ເພື່ອທີ່ລາວຈະໄດ້ຕັດຂາດຈາກຂາປະຈຳຄົນຫນຶ່ງ ຊຶ່ງເປັນນັກຮ້ອງຊື່ຊິເມໂຊະ.

ຕອນນັ້ນ ຂ້ອຍບໍ່ຮູ້ວ່າ ລາວຕິດຜູ້ຊາຍມາກຫນ້າຫລາຍຕາສໍ່າໃດ, ລາວປ່ຽນຈາກຜູ້ ຫນຶ່ງໄປຫາອີກຜູ້ຫນຶ່ງໄວວາສໍ່າໃດ. ລາວປຽບຄືດອກ ໄຂ່ມຸກ ທີ່ປ່ຽນສີມື້ລະ ຫ້າ-ຫົກເທື່ອ.

ເມື່ອສໍາເລັດວຽກໃນຫ້ອງນໍາກັນແລ້ວ ຂ້ອຍກໍບໍ່ມີຫຍັງຊິເວົ້າ ນໍາລາວ, ຂ້ອຍເອງກໍ ຟ້າວກັບເມືອ. ແຕ່ລາວແນມແສງຕາອັນເສົ້າ ສ້ອຍ ຜ່ານຜົມອັນຫຍຸ້ງເຫຍີງມາເບິ່ງຂ້ອຍ ແລະ ຂໍໃຫ້ຂ້ອຍກັບຄືນ ໄປຫາລາວອີກ. ລາວຈອງແຂນເສື້ອຂ້ອຍໄວ້ ທັງຈົ່ມທຸກ. ຂ້ອຍເອງ ຊິເຮັດຫຍັງໄດ້ລະ. ຈັ່ງຊີ້ແຫລະ ຄືຄົນທີ່ເວົ້າຫນ້ອຍເວລາຢູ່ໂຕະນໍາກັນ ພໍໄດ້ຮ່ວມຕຽງກັນແລ້ວ ກໍເລີຍທັນມາອາໄສເຮົາ.

ຂ້ອຍທຽວໄປຫາລາວຢູ່ປະມານເດືອນຫນຶ່ງ, ຄິດວ່າພົບກັນລວມ ທັງຫມົດກໍເຈັດ - ແປດເທື່ອ. ທັງສອງພວກເຮົາລົ້ງກັນດີ ມີຫຍັງກໍເວົ້າ ສູ່ກັນຟັງ ຕ່າງຝ່າຍຕ່າງກໍພະຍາຍາມ ເພື່ອບໍ່ໃຫ້ກະທົບກະເທືອນໃຈ ຫລື ເບື່ອຫນ່າຍກັນ. ສໍາລັບຄົນທີ່ຮັກກັນແລ້ວ ມັນເປັນຄວາມດູດດື່ມທີ່ ສຸດ. ເຖິງແມ່ນວ່າຂ້ອຍບໍ່ໄດ້ຖາມ ແຕ່ຄິມິກະ ກໍເລົ່າສູ່ຟັງກ່ຽວກັບ ຊີວິດ ຂອງລາວ ຕັ້ງແຕ່ຕອນລາວຍັງນ້ອຍ. ສຸດທ້າຍລາວບອກຂ້ອຍວ່າ ໄປລົ້ງແກວ່ນກັບນັກຮ້ອງຊື່ຊິເມໂຊະ ໄດ້ແນວໃດ. ລາວວ່ານັກຮ້ອງ ຄົນນີ້ ດື່ມເຫລົ້າຫລາຍ ທັງມັກຫລິ້ນການພະນັນ ແລະ ລາວບໍ່ມີ ທາງຮູ້ໄດ້ເລີຍ ວ່າ ເລື່ອງມັນຈະສິ້ນສຸດລົງແບບໃດ. ລາວຢາກຕັດຂາດກັບເຂົາ ແລະ ຄິດວ່າ ຈະກັບຄືນໄປຊົນນະບົດບ້ານເດີມ ຈັກຫວ່າງຈັກຄາວກໍຄົງຈະດີ.

ຂ້ອຍຮູ້ສຶກຜູກພັນກັບລາວເພີ່ມຂຶ້ນ ຈຶ່ງບໍ່ຍອມບອກໃຫ້ລາວໄປ.

"ຢ່າຄິດໂງ່ໆ ນ່າ, ຢູ່ໂຕກຽວຫນີ້ແຫລະ, ເປັນຫຍັງບໍ່ໃຫ້ອ້າຍ ເບິ່ງແຍງຮັກສານ້ອງ ເລີຍຊັ້ນ " ຂ້ອຍບອກລາວ.

ຂ້ອຍກໍຊ່ອຍຫຍັງບໍ່ຄ່ອຍໄດ້. ຂ້ອຍບໍ່ແມ່ນພວກສະຫມັກຫລິ້ນ; ແລະ ຮູ້ດີວ່າສາວເກອິຊະ ນັ້ນປ່ຽນບ່ອນສັງກັດໄປເລື້ອຍໆ ມັນອາດຊິດີກວ່າ ຖ້າລາວປ່ອຍໃຫ້ຂ້ອຍຈັດການທຸກສິ່ງທຸກຢ່າງໃຫ້ດີກວ່າ ລາວໄປອາໄສນາຍຫນ້າເພື່ອຕິດຕໍ່ໂຮງເກອິຊະຊັ້ນຕ່ຳ ແລ້ວກໍເສຍຄ່ານາຍຫນ້າໃຫ້ເຂົາໄປ. ຂ້ອຍຕົກລົງໃຫ້ລາວຫນີໄປຢູ່ບ້ານນອກ ໂດຍທຳທ່າວ່າໄປເຮັດບຸນຢູ່ວັດ. ຖ້າລາວຍັງມີຫນີ້ສິນກັບໂຮງເກອິຊະ ຂ້ອຍກໍວ່າຈະຈັດການແກ້ໄຂກັບຜູ້ເປັນເຈົ້າຂອງໃຫ້ລຸລ່ວງໄປ.

ບ້ານເກີດຂອງລາວຢູ່ຄິຊາຣາຊຸ. ພໍ່ເປັນພະນັກງານເຝົ້າຮັກສາໂຮງຣຽນ ຫລື ໂຮງການບ່ອນໃດບ່ອນຫນຶ່ງນີ້ແຫລະ, ຂ້ອຍກໍຈື່ບໍ່ໄດ້ຄັກ. ແຕ່ພໍ່ກໍເປັນຄົນຈົບຄົນດີພໍໃຊ້. ທຳອິດ ຂ້ອຍໃຫ້ລາວກັບເມືອບ້ານກ່ອນ, ແລ້ວໃຫ້ຂຽນຈົດຫມາຍໄປຫາເຈົ້າຂອງໂຮງເກອິຊະ ວ່າ ເຈັບປ່ວຍຈະໄດ້ພັກຢູ່ບ້ານຫລາຍວັນເຕີບ, ຕໍ່ມາຂ້ອຍກໍບອກໃຫ້ກັບມາໂຕກຽວເພື່ອຈະໄດ້ພໍ້ກັນທຸກມື້ທຸກວັນ ຈົນກວ່າຈະແກ້ໄຂບັນຫາທຸກຢ່າງລຸລ່ວງໄປ. ສິ່ງທີ່ຂ້ອຍຕ້ອງການທີ່ສຸດ ຄືຢາກເຫັນຫນ້າລາວເລື້ອຍໆເທົ່ານັ້ນ, ບໍ່ຄິດຈັກຫນ້ອຍວ່າຊິເອົາປຽບລາວເລີຍ. ເວລາອອກເດີນທາງນັ້ນກໍແມ່ນຂ້ອຍເອງເອົາເງິນໃຫ້ແຮກິງ ແລະ ຊື້ປີ້ລົດໄຟຂາກັບໃຫ້ພ້ອມ. ເມື່ອລາວ ກັບມາໂຕກຽວແລ້ວ ຂ້ອຍພາໄປເຊົ່າເຮືອນຂອງຄົນທີ່ຮູ້ຈັກກັນ ໂດຍຢູ່ຊັ້ນສອງທີ່ຄຸ້ມຮົນໂຈະ. ຂ້ອຍຊື້ເຄື່ອງນຸ່ງກັບເຄື່ອງນອນໃຫ້ໃຫມ່ຫມົດ ເພາະລາວປະທຸກສິ່ງທຸກຢ່າງໄວ້ທີ່ໂຮງເກອິຊະ ພຸ້ນ.

ນັບວ່າ ເປັນການຈັດແຈງເລື່ອງລາວທີ່ຫນັກຫນ່ວງສົມຄວນ. ຂ້ອຍເອງກໍຍັງຢູ່ເຮືອນຂອງມາຣຸຈິ ແລະ ອອກໄປຄ້າງຄືນຢູ່ບ່ອນອື່ນ

ບໍ່ໄດ້. ຂ້ອຍຕ້ອງຫລອຍອອກໄປຫາຄິມິກະ ໂດຍຍາດເອົາເວລາພິເສດ, ມາບັດນີ້ ກໍຈຶ່ງປ່ອຍປະລະເລີຍການສອນດົນຕີ ແລະ ນັກຮຽນກໍມະຫັບມະຫາຍໄປ. ອາຈານເກົ່າກໍຕັກເຕືອນດ້ວຍຄວາມຫວັງດີ. ການຕິດຕໍ່ກັບຜູ້ຄົນຢູ່ໃນວົງ ທີ່ແຄບລົງເລື້ອຍໆ. ເງິນຄ່ຳຝືດເຄືອງ, ແຕ່ຄວາມຜູກພັນຫລົງໄຫລ ຍິ່ງຝັງເລິກລົງຊັກໃຊ້ ຈົນເກີງຂັ້ນວ່າບໍ່ຢາກໃຫ້ລາວໄປເປັນນາງເກອິຊະອີກ. ເວົ້າແທ້ ພວກເຮົາຕົກລົງກັນ ແລ້ວວ່າໃຫ້ລາວຍ້າຍໄປສັງກັດບ່ອນໃຫມ່ ແຕ່ຂ້ອຍກໍຍັງຢາກ ໃຫ້ລາວຢູ່ນຳອີກຈັກມື້ໃນຖານະຄືແມ່ຍິງ ທຳມະດາທົ່ວໄປ ທັງທີ່ຂ້ອຍເອງກໍຫມົດບ່ອນທີ່ຈະໄປຢືບຢືມເງິນມາໃຊ້ຢູ່ແລ້ວ. ກ້າລາວຮູ້ວ່າ ຂ້ອຍຕົກຢູ່ໃນຖານະລຳບາກຂັ້ນນີ້ ລາວກໍຄົງຊູຊີຂໍໄປຢູ່ໂຮງເກອິຊະທັນທີທັນໃດໂລດ. ເພື່ອແກ້ບັນຫາດັ່ງກ່າວ ຂ້ອຍກໍທຳທ່າວ່າ ຕົນເອງມີເງິນຈ່າຍບໍ່ອັ້ນ, ມື້ນີ້ຊື້ແພອາກາຊີໄປຕ້ອນ, ມື້ຫນ້າຊື້ນ້ຳຫອມໄປໃຫ້. ເພາະເຫັນວ່າລາວຄືຊິອຶດອັດລຳຄານທີ່ຕ້ອງຂັງຕົວຢູ່ໃນຫ້ອງຕະຫລອດມື້, ຂ້ອຍເລີຍພາໄປເບິ່ງຮູບເງົາຢູ່ໃນເຂດທີ່ຄິດວ່າ ຈະບໍ່ມີຜູ້ໃດມາເຫັນເຮົາ, ແລະຕອນກັບກໍຈະພາແວ່ຮ້ານອາຫານເມື່ອກິນເຂົ້າແລງ.

ຄິມິກະບໍ່ຮູ້ ຖານະທີ່ແທ້ຈິງຂອງຂ້ອຍ ລາວຈຶ່ງເບີກບານມ່ວນຊື່ນໄປເລີຍໆ.

" ຫາກເປັນຈັ່ງຊີ້ຕະຫລອດໄປກໍສຸດແສນດີ " ລາວຈະເວົ້າອອກມາທັງນ້ຳຕາເຕັມເບົ້າ. ຂ້ອຍຮູ້ສຶກວ່າ ການໄດ້ຢູ່ກັບຄິມິກະ ພຽງແຕ່ຕອນກາງເວັນນັ້ນ ບໍ່ອີ່ມອົກອີ່ມໃຈອີກຕໍ່ໄປ, ດັ່ງນີ້ ກໍຈຶ່ງບອກມາຮຸຈິວ່າແມ່ຂ້ອຍເຈັບປ່ວຍ, ຫລື ບອກວ່າ ອາກາດຮ້ອນເລີຍໄດ້ຮັບເຊີນຈາກເສດກີຜູ້ເປັນລູກສິດໃຫ້ໄປພັກຜ່ອນທີ່ເຮືອນຢູ່ຊົນນະບົດ. ພາຍຫລັງ

ສອງ - ສາມວັນແລ້ວ ກໍເຮັດໜ້າກຽງກັບຄືນໄປຫາມາຣຸຈິ ທີ່ຊິມບາຊິຕາມເດີມ.

ແຕ່ເລື່ອງປິດລັບກໍຖືກເປີດເຜີຍອອກມາ. ໂລກນີ້ມັນແຄບ. ຄອບຄົວຂອງແມ່ເກົ້າທີ່ ຄົວກິນໃຫ້ມາຣຸຈິນັ້ນ ມີເຮືອນຢູ່ໃກ້ໆ ເຮືອນເຊົ່າຂອງຄືມີກະຫັ້ນເອງ. ຂ້ອຍບໍ່ຄິດສະຫລຽວໃຈ ຈັກໜ່ອຍເລີຍວ່າເບື້ອງຫລັງອັນໜ້າອົ໊ດຽດຂອງຂ້ອຍນັ້ນ ມີຄົນຮູ້ເຫັນກັນທົ່ວແລ້ວ. ເລື່ອງ ມັນແຮ່ງເຕັກເຂົ້າໄປອີກ ເມື່ອຂ້ອຍພະຍາຍາມແກ້ໂຕກັບ ມາຣຸຈິດ້ວຍຄວາມເວົ້າຫວານໆ ວ່າ : " ຂ້ອຍຫວະ ຊິໜີຈາກເຈົ້າໄປໄດ້. ເວົ້າແນວບໍ່ເວົ້າເຈົ້າກໍດາຍ. ກາຍຍາມທີ່ຊິເວົ້າເລື່ອງໜີຈາກກັນແລ້ວພວກເຮົານະ. "

" ໂຊກິຈິ ! ມັນມີຂອບເຂດເດີ ອັນການຫລອກຕົ້ມກັນນີ້. ເຊົາໃດ໋ ! " ມາຣຸຈິ ເອົາກອກ ດູດຢາຟາດພື້ນດັງປຶກ " ຂ້ອຍເອງກໍເປັນສາວເກອິຊະ, ກ້າເຈົ້າມັກອີ່ນັ້ນຫລາຍກໍເຊີນໄປເອົາກັບມັນ. ຂ້ອຍຊິບໍ່ຈົ່ມພໍຄວາມ, ຊິບໍ່ຂັດຂວາງຈັກດີ້ເລີຍ, ຂໍໂທດທີ່ຕ້ອງເວົ້າແປນໆ ຈັ່ງຊີ້. ແຕ່ຄົນຢ່າງຂ້ອຍບໍ່ອຶດຜູ້ຊາຍດອກ. ຂ້ອຍອາດຊິມີຍາມຕົກອັບ, ແຕ່ຄົນຊື່ມາຣຸຈິ ແຫ່ງຊິມບາຊິ ກໍມີຜູ້ຮູ້ຈັກຢູ່ບໍ່ໜ້ອຍໃດເດີ, ແລ້ວກໍຊິມາຢຽບບໍ່ໄດ້ງ່າຍໆອີກ ເອົາລະ ! ຂ້ອຍຊິສົ່ງເຈົ້າໄປຢ່າງດີສົມສັກສີ, ໄປຊະນິດຢູ່ໃນທໍ່ເຄື່ອງຜູກໂບຢ່າງງາມ, ພຽງແຕ່ໃຫ້ເຈົ້າເຊັນຮັບຮອງວ່າຈະບໍ່ກໍ່ຄວາມຫຍຸ້ງຍາກພາຍຫລັງ, ແລະ ອັນນີ້ແມ່ນຂອງເລັກໆ ນ້ອຍໆອັນເປັນນ້ຳໃຈຈາກຂ້ອຍ. "

ຂ້ອຍມານັບເບິ່ງໃນພາຍຫລັງ ປາກົດວ່າ ເປັນໃບຮ້ອຍ ເຢັນຫ້າໃບ. ແຕ່ເກືອງແມ່ນວ່າ ເປັນນັກດົນຕີທີ່ຂັດສົນເງິນຄຳ ຄົນຜູ້ໜຶ່ງ ກໍບໍ່ຄວນ

ຮັບເອົາເງິນຊື້ຮ້າງຈາກແມ່ຍິງເລີຍ. ຂ້ອຍ ຢາກເອົາຟາດໃສ່ໜ້າ ແລະ ຕີນກີບສາວສ່ານັ້ນກ່ອນທີ່ຈະຟ້າວອອກຈາກຫ້ອງ. ແຕ່ກໍຄິດສະເດືອກວ່າ ເງິນຈຳນວນນີ້ ພຽງພໍທີ່ຈະໃຊ້ໜີ້ໃຫ້ຄີມິກະ, ຂ້ອຍເລີຍຈຳໃຈເຊັນໃບຮັບຮອງດ້ວຍມືສີສັ່ນໆ, ນ້ຳຕາໄຫລຊຶມດ້ວຍຄວາມເຈັບຊ້ຳ. ແລ້ວໃນທີ່ສຸດ ຂ້ອຍກໍເຊົາສອນດົນຕີຊໍສາມສາຍ ( ຊາມິເຊັງ ) ເພາະບໍ່ອາດລືມຄວາມເຈັບຊ້ຳໃນຕອນນັ້ນລົງໄດ້. ຂ້ອຍອາດຈະບໍ່ເຈັບຊ້ຳອັບອາຍເຖິງປານນັ້ນ ຖ້າຂ້ອຍບໍ່ເປັນນັກດົນຕີຊໍສາມສາຍ.

ແຕ່ເມື່ອອອກຈາກເຮືອນມາຣຸຈິ ພ້ອມກັບເງິນຫ້າຮ້ອຍເຢັນໄປແລ້ວ ປາກົດວ່າ ຄວາມເຈັບຊ້ຳ ແລະ ອັບອາຍຈາງຫາຍໄປໝົດ. ຂ້ອຍດີດດິ້ນດີໃຈເມື່ອຄິດວ່າຄີມິກະຈະດີອົກດີໃຈຂະໜາດໃດ. ລົດເມປະຈຳທາງນັ້ນກໍແລ່ນຊ້າຈົນບໍ່ອາດທົນຂີ່ໄດ້, ຂ້ອຍຈຶ່ງຂີ່ລົດຕັກຊີ້ໄປຫານາງ ໂດຍໄປທາງຄອງຮົບໂຈະທີ່ກຸ້ມແລ້ວ. ເຖິງແມ່ນວ່າ ເປັນຄືນລະດູຮ້ອນ ແຕ່ລົມທີ່ພັດມາ ຈາກແມ່ນ້ຳກໍເຢັນສະບາຍ, ແລະ ເຖິງແມ່ນວ່າ ຍັງບໍ່ຮອດທ່ຽງຄືນ ແຕ່ທາງຮ່ອມເລັກຮ່ອມນ້ອຍກໍງຽບສະຫງັດ, ສ່ວນປ່ອງຢ້ຽມຫ້ອງຂອງຄີມິກະ ຢູ່ຊັ້ນສອງ ແລະ ປະຕູແຜ່ນແກ້ວຊັ້ນລຸ່ມກໍຖືກອັດດ້ວຍຝາເລື່ອນ, ຂ້ອຍເຄາະປະຕູແລ້ວ ມີຄົນເປີດໄຟສະຫວ່າງຂຶ້ນ.

" ຮື ! ມາຄົນດຽວຫວະ ? " ນັ້ນແມ່ນສຽງແມ່ຍິງທີ່ຢູ່ຊັ້ນລຸ່ມຖາມ.

" ຄີມິກະ ໄປໃສ ? " ຂ້ອຍຖາມຄືນ.

" ກະດຽວວ່າ ໄປນຳເຈົ້າ " ແມ່ຍິງຄົນນັ້ນເວົ້າຫົງຫິວ, ທ່າທາງບົ່ງບອກວ່າ ຢາກ ຫລີກອອກຈາກເລື່ອງ.

ເປັນອັນວ່າ ຄີມິກະ ອອກໄປສົ່ງຂ້ອຍຂຶ້ນລົດເມປະຈຳທາງ

ແລ້ວກໍບໍ່ໄດ້ກັບຄືນມາຫ້ອງເຊົ່າເລີຍ. ລາວຄົງຄິດວ່າ ຂ້ອຍຈະບໍ່ກັບຄືນມາກ່ອນທ່ຽງຂອງມື້ກັດມາ, ແລະ ເປັນໄປໄດ້ວ່າ ລາວບໍ່ໄດ້ກັບຄືນມາເລີຍຕະຫລອດຄືນນັ້ນ. ຄືມິກະ ໄປທີ່ໃດກັນນໍ ? ລາວໄປຫາຂາປະຈຳຄັກໆ ເປັນຕາສົງໄສກວ່າຫມູ່ກໍແມ່ນໄປຫາຫມໍຊີເມໂຊະຫັ້ນລະ. ຂ້ອຍຂຶ້ນໄປຊັ້ນເທິງ ແຕ່ກໍຜູດ ລຸກຜູດນັ່ງ ເພາະຈິດໃຈບໍ່ສະຫງົບ. ຂ້ອຍລົງມືຊອກຫາຮ່ອງຮອຍເບິ່ງວ່າ ລາວຈະໄປທາງໃດ, ສິ່ງຂອງທັງຫມົດຂອງລາວນັ້ນ ປະໄວ້ທີ່ໂຮງເກອິຊະ ແຕ່ກ່ອນແລ້ວ, ໂຕະແຕ່ງຫນ້າກໍບໍ່ຢູ່, ເຫັນພຽງແຕ່ເຄື່ອງນຸ່ງເປື້ອນໆ ມັດຫນຶ່ງຢູ່ໃນຕູ້. ເມື່ອບໍ່ພົບຮ່ອງຮອຍຫຍັງ ຂ້ອຍກໍຜູດອອກຈາກຫ້ອງໄປ ທັງອຸກອັ່ງຂຶ້ນຊັກໃຊ້.

ກະຫນົບທີ່ເບັ່ງໄປຕາມຄອງທີ່ກົມໃຫມ່ນັ້ນ ມືດປານກຳຕາ, ເປົ່າປ່ຽວ ແລະ ມິດງຽບ, ມີແຕ່ສຽງຟອງນ້ຳກະທົບຜະຫນັງຫີນດັງ ຄ່ອຍໆເບົາໆ. ມັນເປັນເວລາເດິກດື່ນກາຍເວລາທີ່ ລົດເມຈະແລ່ນຂ້າມຂົວອິມມະຢະ, ເຫັນມີແຕ່ແສງໄຟລົດທີ່ແລ່ນຂ້າມຂົວທຽວໂກະກຸຢູ່ໄປມາ, ລົມທີ່ພັດມາຈາກແມ່ນ້ຳເຢັນຈ້ອຍໆ, ເປັນລົມໃນລະດູໃບໄມ້ຫລົ່ນແລ້ວ, ຂ້ອຍແນມເບິ່ງດາວ ດ້ວຍຈິດໃຈເລື່ອນລອຍ, ເຫັນດາວສະເດັດລອຍຜ່ານຫລັງຄາສູງໆ ທາງຟາກແມ່ນ້ຳເບື້ອງ ນັ້ນ. ຂ້ອຍຊິໄປໃສນໍ ? ຢູ່ຊິມບາຊິ ກໍບໍ່ມີຫຍັງແລ້ວ, ຄິດເຖິງເລື່ອງເງິນ - ກໍອັບອາຍໃນໃຈ, ຈະໄປແກ້ແຄ້ນກໍບໍ່ມີທາງດັ້ງ. ຂ້ອຍເອງແທ້ໆ ທີ່ຮັບເອົາເງິນນີ້ມາ, ເອົາມາເພື່ອໃຜລະ ? ເປັນອັນວ່າ ລາວເຮັດໃຫ້ຂ້ອຍເຈັບພິລຶກ, ນາງໂສເພນີຫັດໃຫມ່ ຜູ້ປຽບດັ່ງໄກ່ອ່ອນ ປີກກໍຍັງບໍ່ທັນຫຸ້ມກົ້ນຊ້ຳຫັ້ນບ່າ. ຂ້ອຍຍ່າງໄປເລື້ອຍໆ, ສາຍຕາຈັບຢູ່ຫນ້ານ້ຳ ຈົນເກືອບໄປຮອດທ່າຂ້າມຄູຣະມາເອະ. ຂ້ອຍອາດຈະສະບາຍອົກສະບາຍໃຈຂຶ້ນ ກ້າໄດ້

ຟາດເງິນກຳເວນນີ້ລົງນ້ຳ ໄປ.

ມືເງົາຄົນໜຶ່ງ ຍ່າງສວນທາງອ້ອຍໄປ ດ້ວຍບາດກ້າວກີ່ງ ທັງຟ້າວຟັ່ງ, ມັນແມ່ນຄືມີກະນັ້ນເອງ.

" ຢ່າຟ້າວໄປ ! ອ້າຍເອງນ່າ. ນ້ອງຊິໄປໃສ ? " ອ້ອຍເອີ້ນໃສ່ສຽງ ຄົງສັ່ນໆ.

" ເອີ ... ສະບາຍດີ " ລາວວ່າ.

ອ້ອຍປັດຊຸກລາວທັງເວົ້າວ່າ " ແມ່ນຫຍັງມາເວົ້າວ່າ ເອີ ສະ ບາຍດີ, ເຈົ້າບໍ່ຄຶດວ່າ ຊິມາພໍ້ອ້ອຍແມ່ນບໍ່ ? ງາມໜ້າຕວ່າ ! ຈຳເປັນ ຕົວະແລ້ວ ກໍເຮັດໃຫ້ມັນຄືແດ່. "

ລາວກົ້ມຕົວລົງ, ຄຸກເຂົ່າເບື້ອງໜຶ່ງໃສ່ພື້ນຫີນ, ມຸບໜ້າ ໃສ່ແຂນເສື້ອ ທັງຫາຍໃຈ ເສົ່າແຮງໆ ຈົນບ່າໄຫລ່ສັ່ນສະທ້ານ, ລາວບໍ່ ຍອມລຸກຂຶ້ນເລີຍ ແລະ ບໍ່ເວົ້າຫຍັງ. ອ້ອຍພະຍາຍາມດຶງລາວຂຶ້ນ, ແຕ່ລາວຈ່ອງມືອ້ອຍໄວ້ທັງຄຸກເຂົ່າຢູ່ຕໍ່ໄປ ຄືກັບວ່າ ພ້ອມແລ້ວ ທີ່ຈະໃຫ້ອ້ອຍຕົບຕີ, ລາວເວົ້າວ່າ :

" ເຊີນໂລດ ເຮັດຕາມໃຈມັກ, ຕີໃຫ້ສົມໃຈອ້າຍເລີຍ, ຂ້ານ້ອງ ໃຫ້ຕາຍສາ, ນ້ອງຢາກຕາຍໃຫ້ໝົດເລື່ອງໝົດລາວໄປ, ນ້ອງບໍ່ ມີຫຍັງອີກແລ້ວໃນຊີວິດນີ້. "

ລາວຄຸກເຂົ່າຕໍ່ໄປ ມຸບໜ້າໃສ່ແຂນເສື້ອອ້ອຍ ທັງໄຫ້ສະອື້ນ ໂດຍບໍ່ຫ່ວງວ່າ ຕົນເອງຢູ່ ສະຖານທີ່ໃດ.

ອ້ອຍເອງກໍເກີດສັບສົນໃນໃຈ ເລີຍເວົ້າຂຶ້ນວ່າ " ພໍແລ້ວ ພໍແລ້ວ " ທັງໂຈມລາວລຸກຂຶ້ນ ແລະ ຕົບຫລັງຄ່ອຍໆ ຕົນຕົວລາວສັ່ນສະທ້ານ ແລະ ອາບໄປດ້ວຍນ້ຳຕາ.

" ນ້ອງເຮັດຜິດແລ້ວ, ຕີນ້ອງສາເຕະນ້ອງສາ, ນ້ອງບໍ່ວ່າຫຍັງອ້າຍດອກ, ເຮັດຕາມໃຈມັກອ້າຍໂລດ " ລາວບຽດເຂົ້າຫາຂ້ອຍ, ສຽງຮ້ອງໄຫ້ດັງແຮງຂຶ້ນແຮງຂຶ້ນ ປານວ່າຊິດັງໄປຮອດຟາກນໍ້າເບື້ອງນັ້ນຈົນຂ້ອຍເອງກໍລົ່ງໆເລຍ. ຄວາມແຄ້ນຂອງຂ້ອຍດັບມອດໄປ ແລະພົບວ່າ ຕົນເອງກັບເປັນຝ່າຍຂໍໂທດ ແລະ ຂໍໃຫ້ລາວຍົກໂທດໃຫ້. ໃນທີ່ສຸດເຮົາທັງສອງກໍພາກັນກັບຄືນຫ້ອງເຊົ່າ.

ອາການທີ່ເປັນດັ່ງຄົນເສຍເສັ້ນຂອງລາວນັ້ນ ເລີ່ມມະຫັບ ມະຫາຍໄປ, ບັດນີ້ ຄິມິກະ ມີອາການເສົ້າຫມອງ, ນັ່ງລູບຜົມທີ່ຫຍຸ້ງບໍ່ຮຽບຮ້ອຍໃຫ້ເຂົ້າຊົງ, ຕາທີ່ໃສໄປແນມຢູ່ທີ່ພື້ນ ຄ້າຍຄືວ່າ ຫນ້າອາຍຕໍ່ຂ້ອຍທ່າມກາງແສງໄຟທີ່ສະຫວ່າງ. ຂ້ອຍຄິດອີ່ຕົນ ແລະ ຮູ້ສຶກຮັບຜິດຊອບທຸກຢ່າງ ເລີຍເວົ້າອອຍໃຫ້ລາວເຊົາໂສກເສົ້າ. ອາການຂອງລາວ ຄ່ອຍໆສົດຊື່ນຂຶ້ນ ແຕ່ກໍຍັງສືບດັງເປັນບາດເປັນບາດ, ດ້ວຍຄວາມສຳນຶກຜິດຢູ່.

ເຊົາກ່ອນນໍ້ ! ເຈົ້າຄືຊິຄ້ານຟັງເລື່ອງມັກໆ ຮັກໆ ຂອງຂ້ອຍ. ແຕ່ຂ້ອຍບໍ່ໄດ້ເວົ້າເລື່ອງຂີ້ ຕົວະດອກເດີ ພວກຂ້ອຍແຮ່ງຜິດກັນ ກໍແຮ່ງຮັກກັນຂຶ້ນຊັກໃຊ້.

ຄິມິກະ ບອກຂ້ອຍວ່າ ການເຈລະຈາກັບເຈົ້າຂອງໂຮງເກອິຊະເດີມ ນັ້ນ ຊົງຈະບໍ່ໄດ້ຜົນ, ລາວໄດ້ຍິນມາດັ່ງນີ້ ແລະ ວ່າຝ່າຍເຂົາຈະສົ່ງທະນາຍຄວາມໄປເວົ້າເລື່ອງຄະດີນີ້ ກັບພໍ່ຂອງລາວ ດັ່ງນີ້ລາວຈຶ່ງຟ້າວໄປຕິດຕໍ່ຂໍຄວາມຊ່ວຍເຫລືອນຳນາຍຫນ້າຄົນຫນຶ່ງທີ່ຢູ່ຟາກນໍ້າເບື້ອງນັ້ນ.

" ເປັນຫຍັງ ບໍ່ບອກໃຫ້ອ້າຍຮູ້ກ່ອນຊັ້ນບ່າ ?" ຂ້ອຍຕໍ່ວ່າ ທັງເອົາເງິນຫ້າໃບມາແບໃຫ້ລາວເບິ່ງ. ໃນເມື່ອຄີມິກະຕິດຫນີ້ເຂົາຢູ່ 800 ເຢັນ, ກ້າເອົາໄປໃຊ້ເຂົາກ່ອນຈັກ 500 ກໍຄົງຜ່ອນຜັນກັນໄດ້. ຄືນນັ້ນ ທັງສອງເຮົານອນລົມກັນເຖິງເລື່ອງອະນາຄົດ ຢູ່ໃນອ້ອມແຂນ ຂອງກັນ ແລະ ກັນຈົນຊອດແຈ້ງ. ຂ້ອຍບໍ່ມີຫຍັງຊິຢ້ານຊີກົວອີກແລ້ວ ໃນໂລກນີ້ ໃນເມື່ອວ່າ ການພົວພັນກັບມາຣຸຈິ ທີ່ຊິມບາຊິ ກໍຂາດສະບັ້ນລົງແລ້ວ. ດັ່ງນີ້ ເຊົ້າມື້ຕໍ່ມາຂ້ອຍກໍໄປຕົກລົງກັບ ໂຮງເກອິຊະ ທີ່ຊິຕາຢະ ເປັນທີ່ຮຽບຮ້ອຍ.

ພວກເຮົາຢູ່ນຳກັນໄປຄືດັ່ງໃນຄວາມຝັນ ເປັນເວລາເດືອນຫນຶ່ງ ຫລື ສອງເດືອນ. ຂ້ອຍຕັດຂາດຈາກຄົນອື່ນໆທັງຫມົດ. ພວກເຮົາ ຂາຍເຄື່ອງນຸ່ງຈົນຮອດຊຸດສຸດທ້າຍ, ແລະ ເມື່ອລົມລະດູໃບໄມ້ຫລົ່ນ ຫນາວຂຶ້ນຈ້ອຍໆ ພວກເຮົາກໍໄດ້ແຕ່ນອນສັ່ນຫນາວຢູ່ບ່ອນນອນ. ຍ້ອນ ວ່າ ຈະບໍ່ມີຫຍັງດີຂຶ້ນ ກ້າຫວັງເພິ່ງແຕ່ຄີມິກະ ຂ້ອຍເລີຍຕັດສິນໃຈຫາ ລ້ຽງຊີບດ້ວຍການເປັນ ນັກດົນຕີພະເນຈອນ.

" ປາກົດວ່າ ນ້ອງຫລີກບໍ່ພົ້ນນັກດົນຕີພະເນຈອນເລີຍ " ຂ້ອຍວ່າ " ນ້ອງເລີກກັບນັກຮ້ອງມາແລ້ວ, ບັດນີ້ຊ້ຳມາພົ້ນັກສີຊໍ, ແຕ່ບໍ່ຕ້ອງອຸກ ໃຈ. ຢູ່ນຳອ້າຍໄປອີກຈັກຫນ່ອຍ, ແລ້ວອ້າຍຊິໄປຫາອາຈານເກົ່າ ອ້ອນວອນໃຫ້ເພິ່ນຮັບເອົາ ຄືນເຮັດວຽກເກົ່າຄືຊິໄດ້ຢູ່. "

ແຕ່ວ່າເວລາ ທີ່ຂ້ອຍທ່ຽວເລາະຫາຫລິ້ນ ດົນຕີຢູ່ຕາມສະກາານ ທີ່ບັນເທີງນັ້ນ ຂ້ອຍເລີຍເປັນຫວັດຈົນຕ້ອງນອນຢູ່ຫລາຍມື້. ເຮົາ ທັງສອງຈຶ່ງຫມົດຫົນທາງ ຂ້ອຍຮ້ອງໄຫ້ ແລະ ເຮັດຫຍັງບໍ່ໄດ້ເລີຍ

ປ່ອຍໃຫ້ລາວໄປ. ນາຍໜ້າຄົນໜຶ່ງຕິດຕໍ່ໃຫ້ລາວເຮັດວຽກ ຢູ່ໂຮງຟູຊະຣານະໃນເຂດໂຢຊິ ແລ້ວລາວກໍປ່ຽນຊື່ເປັນໂຄະໂຊະໂນະ. ລາວນຸ່ງເຄື່ອງເຫລື້ອມຍິບຍັບຄືນອີກ, ແລະ ບອກຂ້ອຍວ່າ ໄດ້ຢືມເງິນນຳເຈົ້າຂອງໂຮງເກອິຊະພຽງແຕ່ພໍຊື້ເຄື່ອງນຸ່ງອັນຈຳເປັນເທົ່ານັ້ນ ທັງຍັງຈະໄດ້ສ່ວນແບ່ງຈຳນວນ 60 ເປີເຊັນ ຈາກລາຍຮັບນຳອີກ. ແຕ່ເມື່ອສວ່າງເຊົາ ຈາກລົມປ່ວຍແລ້ວ ຂ້ອຍໄປຫາລາວ ກໍເລີຍພົບວ່າ ການຕົກລົງກັບເປັນເລື່ອງທີ່ແຕກຕ່າງກັບທີ່ລາວໄດ້ບອກຂ້ອຍຄື : ລາວເປັນໜີ້ເຂົາ 700 ເຢັນ, ສ່ວນລາຍຮັບນັ້ນ ແບ່ງເຄິ່ງກັນລະຫວ່າງລາວກັບເຂົາ. ເມື່ອຂ້ອຍຖາມວ່າ ເອົາເງິນໄປໃສໝົດ, ລາວກໍຕອບແບບລອຍໆ ບໍ່ແຈ່ມແຈ້ງ, ໃນໃຈຂ້ອຍຮູ້ສຶກແນ່ວ່າ ຮອດເວລາແລ້ວທີ່ຈະຕ້ອງຕັດຂາດຈາກລາວ, ຖ້າຢູ່ນຳກັນຕໍ່ໄປກັບແມ່ຍິງຊະນິດນີ້ ຂ້ອຍກໍຄົງຕັ້ງຕົນຕັ້ງໂຕບໍ່ໄດ້.

ແຕ່ຂ້ອຍກໍກ້າເບິ່ງຈັງຫວະຢູ່ ເພາະຕອນນີ້ ມາຣຸຈິ ແຫ່ງຊິມບາຊິ ມາອ້ອນວອນຂໍໂທດ ແຕ່ຂ້ອຍກໍທຳທ່າບໍ່ໃຈອ່ອນງ່າຍໆ. ເຖິງແມ່ນວ່າຂ້ອຍຈະຕົກອັບ ແຕ່ກໍບໍ່ຍອມອາໄສກິນນຳ ແມ່ຍິງດອກ. ລາວເຄີຍດູໝິ່ນຢຽດຫຍາມຂ້ອຍຢ່າງເຈັບແສບທີ່ສຸດ ແລ້ວຊ້ຳມີໜ້າມາງໍ້ຂ້ອຍອີກ. ລາວເປັນຫ່ວງເປັນໄຍນຳຂ້ອຍເຖິງຂະໜາດນີ້ແທ້ບໍ ? ຫາກເປັນດັ່ງນັ້ນແທ້ ລາວກໍຄົງຈະບໍ່ກືຊາ ຖ້າວ່າຂ້ອຍຈະໄປຫາກິນທ້າກິນສືບທາງອື່ນ. ຂ້ອຍບໍ່ຢາກເຫັນລາວອີກ, ບໍ່ມັກວາດເປັນເອື້ອຍໃຫຍ່ຂອງລາວ. ຂ້ອຍຊິໃຫ້ລາວໄດ້ເຫັນກັບຕາ. ຂ້ອຍຊິຫາວິທີເຮັດໃຫ້ຄິມິກະ ກັບກາຍເປັນແມ່ຍິງທຳມະດາຄືນອີກໃໝ່. ແຕ່ເອົາໄປເອົາມາ

ຂ້ອຍກໍບໍ່ເຂົ້າໃຈຕົນເອງວ່າ ເປັນຫຍັງຈຶ່ງຫລົງຮັກແມ່ຍິງທີ່ໄຮ້ຄ່າ, ໃຈໂລເລ, ເສຍທາດຂາດຄຸນຄົນນີ້.

ຄິມິກະ ຫາກໍ່ອາຍຸ 19, ລາວເລີ່ມພົວພັນກັບຜູ້ຊາຍຕັ້ງແຕ່ຕອນອາຍຸ 13-14 ແລະ ພາຍຫລັງທີ່ຫນີຈາກເຮືອນໄປຢູ່ຕາມໂຮງບ້າຊາຢູ່ຕ່າງແຂວງແລ້ວ ລາວກໍມາປາກົດຕົວ ຢູ່ໂຮງຊິຕາຍະ ຈົນອາຍຸໄດ້ 17 ປີ ເຕັມ. ໂດຍທາດແທ້ນັ້ນ ລາວເຫມາະກັບວຽກນີ້ຕາມທີ່ລາວໄດ້ເລືອກເອົາເອງ ລາວຈຶ່ງເປັນທີ່ຕ້ອງການຂອງລູກຄ້າຫລາຍສົມຄວນ, ແຕ່ລາວບໍ່ກັງວົນສົນໃຈນຳອະນາຄົດ, ບໍ່ມີຄວາມຄິດຢາກບົນຕົວຂຶ້ນສູງ ແລະ ບໍ່ຫ່ວງຫ້າຫ່ວງ ສິບຫຍັງເລີຍກັບຕົນເອງ, ລາວປ່ອຍໃຫ້ເວລາວັນ ແລະ ເດືອນຜ່ານໄປ, ຜ່ານໄປໂດຍບໍ່ມີສິ່ງໃດເກີດປະໂຫຍດ. ເບິ່ງແລ້ວ ກໍຄືວ່າ ລາວເປັນຄົນຊ້າຊື່, ບໍ່ມີເລຫລ່ຽມ ແລະເສົ້າໆເຫງົາໆ. ຂ້ອຍຄຶດບໍ່ອອກເລີຍວ່າ ຈະປະກົມລາວໄປໄດ້ທັງທີ່ເລື່ອງມັນສະຫລຸບໄດ້ພຽງຄຳ ດຽວວ່າ ມັນຊິຈົບຫາຍວາຍວອດເພາະລາວບໍ່ມີຄ່າຫຍັງຈັກດີ້. ແນວໃດກໍຕາມຕອນທີ່ຂ້ອຍໃຊ້ຊີວິດຢູ່ຮ່ວມກັບລາວ ຂ້ອຍເອງ ກໍຕິດນິໄສແບບເສີຍໆ ຕໍ່ຄຳເຍາະເຍີ້ຍສຽດສີຂອງຜູ້ຄົນທັງຫລາຍ, ຂ້ອຍບໍ່ເອົາໃຈໃສ່ຕົນເອງ, ບໍ່ຫ່ວງບໍ່ໃຍຕໍ່ໂລກຕະຫລອດມື້ ຂ້ອຍຈະນອນຝັນລົມໆແລ້ງໆ ເຄິ່ງຫລັບເຄິ່ງຕື່ນ, ຫນ້າຕາບໍ່ລ້າງບໍ່ກິນເຂົ້າກິນນ້ຳ, ຂ້ອຍຄຶດໄປຮອດຂັ້ນວ່າຄົງຈະດີ ກ້າເຮົາທັງສອງຈະກາຍເປັນຄົນຂໍທານຊ້ຳສາເລີຍ.

ພາຍຫລັງ ທີ່ຄິມິກະ ຍ້າຍໄປຢູ່ໂຢຊິແລ້ວ, ຊີວິດທີ່ພວກເຮົາເຄີຍຢູ່ຮ່ວມກັນແບບອິເລ ເກນັ້ງນັ້ນກໍກາຍເປັນຄວາມຊົງຈຳທີ່ເປັນ

ພາບຢູ່ໃນຄວາມຝັນອັນເສົ້າສ້ອຍ ຄວາມສຸກໃຈຢ່າງ ດຽວຂອງຂ້ອຍກໍຄື ຄອງກ້າໃຫ້ຮອດມື້ທີ່ລາວຈະມາຫາຕາມທີ່ສັນຍາຄື ລາວຈະມາແວ່ມື້ໜຶ່ງ ຫລື ສອງມື້ຕໍ່ເດືອນ ບິນເສັ້ນທາງທີ່ລາວໄປເຮັດບຸນທີ່ຫໍອາຣັກ. ໃນເມື່ອເຮົາແຍກກັນຢູ່ຢ່າງນີ້ ຂ້ອຍກໍເລີຍພົວພັນກັບອາຈານເກົ່າອີກ ໂດຍອາໄສຄົນອື່ນຕິດຕໍ່ໃຫ້ກ່ອນ ແລະ ຕໍ່ມາ ຂ້ອຍກໍໄດ້ຮັບອະນຸຍາດໃຫ້ສອນດົນຕີຄືເກົ່າ.

ຄິມິກະ ມາແວ່ຂ້ອຍສອງ-ສາມເທື່ອ. ມີເທື່ອໜຶ່ງ ລາວມານອນຄ້າງຄືນນຳ ແລ້ວ ຈຶ່ງກັບເມືອໃນຕອນບ່າຍຂອງມື້ກັດໄປ. ຂ້ອຍບໍ່ຮູ້ວ່າ ມັນຈະເປັນເລື່ອງເຫມາະສົມ ຫລື ບໍ່. ນັ້ນເປັນຕອນອະວະສານລະຫວ່າງພວກເຮົາ. ເດືອນໜຶ່ງຜ່ານໄປ, ສອງເດືອນຜ່ານໄປອີກ. ຈົນບຸນເທສະການໂອໂຕະຣິຄັ້ງສຸດທ້າຍໃນເດືອນພະຈິກຜ່ານພົ້ນໄປ. ລ່ວງຮອດຕະຫລາດນັດຍາມປີໃຫມ່ຢູ່ອາຊາກຸຊະເປີດໃຫ້ຄົນທ່ຽວຊົມ. ແຕ່ຂ້ອຍບໍ່ໄດ້ຍິນຂ່າວຄາວຂອງລາວເລີຍ.

ຂ້ອຍຈະບໍ່ລືມຄືນນັ້ນໄດ້ເລີຍ. ມັນເປັນຄືນວັນທີ 20 ທັນວາ. ຫິມະຕົກຢ່າງແຮງ ຂ້ອຍຍ່າງກັບບ້ານ ຫລັງຈາກໄປສອນດົນຕີທີ່ຄຸ້ມທຸລະກິດ. ຂ້ອຍກິນເຫລົ້າເພື່ອຕ້ານຄວາມຫນາວ ແລະ ກະວ່າຈະຂີ່ເຮືອຂ້າມຟາກ, ແຕ່ພໍເຫັນຫິມະກໍເລີຍປ່ຽນໃຈ, ຂ້ອຍແວ່ເຂົ້າໂຮງເກອິຊະ ຟູຊະຣານະ. ປາກົດວ່າ ສາວເກອິຊະທັງສາມຄົນ ລວມທັງໂຄະໂຊະໂນະ ຫລື ຄິມິກະອອກໄປທາງນອກ ຊາຍເຈົ້າ ຂອງໂຮງກໍບໍ່ຢູ່ຕະຫລອດທັງສາວເກອິຊະອາວຸໂສ ຜູ້ບົວລະບັດເຂົາໃນການະເມຍນັ້ນກໍອອກໄປຄືກັນ. ມີຊາຍຄົນໜຶ່ງ ນັ່ງດູດຢາຢູ່ຂ້າງເຕົາຜິງ. ນັ້ນຄື

ຢາມະຊາກິ ຜູ້ເປັນນາຍໜ້າ. ຫມໍອາຍຸ 40 ປີ ແລະ ຫມໍນີ້ ເອງທີ່ພາໂຄະໂຊະໂບະ ມາເຮັດວຽກຢູ່ບ່ອນນີ້. ພໍຫລຽວເຫັນ ຂ້ອຍກໍຮູ້ວ່າແມ່ນໃຜ ຈຶ່ງຖາມຫມໍວ່າ ໄປມາຢ່າງໃດ.

ຫມໍເອົາແມວອອກຈາກເບາະນັ່ງຊຶ່ງຄົງຈະແມ່ນບ່ອນນັ່ງຂອງເຈົ້າຂອງໂຮງແລ້ວ ເຊີນຂ້ອຍນັ່ງລົງ.

" ເຈົ້າຄືຊິຫຍຸ້ງວຽກຫລາຍນໍ, ບໍ່ດີເລີຍທີ່ຫິມະຕົກແຮງຕອນນີ້, ແຮ່ງເປັນຕອນທີ່ຫຍຸ້ງວຽກທີ່ສຸດຂອງປີ " ຫມໍກ່າວ ທັງຍິ້ມສົບງໍອອກເພື່ອຍິ້ມປະຈົບປະແຈງ ເຜີຍໃຫ້ເຫັນແຂ້ວຄໍາ. "ເຈົ້າມາຫນີ້ກໍດີເພາະຂ້ອຍມີເລື່ອງຢາກບອກເຈົ້າຢູ່ ຂ້ອຍຍັງຄິດວ່າ ຖ້າຫິມະບໍ່ຕົກຫນັກແລ້ວ ຂ້ອຍຊິໄປຫາເຈົ້າຢູ່ເຮືອນໃນຄືນນີ້ໂລດ. "

" ເປັນອັນວ່າ ຂ້ອຍມາກໍ່ກຍາມພໍດີ ມີເລື່ອງຫຍັງຫວະ ? "

" ກໍເລື່ອງໂຄະໂຊະໂບະ ຫັ້ນແຫລະ, ຕອນນີ້ ບໍ່ມີໃຜຢູ່ ພວກເຮົາມາເວົ້າກັນໃຫ້ມັນແລ້ວໄປສາ. "

ເປັນເລື່ອງສັບສົນ ທີ່ຈະຮູ້ວ່າ ຜູ້ໃດເປັນຄົນລິເລີ່ມກ່ອນ, ແຕ່ເລື່ອງມັນປາກົດອອກມາວ່າ ເມື່ອຄິມິກະມາຢູ່ໂຮງຟູຊະຮານະໄດ້ບໍ່ດົນປານໃດ ລາວກໍຕົກເປັນເມຍຂອງເຈົ້າຂອງໂຮງ ແລະ ເກີດຜິດກຽງກັບສາວເກອິຊະອາວຸໂສຄົນຫນຶ່ງ ທີ່ທໍາຫນ້າທີ່ກໍາກັບດູແລທົ່ວໄປຈົນສາວເກອິຊະອາວຸໂສຕ້ອງກຶກໄລ່ຫນີ, ຢາມະຊາກິ ຈຶ່ງກຶກມອບຫມາຍໃຫ້ເປັນຜູ້ໄກ່ເກ່ຍ ເພື່ອໃຫ້ຂ້ອຍແຍກທາງກັບຄິມິກະ, ສ່ວນເຈົ້າຂອງໂຮງຍິນດີຈ່າຍເງິນໃຫ້ຂ້ອຍຕາມແຕ່ຈະ ຮຽກຮ້ອງເອົາ.

ຂ້ອຍນັ່ງຈ້ອງເບິ່ງຫນ້າຫມໍນັ້ນ ຢ່າງບໍ່ພັບຕາ.

ຫມໍກ່າວຕໍ່ໄປວ່າ " ຂ້ອຍເຂົ້າໃຈເຈົ້າດີ ແຕ່ເຈົ້າອາດຈະ ບໍ່ເຂົ້າໃຈກໍໄດ້ ຖ້າຂ້ອຍບໍ່ສາລະພາບອອກມາຕາມຄວາມຈິງວ່າ ຄັ້ງຫນຶ່ງຂ້ອຍກໍມີບັນຫາຫຍຸ້ງໆ ກັບຄິມິກະ ມາແລ້ວຄືກັນ. "

" ເອີ ເຈົ້າກໍກຶກຄືກັນຊັ້ນຫວະ ? "

" ແມ່ນແລ້ວ ຕອນນັ້ນລາວຍັງບໍ່ໄດ້ມາຢູ່ໂຕກຽວເທື່ອ. ພາຍຫລັງມີບັນຫາແລ້ວ ຂ້ອຍກໍເຊົາພົວພັນກັບລາວ, ຄວາມຈິງຂ້ອຍຮູ້ຈັກກັບຄິມິກະມາແຕ່ດົນ ຄືຕັ້ງແຕ່ລາວອາຍຸ ປະມານ 15, ລາວເປັນຍິງຊະນິດໃດນັ້ນ ຂ້ອຍເອງກໍພໍຮູ້ຢູ່ຈາກປາກຄົນອື່ນໆ ຂ້ອຍວ່າ ເຖິງແມ່ນເຈົ້າຈະຢູ່ກັບລາວໄປກໍຄົງບໍ່ຍືນບໍ່ເກີນດອກ, ຈົ່ງເຊື່ອຂ້ອຍເທາະ ແລະຮັບເງິນໄວ້ ສາຈະດີກວ່າ ແລ້ວຕັດຫາງປ່ອຍລາວໄປເລີຍ. ອັນເຈົ້າຂອງໂຮງຫັ້ນ ກໍ່ວ່າ ເອົາຄິມິກະຢູ່ ໄດ້ຮອດຍາມດອກຊາກຸຣະບານ ກໍຖືວ່າໂຊກດີເຕີບ. "

" ສ່ວນນັກຮ້ອງຊື່ຊິເມໂຊະ ເປັນຈັ່ງໃດແດ່ ? "

" ເຈົ້າຂອງໂຮງນີ້ ເປັນຫ່ວງນໍາແຕ່ເຈົ້າ, ລາວບໍ່ເວົ້າຮອດຊິເມໂຊະເລີຍ. ຂ້ອຍເອງກໍບໍ່ໄດ້ໄປຫາຫມໍນັ້ນ, ກໍຄົງຊິຕາມເຄີຍຂອງຫມໍຕີ້. "

" ຄິມິກະ ກຶກແຂກພາອອກໄປງານລ້ຽງຫວະ ? "

" ມີຄົນບອກວ່າ ລາວເດີນທາງໄປທ່ຽວຫລາຍມື້ແລ້ວ. ສ່ວນສາວເກອິຊະ ອີກສອງຄົນນັ້ນ ເຄີຍເວົ້າວ່າ ຖ້າຄິມິກະເລື່ອນການະຂຶ້ນເປັນນາຍຍາມໃດ ທັງສອງກໍຈະຫນີໄປບ່ອນອື່ນ, ຂ້ອຍຊອກຫາບ່ອນໃຫມ່ໃຫ້ຄົນຫນຶ່ງໄດ້ແລ້ວວານນີ້, ຢູ່ໃນຍ່ານດຽວກັນນີ້ແຫລະ, ສ່ວນອີກຄົນ

ໜຶ່ງນັ້ນ ຈະໄດ້ຢູ່ຍ່ານໂອໂມຣິ ໃນທ້າຍປີນີ້. "

ຂ້ອຍບອກຢາມະຊາກິວ່າ "ທຳອິດຂ້ອຍຄິດວ່າ ຈະລົມກັບ ຄີມິກະ ກ່ອນທີ່ຈະຕັດສິນໃຈເຮັດຫຍັງລົງໄປ. ແຕ່ພໍມາໄດ້ຍິນຈາກປາກເຈົ້າແລ້ວ ກໍຍິ່ງເຫັນແຈ້ງວ່າ ຖ້າແກ່ຍາວເວລາ ໄປ ກໍຍິ່ງເສຍໜ້າເສຍຕາ. ເປັນອັນວ່າ ຂ້ອຍຈະກອບຕົວອອກຊື່ໆ, ເຈົ້າຊິເຮັດຫຍັງເຮັດໄປເທາະ, ຍາມໃດຫວ່າງແລ້ວໄປແວ່ຂ້ອຍແດ່ ທີ່ຣິບໂຈະ. "

ຂ້ອຍເວົ້າກັບໜໍດ້ວຍນ້ຳສຽງທຳມະດາ ແລ້ວກໍອອກໄປທ່າມກາງຫິມະ, ລະຫວ່າງທີ່ ລົມກັນຢູ່ນັ້ນ ຂ້ອຍຄິດຕັດສິນໃຈຢູ່ແລ້ວ, ຄວາມຈິງຂ້ອຍກໍຮູ້ຢູ່ໃນໃຈວ່າ ແມ່ນຫຍັງຈະເກີດຂຶ້ນ ເມື່ອຍອມໃຫ້ລາວກັບໄປເປັນສາວເກອິຊະອີກ. ຂ້ອຍຊິບໍ່ວ່າຫຍັງ ຖ້າລູກຄ້າຄົນໃດຄົນໜຶ່ງຈ່າຍເງິນເພື່ອແລກເອົາລາວໄປຢູ່ນຳ, ແຕ່ອາດຈະກະເທືອນໃຈຂ້ອຍແດ່ກໍຊ່າງມັນ. ແຕ່ການ ທີ່ລາວຍອມເປັນເມຍເຈົ້າຂອງໂຮງ ແລະ ນັ່ງວາງທ່າ ເປັນຍາແມ່ຢູ່ຂ້າງເຕົາຝີງ ໂດຍບໍ່ຄິດ ກັງວົນກັບໜີ້ສິນຂອງຕົນເອງນັ້ນ ເປັນເລື່ອງທີ່ຂ້ອຍຍອມບໍ່ໄດ້...

ເມື່ອມາຮອດກະໜົບໃຫຍ່ຊື່ນິນກຽວໂຈະ ຂ້ອຍຊື້ມິດດວງໜຶ່ງ, ກະວ່າຊິລຸຍທີມະໄລ່ ນຳຫາຄີມິກະໃຫ້ໄດ້ໃນຄືນນັ້ນ, ເລາະໄປທົ່ວທຸກແຫ່ງພາຍໃນເຂດນັ້ນ ຈົນມືກັບຕີນແຂງກະດ້າງແຕ່ບໍ່ພົບຮ່ອງຮອຍຂອງຄີມິກະເລີຍ, ຂ້ອຍຈຶ່ງກັບຄືນໄປຣິບໂຈະເພື່ອພັກຜ່ອນເອົາແຮງ. ຕື່ນເຊົ້າມາກໍອອກນຳຫາອີກ ແລະ ເຮັດຢູ່ດັ່ງນີ້ ເປັນເວລາສອງສາມມື້ຕິດຕໍ່ກັນ, ແຕ່ບໍ່ພົບລາວເລີຍ. ບາງທີລາວອາດຈະຮູ້ວ່າ ຂ້ອຍຕິດຕາມນຳຫາຈຶ່ງລະວັງຕົວ, ຂ້ອຍເລີຍເຊົາເຄື່ອນໄຫວໄປຫລາຍໆມື້.

ຕົກມາຮອດວັນທີ 28 ຄືກ່ອນສິ້ນປີ 3 ຄືນ, ຂ້ອຍຄິດວ່າ ຈັ່ງໃດກໍຕ້ອງໃຫ້ພໍ້ລາວຄັກໆ. ຂ້ອຍອອກນຳທ່າໂດຍ ເລາະລຽບເບິ່ງຕາມຮ້ານແຄມທາງ. ເມື່ອແສງໄຟຮຸ່ງຂຶ້ນ ຕາມກະຫນົນ ຂ້ອຍກໍເຂົ້າຮ່ອມໃຕ້ອອກຮ່ອມເຫນືອໃນເຂດໂຢຊີໂຈະ, ແຕ່ບໍ່ພົບຮ່ອງຮອຍຂອງ ຄິມີກະເລີຍ. ຂ້ອຍຄຶດໃນໃຈວ່າ ບໍ່າສາວອັນນີ້ມີຫລ່ຽມລາຍບໍ່ຢອກ. ມັນບໍ່ຄາດຊີຕາຍກ່ອນມື້ກ່ອນຍາມ. ຂ້ອຍແວ່ເຂົ້າບາກິນເຫລົ້າຈິບເມົາ ແລ້ວກໍຍ່າງໂຊເຊກັບເຮືອນ.

ຂ້ອຍມາຮອດຣົນໂຈະ ບ່ອນທີ່ເຄີຍພໍ້ກັບຄິມິກະ ເມື່ອຄາວທີ່ຫນີຈາກມາຣຸຈິແຫ່ງຊິມບາຊິຄັ້ງນັ້ນ. ໃກ້ໆກັບທາງຂຶ້ນຂົວຄູຣະເມະຊຶ່ງຫາກໍສ້າງຂຶ້ນໃຫມ່ພາຍຫລັງແຜ່ນດິນໄຫວ ຂ້ອຍເຫັນຄົນຫຸ້ມເບິ່ງຫຍັງຢູ່ ຈຶ່ງບຽດເຂົ້າໄປເບິ່ງ, ມີສຽງເລົ່າລືກັນວ່າ ແມ່ຍິງໂຕນນ້ຳຕາຍ, ວ່ານາງກຶກແທງແລ້ວກຶກໂຍນລົງນ້ຳ; ບາງສຽງວ່າ ແມ່ຍິງກັບຜູ້ຊາຍພາກັນພະຍາຍາມຂ້າຕົວຕາຍໂດຍຜູ້ຊາຍໂຕນລົງນ້ຳກ່ອນ, ສ່ວນແມ່ຍິງກຶກຕຳຫລວດຄວ້າຈັບໄວ້ທັນ. ຫົວໃຈຂ້ອຍ ເຕັ້ນຕຶກໆ ແຮງໆຍ້ອນຫຍັງກໍບໍ່ຮູ້. ເມື່ອມາຮອດເຮືອນຂ້ອຍພົບເຈ້ຍຂຽນດ້ວຍສໍດຳວາງຢູ່ປື້ມໂນດດິນຕີຊໍສາມສາຍວ່າ : " ນ້ອງຢາກເວົ້າກັບອ້າຍ, ແຕ່ອ້າຍບໍ່ຢູ່. ນ້ອງຟ້າວໄປ, ຊິມາຫາໃຫມ່ໃນຄືນວັນທີ 30 ຕອນກັບຈາກຮ້ານສະຜົມ. ເບິ່ງແຍງຕົວເອງດີໆ ເດີອ້າຍ, ຄິມີ."

ຂ້ອຍຮູ້ສຶກແຫນັນຫນ້າອົກທັບໃດໂລດ ແລ້ວແລ່ນໄປປ້ອມຕຳຫລວດ. ຂ້ອຍຄາດບໍ່ຜິດ ເລີຍ ແມ່ຍິງທີ່ກຶກຂ້າແມ່ນຄິມີຫລື ຄິມິກະ.

ລາວຖືກແທງດ້ານຫລັງແລ້ວຕົກລົງໄປໃນແມ່ນ້ຳ ເມື່ອຕຳຫລວດເອົາຂຶ້ນຈາກນ້ຳໄດ້ ລາວກໍຕາຍແລ້ວ. ຂ້ອຍເອງມີມີດເຊື່ອງໄວ້ດ້ານໃນເສື້ອກິໂມໂນະ ແລະ ບໍ່ອາດບອກວ່າ ຕົນເອງຢູ່ໃສ, ເກືອບຈະຖືກຈັບຢູ່ແລ້ວກໍພໍດີຕຳຫລວດພາເອົາ ຊາຍຄົນຫນຶ່ງເຂົ້າມາ, ເຂົາມາມອບຕົວຢູ່ປ້ອມຍາມດ້ານນອກ, ເຂົາຄືຊິເມໂຊະ ນັກຮ້ອງຄົນ ນັ້ນເອງ.

ຈາກຄຳສາລະພາບຂອງເຂົາ ປາກົດວ່າ ເຂົາໄດ້ພົບຄິມິກະຫລາຍເທື່ອ ໃນລະຫວ່າງທີ່ລາວຢູ່ກິນກັບຂ້ອຍ. ສາເຫດທີ່ເຂົາຂ້າລາວນັ້ນ ກໍແມ່ນຄວາມແຄ້ນດັ່ງດຽວກັບຂ້ອຍ, ຫມາຍຄວາມວ່າເຂົາຍອມບໍ່ໄດ້ ທີ່ຄິມິກະຕົກເປັນເມຍເຈົ້າຂອງໂຮງເກອິຊະ ແລະ ວາງແຜນທີ່ຈະຂຶ້ນເປັນເຈົ້າຂອງໂຮງເກອິຊະເອງ.

ຄິມິກະຕາຍໄປແລ້ວ. ຂ້ອຍບໍ່ແນ່ໃຈດອກວ່າ ລາວມີແຜນໃຫຍ່ໂຕປານນັ້ນ ເມື່ອຍອມເປັນເມຍຂອງເຈົ້າຂອງໂຮງເກອິຊະແຫ່ງຟູຊະຣານະ. ພິຈາລະນາຕາມຂໍ້ຄວາມທີ່ລາວຂຽນ ປະໄວ້ແລ້ວກໍບໍ່ເປັນຕາ ເຊື່ອວ່າລາວຈະເປັນດັ່ງນັ້ນ. ຈຸດອ່ອນ ແລະ ຈຸດມີສະເຫນແຮງຂອງລາວກໍແມ່ນວາດວິທີທີ່ລາວຍອມຮັບເອົາທຸກສິ່ງທຸກຢ່າງ ຈາກຜູ້ຊາຍທີ່ເອົາລາວໄວ້ໃນຄອບຄອງ. ແລ້ວໃນທີ່ສຸດ ສິ່ງນັ້ນເອງກໍໄດ້ຂ້າລາວຕາຍ.

ແຕ່ຢ່າງໃດກໍຕາມ ລາວອາດຈະບໍ່ຖືກຊິເມໂຊະ ແທງຕາຍ ຖ້າວ່າຄືນນັ້ນລາວບໍ່ໄດ້ມາ ຫາຂ້ອຍຢູ່ເຮືອນ, ແລະ ຖ້າວ່າຂ້ອຍຢູ່ເຮືອນໃນຄືນນັ້ນແລ້ວໄປສົ່ງລາວກໍຄົງຈະປອດໄພ, ຫລື ບາງທີອາດຈະແມ່ນຂ້ອຍເອງເປັນຄົນຂ້າລາວ ແທນຊິເມໂຊະກໍເປັນໄດ້. ຄົນຫນຶ່ງກືວ່າໂຊກດີ, ອີກຄົນຫນຶ່ງໂຊກຮ້າຍ. ໃຜລະຊິໄປຮູ້.

ເຂດຣິນໂຈະ ປ່ຽນແປງໄປຫມົດ. ບໍ່ມີຮ່ອງຮອຍເຫລືອໄວ້ໃຫ້ຮູ້ຈັກວ່າຄອງກຶກກຶມ. ຂົວຂ້າມຄອງກໍບໍ່ເຫລືອໃຫ້ເຫັນ. ຂ້ອຍຢາກເລົ່າສູ່ເຈົ້າຟັງວ່າ ເຮັດຈັ່ງໃດຈຶ່ງໄປໄດ້ກັບເມຍຄົນ ໃຫມ່ ແລະ ຍ້າຍໄປຢູ່ແຖວໂຢຊຸຍະ ພຸ້ນ. ແຕ່ຂ້ອຍເວົ້າຫລາຍໂພດແລ້ວ, ເຈົ້າຄືຊິຄ້ານຟັງຈຶ່ງໄວ້ຕອນພົບກັນເທື່ອໃຫມ່ສາບໍ້.

# ນາງໃນອູບແກ້ວ

ໂດຍ ***ນາງວາອິ ທັດຊຸໂອະ***

ຕອນທີ່ຕິດຕັ້ງເຄື່ອງແອເຢັນໃຫມ່ໆນັ້ນ ໃຜກໍຕາມທີ່ເຂົ້າໄປໃນຫໍວາງສະແດງ ເວລາເຊົ້າຂອງມື້ ເຮັດການຕາມປົກກະຕິ ຈະໄດ້ສຳຜັດກິ່ນແປກໆຕ່າງໆຢ່າງຫນຶ່ງ.

ມັນບໍ່ແມ່ນກິ່ນແບບຍີ່ປຸ່ນ ແຕ່ກໍບໍ່ແມ່ນກິ່ນທີ່ກວນປະສາດ ແຕ່ຢ່າງໃດ. ກົງກັນຂ້າມມັນເປັນກິ່ນຫອມ ທີ່ພາໃຫ້ຄິດ ເຖິງສິ່ງຂອງເກົ່າແກ່ດັ້ງເດີມ. ກິ່ນດັ່ງກ່າວລອຍແຜ່ກຸ້ມຢູ່ເທິງຊັ້ນສອງຂອງຫໍວາງສະແດງສິລະປະ ຊຶ່ງມີສິ່ງຂັບກັ້ນໄວ້ຢ່າງດີ ເພື່ອບໍ່ໃຫ້ລົມພາຍນອກຜ່ານເຂົ້າໄດ້. ແມ່ນແຕ່ໃນເວລາມີງານວາງສະແດງ ຮູບແຕ້ມສະໄຫມໃຫມ່ຂອງນັກແຕ້ມຊາວຕ່າງປະເທດເຊັ່ນ : ເຊຊານ, ວັນໂກ໊, ມາຕິສ ແລະປິກ໊າດໂຊ ຊຶ່ງໄດ້ດຳເນີນໄປເປັນເວລາ 40-80 ວັນນັ້ນ ກິ່ນຫອມເກົ່າແກ່ບູຮານນີ້ ກໍຍັງແຜ່ກຸ້ມຢູ່ຕະຫລອດ.

ລະດູຮ້ອນປີນີ້ ຖ້າຜູ້ໃດເຂົ້າໄປຫ້ອງວາງສະແດງຢູ່ຊັ້ນສອງ ສິ່ງທຳອິດທີ່ສະດຸດຕາ ກໍແມ່ນເຄື່ອງປັ້ນດິນເຜົາສີແດງໆ ອັນເປັນຮູບທ່ອນຫົວຂອງຍິງສາວກັບຮູບລິງ ຊຶ່ງຕັ້ງຮຽງກັນ ໄວ້ໃນອູບແກ້ວສອງໜ່ວຍ, ແລະ ຜູ້ເຂົ້າຊົມກໍຈະຮູ້ທັນທີໂລດວ່າ ການວາງສະແດງເທື່ອນີ້ສະເໜີເຄື່ອງປັ້ນດິນເຜົາຍີ່ປຸ່ນສະໄໝບູຮານ.

ປາກົດຄືວ່າ ກິ່ນແປກໆຕ່າງໆນັ້ນ ຈະແຜ່ກຸ້ມແຮງກວ່າປົກກະຕິ.

ຮູບປັ້ນດິນເຜົາຍິງສາວກັບລີງ ຊຶ່ງມີແຕ່ທ່ອນຫົວກັບຄໍນັ້ນໄດ້ຖືກຂຸດຄົ້ນມາຈາກບ່ອນ ຝັງສົບບູຮານ, ແລະ ເຖິງແມ່ນວ່າ ດ້ານນອກບໍ່ກົມຮຽງທັງເປັນສີແດງໆ ແຕ່ກໍມີຮ່ອງຮອຍສະແດງເຖິງຄວາມເກົ່າແກ່ນັບເປັນສິບສະຕະວັດຢ່າງເດັ່ນຊັດ ຊຶ່ງຜູ້ຊົມຈະເຫັນໄດ້ໂລດວ່າ ມັນເປັນລວດລາຍອັນລະອຽດອ່ອນຂອງຊ່າງຜູ້ມີສິລະປະໃນຫົວໃຈແທ້ໆ.

ດວງຕາແລະປາກຂອງຮູບປັ້ນຍິງສາວນັ້ນ ເຖິງແມ່ນວ່າເປັນພຽງຮອຍສະຫລັກວ້າຢູ່ໃນໜ້າ ແຕ່ຖ້າເບິ່ງຊື່ໆຈາກດ້ານໜ້າແລ້ວກໍຈະເຫັນວ່າ ນາງພວມຍິ້ມນ້ອຍໆ ຫລືບໍ່ ກໍພວມເວົ້າຫຍັງກັບເຮົາຢູ່ຄ່ອຍໆເບົາໆ. ສ່ວນລິງນັ້ນ ງຽງຄໍໄປຂ້າງໜຶ່ງ, ທ່າທາງແບບນີ້ ເບິ່ງຄືວ່າມັນຄິດຮ່ຳຮອນຫາຜູ້ເປັນເຈົ້າຂອງມັນ ຊຶ່ງນອນສະຫງົບຢູ່. ສີແດງໆເປື້ນໆ ທີ່ເປັນຮອຍຜ່ານໄປຕາມໜ້າຕາຂອງມັນ ພາໃຫ້ເຮົານຶກໄປເຖິງຊີວິດ ແລະ ຄວາມຕາຍ, ຕະຫລອດທັງຄວາມເປັນອະນິດຈັງຂອງສັບພະສິ່ງໃນໂລກ.

ແຕ່ຫໍວາງສະແດງສິລະປະແຫ່ງນີ້ ຫາກໍໄດ້ຮັບການສ້າງຕັ້ງຂຶ້ນມາພາຍຫລັງສົງຄາມນີ້ເອງ. ເປັນອາຄານທີ່ສ້າງແບບທັນສະໄໝຫລາຍ. ສະຖາປະນິກເອົາໃຈໃສ່ເປັນພິເສດ ເລື່ອງແສງສະຫວ່າງ

ແລະ ການລະບາຍອາກາດເຂົ້າອອກ. ຢູ່ຊັ້ນລຸ່ມມີຫ້ອງເຮັດການພຽງສອງ-ສາມຫ້ອງ, ເຫລືອນັ້ນປ່ອຍໃຫ້ໂລ່ງຕາ, ເຫັນພຽງແຕ່ເສົາເຫລັກທີ່ເປັນເສົາຄ້ຳພື້ນ ຂອງຊັ້ນສອງເທົ່ານັ້ນ.

ດ້ານຫລັງອາຄານເປັນທີ່ໂລ່ງ ມີຮູບຫລໍ່ຂະໜາດເທົ່າຄົນແທ້ຕັ້ງໄວ້ເປັນໄລຍະ. ຍາມລະດູຮ້ອນ ແສງແດດອັນຮ້ອນແຮງຕ້ອງກັບຮູບຫລໍ່ສີຂາວໆ ນັ້ນຈົນເຫລື້ອມຕາ.

ອີງຕາມປື້ມທ່ອງທ່ຽວນັ້ນ ວ່າເມື່ອປະມານເຈັດ ຫລື ແປດຮ້ອຍປີມາແລ້ວ ເມືອງນີ້ເຄີຍ ເປັນທີ່ຕັ້ງຂອງລັດຖະບານຍີ່ປຸ່ນ ແລະ ມີວັດບູຮານຕັ້ງຢູ່ຕາມໂນນພູຕ່າງໆ ທີ່ຢັ່ງຢາຍອ້ອມຕົວເມືອງ, ນັບວ່າໂຊກດີຫລາຍທີ່ເມືອງນີ້ບໍ່ຖືກກົ້ມລະເບີດໃສ່ຕອນສົງຄາມ, ຍັງມີຕົ້ນໄມ້ຂຽວອຸ່ມທຸ່ມຢູ່ທົ່ວໄປ ທັງພາຍໃນ ແລະ ພາຍນອກບໍລິເວນວັດສາສະໜາພຸດ ແລະ ຊິນໂຕ ອັນ ເປັນທີ່ແຕກຕ່າງກັບເມືອງໂຢໂກຮາມະ ທີ່ຖືກທຳລາຍຈົນມຸ່ນເກືອບບໍ່ມີຫຍັງເຫລືອ ນອກຈາກຫນາມຫມາກຈັບ ແລະ ຊາກເສດເຫລືອຕ່າງໆ.

ຫໍວາງສະແດງສິລະປະຕັ້ງຢູ່ທ່າມກາງປ່າໄມ້ນ້ອຍໆ ໃກ້ເຂດວັດຊິນໂຕ. ມີເສົາເຫລັກ ຫລາຍເສົາທີ່ຢູ່ດ້ານໃຕ້ອາຄານເດ່ຂື້ນມາຈາກນ້ຳສະແດງວ່າ ສ່ວນຫນຶ່ງຂອງພື້ນຊັ້ນສອງ ເຄີຍຍື່ນອອກໄປເຫນືອສະນ້ຳ.

ຈອກນ້ຳຊາຊົງຫີກຫນາ ທີ່ນັກຮົບສະໄຫມບູຮານເຄີຍໃຊ້, ໂຖໃສ່ດອກໄມ້ຊົງແປກຕາ ທີ່ພວກແມ່ເຮືອນເຄີຍເກັບດອກໄມ້ປ່າມາປະດັບ ຕະຫລອດທັງເຄື່ອງໃຊ້ອື່ນໆອີກຫລວງຫລາຍ ທີ່ວາງສະແດງຢູ່ຫ້ອງຊັ້ນສອງ ທັງຫມົດລ້ວນແຕ່ເຮັດໃຫ້ບັນຍາກາດເປັນອຶມຊຶມປົກຄຸມຢູ່ຕະຫລອດເວລາ.

ເມື່ອຍ່າງເລາະເບິ່ງຈົນທົ່ວໃນຫ້ອງຊັ້ນສອງແລ້ວ ເວລາລົງມາຊັ້ນລຸ່ມຜູ້ຄົນກໍຈະເຫັນ ຫ້ອງໃຫຍ່ກວ້າງ ຊຶ່ງເປັນຫ້ອງສຳລັບແຂກດື່ມນໍ້າຊາ ແລະ ນັ່ງພັກຜ່ອນ. ມີແສງໄຟສະຫວ່າງແຈ້ງ. ປະຕູກໍໄຂອອກກວ້າງຮັບເອົາອາກາດຕາມທຳມະຊາດ ເພາະຊັ້ນນີ້ຍື່ນອອກ ໄປເຫນືອຫນ້ານໍ້າໃນສະ. ເມື່ອເຮົາອອກມາພົບກັບແສງແດດທີ່ລະບຽງ ບ່ອນນີ້ແລ້ວ ກໍຈະຮູ້ສຶກປານວ່າ ພວມກ້າວອອກມາສູ່ໂລກໃຫມ່ເລີຍ.

ຂະນະນີ້ ເປັນຍາມເຊົ້າ. ພະນັກງານຫາກໍມາພຽງສອງຄົນຢູ່ຫ້ອງນໍ້າຊາ. ອີກຈັກຫນ່ອຍຄົນທີສາມກໍຈະມາຮອດ. ເຊົ້າມື້ນີ້ຄົນທີສາມມາອ່າວຊ້າ ເພາະຜຽນຂອງລາວນັ້ນ ເລີ່ມຕົ້ນສວາຍແດ່. ທັງສາມຄົນເປັນແມ່ຫມ້າຍ. ສອງໃນສາມຄົນມີອາຍຸຫລາຍເກີນກວ່າຈະເອີ້ນວ່າຍິງສາວຄືທົ່ວໆໄປ.

ສາມເປັນຈຳນວນທີ່ມັກພາໃຫ້ເກີດເລື່ອງຜິດກຽງກັນຫລາຍກວ່າສອງ ຫລືສີ່. ແຕ່ພະນັກງານທັງສາມຄົນນີ້ເຂົ້າກັນໄດ້ດີ ນັບແຕ່ເລີ່ມຕົ້ນເຮັດການນຳກັນໃນຫໍວາງສະແດງນີ້ ແລະ ບໍ່ ເຄີຍມີເລື່ອງຜິດໃຈກັນຈັກ ເທື່ອເລີຍ. ຜູ້ອຳນວຍການເອງເປັນຄົນເລືອກ "ແມ່ຫມ້າຍສິງຄາມ" ທັງສາມ ຊຶ່ງມີປະຫວັດ ແລະ ຄຸນສົມບັດດີເຫມາະສົມທີ່ສຸດ ແລ້ວກໍມອບຫນ້າທີ່ໃຫ້ ຄື ຄຸ້ມຄອງຮັກສາຫ້ອງນໍ້າຊາ ໃຫ້ເປັນຂອງທັງສາມຢ່າງເຕັມທີ່. ເຂົາເຈົ້າແບ່ງຜຽນກັນດັ່ງນີ້ຄື ທຸກໆ ເຊົ້າຈະມີສອງຄົນມາກ່ອນ ແລະ ຄົນທີສາມມາລຸນຫລັງຫມູ່ຫນຶ່ງຊົ່ວໂມງ. ຄູ່ທີ່ມາກ່ອນຈະມາໄຂຫ້ອງນໍ້າຊາ ທັງເຮັດອະນາໄມພາຍໃນຫ້ອງ ແລະ ກຽມເຄື່ອງດື່ມໄວ້ພ້ອມຈົນຮອດເວລາໄຂໃຫ້ປະຊາຊົນເຂົ້າຊົມ.

ດັ່ງນີ້ ບາງເທື່ອແມ່ຫມ້າຍອາວຸໂສທັງສອງຈະກຶກຜຽນດຽວກັນ, ຫລືບາງເທື່ອແມ່ຫມ້າຍຜູ້ອາຍຸ 30 ປາຍ ຈະຕົກຢູ່ໃນຜຽນດຽວກັບຜູ້ອາວຸໂສຄົນໃດຄົນຫນຶ່ງແລ້ວແຕ່ກໍລະນີ. ແຕ່ ແນວໃດກໍຕາມ ດ້ວຍວິທີປ່ຽນຜຽນ ແບບນີ້ ທຸກໆເຊົ້າຈະມີຄົນໃດຄົນຫນຶ່ງ ມີເວລາພິເສດ ຫນຶ່ງຊົ່ວໂມງ ເພື່ອເຮັດວຽກສ່ວນຕົວກ່ອນຈະມາເຮັດການ.

"ມື້ນີ້ຈັ່ງແມ່ນອາກາດຮ້ອນ ຕອນບ່າຍພວກເຮົາຫານ້ຳກ້ອນເຢັນໆມາເພີ່ມໄວ້ຊິດີບໍ່ ?"

"ມື້ວານນີ້ ເລີກການແລ້ວເຈົ້າເຮັດຫຍັງ ?"

ຫລືບໍ່ກໍວ່າ : "ຂ້ອຍຫວະ ໄປຊື້ແພລະບໍ, ແຕ່ວ່າຫາຈັ່ງໃດ ກໍບໍ່ພໍ້ອັນທີ່ຕ້ອງການ, ສ່ວນຝົນຊ້ຳຕົກລົງມາຮໍາອີກ. ຫຍຸ້ງບໍ່ຫຍຸ້ງ ເລີຍບໍ່ໄດ້ເລື່ອງຫຍັງ ! "

ການສົນທະນາກ່ຽວກັບເລື່ອງມະຍິບມະຍ່ອຍແບບນີ້ແຫລະທີ່ຄູ່ແມ່ຫມ້າຍໃນຜຽນຕອນເຊົ້າມັກເອົາມາໃຊ້ລົມກັບພໍແກ້ບັນຍາກາດມືດງຽບ. ແຕ່ວ່າເຊົ້າມື້ນີ້ ຄູ່ແມ່ຫມ້າຍອາວຸໂສກຶກ ຜຽນດຽວກັນພໍດີ ແຕ່ປັງເອີນຕ່າງຝ່າຍຕ່າງກໍມີອາລົມບໍ່ຄ່ອຍດີປານໃດ.

"ຂ້ອຍໂລດປວດບ່າທັງສອງເບື້ອງ, ຈັກຊິເຮັດຈັ່ງໃດດີ !"

"ມີແຕ່ເວົ້າຢູ່ຫັ້ນ, ເຄີຍໄດ້ຍິນແລ້ວເດີ, ໄປຫາຫມໍແຫກຄວາມດັນເລືອດໃຫ້ເທາະແມ້ !"

"ຄືເລື່ອງມັນເປັນຈັ່ງຊີ້ ! ບ່າມັນປວດຂຶ້ນຊຸກໃຊ້ ຂ້ອຍກໍເລີຍກະວ່າເຊົ້າມື້ນີ້ຊິໄປຫາຫມໍກວດໃຫ້, ຈຶ່ງຂໍປ່ຽນຜຽນກັບມິຊຸໂນະ ໃຫ້ລາວມາຕອນເຊົ້າໆ ແຕ່ລາວບໍ່ຍອມດີ້ງ."

"ໂອະ ! ເປັນປານນັ້ນຫວະ !"

"ລາວເວົ້າວ່າ ເຊົ້າມື້ນີ້ ມີວຽກຈຳເປັນຕ້ອງເຮັດໃຫ້ລຸລ່ວງວ່າ ຊັ້ນ ."

ມິຊຸໂນະ ແມ່ນນາມສະກຸນຂອງແມ່ຫມ້າຍອາຍຸ 30 ປາຍຄົນນັ້ນ.

"ເອີແຕ່ວ່າມື້ນີ້ ອ້າຍບ່າວຜູ້ນັ້ນ ຈະມາຫາມິຊຸໂນະບໍ່ລະ ?"

"ເຂົາຄົງພວມຍ່າງຮຽງກັນໄປ ລົມກັນໄປຢູ່ກໍເປັນໄດ້ ."

ເຊົ້າມື້ນີ້ ລົມພັດແຮງຈົນຕ້ອງເອົາອັນເຂ່ຍ ຂີ້ຢາຫນັກໆມາວາງ ທັບຜ້າປູໂຕະໄວ້ ເພື່ອບໍ່ ໃຫ້ເລີກຈາກໂຕະມົນສາມຫນ່ວຍຢູ່ໃນຫ້ອງນ້ຳ ຊາ. ຍັງມີໂຕະອີກຫລາຍຫນ່ວຍ ຕັ້ງຢູ່ລະບຽງ ຊຶ່ງກຶກແດດສ່ອງໃສ່. ໃຈກາງໂຕະມີຮູສຳລັບຕັ້ງຄັນຮົ່ມກັນແດດສີສົດໃສ. ຄັນຮົ່ມກຶກລົມພັດ ເຫນັງວູບວາບຢູ່ບໍ່ເຊົາໃນຂະນະນີ້.

ມີຕຸ້ມນົກແຂວນຢູ່ແຈລະບຽງທີ່ຍື່ນອອກໄປເຫນືອນ້ຳ, ນົກແຂກ ແກ້ວໂຕຫນຶ່ງພວມສົ່ງ ສຽງຮ້ອງ ທັງກົ້ມລົງກິນອາຫານຢູ່ມິດໆ, ບາດ ແລ້ວມັນກໍສົ່ງສຽງຮ້ອງຂຶ້ນແຮງໆ ຄືຈັ່ງວ່າ ຢາກເຕືອນໃຫ້ທຸກຄົນຮູ້ວ່າ ມັນມີຕົນມີໂຕຢູ່ບ່ອນນັ້ນ.

"ບ່າຍດີ ບ່າຍດີ !"

ນົກແກ້ວໂຕນີ້ເປັນສັດລ້ຽງທີ່ແສນຮັກ ຂອງແມ່ຍິງອາວຸໂສ ຜູ້ເປັນ ແມ່ຫມ້າຍຂອງນາຍ ທະຫານເຮືອ. ລາວຫິ້ວຕຸ້ມນົກແກ້ວມາ ໂຮງການ ນຳທຸກເຊົ້າ, ພໍຕອນແລງກໍຫິ້ວກັບເມືອເຮືອນ ລາວລ້ຽງນົກແກ້ວໂຕນີ້ ມາສິບປີແລ້ວ.

"ຜູ້ບ່າວຄົນນີ້ມາວົນວຽນຢູ່ຫນີ້ຕັ້ງສາມເດືອນແລ້ວ."

"ຄືເນາະທີ່ມີຄົນມາຮັກມາຫ່ວງໄຍ, ຕັ້ງຫນ້າຫຽວມາທຸກມື້ ທຸກເວັນ, ເປັນຕາຍິນດີນຳ ເຂົາ."

ແມ່ຍິງອາວຸໂສທັງສອງເວົ້າຂວັນເກີງອ້າຍບ່າວຜູ້ທີ່ແວ່ມາຫໍວາງສະແດງຢ່າງສະຫມ່ຳສະເຫມີຄືນນັ້ນ.

ສ່ວນຫນຶ່ງຂອງສະນ້ຳຢູ່ໃຕ້ລະບຽງທີ່ຍື່ນອອກໄປ. ຫນ້ານ້ຳມີແໜປົກຄຸມຄືປູດ້ວຍພົມສີຂຽວສົດ, ບາງຕອນມີບົວແດງ ແລະ ບົວຂາວຊູດອກພົ້ນຂຶ້ນມາ ມີທັງດອກຈູມດອກບານເປັນເຮືອງເຮື່ອ. ອ້ອມສະມີຕົ້ນໄມ້ເປັນສີຂຽວອຸ່ມຫຸ່ມ. ເມື່ອເຮົາໄປຢືນທີ່ລະບຽງແລ້ວຫລຽວລົງໄປ ທີ່ຫນ້ານ້ຳ ກໍຈະເຫັນປາເກັດສີແດງລອຍໄປມາຢູ່ຊ້າໆ.

ເຊົ້າທີ່ມີລົມພັດແຮງຄືມື້ນີ້ ນົກແຂກແກ້ວກົ້ມໆເງີຍໆ ໃຊ້ສົບເກັດເມັດເຂົ້າເປືອກກິນ, ບາງເທື່ອກໍງຽງຫົວ ເຮັດຄືວ່າ ໃຊ້ຄວາມຄິດທັງສິ່ງສຽງພຸມພຳ ແລ້ວກໍກົ້ມເກັດກິນເມັດເຂົ້າຕໍ່ໄປ.

ແມ່ຍິງອາວເກົ້າສອງຄົນກັບນົກແກ້ວໂຕຫນຶ່ງ - ເບິ່ງແລ້ວກໍຄືວ່າໃນຫ້ອງນີ້ມີສິ່ງທີ່ມີຊີວິດພຽງເທົ່ານີ້ໃນຕອນເຊົ້າມື້ນີ້, ແຕ່ຄວາມຈິງ ແລ້ວຍັງມີອີກຊີວິດຫນຶ່ງ.

ຕົ້ນຫລິວໃຫຍ່ເດ່ງ່າມາຍັງແຈຫນຶ່ງຂອງລະບຽງ. ມີຈັກຈັ່ນໂຕຫນຶ່ງຢູ່ເທິງງ່ານັ້ນ, ມັນພວມອອກຈາກຄາບສີນ້ຳຕານ ທີ່ເຄີຍເປັນສ່ວນຫຸ້ມຢູ່ພາຍນອກຂອງໂຕມັນ. ຈັກຈັ່ນນ້ອຍໂຕນີ້ ຈັບຢູ່ງ່າໄມ້ ແລະ ຄອງກ້າໃຫ້ຊີວິດໃຫມ່ລົງກັບບັນຍາກາດອ້ອມໂຕສາກ່ອນ ແລ້ວຈຶ່ງຈະປະຖິ້ມຄາບເກົ່າໄປຢ່າງຕະຫລອດການ. ປີກຂອງມັນເປັນສີຂຽວໃສສ່ອງປານວ່າຜ້າລູກໄມ້ອັນລະອຽດອ່ອນ, ຕາມົນນ້ອຍໆ ສີແດງ ຄືດັ່ງນ້ຳຄັ່ງ. ຈັກຈັ່ນນ້ອຍຄອງກ້າໂອກາດນີ້ມາໄດ້ເຈັດປີແລ້ວ. ໃນທີ່ສຸດກໍຮອດກຳນົດເວລາອອກຈາກຄາບທີ່ຕິດຢູ່ກັບງ່າຕົ້ນຫລິວ, ອອກມາຢ່າງສະບາຍ ແລະ ປອດໄພ. ເມື່ອຖືກແສງແດດ ປີກຂຽວໆ ໃສໆຂອງ

ມັນກໍຄ່ອຍໆປ່ຽນສີໄປ ຈົນກາຍເປັນສີນ້ຳຕານໄໝ້. ຕາຄ່ອຍໆລຶ້ງກັບແສງສະຫວ່າງ ແລ້ວກໍເລີ່ມມີມ່ານຕາທີ່ຂະຫຍາຍອອກ ແລະ ຫົດເຂົ້າໄດ້. ໄລຍະເວລາດັ່ງກ່າວນີ້ ມີຄຸນຄ່າຫລາຍສຳລັບຈັກຈັ່ນ, ຄວາມອອນຊອນ ມີຊີວິດຊີວາປາກົດໃຫ້ເຫັນ ແລະ ທະວີຂຶ້ນເປັນລຳດັບ.

ເວລາດຽວກັນນັ້ນ ຈັກຈັ່ນທັງຫລາຍທີ່ຢູ່ຕາມຕົ້ນໄມ້ອ້ອມສະນ້ຳ ກໍພາກັນເຫນັງປີກ ແລະ ສົ່ງສຽງຮ້ອງຂຶ້ນພ້ອມໆກັນ. ຈັກຈັ່ນມີຈຳນວນຫລວງຫລາຍ ຈົນສຽງດັງລະງົມໄປທົ່ວບໍລິເວນ ປານວ່າສຽງຝົນຕົກຫ່າໃຫຍ່. ຜູ້ໃດບໍ່ເຄີຍສົນໃຈຟັງ ແລະ ສັງເກດສຽງຈັກຈັ່ນ ມາບັດນີ້ ຈະຮູ້ສຶກວ່າ ສະດຸດຫູ ແລະ ເລີ່ມຟັງໄດ້ແດ່ແລ້ວ.

ມິຊຸໂນະ ຍ່າງຂຶ້ນຂັ້ນໄດດ້ານຫນ້າຫໍວາງສະແດງ, ມືຫຸບຄັນຮົ່ມທີ່ກືຢູ່ນັ້ນລົງ. ສຳລັບພະນັກງານແລ້ວມີທາງເຂົ້າຢູ່ດ້ານຫລັງ, ນັບແຕ່ມີການຕິດຕັ້ງເຄື່ອງແອເຢັນຢູ່ຊັ້ນສອງເປັນຕົ້ນມາ ມິຊຸໂນະມັກແວ່ຮັບເອົາອາກາດເຢັນເປັນປະຈຳ ກ່ອນຈະລົງໄປເຮັດວຽກຢູ່ຫ້ອງນ້ຳຊາ. ໄຄແດ່ແຕ່ຊັ້ນເທິງນັ້ນ ບໍ່ມີຄົນຍາມຕິດຕາມສົ້ງຊອມເບິ່ງພຶດຕິກຳຂອງນາງ.

ນອກຈາກຈະແວ່ຂຶ້ນໄປດັບຄວາມຮ້ອນອົບເອົ້າແລ້ວ, ມາໄລຍະຫລັງນີ້ ສີ່-ຫ້າ ວັນ ຍັງມີ ແນວດຶງດູດຄວາມສົນໃຈຂອງ ມິຊຸໂນະ ອີກຢ່າງຫນຶ່ງຢູ່ໃນຫ້ອງວາງສະແດງ ຊຶ່ງນາງຮູ້ສຶກ ວ່າຈຳເປັນຕ້ອງແວ່ໃນທັນທີ ທີ່ມາຮອດໂຮງການ.

ເຊົ້າມື້ນີ້ ກໍເຊັ່ນກັນ. ນາງຄ່ອຍໆຍ່ອງໄປ ລະວັງບໍ່ໃຫ້ເກີບກະທົບພື້ນເກີດສຽງດັງ, ແລະ ກົງໄປທີ່ອູບແກ້ວຫນ່ວຍຫນຶ່ງ.

ເຄື່ອງປັ້ນດິນເຜົາຮູບຍິງສາວ ທີ່ຢູ່ໃນອູບແກ້ວນັ້ນ ເບິ່ງຊົ່ງສິ ຍິ້ມໆ ໃຫ້ມິຊຸໂນະ. ນາງໄດ້ ຮັບການບອກເລົ່າວ່າ ຮູບຍິງສາວນີ້ສ້າງຂຶ້ນມາດົນແລ້ວ ເພື່ອບັນຈຸໃສ່ພ້ອມກັບສົບຄົນຕາຍ ເພື່ອໃຫ້ເປັນບໍລິວານຜູ້ຕາຍໄປສູ່ໂລກໜ້າ. ເມື່ອເບິ່ງຮອຍຍິ້ມຂອງຮູບປັ້ນແລ້ວ ມິຊຸໂນະ ກໍອົດບໍ່ໄດ້ທີ່ຈະຮູ້ສຶກວ່າ ຮອຍຍິ້ມນັ້ນສະແດງວ່າ ນາງໄດ້ປະຕິບັດໜ້າທີ່ສຳເລັດລຸລ່ວງໄປຢ່າງຄົບຖ້ວນສົມບູນແລ້ວ.

ຍິງສາວຜູ້ເປັນຮູບປັ້ນ ອາດຈະຢູ່ໃນໄວ 16-17 ຫລື ອາດຈະເປັນສາວແກ່ອາຍຸ 30 ປາຍ ຄືນາງເອງກໍໄດ້.

"ເຈົ້າວ່າ ຂ້ອຍຄວນຊິເຮັດຈັ່ງໃດດີ ?" ມິຊຸໂນະ ຖາມຮູບປັ້ນຄືດັ່ງທີ່ເຄີຍຖາມມາ ນັບແຕ່ນີ້ທຳອິດທີ່ ມາຕັ້ງຢູ່ໃນອູບແກ້ວ.

ຮອຍສະຫລັກທີ່ວ້າເຂົ້າເປັນດວງຕາ ແລະ ປາກນ້ອຍໆ ຊຶ່ງສະແດງໃຫ້ເຫັນຄວາມລະໄມ ນຸ່ມນວນນັ້ນ ປາກົດຄືວ່າ ຈະເຜີຍຄຳຕອບອອກມາ, ແຕ່ກໍບໍ່ປາກົດອອກມາຈັກເທື່ອ.

"ບອກຂ້ອຍແດ່, ຂ້ອຍຄວນຊິເຮັດຈັ່ງໃດດີ ?"

ເບິ່ງຄືວ່າ ມິຊຸໂນະ ບໍ່ເຄີຍສັງເກດວ່າໃບໜ້າຕົນເອງນັ້ນ ກໍເປັນເງົາສະທ້ອນຢູ່ອູບແກ້ວນັ້ນດ້ວຍ. ນາງໄດ້ປະຕິບັດໜ້າທີ່ຮັບໃຊ້ຜົວຜູ້ຊຶ່ງເສຍຊີວິດຢູ່ໃນປາງສົງຄາມຢ່າງຄົບຖ້ວນແລ້ວບໍ່ແມ່ນບໍ ?

ນາງຄວນຈະໃຫ້ຄຳຕອບແກ່ຊາຍຄົນໃຫມ່ ຜູ້ຜ່ານເຂົ້າມາໃນຊີວິດຂອງນາງຈັ່ງໃດດີນໍ?

ອັນນີ້ແຫລະ ຄືສິ່ງທີ່ມິຊຸໂນະຢາກຮູ້ອີ່ຫລີ.

ແຕ່ຍິງສາວໃນອູບແກ້ວ ກໍພຽງແຕ່ຍິ້ມນ້ອຍໆ.

ຈັກໜ່ອຍກໍຈະຮອດເວລາທີ່ມິຊຸໂນະຕ້ອງລົງໄປເຮັດວຽກຢູ່ຫ້ອງບ້າຊາແລ້ວລະ !

# ພະຈັນເທິງໜ້ານ້ຳ

ໂດຍ ***ຄາວະບາຕະ ຢາສຸນາຣິ***

ມື້ຫນຶ່ງ ຄິໂຢໂກະ ປ່ອຍໃຫ້ຜົວທີ່ນອນຢູ່ເທິງເຮືອນ ແຍງເບິ່ງສວນຜັກ ໂດຍຜ່ານແວ່ນມືກື. ສຳລັບຜູ້ທີ່ນັ່ງນອນຢູ່ກັບບ່ອນມາດົນນັ້ນ ເຮັດແນວນີ້ ເທົ່າກັບເປັນການໄຂປະຕູສູ່ຊີວິດໃຫມ່. ແວ່ນມືເປັນເຄື່ອງໃຊ້ອັນຫນຶ່ງ ທີ່ເຂົ້າຊຸດກັບແວ່ນຕັ້ງຢູ່ໃນແອບເຄື່ອງແຕ່ງເພດຂອງ ນາງ. ແວ່ນຕັ້ງບໍ່ໃຫຍ່ປານໃດ. ຂອບຂອງມັນເຮັດດ້ວຍໄມ້ຕົ້ນມອນ ຄື ກັບຂອບແວ່ນມື. ແຕ່ແມ່ນແວ່ນມືອັນນີ້ ທີ່ເຮັດໃຫ້ນາງຈື່ບໍ່ລືມເຫດການເມື່ອຕອນແຕ່ງດອງໃຫມ່ໆທີ່ນາງອາຍຫລາຍ ຄືຄັ້ງຫນຶ່ງ, ຂະນະທີ່ແຍງເບິ່ງຜົມດ້ານຫລັງໃນແວ່ນຕັ້ງ ແຂນເສື້ອຂອງນາງຮື້ຂຶ້ນ ຈົນເຫັນແຂນສອກເປືອຍ. ອີກຄັ້ງຫນຶ່ງແມ່ນຕອນອາບນ້ຳແລ້ວໃຫມ່ໆ ຝ່າຍຜົວແຍງເບິ່ງງ່ອນຂອງນາງທຸກຈອກທຸກແຈ ທີ່ປາກົດຢູ່ໃນແວ່ນມືດ້ວຍຄວາມຝຶດສະໄຫມ. ເຂົາຄຶງແວ່ນອອກຈາກມືຂອງນາງແລ້ວ ເວົ້າວ່າ "ຄືບໍ່ຄັກປານໃດ ມາຊິກືໃຫ້." ເຂົາເຮັດຄືກັບວ່າພົບພໍ້ສິ່ງແປກໃຫມ່ ຢູ່ໃນ



ແວ່ນ. ມັນບໍ່ແມ່ນຍ້ອນ ຄິໂຢໂກະ ບໍ່ຄັກມືດອກ ແຕ່ມັນ ຍ້ອນວ່ານາງຮູ້ສຶກອາຍທີ່ມີຜູ້ແນມເບິ່ງຈາກຂ້າງຫລັງຕ່າງຫາກ.

ເວລາຜ່ານໄປບໍ່ທັນດົນ ພໍຈະເຮັດໄມ້ມອນຂອງຂອບແວ່ນປ່ຽນ ສີແວ່ນກໍກືກວາງປະໄວ້ໃນຫີບແລ້ວ. ສົງຄາມລະເບີດຂຶ້ນ, ຕໍ່ມາ ກໍພາກັນອົບພະຍົບຈາກຕົວເມືອງ ແລ້ວຜົວຂອງນາງກໍເຈັບປ່ວຍຢ່າງຫນັກ. ຕອນທຳອິດ ທີ່ຄິດອອກວ່າໃຫ້ຜົວເບິ່ງສວນຜັກ ໂດຍຜ່ານ ແວ່ນນັ້ນຫນ້າແວ່ນເປັນຝ້າຫມອງ ທັງຂອບກໍເປື້ອນໄປດ້ວຍແປ້ງທາຫນ້າແລະຂີ້ຝຸ່ນ. ເຖິງປານນັ້ນ ກໍພໍສ່ອງເຫັນຢູ່. ຄິໂຢໂກະ ບໍ່ຫວງນຳຝ້າມົວໆອັນນີ້, ກົງກັນຂ້າມນາງເກືອບບໍ່ເຫັນມັນຊ້ຳ. ຢ່າງໃດກໍຕາມ ຜູ້ຜົວນັ້ນ ເກືອບຈະບໍ່ຍອມໃຫ້ແວ່ນແຍງອັນນີ້ ຫ່າງມືເລີຍ. ເອົາເຊັດແວ່ນແລະຂອບຈົນເຫລື້ອມ ຕະຫລອດເວລາທີ່ນອນເຈັບປ່ວຍຢູ່ດ້ວຍອາລົມຫຸນຫວາຍ ອຸກອັ່ງຂອງຄົນທີ່ເຮັດຫຍັງບໍ່ໄດ້.

ບາງຄັ້ງ ຄິໂຢໂກະ ຍັງຄິດວ່າ ເຊື້ອວັນນະໂຣກຄົງດົ້ນດັ້ນເຂົ້າໄປຢູ່ໃນຮອຍແຫງເລິກໆ ໃນຂອບແວ່ນແດ່ແລ້ວ. ຫລັງຈາກນາງເອົານ້ຳມັນດອກໄມ້ທາໃຫ້ຜົວ ແລະຫວີຜົມໃຫ້ແລ້ວ ບາງເທື່ອຝ່າຍຜົວ ກໍຈະເອົາຝ່າມືລູບຜົມແລ້ວຖູໃສ່ຂອບແວ່ນ, ດັ່ງນັ້ນຂອບໄມ້ມອນ ຈຶ່ງເປັນເງົາງາມຂຶ້ນ, ສ່ວນຂອບໄມ້ຂອງແວ່ນຕັ້ງຍັງຄົງຊາ ແລະ ແຂງຄືເກົ່າ.

ເມື່ອ ຄິໂຢໂກະ ແຕ່ງດອງເທື່ອໃຫມ່ ນາງເອົາແວ່ນຕັ້ງອັນເກົ່າມານຳ, ສ່ວນແວ່ນມືນັ້ນ ກືກເຜົາໄປພ້ອມໆກັບຮ່າງສົບຜົວເກົ່າຂອງນາງ. ແວ່ນມືອັນໃຫມ່ໃນຂອບໄມ້ຄວັດ ເຂົ້າມາຢູ່ແທນບ່ອນ ເພື່ອ

ໃຊ້ຄູ່ກັບແວ່ນຕັ້ງເກົ່າ. ເລື່ອງນີ້ ຄິໂຢໂກະ ບໍ່ເຄີຍເວົ້າສູ່ຜົວໃຫມ່ຟັງຈັກເທື່ອ.

ຕາມປະເພນີແລ້ວ ເພິ່ນຈະເອົາມືຂອງຜູ້ຕາຍວາງປະສານໃຫ້ນີ້ວມືສອດກັນຢູ່ຫນ້າເອິກ. ຈັ່ງຊັ້ນ ຈຶ່ງບໍ່ສາມາດເອົາແວ່ນມື ໃສ່ມືໃດມືຫນຶ່ງໃຫ້ຄົນຕາຍ ທີ່ນອນຢູ່ໃນໂລງຈັບໄວ້. ນາງເລີຍເອົາແວ່ນວາງໃສ່ຫນ້າເອິກຂອງຜົວ.

"ເຈົ້າເຈັບເອິກພໍແຮງແລ້ວ, ແວ່ນນີ້ຄົງຈະຫນັກໂພດບໍ່," ຄິໂຢໂກະ ຍ້າຍແວ່ນລົງໄປວາງໃສ່ຫນ້າທ້ອງ. ຍ້ອນຄິດເຫັນວ່າແວ່ນນີ້ມີຄວາມສຳຄັນຕໍ່ຊີວິດຄູ່ຂອງນາງຫລາຍ ນາງຈຶ່ງຍ້າຍມາວາງໃສ່ຫນ້າເອິກຜົວຄືເກົ່າ. ນາງພະຍາຍາມໃຫ້ການກະທຳເລັກໆນ້ອຍໆ ອັນນີ້ລອດພົ້ນຈາກສາຍຕາຍາດພີ່ນ້ອງຝ່າຍຜົວ ໂດຍໂຮຍກີບດອກເບັນຈະມາດອາວປົກຫນ້າແວ່ນ ເຮັດຢ່າງນີ້ຈຶ່ງບໍ່ມີໃຜສັງເກດເຫັນ. ເມື່ອໄປຄຸ້ຍຂີ້ເກົ່າເກັບດູກຫລັງຈາກເຜົາແລ້ວ, ມີຜູ້ເຫັນເສດກະຈົກທີ່ປະປົນຢູ່ກັບຂີ້ເກົ່າ, ບາງສ່ວນໄຫມ້ແຫ້ມ, ບາງສ່ວນພໍເປັນເຫລືອງໆ. ມີຜູ້ຫນຶ່ງທ້ວງຂຶ້ນວ່າ "ແມ່ນແກ້ວຕາວ່ານີ້ ? ຄືມາເປັນຈັ່ງຊີ້ ? " ຄວາມຈິງກໍຄືວ່ານາງເອົາແວ່ນນ້ອຍອີກອັນຫນຶ່ງວາງຢອງໃສ່ແວ່ນມື, ມັນແມ່ນແວ່ນນ້ອຍຢູ່ໃນຊຸດເຄື່ອງແຕ່ງເຜດ ຊຶ່ງເປັນແວ່ນຊົງຍາວໆແຄບໆ ແລະ ມີສອງຫນ້າ. ຄິໂຢໂກະ ເຄີຍຝັນໄວ້ວ່າ ຈະໃຊ້ມັນຕອນເດີນທາງໄປດື່ມນ້ຳເຜີ້ງພະຈັນກັບຜົວ, ແຕ່ສົງຄາມເຮັດໃຫ້ການເດີນທາງໄປດື່ມນ້ຳເຜີ້ງພະຈັນຕ້ອງເລີກລົ້ມໄປ. ຕະຫລອດເວລາທີ່ນາງໃຊ້ຊີວິດຮ່ວມກັບຜົວຄົນກ່ອນ ນາງບໍ່ມີໂອກາດໄດ້ເດີນທາງ ແລະ ໃຊ້ມັນເລີຍ.

ຢ່າງໃດກໍດີ ກັບຜົວຜູ້ທີສອງນີ້ ນາງໄດ້ໄປດື່ມນໍ້າເຜີ້ງພະຈັນ, ແອບໃສ່ເຄື່ອງແຕ່ງເພດເຮັດດ້ວຍຫນັງນັ້ນ ເກົ່າເປື່ອຍແດ່ແລ້ວ ນາງຈຶ່ງຊື້ອັນໃຫມ່ ໃນນັ້ນມີແວ່ນນ້ອຍອັນຫນຶ່ງນໍາ.

ຕອນເດີນທາງມື້ທໍາອິດ ຜົວຈັບມືຂອງນາງແລ້ວເວົ້າວ່າ "ຈັ່ງແມ່ນຄືມີຜູ້ສາວນ້ອຍເນາະ ຫນ້າແພງແທ້ໆ" ນໍ້າສຽງຂອງຜົວບໍ່ໄດ້ສະແດງວ່າສຽດສີເຍາະເຍີ້ຍຫຍັງດອກ ແຕ່ແຝງດ້ວຍຄວາມພໍໃຈແບບບໍ່ຄາດຝັນຕ່າງຫາກ, ອາດຈະເປັນເລື່ອງດີສໍາລັບຜົວຄົນທີສອງຊໍ້າ ທີ່ ຄິໂຢໂກະ ຄືສາວນ້ອຍ. ຂໍ້ສັງເກດນີ້ກະທົບຈິດໃຈຂອງ ຄິໂຢໂກະຢ່າງຮຸນແຮງ, ນາງຮູ້ສຶກເສົ້າໂສກ, ນໍ້າຕາອອກມາຫລັ່ງເບົ້າ ພ້ອມຈະໄຫລອອກ, ນາງຫລົບຫນ້າໄປທາງອື່ນ, ເຮັດແນວນີ້ຜົວອາດ ຊິຄິດວ່າເຮັດຄືສາວນ້ອຍອີກກໍເປັນໄດ້. ຄິໂຢໂກະ ບໍ່ຮູ້ວ່າຕົນຮ້ອງໄຫ້ເສຍໃຈນໍາຊາຕາຊີວິດຂອງຕົນເອງ ຫລືຂອງມື້ລາງຜົວເກົ່າພຸ້ນ. ມັນເວົ້າບໍ່ອອກບອກບໍ່ຖືກເອົາເລີຍ. ພໍໄດ້ສະຕິ ນາງກໍຮູ້ວ່າໄດ້ສະແດງກິລິຍາບໍ່ດີໃສ່ຜົວໃຫມ່ ຈຶ່ງຟ້າວເວົ້າເພື່ອເອົາໃຈຂຶ້ນວ່າ :

"ແມ່ນຊັ້ນຫວະ ມີສາວນ້ອຍເປັນແນວນີ້ຕີ້"? ເວົ້າແລ້ວ ຊໍ້າພັດຮູ້ສຶກອາຍຈົນຫນ້າຮ້ອນຮຸ່ມໄປຫມົດ, ຜູ້ຜົວເບິ່ງຊົງພໍໃຈເວົ້າຕໍ່ວ່າ :

"ເຈົ້າບໍ່ເຄີຍມີລູກເທື່ອແມ່ນບໍ່ ?" ຄໍາເວົ້ານີ້ຕໍາໃຈຢ່າງແຮງ. ຕໍ່ຫນ້າແຮງດັນຂອງຜູ້ຊາຍຊຶ່ງຕ່າງຈາກຜົວເກົ່າ ຄິໂຢໂກະ ຮູ້ສຶກວ່າເສຍຫນ້າ. ນາງພະຍາຍາມໂຕ້ຕອບຄືນ ແຕ່ເວົ້າໄດ້ກໍພຽງວ່າ :

"ກໍພໍປານວ່າມີຫັ້ນລະ."

ນາງຮູ້ສຶກວ່າຜົວເກົ່າຜູ້ເຈັບປ່ວຍຊໍ້າເຮື້ອຢູ່ດົນ ແລະ ເສຍຊີວິດໄປແລ້ວນັ້ນ ເປັນຄືລູກໃນທ້ອງຂອງນາງ. ແຕ່ເຖິງຢ່າງໃດ ເຂົາກໍຕາຍ

ໄປແລ້ວ, ນາງຈະມົວທຸກໃຈເພື່ອປະໂຫຍດອັນໃດ ?

"ຂ້ອຍເຄີຍເຫັນເມືອງໂມຣີ ຜ່ານປ່ອງຢ້ຽມລົດໄຟທີ່ນັ້ນ." ຜົວຄົນປັດຈຸບັນ ດຶງນາງເຂົ້າມາກອດ ເມື່ອເວົ້າຮອດຊື່ເມືອງທີ່ເປັນບ້ານເກີດຂອງນາງ.

"ຟັງແຕ່ຊື່ຂ້ອຍຄິດວ່າເປັນເມືອງງາມເມືອງໜຶ່ງໃນປ່າ. ເຈົ້າຢູ່ຫັ້ນດົນປານໃດລະ ?"

"ຮຽນສຸດມັດທະຍົມ ແລ້ວຂ້ອຍກໍກັບໄປເຮັດວຽກຢູ່ໂຮງງານເຮັດລູກປືນໃຫຍ່ທີ່ຊັນໂຈ."

"ຊັ້ນ ຊັນໂຈຢູ່ໃກ້ຫັ້ນຫວະ ? ຂ້ອຍໄດ້ຍິນວ່າເມືອງຊັນໂຈເປັນເມືອງສາວງາມ. ສົມພໍຄິໂຍໂກະ ຈຶ່ງງາມປານນີ້."

"ໂອ໋ ບໍ່ດອກ ຂ້ອຍບໍ່ງາມ." ຄິໂຍໂກະ ຍົກມືຂຶ້ນແນບອົກ.

"ມືເຈົ້າງ້າມງາມ... ຂ້ອຍຄິດວ່າຕົນໂຕເຈົ້າກໍຕ້ອງງາມຄືກັນ."

"ໂອ໋... ບໍ່ດອກ" ຄິໂຍໂກະ ຮູ້ສຶກວ່າມືຂອງຕົນວາງຢູ່ບໍ່ເໝາະ ຈຶ່ງຄ່ອຍໆເລື່ອນໄປທາງຫລັງ.

"ແມ່ນວ່າ ຄິໂຍໂກະ ຊິມີລູກກໍຕາມ ຂ້ອຍກໍຍັງຊິແຕ່ງດອງນຳ. ຊິຮັກລູກເຈົ້າ ແລະ ລ້ຽງດູອີ່ຫລີ, ເປັນແມ່ຍິງແຮ່ງດີ." ເຂົາຊື່ມຄ່ອຍໆໃສ່ຫູຄິໂຍໂກະ. ນີ້ອາດເປັນຍ້ອນວ່າເຂົາເອງມີລູກຊາຍຢູ່ຜູ້ໜຶ່ງແລ້ວ.

ແຕ່ປານນັ້ນ ນາງກໍຮູ້ສຶກປະຫລາດໃຈໃນຄຳເວົ້າ ຊຶ່ງເຂົາສະແດງອອກໃນເລື່ອງຄວາມຮັກທີ່ມີຕໍ່ນາງ. ການທີ່ເຂົາຂຶ້ນແຜນໄປພັກຜ່ອນດື່ມນ້ຳເຜີ້ງພະຈັນດົນຮອດສິບມື້ນັ້ນ ກໍແມ່ນເພື່ອບໍ່ໃຫ້ນາງປະເຊີນກັບລູກລ້ຽງໄວເກີນໄປ.

ຜົວຂອງນາງມີຫີບໃສ່ເຄື່ອງສ່ວນຕົວສຳລັບເດີນທາງ ຊຶ່ງເບິ່ງ

ຄືເຮັດດ້ວຍຫນັງດີພໍສົມຄວນ ແລະ ຫຽບກັບຈອງຄິໂຢໂກະບໍ່ໄດ້ເລີຍ. ທີບຂອງເຂົາໃຫຍ່ຊິງແຫນ້ນຫນາ ແຕ່ບໍ່ແມ່ນຂອງໃຫມ່ອ່ຽມ. ອາດເປັນຍ້ອນເຂົາເດີນທາງເລື້ອຍ ຫລືວ່າເຂົາໃຊ້ຂອງຢ່າງລະມັດລະວັງ ຫນັງທີບຈຶ່ງເຫລື້ອມມັນດີ. ຄິໂຢໂກະຄິດຮອດທີບເກົ່າຂອງນາງ ທີ່ບໍ່ເຄີຍເອົາມາໃຊ້ຈັກເທື່ອຈົນຕົກໂຫມະ. ມີແຕ່ແວ່ນນ້ອຍເທົ່ານັ້ນ ທີ່ຜີວເກົ່າໄດ້ເອົາອອກມາໃຊ້ແດ່ ແລະ ບັດນີ້ ນາງກໍສົ່ງມັນໄປຢູ່ກັບເຂົາໃນອີກໂລກຫນຶ່ງແລ້ວ.

ແກ້ວແຜ່ນນ້ອຍໆ ເປື້ອຍລະລາຍຕິດກັບແວ່ນມື. ນອກຈາກ ຄິໂຢໂກະແລ້ວ, ບໍ່ມີໃຜຮູ້ວ່າ ແຕ່ກ່ອນມັນຄືນລະແຜ່ນກັນ. ໃນເມື່ອຄິໂຢ ໂກະບໍ່ບອກຜູ້ໃດ ພວກພີ່ນ້ອງກໍບໍ່ມີທາງຮູ້ເລື່ອງນີ້ເລີຍ.

ຄິໂຢໂກະ ຮູ້ສຶກຄືກັບວ່າ ຫລາຍສິ່ງຫລາຍແບບ ທີ່ເຄີຍສະທ້ອນຢູ່ໃນແວ່ນແຍງທັງສອງແຜ່ນນັ້ນເສື່ອມສູນໄປນຳກອງໄຟ. ມັນເປັນຄວາມຮູ້ສຶກສູນເສຍທຳນອງດຽວກັບຮ່າງກາຍຂອງຜູ້ເປັນຜົວ ທີ່ໄຫມ້ເປັນເກົ່າກ່ານໃນກອງໄຟ. ທຳອິດ ນາງເອົາແວ່ນມືທີ່ເປັນຄູ່ກັບແວ່ນຕັ້ງ ໃຫ້ຜີວສ່ອງເບິ່ງສວນຜັກ, ຜີວຂອງນາງມັກມ້ຽນແວ່ນນີ້ໄວ້ຂ້າງຫມອນສະເຫມີ, ເກືອງແມ່ນວ່າ ແວ່ນມືອາດຈະຫນັກເກີນໄປສຳລັບຄົນປ່ວຍ. ຄິໂຢໂກະເປັນຫ່ວງວ່າ ຜີວຈະປວດແຂນປວດໄຫລ່ ຈຶ່ງເອົາແວ່ນນ້ອຍ ແລະ ເບົາກວ່າມາໃຫ້ຕື່ມອີກອັນຫນຶ່ງ.

ໂດຍຜ່ານແວ່ນສອງອັນນີ້ ຜີວຂອງນາງບໍ່ພຽງແຕ່ເຫັນສວນຜັກຂອງນາງເທົ່ານັ້ນ, ເຂົາຍັງໄດ້ຊົມທ້ອງຟ້າ ເມກເຝື້ອ, ຫິມະ, ສາຍພູທີ່ຢູ່ໄກໆ ແລະ ປ່າໄມ້ໃກ້ໆ. ເຂົາໄດ້ຊົມພະຈັນ, ດອກໄມ້ປ່າ ນົກບິນຜ່ານເຂົ້າມາໃນແວ່ນ, ຜູ້ຄົນຍ່າງຕາມກະຫນົນ ແລະ ແມ່ນແຕ່ເດັກ

ນ້ອຍຫລິ້ນຢູ່ໃນສວນ.

ຄິໂຍໂກະຮູ້ສຶກງຶດງໍ້ອັດສະຈັນນຳຄວາມຫລາກຫລາຍ ກວ້າງໃຫຍ່ຂອງໂລກໃນແວ່ນແຍງ. ແວ່ນແຍງຊຶ່ງກ່ອນໜ້ານັ້ນ ເປັນພຽງອຸປະກອນເພື່ອຮັບໃຊ້ການແຕ່ງເພດຢ່າງໜຶ່ງ, ສ່ວນແວ່ນມືນັ້ນຊ່ອຍໃຫ້ສ່ອງເຫັນຄໍດ້ານຫລັງເທົ່ານັ້ນ, ແຕ່ບັດນີ້ ມັນພາໃຫ້ຄົນເຈັບປ່ວຍຟື້ນຊີບຂຶ້ນມາ. ຄິໂຍໂກະ ມັກນັ່ງລົງຂ້າງຜົວເທິງຕຽງ ແລ້ວເວົ້າລົມກັນເລື່ອງໂລກໃນແວ່ນແຍງ, ທັງສອງແນມເຂົ້າໄປໃນແວ່ນນຳກັນ. ຕໍ່ມາ ຄິໂຍໂກະ ບໍ່ສາມາດຈຳແນກໄດ້ວ່າ ອັນໃດແມ່ນໂລກທີ່ນາງເຫັນໂດຍກົງ ແລະ ອັນໃດແມ່ນໂລກໃນແວ່ນແຍງ. ໂລກທັງສອງໄດ້ປາກົດຕົວຂຶ້ນ. ໂລກໃໝ່ສ້າງຂຶ້ນໃນແວ່ນແຍງ ຈົນຮູ້ສຶກວ່າມັນແມ່ນໂລກແຫ່ງຄວາມເປັນຈິງ.

"ຢູ່ໃນແວ່ນ ທ້ອງຟ້າໃສເຫລື້ອມ ເປັນສີເງິນເນາະ !" ຄິໂຍໂກະແນມອອກໄປນອກປ່ອງຢ້ຽມ " ໃນຂະນະທີ່ກະໂຕທ້ອງຟ້າແທ້ນັ້ນມົວໝອງ."

ທ້ອງຟ້າໃນແວ່ນປາສະຈາກຄວາມອຶມຄຶມ, ມັນໃສເຫລື້ອມໆ.

"ເປັນນຳເຈົ້າເຊັດແວ່ນຢູ່ບໍ່ເຊົາຕີ້ເບາະ ?"

ຜົວທີ່ນອນຢຽດຢູ່ຈຶ່ງງວາກໄປເບິ່ງທ້ອງຟ້າ.

"ເອີ້ ມັນມືດຄື້ມແທ້ໆ, ແຕ່ວ່າສີທ້ອງຟ້າບໍ່ຈຳເປັນຈະເປັນສີດຽວກັນທີ່ມືດໃນສາຍຕາຂອງໝາ, ນົກຈອກ ຫລືມະນຸດເຮົາ. ມັນບອກບໍ່ໄດ້ດອກວ່າ ຕາໃຜເຫັນສີແທ້ໆຂອງຟ້າ."

"ສັນຊັ້ນອັນທີ່ເຮົາເຫັນໃນແວ່ນນັ້ນ ແມ່ນຕາແວ່ນເຫັນຊັ້ນຫວະ ?"

ຄິໂຍໂກະ ຢາກຈະເອີ້ນວ່າ ມັນແມ່ນສາຍຕາແຫ່ງຄວາມຮັກຂອງພວກເຂົາທັງສອງເອງ, ຕົ້ນໄມ້ໃນແວ່ນນັ້ນ ຂຽວສົດໃສ ກວ່າຕົ້ນໄມ້ແທ້ໆ, ດອກພັບພຶງກໍຂາວສະອາດກວ່າດອກແທ້ໆ.

"ຄິໂຍໂກະ ນີ້ແມ່ນຮອຍມືເຈົ້າ, ນີ້ວໂປ້ຂວາຄັກໆ".

ເຂົາຊີ້ມືໃສ່ຂອບແວ່ນ, ຄິໂຍໂກະ ຮູ້ສຶກຕົກໃຈວາດໃດວາດຫນຶ່ງ ຈຶ່ງຟ້າວຫັນໃຈຟູ່ໃສ່ແວ່ນ ແລ້ວລຶບຮອຍມື.

"ບໍ່ເປັນຫຍັງດອກ ຄິໂຍໂກະ, ຮອຍມືນີ້ຕິດມາແຕ່ຕອນເຈົ້າເອົາແວ່ນມາໃຫ້ແຍງເບິ່ງສວນຜັກພຸ້ນນ່າ !"

"ຂ້ອຍບໍ່ເຫັນເລີຍ."

"ເຈົ້າອາດຊິບໍ່ສັງເກດ. ເປັນຍ້ອນແວ່ນນີ້ແທ້ໆ ຂ້ອຍຈຶ່ງຈື່ລາຍມືທັງນີ້ວໂປ້ະ ນີ້ວຊີ້ຂອງເຈົ້າໄດ້, ຄືຊິມີແຕ່ຜົວຜູ້ປ່ວຍຊໍາເຮື້ອ ຄືຂ້ອຍນີ້ແລ້ວທີ່ຈື່ຮອຍມືເມຍຕົນເອງໄດ້..."

ຜົວຂອງນາງເກືອບເຮັດຫຍັງບໍ່ໄດ້ເລີຍ ນອກຈາກນອນແບຢູ່ຕຽງນັບຕັ້ງແຕ່ແຕ່ງດອງກັນມາ. ເຂົາບໍ່ໄດ້ໄປເສິກນໍາຫມູ່, ໃກ້ໆຈະສິ້ນສົງຄາມ ເຂົາກືກເກນໄປຂຸດດິນຢູ່ເດີ່ນບິນຫລາຍມື້ ຈົນລົ້ມເຈັບ ແລະຍ່າງບໍ່ໄດ້ເລີຍ. ພໍສົງຄາມຍຸຕິກໍກັບມາເຮືອນ. ຄິໂຍໂກະ ກັບອ້າຍຂອງເຂົາໄປຮັບເອົາມາ. ເວລາຜົວກືກເກນໄປອອກແຮງງານນັ້ນ ຄິໂຍໂກະໄປພັກຢູ່ນໍາພໍ່ແມ່ຂອງນາງເພື່ອຫລົບໄພ. ສິ່ງຂອງເຄື່ອງໃຊ້ໃນເຮືອນກືກສົ່ງໄປກ່ອນແລ້ວ. ເຮືອນທໍາທີ່ນາງເລີ່ມຕົ້ນຊີວິດຄູ່ກືກໄຟໄຫມ້, ທັງສອງຈຶ່ງໄປເຊົ່າຫ້ອງຢູ່ໃນເຮືອນຂອງຫມູ່ ຄິໂຍໂກະ. ຢູ່ບ່ອນນີ້ຜົວຂອງນາງຫຽວໄປເຮັດວຽກໄດ້ສະດວກ. ໃຊ້ຊີວິດຢູ່ຮ່ວມກັນໃນເຮືອນທໍາເດືອນຫນຶ່ງ, ໃນເຮືອນເຊົ່າອີກສອງເດືອນ, ມີເທົ່ານີ້ ທີ່ ຄິໂຍໂກະ ໄດ້ຢູ່

ກັບຜົວ ກ່ອນເຂົາຈະລົ້ມເຈັບ.

ຕໍ່ມາ ຜົວຂອງນາງກໍຕັດສິນໃຈ ໄປເຊົ່າເຮືອນນ້ອຍໆຢູ່ເທິງພູ ເພື່ອພັກຜ່ອນປິ່ນປົວ. ສະໄຫມສົງຄາມ ມີຫລາຍຄອບຄົວອົບພະຍົບ ຫລົບໄພມາຢູ່ເຮືອນຫລັງນີ້, ແຕ່ພໍສົງຄາມສ້ຽງສຸດ ກໍພາກັນກັບເມືອ ໂຕກຽວຫມົດ. ຄິໂຢໂກະ ເລີຍຮັບຜິດຊອບສວນຜັກຕໍ່ຈາກພວກເຂົາ. ມັນເປັນສວນນ້ອຍໆ ປະມານສີ່ສິບແມັດມົນທົນ ຢູ່ກາງປ່າຫຍ້າ. ກໍ່າ ຈະຊື້ຜັກກິນສະເພາະສອງຄົນນັ້ນ ບໍ່ມີຫຍັງຍາກດອກ, ແຕ່ ຄິໂຢໂກະ ກໍມັກເຮັດສວນ, ນາງພໍໃຈປູກຜັກຕ່າງໆດ້ວຍນ້ຳມືຂອງຕົນເອງ. ມັນ ບໍ່ແມ່ນຍ້ອນຢາກຢູ່ຫ່າງຜົວດອກ, ແຕ່ນາງເມື່ອຍນຳວຽກກັ໊ກແສ່ວ ປັ້ນສົມຄວນແລ້ວ. ເຖິງຢ່າງໃດ ນາງກໍຄຶດຫ່ວງໃຍນຳຜົວທຸກເວລາ. ເມື່ອອອກໄປຢູ່ໃນສວນ ນາງຮູ້ສຶກມີຄວາມຫວັງຂຶ້ນແດ່. ຢູ່ບ່ອນນີ້ນາງ ຮູ້ສຶກເປັນສຸກໃຈໃນຄວາມຮັກທີ່ມີຕໍ່ຜູ້ເປັນຜົວ, ເພາະນອກຈາກອ່ານ ປຶ້ມໃຫ້ເຂົາຟັງຢູ່ໃກ້ໆແລ້ວ ນາງກໍບໍ່ສາມາດເຮັດຫຍັງໄດ້ອີກ. ຄິໂຢ ໂກະຄຶດວ່າການອອກມາເຮັດວຽກຢູ່ໃນສວນ ຈະເຮັດໃຫ້ນາງມີເຫື່ອ ແຮງຂຶ້ນ ພາຍຫລັງທີ່ອິດເມື່ອຍຍ້ອນການດູແລຄົນເຈັບຕັ້ງດົນ.

ຕອນທັງສອງຍ້າຍຂຶ້ນໄປຢູ່ເຮືອນເທິງພູນັ້ນ ແມ່ນໄລຍະກາງ ເດືອນກັນຍາ, ນັກທ່ອງທ່ຽວທີ່ມາພັກຜ່ອນຍາມຮ້ອນ ພາກັນກັບຄືນ ຫມົດແລ້ວ. ຝົນຕົ້ນລະດູໃບໄມ້ຫລົ່ນກໍຫລັ່ງລົງ ແລະ ເຢັນຈ້ອຍໆ.

ບ່າຍວັນຫນຶ່ງ ແດດອອກ ນົກຮ້ອງສົ່ງສຽງເຈື້ອຍແຈ້ວ, ຜັກ ເປັນສີຂຽວເຫລື້ອມຍິບຍັບ, ຄິໂຢໂກະ ພວມອອນຊອນຢູ່ກັບການເບິ່ງ ເມກເຝື້ອສີອອນ ທີ່ລອຍລ່ອງເຫນືອຈອມພູ, ແລ້ວນາງກໍຕ້ອງຕົກໃຈ ນຳສຽງຮ້ອງຂອງຜົວ, ເລີຍແລ່ນຂຶ້ນເຮືອນມາ ທັງໆທີ່ມືຍັງເປື້ອນດິນຢູ່.

ຜົວຂອງນາງທັນໃຈຫຶດຫອບຢ່າງແຮງ.

"ເອີ້ນແລ້ວເອີ້ນອີກ... ບໍ່ໄດ້ຍິນຫວະ ?"

"ຂ້ອຍ ເອີ້ ຂໍໂທດ... ບໍ່ໄດ້ຍິນນະ."

"ເຊົາເຮັດສວນເທາະ, ຂ້ອຍຄືຊິຕາຍກ່ອນເຈົ້າມາຮອດ ຄັນໃຫ້ເອີ້ນຢູ່ດົນປານນີ້, ທັງບໍ່ຮູ້ວ່າເຈົ້າເຮັດຫຍັງຢູ່ໃສອີກ."

"ຂ້ອຍກໍຢູ່ໃນສວນຫັ້ນເດ້ ຊິເຊົາດອກບາດນີ້."

ຜູ້ເປັນຜົວຄ່ອຍດີໃຈຂຶ້ນ.

"ເຈົ້າໄດ້ຍິນສຽງນົກຮ້ອງບໍ່ ?"

ເລື່ອງທີ່ຜົວຢາກເວົ້າມີເທົ່ານີ້ເອງ. ສຽງນົກຮ້ອງດັງວ່ອນມາຈາກປ່າໄມ້ໃກ້ບ້ານອີກ. ບັດນີ້ ປ່າດົງປາກົດເດັ່ນຂຶ້ນອີກ ທ່າມກາງແສງແດດຍາມຄ້ອຍຄ່ຳ. ຄິໂຢໂກະ ຈື່ສຽງນົກປ່າຮ້ອງໄດ້ແຕ່ຄາວນັ້ນມາ.

"ເອົາກະດິງມາໄວ້ໃຊ້ຈັກອັນດີບໍ່ ? ຊໍາຊາໄດ້ກະດິງ ອ້າຍເອົາອີ່ຫຍັງແກວ່ງໄປໃຫ້ມັນເກີດສຽງດັງກ່ອນເນາະ ?"

"ຄັນຂ້ອຍແກວ່ງກ້ວຍ ແຕ່ເທິງເຮືອນພີ້ໄປກະຄືຊິມ່ວນເນາະ !"

ເປັນອັນວ່າ ຄິໂຢໂກະ ຍັງຈະຕ້ອງໄດ້ເຮັດສວນຂອງນາງຕໍ່ໄປຈົນລະດູຫນາວອັນທໍລະມານແສນດົນນານໄດ້ຜ່ານໄປ ຢ່າງເຂົ້າລະດູບານໃຫມ່ ນາງຈຶ່ງເກີດມີຄວາມຄິດ ເອົາແວ່ນໃຫ້ຜົວແຍງເບິ່ງສວນ.

ແວ່ນແຍງພຽງແຜ່ນດຽວ ເຮັດໃຫ້ຜົວຂອງນາງປິຕິຊຸ່ມຊື່ນຫລາຍ ພໍປານວ່າ ໂລກສີຂຽວສົດໃສໄດ້ຫວນຄືນມາຫາເຂົາອີກ. ເປັນໄປບໍ່ໄດ້ ທີ່ເຂົາຈະແນມເຫັນໂຕປົ້ງທີ່ ຄິໂຢໂກະ ເກັບອອກຈາກໃບຜັກ, ດັ່ງນັ້ນ ນາງຈຶ່ງເອົາຂຶ້ນມາໃຫ້ເຂົາເບິ່ງຢູ່ເທິງເຮືອນ.

"ຢູ່ພີ້ ຂ້ອຍເຫັນຮອດຂີ້ກະເດືອນພຸ້ນບ່າ !" ເຂົາມັກເວົ້າແນວນີ້ ເມື່ອເບິ່ງນາງຂຸດດິນ.

ເວລາແດດສ່ອງໃສ່ເຮືອນ, ບາງຄັ້ງ ຄິໂຢໂກະ ສັງເກດເຫັນແສງເຫລື້ອມແມັບໆ, ເມື່ອເງີຍໜ້າຂຶ້ນເບິ່ງ ນາງກໍເຫັນວ່າຜົວພວມຫລິ້ນກັບການໃຊ້ແວ່ນແຍງແສງຕາເວັນຢູ່. ເຂົາບອກນາງເອົາຊຸດກິໂມໂນສີຄາມ ທີ່ເປັນເຄື່ອງແບບສະໄຫມເຂົາເປັນນັກຮຽນ ມາດັດແປງເປັນໂສ້ງເຮັດວຽກ. ເບິ່ງຄືວ່າ ເຂົາພໍໃຈທີ່ເຫັນຄິໂຢໂກະໃນແວ່ນ ຂະນະເຮັດວຽກໃນສວນໃນຊຸດສີຟ້າຄາມ.

ຄິໂຢໂກະ ເຮັດວຽກໃນສວນໄປເລື້ອຍໆ, ບາງເທື່ອກໍລືມຄາວ ໄປ, ບາງເທື່ອກໍຮູ້ສຶກໂຕວ່າພວມຖືກລັກແຍງຢູ່. ນາງຮູ້ສຶກອຸ່ນໃຈ ເມື່ອພົບວ່າອາລົມຈິດຂອງຕົນຕອນນີ້ຕ່າງກັບຕອນແຕ່ງດອງໃຫມ່ໆ ຊຶ່ງເວລານັ້ນນາງຮູ້ສຶກໜ້າອາຍ ແມ່ນແຕ່ຕອນແຍງແວ່ນເບິ່ງຜົມ ທາງງ່ອນແລ້ວແຂນເສື້ອຮື້ຂຶ້ນຈົນເຫັນແຂກສອກ. ຢ່າງໃດກໍຕາມ ນາງມາເລີ່ມຕົ້ນແຕ່ງໜ້າທາແປ້ງໄດ້ຕາມໃຈ ກໍຕອນແຕ່ງດອງ ເທື່ອທີສອງນີ້ເທົ່ານັ້ນ, ຄືຫລັງຈາກປົດປ່ອຍຕົນເອງອອກຈາກພາລະ ດູແລຜົວທີ່ເຈັບປ່ວຍຕະຫລອດທັງການໄວ້ທຸກນຳຜົວທີ່ຕາຍມາດົນ ພໍສົມຄວນແລ້ວ. ນາງພົບວ່າ ຕົນເອງງາມເດັ່ນຂຶ້ນ. ດັ່ງນີ້ ການທີ່ຜົວເວົ້າວ່າ ຮ່າງຄີງຂອງນາງງາມດີນັ້ນ ແມ່ນຜົວເວົ້າຕາມຄວາມຈິງ.

ບັດນີ້ ຄິໂຢໂກະ ບໍ່ອາຍທີ່ຈະແຍງເບິ່ງເງົາຕົນເອງໃນແວ່ນອີກແລ້ວ ເຊັ່ນຕອນອາບນ້ຳໃຫມ່ໆ ນາງເບິ່ງເຫັນຄວາມງາມຂອງ ຕົນ. ເຖິງຢ່າງໃດກໍຕາມ ນາງກໍຍັງບໍ່ລືມຄວາມຮູ້ສຶກອັນໜຶ່ງອັນດຽວທີ່ຝັງຢູ່ໃນໃຈ, ມັນເກີດຂຶ້ນຍ້ອນວ່າຜົວເກົ່າແນມເຫັນຄວາມງາມຂອງ

ນາງໃນແວ່ນແຍງ. ນາງບໍ່ສິງໄສຫຍັງໃນຄວາມງາມທີ່ເຫັນຢູ່ໃນແວ່ນ. ໃນທາງປີ້ນກັນ ນາງຊ້ຳບໍ່ສິງໄສວ່າມີອີກໂລກຫນຶ່ງ ຢູ່ໃນແວ່ນ, ແຕ່ນາງບໍ່ສາມາດຈຳແນກຄວາມແຕກຕ່າງລະຫວ່າງເນື້ອຫນັງຂອງຕົນເອງແທ້ ກັບທີ່ເຫັນເປັນເງົາສະທ້ອນຢູ່ໃນແວ່ນ, ຄືດັ່ງທີ່ ນາງເຫັນຄວາມແຕກຕ່າງ ລະຫວ່າງທ້ອງຟ້າມືດຄຶ້ມກັບທ້ອງຟ້າສີເງິນໃນແວ່ນ. ບາງທີມັນອາດຈະບໍ່ແມ່ນເລື່ອງຄວາມແຕກຕ່າງຂອງໄລຍະທາງເທົ່ານັ້ນ, ອາດຈະເປັນຍ້ອນຄວາມຄິດຄຳນຶງຂອງຜົວເກົ່າ ຜູ້ທີ່ນອນຢູ່ກັບບ່ອນເປັນປະຈຳດົນໆນັ້ນ ພາໃຫ້ຈິນຕະນາການໄປເອງ. ແຕ່ມາບັດນີ້ ນາງບໍ່ມີທາງຮູ້ເລີຍວ່າ ເວລານາງເຮັດ ວຽກຢູ່ສວນນັ້ນເຂົາເຫັນນາງງາມຂະຫນາດໃດແທ້ ເມື່ອເບິ່ງຜ່ານແວ່ນ. ແມ່ນແຕ່ກ່ອນຜົວຕາຍ ຄິໂຢໂກະ ເອງກໍບໍ່ອາດບອກໄດ້ເລີຍ.

ຄິໂຢໂກະ ບໍ່ພຽງແຕ່ຄຶດຮອດເທົ່ານັ້ນ, ນາງຍັງອາວອນເຖິງພາບຂອງຕົນເອງ ເວລາເຮັດວຽກໃນສວນ ທີ່ສະທ້ອນຜ່ານແວ່ນແຍງໃນມືຜົວ ຜູ້ລ່ວງລັບໄປແລ້ວ, ພາບຂອງດອກເບັນຈະມາດຂາວ, ຫມູ່ເດັກ ນ້ອຍຊາວບ້ານຫລິ້ນຢູ່ທົ່ງນາ ແລະ ພາບຕາເວັນພວມພົ້ນຂຶ້ນໃນຕອນເຊົ້າ ເຫນືອຈອມພູຫິມະທີ່ຢູ່ໄກສຸດສາຍຕາ. ນາງຍັງອາວອນເຖິງໂລກອີກໂລກຫນຶ່ງ ທີ່ເຄີຍຢູ່ຮ່ວມກັບຜົວເກົ່າ. ແຕ່ເພື່ອເຫັນແກ່ຜົວຄົນປັດຈຸບັນ ຄິໂຢໂກະຈຳຕ້ອງຂົ່ມອາລົມຄວາມຮູ້ສຶກດັ່ງກ່າວ ໄວ້ໂດຍພະຍາຍາມຄຶດເອົາວ່າ ສິ່ງນັ້ນຢູ່ໃນອີກໂລກຫນຶ່ງທີ່ໄກແສນ ໄກ.

ເຊົ້າມື້ຫນຶ່ງໃນເດືອນພຶດສະພາ ຄິໂຢໂກະ ໄດ້ຍິນສຽງນົກປ່າດັງຢູ່ໃນວິທະຍຸ ຊຶ່ງສະຖານີກະຈາຍສຽງຕັ້ງຢູ່ເທິງເນີນພູ ໃກ້ໆກັບເຮືອນບ່ອນນາງເຄີຍຢູ່ກັບຜົວເກົ່າ ຈົນຮອດມື້ເຂົາເສຍຊີວິດລົງ. ພາຍ

ຫລັງທີ່ຜົວຄົນປັດຈຸບັນລົງເຮືອນໄປເຮັດວຽກ, ສິ່ງຫນຶ່ງທີ່ນາງມັກປະຕິບັດຈົນເປັນນິໄສ ຄືເອົາແວ່ນມືອອກມາສ່ອງເບິ່ງທ້ອງຟ້າທີ່ ແຈ່ມໃສ, ຈາກນັ້ນກໍແຍງເບິ່ງໃບຫນ້າຕົນເອງ ນາງຄົ້ນພົບສິ່ງໃຫມ່ດ້ວຍຄວາມແປກຕ່າງໃນໃຈຢ່າງຍິ່ງ ຄືນາງບໍ່ອາດເຫັນຫນ້າຕົນເອງ ນອກຈາກເຫັນເປັນພາບສະທ້ອນໃນແວ່ນແຍງ. ບໍ່ມີໃຜສາມາດເຫັນຫນ້າຕົນເອງໄດ້, ມີແຕ່ຮູ້ສຶກເອົາວ່າ ຕົນເອງມີຫນ້າ ທັງສົງໄສວ່າທີ່ເຫັນໃນ ແວ່ນນັ້ນແມ່ນຫນ້າຂອງຕົນເອງແທ້ບໍ. ຄິໂຢໂກະ ມົວຄິດນຳ ແຕ່ເລື່ອງນີ້ຈົນຊຶງ. ຄວາມຄິດຫນຶ່ງປາກົດຂຶ້ນ ຄື ເປັນຫຍັງ ພະເຈົ້າຈຶ່ງສ້າງມະນຸດມາໂດຍບໍ່ໃຫ້ເຫັນຫນ້າຕົນເອງ ?

"ສົມມຸດວ່າ ມະນຸດເຮົາເຫັນຫນ້າຕົນເອງ ກໍອາດຊິປ່ວງບ້າໄປກໍໄດ້ ຫລື ອາດຊິເຮັດຫຍັງບໍ່ໄດ້ເລີຍ ?"

ອາດເປັນໄປໄດ້ວ່າ ມະນຸດໄດ້ວິວັດໄປໃນທິດທາງແນວນີ້ ຈຶ່ງບໍ່ສາມາດເຫັນຫນ້າຕົນເອງ, ບາງທີ ແມງປໍ ແລະແມງມ້າ ອາດເຫັນຫນ້າຕົນເອງ.

ດັ່ງນັ້ນ ຫນ້າຄົນເຮົານີ້ ມີໄວ້ໃຫ້ຜູ້ອື່ນເບິ່ງຊັ້ນຕີ້, ທຳນອງດຽວກັບຄວາມຮັກແມ່ນຕວ່າ ?

ເມື່ອ ຄິໂຢໂກະ ວາງແວ່ນມືລົງ ນາງສັງເກດເຫັນວ່າ ຂອບໄມ້ມອນກັບລາຍຄວັດຂອງຂອບແວ່ນ ບໍ່ເຂົ້າແກັບເຂົ້າເກຍກັນ.

ຍ້ອນແວ່ນມືອັນເກົ່າ ທີ່ມາກັບແວ່ນຕັ້ງນັ້ນ ນາງໄດ້ອຸທິດໃຫ້ຜົວເກົ່າໄປແລ້ວ, ແວ່ນຕັ້ງທີ່ຍັງຢູ່ຈຶ່ງປຽບຄືແມ່ຫມ້າຍ. ການທີ່ນາງເອົາແວ່ນມືໃຫ້ຜົວເກົ່າໃຊ້ນັ້ນ ມີທັງອັນດີ ທັງອັນອອນ, ຜົວຂອງນາງເອົາມັນມາແຍງເບິ່ງຫນ້າຕົນເອງເລື້ອຍໆ. ເຂົາຄົງຕົກໃຈພໍປານກັບ

ໄດ້ເຫັນຫນ້າຍິ້ມພິບານ. ກ້າຫາກຄວາມຕາຍຂອງຜົວນັ້ນ ເປັນການອ້າຕົວຕາຍ ໂດຍທາງຈິດຕະສາດ ໂດຍໃຊ້ແວ່ນແຍງເປັນເຄື່ອງມື ແລ້ວກໍເທົ່າກັບວ່າ ຄິໂຢໂກະ ເອງເປັນຄາຕະກອນ ທາງຈິດຕະສາດ. ເມື່ອຄິດເຫັນຈຸດອ່ອນອັນນີ້ ຂອງແວ່ນແລ້ວ ນາງຈຶ່ງຂໍເອົາແວ່ນຄືນຈາກຜົວ, ແຕ່ຝ່າຍຜົວບໍ່ຍອມ. ເຂົາບອກວ່າ :

"ເຈົ້າບໍ່ຢາກໃຫ້ຂ້ອຍເຫັນຫຍັງເລີຍຫວະ ? ໃຫ້ຂ້ອຍໄດ້ຮັກສິ່ງທີ່ພໍເຫັນນີ້ແດ່ເດ້ ກ່ອນຊິຕາຍ !" ຝ່າຍຜົວອາດຈະຍອມສະຫລະຮອດຊີວິດ ເພື່ອຮັກສາໂລກໃນແວ່ນໄວ້. ຫລັງຈາກຝັງສົບຕົກທ່າໃຫຍ່ ນາງກັບຜົວມັກໃຊ້ແວ່ນແຍງເບິ່ງເງົາພະຈັນ, ມັນແມ່ນເງົາພະຈັນທີ່ສະທ້ອນຢູ່ເຫນືອຫນ້ານ້ຳໃນສະພາຍໃນສວນ. ບໍ່ອາດເວົ້າວ່າ ພະຈັນຊ້ຳດອກ, ເພາະວ່າ ມັນເປັນພຽງເງົາຂອງພາບສະທ້ອນ ທີ່ຍັງຄົງປະທັບຢູ່ໃນຫົວໃຈຂອງຄິໂຢໂກະ ຕະຫລອດມາ.

"ຄວາມຮັກທີ່ຫມັ້ນຄົງສະຖິດຢູ່ກັບຜູ້ທີ່ຫນັກແຫນ້ນເທົ່ານັ້ນ." ເມື່ອຜົວຄົນທີສອງຂອງນາງ ເວົ້າແນວນີ້ ຄິໂຢໂກະ ກໍງຶກຫົວໄປນຳຢ່າງອາຍໆ ທັງທີ່ໃນຫົວໃຈນາງ ບໍ່ເຫັນດີນຳທັງຫມົດກໍຕາມ. ເມື່ອຜົວເກົ່າເສຍຊີວິດໄປໃຫມ່ໆນັ້ນ ຄິໂຢໂກະ ເຄີຍຄຶດວ່າຄວາມສູ້ທົນຂອງນາງມີປະໂຫຍດອັນໃດ. ແຕ່ບໍ່ດົນນາງກໍພົບວ່າ ມັນເປັນຄວາມຊົງຈຳລ້ຳເລີກຂອງຄວາມຮັກຝັງໃຈ, ຄວາມຊົງຈຳແຫ່ງວັນເວລາທີ່ຊຸ່ມຊື່ນໄປດ້ວຍຄວາມຮັກ, ແລ້ວຄວາມຕໍ່າຄ້ອຍນ້ອຍໃຈຂອງນາງກໍຄ່ອຍຫາຍໄປ. ຜົວຄົນໃຫມ່ຂອງນາງອາດຈະຕີລາຄາຄວາມຮັກຂອງແມ່ຍິງດ້ອຍຄ່າເກີນໄປ.

"ເຈົ້າກໍເປັນຄົນໃຈດີປານນີ້ ເປັນຫຍັງຈຶ່ງປະກັບເມຍລະ ?" ຄິໂຍໂກະ ເຄີຍຖາມຜົວ ແຕ່ເຂົາບໍ່ຕອບ. ນາງແຕ່ງດອງກັບເຂົາຍ້ອນອ້າຍຂອງຜົວເກົ່າຈີ້ຈີ່ນນໍາ. ຫລັງຈາກຮູ້ຈັກກັນໄດ້ສີ່ເດືອນ ທັງສອງກໍແຕ່ງດອງກັນ. ເຂົາອາຍຸລື່ນນາງສິບຫ້າປີແລ້ວ.

ເມື່ອກຶພາ ຄິໂຍໂກະ ຮູ້ສຶກຕົກໃຈ ທີ່ເຫັນວ່າໃບຫນ້າຂອງຕົນປ່ຽນໄປຫລາຍ.

"ຂ້ອຍຢ້ານບ່າ, ຢ້ານອີ່ຫລີ !" ນາງດຶງແຂນເສື້ອຜົວໄວ້, ອາການແພ້ທ້ອງປວດຮາກ ເຮັດໃຫ້ນາງທໍລະມານ ແລະ ເກີດອາການຫລົງຫນ້າຫລົງຫລັງ. ນາງຄານອອກໄປໃນສວນ ຫາເກັບໃບແປກ ຫລິ້ນ. ນາງແຕ່ງປິ່ນໂຕໃຫ້ລູກລ້ຽງໄປກິນຢູ່ໂຮງຮຽນ ໂດຍໃສ່ແຕ່ເຂົ້າ ໃຫ້. ບາງຄັ້ງ ນາງຈ້ອງຕາເບິ່ງແວ່ນໂດຍຄິດວ່າຕົນເອງເຫັນຊອດ ແວ່ນ. ນາງລຸກຂຶ້ນກາງເດິກ, ນັ່ງເຈົ່າຢູ່ເທິງຕຽງ ແລະ ແນມເບິ່ງ ຫນ້າຜົວທີ່ນອນຫລັບໄຫລຢູ່ ເພາະຄວາມຮູ້ສຶກວຸ່ນວາຍຄອບງໍາຈິດ ໃຈທີ່ຢ້ານວ່າຊີວິດມະນຸດນີ້ ຊ່າງໄຮ້ຄ່າ. ນາງຈຶ່ງແກ້ເຊືອກຮັດແອວ ຂອງເສື້ອນຸ່ງນອນອອກມາ ທໍາທ່າວ່າຈະເອົາຮັດຄໍຜົວ, ຕໍ່ມາກໍຮ້ອງໄຫ້ ຮ່ໍາໄຮຂຶ້ນປານຜີບ້າ. ຜົວຂອງນາງຕື່ນຂຶ້ນມາແລ້ວ ເອົາເຊືອກມັດໃຫ້ ຄືນຢ່າງທະນຸຖະຫນອມ. ນາງສັ່ນຫນາວທັ້ງໆທີ່ເປັນຄືນລະດູຮ້ອນ.

"ຄິໂຍໂກະ, ເຊື່ອຫມັ້ນລູກໃນທ້ອງແມ້." ຜົວຂອງນາງຊວງແຂນມາກອດ.

ຫມໍແນະນໍາໃຫ້ນາງເຂົ້ານອນໂຮງຫມໍ, ຄິໂຍໂກະ ບໍ່ຢາກເຂົ້າ, ແຕ່ໃນທີ່ສຸດນາງກໍຍອມປະຕິບັດ.

"ຂ້ອຍຊິເຂົ້າໂຮງຫມໍ ແຕ່ຂໍໄປຢາມພໍ່ແມ່ສອງສາມມື້ກ່ອນໄດ້ບໍ່ ?"

ຜົວພາ ຄິໂຍໂກະ ໄປສົ່ງເຮືອນພໍ່ແມ່. ມື້ຕໍ່ມາ ນາງກໍຫລອຍອອກຈາກເຮືອນ ແລ້ວມຸ່ງໄປຍັງເຮືອນພັກເຫິງພູ ບ່ອນທີ່ເຄີຍຢູ່ກັບຜົວເກົ່າ. ມັນເປັນເວລາຕົ້ນເດືອນກັນຍາ. ຄາວທີ່ນາງມາຢູ່ກັບຜົວ ເກົ່າແມ່ນລະຫວ່າງກາງເດືອນດຽວກັນນີ້. ຄິໂຍໂກະ ຮູ້ສຶກປັ່ນທ້ອງຢາກຮາກ ຂະນະທີ່ຢູ່ໃນລົດໄຟ. ນາງເມົາລົດໄຟຈົນຕາລາຍ ທັງຄິດຢາກໂດດອອກຈາກລົດ. ພໍລົດໄຟຂຶ້ນມາຮອດສະຖານີເຫິງພູ ອາກາດເຢັນ ເຮັດໃຫ້ນາງມີແຮງຂຶ້ນ, ນາງຄວບຄຸມສະຕິໄດ້ ຄືກັບວ່າ ຜີຮ້າຍທີ່ສິງຢູ່ໃນຕົວໄດ້ບິນອອກຈາກຄີງໄປ. ນາງຢຸດຍ່າງ, ຮູ້ສຶກງົງທີບ, ຫລຽວໄປເບິ່ງສາຍພູ ທີ່ແວດລ້ອມພູພຽງໄວ້. ສາຍພູສີຄາມ ທ້ອງຟ້າເປັນເສັ້ນສາຍທີ່ມີຊີວິດຊີວາ. ນາງຮູ້ສຶກວ່າໂລກມີຊີວິດຊີວາ ຢູ່ພຸ້ນ. ນ້ຳຕາອຸ່ນໆໄຫລອອກ ນາງຍົກມືປ້າຍແລ້ວຍ່າງມຸ່ງຫນ້າໄປ ຍັງເຮືອນຫລັງທີ່ນາງກັບເຂົາເຄີຍຢູ່. ສຽງນົກຮ້ອງດັງແວ່ວມາແຕ່ ປ່າໄມ້ ທີ່ປາກົດເດັ່ນ ທ່າມກາງແສງແດດອ່ອນຍາມແລງ. ໃນເຮືອນນັ້ນ ມີຜ້າມ່ານສີຂາວຫ້ອຍຢູ່ປ່ອງຢ້ຽມຊັ້ນສອງ ເພາະມີຄົນເຂົ້າໄປຢູ່ແລ້ວ. ຄິໂຍໂກະ ບໍ່ກ້າເຂົ້າໄປໃກ້. ນາງແນມເບິ່ງເຮືອນແລ້ວຈົ່ມຄ່ອຍໆວ່າ :

"ຊິວ່າຢ່າງໃດ ກ້າລູກມີຫນ້າຕາຄືເຈົ້າ ?" ເພາະສະດຸ້ງໃນຄຳເວົ້າຂອງຕົນເອງ ນາງຫັນຫລັງກັບ, ຮູ້ສຶກອົບອຸ່ນ ແລະ ສະຫງົບໃນໃຈ.

# ດອກຊຸບາກິ

ໂດຍ ***ຊາໂຕມິ ຕົນ***

ນາງອາຍຸກາຍສາມສິບແລ້ວ ແຕ່ຍັງບໍ່ທັນແຕ່ງດອງເທື່ອ. ນາງນອນແຄງໄປທາງຊ້າຍ ພວມອ່ານນິຍາຍໃນວາລະສານຢູ່ ໂດຍອາໄສແສງສະຫວ່າງຈາກໂຄມໄຟ ທີ່ມີໂກບກັ້ງສີແດງຊ້ຳ. ມັນເປັນຄືນທີ່ມິດງຽບແລະໜາວເຢັນ. ບໍ່ມີສິ່ງໃດບົ່ງບອກວ່າມີລົມເລີຍ. ຄາດຄະເນວ່າ ຍັງບໍ່ຮອດທ່ຽງຄືນ, ແຕ່ສຽງຂອງຄົນຍ່າງຜ່ານໄປມາກໍຈາງຫາຍໄປແລ້ວ. ອາການງຽບສະຫງັດລ້ຳເລີກນີ້ ສຳຜັດປະສາດຫູເປັນພິເສດ.

ນາງເປີດໄປໜ້າໃໝ່ ທັງຕາກໍເສືອດເບິ່ງຫລານສາວ ອາຍຸ 20 ປີ. ບ່ອນນອນຂອງທັງສອງຫ່າງກັນບໍ່ພໍຄືບ. ຫລານສາວນັ້ນ ນອນປິ່ນໜ້າມາຊື່ນາງ, ໃບໜ້າທີ່ຫລັບແຈບຈົມເປັນຕາຮັກຫລາຍ. ມີພຽງແຕ່ດັງ ແລະ ໜ້າຜາກຂາວກ້ຽງເທົ່ານັ້ນ ທີ່ພົ້ນອອກຈາກ ຜ້າຫົ່ມນວມອອກມາໃຫ້ເຫັນ. ຝ່າຍນ້າສາວແນມເບິ່ງດົນໆປານວ່າ ເຫັນໃບໜ້າໃບນີ້ເປັນເທື່ອທຳອິດ.



"ຫລັບຢູ່ຕີ້ !" ນາງພາໂລເວົ້າຢອກຫລານ ເພື່ອໃຫ້ຕື່ນມາຫິວນຳກັນ.

ແຕ່ສາວນ້ອຍກໍນອນມິດຊ້ອຍມ້ອຍປານຮູບປັ້ນ, ແມ່ນແຕ່ສຽງຫັນໃຈກໍເກືອບບໍ່ໄດ້ຍິນ. ຝ່າຍນ້າສາວຈຶ່ງຫົວມິດໆຢູ່ຄົນດຽວ. ສາດປູພື້ນທີ່ຫາກໍປ່ຽນໃຫມ່ໆ ຕອນທັງສອງຍ້າຍມາຢູ່ບ່ອນນີ້ ເກີດສຽງຫນ່ອຍຫນຶ່ງ ຂະນະທີ່ນາງພິກຄີງ, ແລະ ອາຍອຸ່ນກໍລອຍຂຶ້ນມາກຶກ ລຳຄໍ ແລະ ໃບຫນ້າຈົນນາງຮູ້ສຶກໄດ້.

ບາງຂະນະນາງບໍ່ຄິດຫາເລື່ອງອື່ນໃດ ນອກຈາກເລື່ອງໃນນິຍາຍວ່າ ດຳເນີນໄປຮອດໃສ. ນັບວ່າບໍ່ດີເລີຍ ທີ່ນາງບໍ່ງ່ວງນອນ.

ມີສຽງຫວໍອາຍນ້ຳຫ້ອນໆ ດັງມາແຕ່ໄກ. ຄືນນີ້ຊ່າງງຽບສະຫງັດອີ່ຫລີ. ນາງບໍ່ເຄີຍປະສົບເຫັນຄືນໃດທີ່ມີດາວຮູບປານນີ້. ນາງຄິດຢາກໄປປຸກສາວໃຊ້ ເພື່ອມາຂົນເຄື່ອງຂຶ້ນໄປຊັ້ນເທິງ ທັງນີ້ ເພື່ອຈະໄດ້ນອນຫ້ອງດຽວກັບທັງສາມຄົນ. ແຕ່ກ້າລຸກໄປກໍບໍ່ມີປະໂຫຍດ, ນາງຈຶ່ງອ່ານຫນັງສືຕໍ່.

ຕົວລະຄອນທີ່ເປັນພະເອກກັບນາງເອກ ພວມດຳເນີນໄປໃກ້ບ່ອນຈະເກີດວິກິດການ, ແຕ່ກໍບໍ່ມີຫຍັງເກີດຂຶ້ນເທື່ອ. ພວກຜູ້ຊາຍບໍ່ມີຫຍັງໃຫ້ຕື່ນເຕັ້ນຈັກດີ້ - ນາງຈື່ພວກເຂົາເກືອບບໍ່ໄດ້ພໍຄົນ. ນາງອ່ານໄປພໍແລ້ວຮີດ, ຈິດໃຈບໍ່ຕິດຕາມເນື້ອເລື່ອງເລີຍ.

"ແປ໊ະ !"

ສຽງນີ້ດັງຂຶ້ນໃກ້ໆຫມອນ. ບໍ່ມີສຽງອື່ນໃດດັງກ່ອນດັງລຸນ, ມີແຕ່ດັງບາດດຽວນີ້. ມີບາງສິ່ງບາງຢ່າງຕົກລົງໃສ່ສາດ, ມັ້ນມັນແນ່ນອນແລ້ວ. ແຕ່ມັນແມ່ນຫຍັງລະ ? ນາງບໍ່ຫານຫລຽວໄປເບິ່ງ, ແຕ່

ຄ່ອຍໆວາງວາລະສານລົງບ່ອນນອນ ແລ້ວທົດມືທັງສອງເບື້ອງເຂົ້າມາແນບໄວ້ທີ່ໜ້າອີກ. ມືຊ້າຍທີ່ເຢັນຈ້ອຍໆຄ່ອຍໆ ຊຶມລົງສູ່ອີກເບື້ອງໜຶ່ງ.

ຝ່າຍຫລານສາວ ຈ້ອງເບິ່ງນ້າສາວຢູ່ໂດຍມີນຕາພໍຣິບຣີ.

"ແມ່ນຫຍັງຣຶ ! ນ້າສາວສະດຸ້ງຍຸບ "ແມ່ນຫຍັງເຊະຈັງ ?"

"ຣຶ໊ຍ ! ບໍ່ " ເຊະຈັງຜູດລຸດຂຶ້ນພ້ອມກັບຜ້າຫົ່ມ ແລ້ວຫມູບຫົວໃສ່ຕັກນ້າສາວ.

"ຖາມວ່າແມ່ນຫຍັງກໍບໍ່ບອກ. ແມ່ນຫຍັງເຊະຈັງ ?"

ຫລານສາວເງີຍຫົວຂຶ້ນຫນ່ອຍຫນຶ່ງແລ້ວວ່າ "ຢ່ານ່າ !"

ຝ່າຍນ້າສາວຫຍັບເຂົ່າໃຫ້ຫວິດຈາກກຶກເຕັງ ແລ້ວກັ້ນໃຈຫລຽວໄປເບິ່ງທາງຫົວນອນ. ຢູ່ຫ່າງໄປຫລາຍເຕີບເກີນກວ່າທີ່ນາງຄາດຄະເນໄວ້ ດອກຊຸບາກິສີແດງເລືອດດອກບັກໃຫຍ່ ໄດ້ຫລົ່ນຕົກລົງຢູ່ບໍລິເວນຣ້ານບູຊາ. ມັນວາງຢູ່ໃນທ່າຂວ້ຳເທິງສາດ. ເຂົາເຈົ້າທັງສອງເອງ ທີ່ພາກັນເສຍດາຍ ເມື່ອເຫັນດອກຊຸບາກິບານຢູ່ສວນບ້ານເກົ່າເລີຍໃຫ້ຄົນຫັກເອົາມາບຳຫອບຫນຶ່ງ ແລ້ວຈັດແຈງໃສ່ໂຖດອກໄມ້ໄວ້ທີ່ຣ້ານບູຊາ ນັບເປັນເວລາຕັ້ງອາທິດແລ້ວ.

"ຢູ່ດີໆແດ່ ເຊະຈັງ." ສຽງນ້າສາວຜ່ອນຄາຍອາລົມລົງ, ສ່ວນຫລານສາວລຸກນັ່ງ.

"ມັນເລື່ອງອີ່ຫຍັງ ?" ຫລານຖາມ.

"ນ້າ ພີ່ຄວນຊິຖາມ."

"ແຕ່ວ່ານ້າ..."

"ນ້າບໍ່ໄດ້ເຮັດອີ່ຫຍັງ ."

"ບໍ່ໄດ້ເຮັດຫຍັງຕື໊ ! ກໍນ້າຮ້ອງໃສ່ຫລານຫັ້ນເດ້ ."

"ໂຢ້ ! ຂອງວ່າຈ້ອງເບິ່ງກັບເອົາແທ້ເອົາວ່າ, ທັງມີນຕາພໍຮິບຮີ່ໄວ້."

"ນ້າຢ້ານຢູ່ກ່ອນແລ້ວເດ໊, ເຫັນນ້າເຊົາອ່ານ, ທຶດມືເອົ້າໃນຜ້າຫົ່ມແມ່ນບໍ່, ຢ່າມາປະຕິເສດ ." ຫລານສາວວ່າ.

"ເຫັນຊັ້ນ ບໍ ?"

"ຫລານຄຶດວ່າ ມີຂີ້ລັກເຂົ້າເຮືອນ."

"ຢ່າເວົ້າໄປໂລໂລ, ແຕ່ວ່າເປັນຫຍັງຈຶ່ງຕື່ນລະ ?"

"ນ້າເອີ້ນຫັ້ນເດ້ ."

"ບໍ່ໄດເອີ້ນຈັກດີ້. ເປັນຫຍັງນ້າຈຶ່ງຊິເອີ້ນ ?"

"ບໍ່ໄດ້ເອີ້ນຫວະຊັ້ນ ?"

"ນ້າບໍ່ໄດ້ເອີ້ນ."

"ຄັນຊັ້ນກໍແມ່ນຫລານຝັນໄປເອງ."

"ແມ່ນດອກຊຸບາກິ, ດອກຊຸບາກິ ຫລົ່ນ,"

"ຢ່າເວົ້າ ! " ຫລານສາວໂດດກອດນ້າສາວອີກ. " ຢ່າເວົ້າຈັ່ງຊັ້ນ."

"ເຊະຈັງ ! ນ້າຕື່ນໃດ່ເຮັດແບບນີ້ ."

"ແຕ່ເປັນຫຍັງນ້າເວົ້າຈັ່ງຊີ້ ?"

"ນ້າຊິໄດ້ເວົ້າຫຍັງ ໃຫ້ຕົກໃຈປານນີ້. ຄຶດເບິ່ງເອົາເອງ."

"ບໍ່ ບໍ່ ບໍ່ !"

"ຢ່າໂງ່ຫລານເອີຍ, ດອກຊຸບາກິຫລົ່ນຕົກລົງພື້ນມັນເລີຍເຮັດໃຫ້ຫລານຕື່ນ."

"ຊັ້ນຫວະ ? " ຫລານສາວຄ່ອຍໆເງີຍໜ້າຂຶ້ນແລ້ວຫລຽວໄປທາງຮ້ານບູຊາ." ເປັນຕາຢ້ານ ບໍ່ແມ່ນຫວະ, ສີແດງຈື່ງຄື່ງ."

"ແດງຫລືຂາວ ມັນກໍຫລິ່ນ ເມື່ອຮອດຍາມແລ້ວ. ສີແດງຈື່ງ ຄື່ງມັນເປັນຫຍັງ ?"

"ມັນເປັນຕາອະເຫຍືອງ ."

"ຄັນຊັ້ນ ກໍເອົາໄປກຶ້ມສາ ."

"ຫລານບໍ່ກ້າ. ນ້າເອົາໄປກຶ້ມເອງ."

"ມັນບໍ່ເປັນພິດເປັນໄພດອກ, ປະໄວ້ຮອດມື້ອື່ນເຊົ້າກໍໄດ້."

"ມັນຕື່ງຂຶ້ນເຕັມແຕ່ເລືອດໃດ."

"ເຊົາເວົ້າ ເຊະຈັງ !" ນ້າສາວເວົ້າຕັດຈົບຄື້ວກົ່ງຍັບຍູ່ເຂົ້າ. "ເວົ້າແນວຕາຍໆ ! ນ້າຊິຫລັບກ່ອນເດີ."

ນ້າສາວຍູ້ຫລານສາວອອກ, ປີ່ນຫລັງໃສ່ແລ້ວດຶງຜ້າຫົ່ມຄຸມຫົວຕົນເອງ.

"ນ້າຂີ້ຫລັກ." ຫລານສາວບໍ່ເຫນັງບໍ່ຕີງ, ກຶກຍູ້ໃຫ້ຢູ່ຢ່າງໃດກໍຢູ່ຢ່າງນັ້ນ, ຫມົດທັງໂຕສືບັບແຕ່ຫົວຈົນຮອດຕີນກຶກຄຸມຢູ່ໃນຜ້າຫົ່ມ. ນາງກັ້ນລົມຫັນໃຈ ແລະຕັ້ງຫູຟັງຢູ່.

ມືດຊ້ອຍມ້ອຍ !

ເຊະຈັງນອນມິດຢູ່ຄາວຫນຶ່ງ, ເມື່ອຮູ້ສຶກຫາຍໃຈຝືດ ນາງຈື່ງເອົາຫົວໂປໂລອອກຈາກຜ້າຫົ່ມ. ສ່ວນນ້າສາວນອນແຄງໄປທາງ ຊ້າຍ, ເອົາຜ້າຫົ່ມປົກບ່າໄຫລ່ໄວ້ແຫນ້ນໆຕາມເຄີຍ.

"ເປັນຕາຫນ່າຍບໍ່ນ້າອ້ອຍ !" ເຊະຈັງພິກຕົວອອກຫ່າງ. ໂຄມໄຟສາດແສງສີມ່ວງໄປແຈຫ້ອງ ແລະ ປະທັບກາແຫ່ງຄວາມຕາຍ

ໄວ້ເທິງໃບໜ້າຂອງຍິງສາວຜູ້ງາມເລີດ ແຫ່ງສະຕະວັດທີ 17 ຊຶ່ງເປັນຮູບພາບແຕ້ມໄວ້ມ່ານກັ້ງ.

"ເປັນຕາຢ້ານແທ້." ນາງພິກຕົວໄປອີກ. ຝ່າຍນ້າສາວທີ່ນອນຢູ່ເຊິ່ງໜ້າຂອງນາງບັ້ນຫົວຈົນທ້ອງແຂງ. ຕາມປົກກະຕິແລ້ວນາງບໍ່ຄ່ອຍຫົວປານໃດ, ແຕ່ມາບັດນີ້ ນາງຫົວເອົາແທ້ເອົາວ່າ ແລະດຶງຜ້າຫົ່ມຂຶ້ນມາປົກຈົນຮອດດັງ. ນາງຫົວຈົນຕົວສັ່ນ ແຕ່ບ່າໄຫລ່ໄປຮອດກົ້ນ, ຫົວຈົນມືນຕາບໍ່ຂຶ້ນ. ທຳອິດນັ້ນ ຫລານສາວບໍ່ເຫັນ ເພາະບໍ່ໄດ້ເບິ່ງຄັກ, ເມື່ອນາງນີ້ຮູ້ວ່າ ອັນໃດເປັນໃດແລ້ວກໍເລີຍຫົວຊັດອອກ ມາ, ຫົວຈົນເວົ້າຫຍັງບໍ່ໄດ້ ເອົາແຕ່ກິ້ງໄປກິ້ງມາ. ຄືນນີ້ງຽບສະຫງັດ ລ້ຳເລີກຈົນທັງສອງຕ້ອງຄວບຄຸມສຽງຂອງຕົນໄວ້ບໍ່ໃຫ້ດັງ. ແຕ່ຍິ່ງຄວບຄຸມກໍຍິ່ງເປັນຕາຫົວຊັກໃຊ້. ມັນຕັ້ງວ່າເປັນຕາຫົວ ເປັນຕາຫົວອີ່ຫລີ. ນາງແຮ່ງຄິດຊ້ຳແຮ່ງເປັນຕາຫົວ. ນາງຊິເຮັດຈັ່ງໃດໄດ້, ກໍມັນເປັນຕາຫົວອີ່ຫລີ.

# ຈົດໝາຍໃນກົ້ງຊີມັງ

*ໂດຍ ຣາຢາມະ ໂຢຊິກິ*

ມັດຊຸໂດະ ໂຢຊິໂຊະ ຕັກຊີມັງອອກຈາກກົ້ງໂດຍພະຍາຍາມທີ່ສຸດບໍ່ໃຫ້ຊີມັງມາຕິດແປດໂຕເຂົາ, ແຕ່ວ່າຜົມກັບຮິມສົບເບື້ອງເທິງ ກໍຍັງກືກຊີມັງຕິດໂອບຈົ່ນເປັນແຜ່ນສີເທົາໜາໆ. ເຂົາຮູ້ສຶກຄັນດັງເພາະຊີມັງຕິດຕາມຂົນດັງຈົນແຂງ, ຢາກແກະອອກແຕ່ກໍເຮັດບໍ່ໄດ້, ຈັກປະສົມຊີມັງກໍປິ່ນໄປເລື້ອຍໆ, ບາທີໜຶ່ງຕ້ອງຕັກໃສ່ສິບເທື່ອ, ເຂົາຕ້ອງປ້ອນວັດຖຸເຂົ້າເຄື່ອງຈັກໃຫ້ທັນ ຈະຊັກຊ້າບໍ່ໄດ້.

ເຂົາເຮັດວຽກມື້ລະສິບເອັດຊົ່ວໂມງ ແລະ ບໍ່ມີເວລາຈະເຊັດດັງກົ້ຽວໆຈັກເທື່ອເລີຍ. ຕອນພັກກິນເຂົ້າສວາຍໃນເວລາສັ້ນໆນັ້ນ ເຂົາຟ້າວຍັດອາຫານລົງທ້ອງໄວໆ ເນື່ອງຈາກຫິວຫລາຍ ແລະ ຄິດວ່າໄລຍະພັກຕອນບ່າຍຈະເຮັດອະນາໄມໃຫ້ຂົນດັງກົ້ຽວໆ. ແຕ່ພໍຮອດເວລານັ້ນ ເຂົາຊ້ຳຈຳເປັນໄດ້ທຳຄວາມສະອາດເຄື່ອງປະສົມຊີມັງ. ເມື່ອຕົກຮອດຍາມແລງ ເຂົາຮູ້ສຶກວ່າ ດັງຕົນເອງແຂງຄືເຮັດດ້ວຍປລາສະເຕີ.



ວັນໜຶ່ງໃກ້ຈະສ້ຽງສຸດລົງແລ້ວ. ແຂນທັງສອງອ່ອນລ້າຍ້ອນເຂົາອອກແຮງຍົກຍ້າຍກັງຊີມັງຢູ່ໄປມາ. ຂະນະທີ່ຈັດການກັບກັງໜຶ່ງຢູ່ນັ້ນ ເຂົາກໍສັງເກດເຫັນກັບໄມ້ນ້ອຍໆກັບໜຶ່ງປົນຢູ່ໃນຊີມັງ.

"ແມ່ນຫຍັງນໍ ?" ເຂົາຄຶດລອຍໆດ້ວຍຄວາມແປກໃຈ ແຕ່ກໍບໍ່ອາດໃຫ້ຄວາມສົນໃຈ ຈົນໄປຮີດຈັ່ງຫວະເຮັດວຽກ. ເຂົາເອົາຊວ້ານ ຕັກຊີມັງໃສ່ເຄື່ອງຕວງແລ້ວເທລົງໃສ່ຈັກປະສົມ ແລ້ວກໍຕັກຊີມັງຕໍ່ໄປເລື້ອຍໆ.

"ອີກບຶດໜຶ່ງເດີ." ເຂົາພຶມພຳກັບຕົນເອງ "ມັນຈັ່ງໃດກັບຫວະ ? ເສືອກມີກັບໄມ້ຢູ່ໃນກັງຊີມັງ !"

ເຂົາຈັບເອົາກັບໄມ້ມາຍັດໃສ່ກົງດ້ານໜ້າຂອງເສື້ອຢ່າມເຮັດວຽກ.

"ຣ່າກິນມັນ ! ບໍ່ໜັກຈັກດີ້. ບໍ່ມີເງິນດອກຢູ່ໃນ, ຊິມີຫຍັງເນາະ ?"

ພຽງແຕ່ເຂົາຢຸດໄປສ່ຳນີ້ ກົງຈັກວຽກກໍແລ່ນໄປຈົນໂຕເອງຕັກຊີມັງໃສ່ເກືອບບໍ່ທັນ ຈຶ່ງຕ້ອງຟ້າວຕັກໃສ່ໜ່ຳໆ ເພື່ອໃຫ້ທັນກັບເຄື່ອງ ຈັກ. ເຂົາເຮັດວຽກໄປແບບກົນຈັກ, ຕັກຊີມັງອອກຈາກກັງໄປໃສ່ເຄື່ອງຕວງເປັນໄວໆຢູ່ຢ່າງບໍ່ຂາດໄລຍະ.

ມາບັດນີ້ ເຄື່ອງປະສົມຊີມັງເລີ່ມແລ່ນຊ້າລົງ ແລະ ແລ້ວມັນກໍຢຸດ. ເກືອງຍາມເລີກວຽກຂອງມັດຊຸໂດະ ໂຢຊິໂຊະ ແລ້ວ. ເຂົາຈັບເອົາທໍ່ນ້ຳທີ່ຕໍ່ໃສ່ເຄື່ອງປະສົມຊີມັງ ແລ້ວຈັດການລ້າງໜ້າລ້າງມື, ຕໍ່ມາກໍເອົາທໍ່ເຂົ້າສວາຍຄ້ອງຄໍ ແລ້ວຍ່າງມຸ່ງໜ້າໄປຍັງຕູບ. ຄວາມຄຶດຂອງເຂົາວົນຢູ່ນຳແຕ່ເລື່ອງຍັດອາຫານເຂົ້າໄປໃນກະເພາະ ແລະ ກ້າ

ໄດ້ເຫລົ້າຂາວປຸກໆ ລອງລົງໄປກໍແຮງຄັກ.

ເຂົາຍ່າງກາຍໂຮງໄຟຟ້າໄປ, ເຫັນວ່າວຽກກໍ່ສ້າງທັງຫມົດເກືອບສຳເລັດແລ້ວ, ອີກບໍ່ດົນພວກເຂົາກໍຈະມີໄຟຟ້າໃຊ້. ໄກອອກໄປ ພຸ້ນແນມເຫັນຈອມພູ ເຄຣະ ທີ່ຫຸ້ມດ້ວຍຫິມະຂາວບໍລິສຸດ ສູງເດັ່ນຢູ່ທ່າມກາງຄວາມດຳມືດຂອງຍາມຄ່ຳຄືນ. ຮ່າງຄິງທີ່ອາບເຫື່ອຂອງເຂົາຫນາວເຢືອບເຂົ້າທັນໃດ ຈົນເກີດອາການສັ່ນສະທ້ານ. ຕໍ່ໄປ ເຂົາຍ່າງລຸຍນ້ຳທີ່ໄຫລແຮງຂອງແມ່ນ້ຳຄິໂຊະ ທ່າມກາງສຽງດັງກະທົບຝັ່ງຂອງຄື້ນທີ່ເປັນໂປ້ເປັນຟອດຂາວໆ.

"ຮ່າກິນມັນ." ມັດຊຸໂດະ ໂຢຊິໂຊະ ຄິດດ່າຢູ່ໃນໃຈ "ມັນໂພດອີ່ຫລີໃດ, ຮ່າກິນຫົວມັນ ອີ່ເກົ້າຢູ່ເຮືອນທ້ອງໃຄ່ອີກລະ !"

ເຂົາຄິດເຫັນລູກຕັ້ງຫົກຄົນທີ່ກອງກັນຍົ່ວໆຢູ່ເຮືອນຕູບ, ຄິດເຫັນລູກຜູ້ຈະອອກມາໃຫມ່ ພໍດີກືກຍາມຫນາວທີ່ພວມຍ່າງເຂົ້າມາ, ຄິດເຫັນເມຍຜູ້ອອກລູກຕິດໆ ຊະນິດຢັນຫົວກັນອອກມາ, ແລ້ວເຂົາກໍເມື່ອຍອີກເມື່ອຍໃຈ.

"ເອົາເບິ່ງດູ ບາດນີ້ !" ເຂົາຈົ່ມພຶມພຳ. " ເຂົາຈ່າຍໃຫ້ກູມື້ລະຫນຶ່ງເຢັນກັບເກົ້າສິບເຊັນ. ໃນຈຳນວນນີ້ ຕ້ອງຊື້ເຂົ້າສອງກົ່ງໃນລາຄາກົ່ງລະຫ້າສິບເຊັນ, ແລະ ອີກເກົ້າສິບເຊັນ ຕ້ອງຈ່າຍຄ່າເຄື່ອງ ນຸ່ງຫົ່ມແລະ ຄ່າເຊົ່າເຮືອນ. ຮ່າກິນມັນ ! ແລ້ວກູຊິເອົາຫຍັງມາເຫລືອເພື່ອແດກເຫລົ້າ ?"

ທັນໃດນັ້ນ ເຂົາກໍຄິດອອກວ່າ ມີກັບນ້ອຍໆຢູ່ໃນກົ່ງເສື້ອຈຶ່ງຈົກອອກມາ ເຊັດໃສ່ໂສ້ງໃຫ້ຝຸ່ນຊິມັງອອກ. ກັບນີ້ບໍ່ມີຫນັງສືຂຽນບອກໄວ້ເລີຍ, ມັນອັດແຈບດີ.

"ບະ ! ມາເສືອກອັດແຈບແທ້ ? ມັນຢາກໃຫ້ເລີກລັບຊັ້ນວະ, ແມ່ນໃຜກັນ !"

ເຂົາເອົາກັບຟາດໃສ່ກ້ອນຫີນ ແຕ່ກໍຍັງໄຂບໍ່ອອກ. ດ້ວຍອາການໂມໂຫ ເຂົາຟາດລົງພື້ນແລ້ວຕີນຢຽບ, ກັບນັ້ນຈຶ່ງແຕກຍະຈອກ, ມີເຈ້ຍນ້ອຍໆພັບຢູ່ໃນຫໍ່ຜ້າຂາດໆຫລຸດອອກມາ, ເຂົາເລີຍຈັບຂຶ້ນມາອ່ານ :

"ຂ້ອຍເປັນສາວໂຮງງານ ເຮັດວຽກຢູ່ບໍລິສັດຊີມັງໂບນຸຣະ. ຂ້ອຍຫຍິບກົງໃສ່ຊີມັງ. ຜູ້ບ່າວຂອງຂ້ອຍເຄີຍເຮັດວຽກຢູ່ບໍລິສັດດຽວ ກັນ. ລາວມີໜ້າທີ່ເອົາຫີນໃສ່ເຄື່ອງບົດ. ມາໃນເຊົ້າຂອງວັນທີ 7 ຕຸລາ ຂະນະທີ່ລາວເອົາຫີນກ້ອນໃຫຍ່ໃສ່ເຂົ້າໄປ ລາວເລີຍພະລາດລົ້ມ ຖືກຫີນທັບເຕັງລົງໃນເຄື່ອງບົດຫີນ."

"ມີຄົນອື່ນພະຍາຍາມດຶງລາວອອກມາ ແຕ່ຊ່ອຍຫຍັງບໍ່ໄດ້. ລາວຈົມລົງໃຕ້ກ້ອນຫີນຄືກັບວ່າ ຖືກກົດລົງໃຫ້ຈົມລົງນ້ຳຕາຍ. ແລ້ວທັງກ້ອນຫີນທັງໂຕຂອງລາວ ກໍຖືກບົດມຸ່ນອັບຍັບ ແລະ ຖືກສົ່ງອອກໄປຍັງອີກເບື້ອງໜຶ່ງ ເປັນແຜ່ນສີບົວຈາງໆ, ຕໍ່ມາກໍຕົກໃສ່ສາຍພານເພື່ອສົ່ງເຂົ້າເຄື່ອງເຮັດເປັນຝຸ່ນລະອຽດ. ຢູ່ບ່ອນນີ້ ທ່ອນເຫລັກກ້າຂະໜາດມະຫຶມາ ຈະເຮັດໜ້າທີ່ບົດ. ຂ້ອຍຍັງໄດ້ຍິນສຽງຮ້ອງດັງມາໃນເວລາທີ່ມີການບົດໃຫ້ເປັນຕ່ອນເລັກຕ່ອນນ້ອຍ ຈົນເກືອບຂັ້ນມຸ່ນລະອຽດ, ຈາກນັ້ນກໍຖືກສົ່ງໄປຫາເຕົາເພື່ອອົບໃຫ້ເປັນຊີມັງ."

"ກະດູກ, ເນື້ອໜັງ ແລະຈິດໃຈຂອງລາວທັງໝົດແຕກມຸ່ນເປັນຝຸ່ນທຸລີ. ແມ່ນແທ້, ຜູ້ບ່າວຂອງຂ້ອຍທັງໝົດຕົນໝົດໂຕດັບມອດມ້ວຍລົງເປັນຝຸ່ນຊີມັງ, ອັນທີ່ຍັງເຫລືອທັງໝົດກໍຄື ເສດຜ້າ

ຂາດຈາກເສື້ອຍ່າມຂອງລາວ. ມື້ນີ້ ຂ້ອຍຫຍຸ້ງຢູ່ກັບວຽກຫຍິບກົງຊີມັງ ເພື່ອຈະເອົາລາວບັນຈຸໃສ່ໄວ້ນັ້ນແຫລະ ."

"ຂ້ອຍຂຽນຈົດຫມາຍນີ້ ກັດຈາກມື້ທີ່ລາວກາຍເປັນຊີມັງແລ້ວ, ແລະ ເມື່ອຂຽນສຳເລັດ ຂ້ອຍຈະເອົາໄປຢັດໃສ່ກົງລົງໃນກົງນີ້ ."

"ເຈົ້າກໍເປັນກຳມະກອນຄືກັນແມ່ນບໍ່ ? ກ້າເປັນດັ່ງນັ້ນແທ້ ຂໍໃຫ້ສົ່ງຄຳຕອບມາບອກຂ້ອຍແດ່. ຊີມັງໃນກົງນີ້ ໃຊ້ເຮັດຫຍັງ ? ຂ້ອຍຢາກຮູ້ອີ່ຫລີອີ່ຫລໍ."

"ລາວກາຍເປັນຊີມັງຫລາຍປານໃດ ? ແລະ ຊີມັງນີ້ ໃຊ້ໃນແຫ່ງດຽວບໍ ຫລື ຫລາຍແຫ່ງ. ເຈົ້າເປັນຊ່າງກໍ່ ຫລືຊ່າງໂບກ ?"

"ຂ້ອຍອາດທົນບໍ່ໄດ້ ທີ່ຈະເຫັນລາວກາຍເປັນລະບຽງຂອງໂຮງລະຄອນ ຫລື ເປັນຝາກຳແພງຂອງທຳໂຮງຂະຫນາດໃຫຍ່. ແຕ່ຟ້າເອີຍ ! ຂ້ອຍຊິໄປບອກຢຸດໄດ້ຈັ່ງໃດ ? ກ້າເຈົ້າເປັນກຳມະກອນ ຂໍຈົ່ງຢ່າໃຊ້ຊີມັງໃນບ່ອນຈັ່ງຊັ້ນເລີຍເດີ."

"ຂໍຄິດອີກກ່ອນ, ເອີ ບໍ່ເປັນຫຍັງດອກ ເອົາໃຊ້ບ່ອນໃດກໍໄດ້ຕາມແຕ່ເຈົ້າມັກ. ບ່ອນໃດກໍຕາມທີ່ລາວຖືກຝັງລົງ ມັນກໍຕ້ອງດີ. ລາວເປັນຄົນແຂງແກ່ນ ແລະ ລາວຈະເຮັດສິ່ງທີ່ຖືກຕ້ອງ ເມື່ອລາວຕົກໄປຢູ່ບ່ອນໃດກໍຕາມ."

"ລາວເປັນຄົນອ່ອນໂຍນ, ແຕ່ກໍຮ່າງໃຫຍ່ໃຈກ້າ ແລະ ຍັງຫນຸ່ມອາຍຸຫາກໍຢ່າງເຂົ້າຊາວຫ້າປີເທົ່ານັ້ນ. ຂ້ອຍບໍ່ທັນມີເວລາພຽງພໍ ເລີຍທີ່ຈະໄປຮູ້ ວ່າ ລາວຮັກຂ້ອຍຫລາຍປານໃດ. ແລະ ດຽວນີ້ ຂ້ອຍກໍພວມຫຍິບກົງໃສ່ຊາກສົບລາວ-ຫລືອາດຈະຖືກຕ້ອງກວ່າ ກ້າເວົ້າວ່າກົງໃສ່ຊີມັງ. ແທນທີ່ຈະໄປສູ່ບ່ອນເຜົາສົບ ລາວຊ້ຳໄປສູ່ຈຸດຈົບຢູ່

ເຖົາເຜົາຈັ່ງຊັ້ນ, ແລ້ວຈະໃຫ້ຂ້ອຍໄປໄວ້ອາໄລ ແລະ ກ່າວອຳລາລາວຢູ່ໃສ. ຂ້ອຍຄິດບໍ່ອອກຈັກຫນ່ອຍເລີຍວ່າ ລາວຈະຖືກນຳໄປຝັງຢູ່ໃສ ແທ້, ຢູ່ຕາເວັນອອກ ຫລື ຕາເວັນຕົກ, ຢູ່ໄກ ຫລື ຢູ່ໃກ້, ບໍ່ມີທາງຮູ້ໄດ້ ເລີຍ. ດັ່ງນີ້ແຫລະ ເປັນຫຍັງຂ້ອຍຈຶ່ງຢາກໃຫ້ເຈົ້າບອກມາໃຫ້ຮູ້ແດ່. ກໍາວ່າເຈົ້າເປັນກຳມະກອນ ເຈົ້າຄືຊິຕອບຂ້ອຍແມ່ນຕວ່າ ? ແລະ ເພື່ອບອກເຈົ້າວ່າ ໄດ້ຮັບນັ້ນ ຂ້ອຍຈະສົ່ງເສດຜ້າຈາກເສື້ອເກົ່າຂອງລາວໄປໃຫ້ເບີ - ນີ້ແມ່ນແລ້ວ ຄືເສດຜ້າທີ່ໃຊ້ຫໍ່ຈົດຫມາຍສະບັບນີ້. ຝຸ່ນລະອອງຈາກຫີນກ້ອນນັ້ນ, ຢາດເຫື່ອຈາກຮ່າງຄີງຂອງລາວ - ທັງຫມົດນັ້ນແຫລະ ໄປພ້ອມກັບເສດຜ້າຕ່ອນນີ້. ເສດຜ້າຄືສິ່ງທັງຫມົດ ທີ່ເຫລືອມາຈາກເສື້ອ ຊຶ່ງລາວເຄີຍນຸ່ງ ແລ້ວໂອບກອດຂ້ອຍ - ໂທ່... ຈັ່ງແມ່ນລາວກອດຂ້ອຍຮັດອີ່ຫລີ !"

"ຂໍໃຫ້ເຈົ້າເຮັດແນວນີ້ໃຫ້ຂ້ອຍແດ່ ໄດ້ບໍ່ ? ຂ້ອຍຮູ້ວ່າມັນເປັນວຽກຫຍຸ້ງຫລາຍເຕີບ, ແຕ່ຂໍໃຫ້ບອກຂ້ອຍແດ່ ກ່ຽວກັບວັນເວລາທີ່ຊິມັງຖືກນຳໄປໃຊ້ຢູ່ສະຖານທີ່ແຫ່ງໃດ, ຂໍໃຫ້ບອກທີ່ຢູ່ລະອຽດລັກໆ - ແລ້ວກໍບອກຊື່ເຈົ້າເອງ, ແລະ ເຈົ້າກໍຄົງຈະເອົາໃຈໃສ່ອີ່ຫລີ ແມ່ນຕວ່ານໍ້ ? ລາກ່ອນເດີ.

x x x

ສຽງເດັກນ້ອຍດັງເປັນແຊວໆຢູ່. ມັດຊຸໂດະ ໂຢຊິໂຊະ ເສືອດຕາເບິ່ງຊື່ ແລະ ທີ່ຢູ່ໃນຕອນທ້າຍຂອງຈົດຫມາຍ ແລ້ວກໍຍົກຈອກເຫລົ້າກີນອຶກລົງທ້ອງ.

"ກູຊິດຶກເຫລົ້າໃຫ້ເມົາແປ້ເວີ້ຍ ! " ເອົາຮ້ອງຂຶ້ນດັງໆ. "ແລ້ວກູຊິຟາດທຸກຢ່າງໃຫ້ມັນມຸ່ນອັບຍັບ, ມີຮອດໃສມຸ່ນຮອດຫັ້ນ ! "

"ເອົາເລີຍ !" ເມຍວ່າ "ຫາກິນພໍແຕ່ໃຫ້ເມົາຊັ້ນຫວະ, ແລ້ວລູກເດ້ ຊິກິນຫຍັງ ?"

ເອົາຈ້ອງເບິ່ງທ້ອງປຸ້ງຂອງເມຍ ແລ້ວຈຶ່ງຄຶດສະເດືອກວ່າ ມີລູກຄົນທີເຈັດ.

# ໃນກາງເມືອງ

ໂດຍ ***ຣາຍ່ານິ ຟູມິໂກະ***

ບ່າຍມື້ນັ້ນ ລົມພັດແຮງພໍສົມຄວນ ນາງຣີໂອ ເປັກົງ, ຍ່າງ ໄວໆ ຟ້າວໆ ເລາະໄປຕາມກະຫນົບທາງເບື້ອງມີແສງແດດອ່ອນໆ ສາດ ສ່ອງໃສ່ຫລັງຄາສີແດງຂອງເຮືອນຕຶກແກວ ນາງຫລຽວຊ້າຍ ຫລຽວ ຂວາ ດ້ວຍຄວາມສົງໄສ ແນມເບິ່ງເຮືອນຕຶກ ລົດໂອໂຕທີ່ຈອດຢູ່ ແລະ ຊາກເພພັງບ່ອນກົ້ກລະເບີດ ທີ່ກະແຈກກະຈາຍຢູ່ໃຈກາງ ເມືອງໂຕກຽວ.

ມາຮອດບ່ອນຫນຶ່ງ ຊຶ່ງມີຮົ້ວໄມ້ເຕ້ຍລ້ອມກັນໄວ້ ຣີໂອ ແນມ ເຂົ້າໄປເຫັນກອງເສດເຫລັກເຈີ້ນເທີ້ນຢູ່ ແລະ ຢູ່ບໍ່ໃກ້ບໍ່ໄກ ມີຕູບ ນ້ອຍຫລັງຫນຶ່ງ ບານປະຕູເປັນແວ່ນແກ້ວ ແປວໄຟໃນເຕົາລຸກວີ້ບໆ ນາງໄດ້ຍິນຮອດສຽງໄມ້ຟືນແຕກດັງ ເປ໊າະ ແປ໊ະ ໆ.

ຊາຍຫນຸ່ມຄົນຫນຶ່ງ ມີຜ້າຂົນຫນູສີແດງມັດຄຽນຫົວ ຢືນຢູ່ຕໍ່ ຫນ້າຕູບນ້ອຍ. ມີແນວໃດແນວຫນຶ່ງໃນຊາຍຄົນນີ້ບອກວ່າເຂົາໃຈດີ, ຣີໂອ ຮີບໂຮມຄວາມກ້າຫານ ແລ້ວຮ້ອງໃສ່ວ່າ :


1961

" ໃບຊາເດີ້ , ມີໃບຊາຂາຍ , ຢາກຊື້ແດ່ບໍ່ ? "

" ຊາຊັ້ນຫວະ ? " ຊາຍຜູ້ນັ້ນຖາມຄືນ .

" ເຈົ້າ " ຣິໂອ ຕອບທັງຍິ້ມຫລ່າ " ໃບຊາຈາກ ຊິຊິວກະ "

ນາງຍ່າງຜ່ານປ່ອງປະຕູຮົ້ວ ບ່ອນເຮັດໄວ້ເປັນບ່ອນເຂົ້າອອກ ພໍໄປໃກ້ຕູບກໍວາງກົງເປົ້ລົງກັບພື້ນ. ແນມເຂົ້າໄປທາງໃນເຫັນກອງໄຟລຸກຮຸ່ງຢູ່ໃນເຕົາເຫລັກ ມີຫມໍ້ກາທອງເຫລືອງ ຫ້ອຍຢ່ອນລົງຈາກຂາຕັ້ງ ນ້ຳກຳລັງຟົດອອກອາຍທ່ວນ ໆ.

" ຂ້ອຍຂໍເຂົ້າໄປຜີງໄຟໃກ້ໆ ເຕົາເຈົ້າຈັກຫນ້ອຍໄດ້ບໍ່ ? " ຣິໂອ ເວົ້າຂຶ້ນ " ຢູ່ນອກຫນາວຫລາຍ ຂ້ອຍຍ່າງມາຕັ້ງຫລາຍຫລັກແລ້ວ "

" ໄດ້ແທ້ລະນໍ້ " ເຂົາອອກປາກອະນຸຍາດ "ອັດປະຕູສາ ແລ້ວເຂົ້າໄປຜີງໄຟຢູ່ໃນພຸ້ນ. " ເຂົາຊີ້ມືໃສ່ແປ້ນມ້າເຕ້ຍ ຊຶ່ງເປັນເຄື່ອງໃຊ້ອັນດຽວໃນເຮືອນ ສ່ວນໂຕເຂົາເອງໄປນັ່ງກະໂລ່ງເປົ່າຢູ່ແຈຫ້ອງ. ຣິໂອ ລັງເລຢູ່ຄາວຫນຶ່ງ ແລ້ວກໍດຶງກົງເປົ້ເຂົ້າມາໃນຫ້ອງນຳ ນັ່ງຍ່ອງຍໍ້ລົງຕໍ່ຫນ້າເຕົາ ເດ່ມືຂາງໄຟ.

" ນັ່ງເທິງແປ້ນມ້າສະບາຍກວ່າໃດ່ " ຊາຍຫນຸ່ມເວົ້າທັງເສືອດຕາແນມເບິ່ງຫນ້າງາມເຕາະເລາະກັບເຄື່ອງນຸ່ງເກົ່າໆ ຂອງ ນາງ ບັດນີ້ໃບຫນ້າງາມນັ້ນແດງເຮື່ອຂຶ້ນ ເພາະໄດ້ຮັບຄວາມອົບອຸ່ນ.

" ເຈົ້າຄືຊິບໍ່ຍ່າງເລາະຂາຍໃບຊາແບບນີ້ທຸກມື້ໆ ຕີ້ເນາະ ? "

" ໂອ້... ກະແນວນີ້ແລ້ວ... ຂ້ອຍຫາຢູ່ຫາກິນແບບນີ້ເດ້ " ຣິໂອ ຕອບ " ນີ້ຄືນບອກວ່າ ແກວນີ້ພໍຊື້ພໍຂາຍໄດ້ ຂ້ອຍກໍເລີຍມາຍ່າງ ເລາະຢູ່ແຕ່ເຊົ້າໆ ພຸ້ນ ປານນັ້ນຍັງໄດ້ຂາຍຊາແຕ່ຫໍ່ດຽວຫນຶ່ງ. ຂ້ອຍວ່າຊິເມືອແລ້ວລະ ແຕ່ຄຶດວ່າ ຊິພັກກິນເຂົ້າທ່ຽງຢູ່ບ່ອນໃດບ່ອນຫນຶ່ງກ່ອນ "

" ຊັ້ນກໍກິນຢູ່ຫນີ້ເລີຍເທາະແມ້ ... ຕາມສະບາຍໂລດເດີ້ " ຊາຍຫນຸ່ມຟ້າວເຊີນ " ແລ້ວກໍຢ່າໄປຫ່ວງມັນຫລາຍ ເລື່ອງບໍ່ໄດ້ຂາຍຊາຫັ້ນນາ " ເຂົາເວົ້າຕື່ມຍິ້ມໆ " ຄົນເຮົາມັນກໍມີມື້ຮ້າຍ ມື້ດີຈັ່ງຊີ້ລະ ມື້ອື່ນເຈົ້າອາດຊິໂຊກດີກໍໄດ້ ".

ນ້ຳໃນຫມໍ້ກາຟົດດັງຟີ່ໆ ຂະນະທີ່ເຈົ້າຂອງເຮືອນຫັນໄປປິດຫມໍ້ອອກຈາກຂໍຫ້ອຍ ຣິໂອ ກໍສວຍໂອກາດເສືອດແສງຕາເບິ່ງໄປມາອ້ອມໂຕນັບແຕ່ໄມ້ເພດານ ທີ່ມີຂີ້ຄວັນໄຟຈັບດຳເປິເປື້ອນ, ກະດານດຳແຜ່ນຫນຶ່ງແຂວນຢູ່ປ່ອງຢ້ຽມ, ຮ້ານພະ ມີຕົ້ນຊາກາກີປູກໃສ່ກົ່ງຕັ້ງວາງຢູ່.

ຊາຍຫນຸ່ມຫັນໄປຢິບເອົາທໍ່ເຈ້ຍຈາກໂຕ໊ະມາໄຂອອກ ມີປາທະເລຕ່ອນໃຫຍ່ຢູ່ໃນນັ້ນ. ຄາວຫນຶ່ງກິ່ນປີ້ງປາກໍລອຍກຸ້ມຂຶ້ນທົ່ວຫ້ອງ.

" ມາແມ້ " ເຂົາອອກປາກເອີ້ນ " ມາກິນຫຍັງນຳກັນຈັກຫນ້ອຍກ່ອນ " ຣິໂອ ຟ້າວຈົກເອົາທໍ່ເຂົ້າຂອງນາງອອກມາຈາກກົ່ງ ເປ້ແລ້ວນັ່ງລົງແປ້ນມ້າ.

" ເລາະຂາຍເຄື່ອງແບບນີ້ ຄືຊິບໍ່ມ່ວນປານໃດດອກເນາະ ! " ຊາຍຫນຸ່ມຊວນລົມຂຶ້ນ ທັງພິກປາທີ່ວາງຢູ່ເທິງເຫລັກປີ້ງ " ເວົ້າໃຫ້ຟັງເບິ່ງຊາທໍ່ຫນຶ່ງເຈົ້າຂາຍໄດ້ຫລາຍທໍ່ໃດ ? "

" ໄດ້ຈັກຮ້ອຍຫ້າສິບຫາຫົກສິບເຢັນນີ້ລະ ແຕ່ລາງເທື່ອມັນກໍມີຂີ້ເຫຍື້ອປົນຢູ່ ຄັນເອົາແນວແພງແດ່ ກໍຂາຍບໍ່ໄດ້ "

ທໍ່ເຂົ້າຂອງ ຣິໂອ ມີປານ້ອຍໆ ສອງໂຕ ກັບເຂົ້າບາກເລຕົ້ມ ແລະກົ່ວເຫລືອງດອງສອງສາມຕ່ອນ ນາງລົງມືກິນ.

" ບ້ານເຈົ້າຢູ່ໃສ ? " ຊາຍຫນຸ່ມຖາມຂຶ້ນ .

" ຢູ່ ຊີຕະຢາ ພຸ້ນນະ , ເວົ້າແທ້ແລ້ວ ຂ້ອຍບໍ່ຮູ້ຈັກ ໂຕກຮວ ຜູ້ທີ່ໃດເລີຍ ຫາກໍມາຢູ່ໄດ້ບໍ່ທີ່ໃດອາທິດນີ້ເອງ ເຊົ່າຢູ່ກັບຫມູ່ຜູ້ຫນຶ່ງໄປກ່ອນ ຈົນກວ່າຊິຫາບ່ອນຢູ່ໃຫມ່ໄດ້ . "

ປາປີ້ງສຸກດີແລ້ວ ຊາຍຫນຸ່ມເອົາມີດປາດແບ່ງອອກເປັນສອງຕ່ອນ ແລ້ວຢິບໃຫ້ ຣິໂອ ຕ່ອນຫນຶ່ງ ທັງຕັກເຂົ້າຫຸງກັບມັນຕົ້ມຢູ່ກາດໃຫ້ນຳ ຣິໂອ ຍິ້ມ ກົ້ມຫົວຂອບໃຈ ແລ້ວຈຶ່ງຈົກເອົາຊາທີ່ຫນຶ່ງອອກມາຈາກກົງເປ້ໄຂທີ່ອອກແລ້ວຢິບໃບຊາວາງໃສ່ເຈ້ຍເຊັດມື.

" ເອົາໃສ່ຫມໍ້ກາແດ່ ! " ນາງເດໃຫ້ ແຕ່ຊາຍຫນຸ່ມແກວ່ງຫົວທັງຍິ້ມເຜີຍແຂ້ວຂາວ.

" ໂອ ... ຢ່າແຫລະ ມັນແພງໂພດ "

ຣິໂອ ດຶງຝາຫມໍ້ກາອອກ ແລ້ວເທໃບຊາລົງໃສ່ ກ່ອນທີ່ຝ່າຍຊາຍຈະທັນຫ້າມ . ເຂົາເລີຍໄດ້ແຕ່ຫົວ ແລະ ລຸກໄປຢິບຈອກຊາມາແຕ່ຕູ້ວາງເຄື່ອງ.

" ແລ້ວຜົວເຈົ້າເດ້ລະ ໄປໃສ ? " ເຂົາຖາມເມື່ອວາງຈອກຊາລົງເທິງກະໂລ່ງເປົ່າ . " ເຈົ້າມີຄອບຄົວແລ້ວແມ່ນບໍ່ ? "

" ເຈົ້າ ... ເຈົ້າແມ່ນແລ້ວ ແຕ່ຜົວຂ້ອຍຍັງຢູ່ ໄຊບີເຣຍພຸ້ນ ! ຍ້ອນແນວນີ້ແລ້ວ ຂ້ອຍຈຶ່ງຕ້ອງຫາຢູ່ຫາກິນເອງ . "

ຄວາມຄິດຄຳນຶງຂອງ ຣິໂອ ບິນເຈີດໄປຫາຜົວ ຊຶ່ງນາງບໍ່ໄດ້ຂ່າວມາຮອດຫົກປີແລ້ວ... ນັບມື້ຄືວ່າຍິ່ງຢູ່ຫ່າງໄກອອກໄປເລື້ອຍໆ ແລະບັດນີ້ ນາງຕ້ອງໃຊ້ຄວາມພະຍາຍາມສົມຄວນ ເພື່ອຈື່ຈຳໃບຫນ້າຂອງເຂົາ ຫລື ນ້ຳສຽງອັນລົ້ງຫູຂອງເຂົາ. ທຸກເຊົ້ານາງຕື່ນຂຶ້ນມາດ້ວຍຄວາມຮູ້ສຶກປ່ຽວພອຍ ແລະ ໄຮ້ຄວາມຫວັງ ບາງເທື່ອ ຣິໂອ ຄຶດໄປວ່າ

ຜົວຂອງນາງຕາຍໜາວຢູ່ໃນ ໄຊບີເຣຍ ເມືອງນ້ຳ ກ້ອນ... ເປັນເສົາ ນ້ຳກ້ອນຂາວ ຫລື ບໍ່ກໍເປັນໜມອກກ້າມໄປຊື່ໆ ແລ້ວ. ບໍ່ມີໃຜເວົ້າຮອດ ເສິກສົງຄາມອີກແລ້ວ ແລະ ນາງເອງກໍ່ຮູ້ສຶກອັບອາຍ ທີ່ຊິໃຫ້ ໃຜຮູ້ວ່າຜົວຕົນຍັງຕົກເປັນຊະເລີຍຢູ່.

" ເປັນເລື່ອງແປກເນາະ ! " ຊາຍໜຸ່ມເວົ້າຂຶ້ນ " ຂ້ອຍເອງກໍ ເຄີຍຢູ່ ໄຊບີເຣຍ ໃດ໋ ຕັດໄມ້ຢູ່ສາມປີພຸ້ນ ໃກ້ໆແມ່ນ້ຳ ອາມູຣ, ດົ້ນຮົນ ໄດ້ກັບມາບ້ານປີກາຍນີ້ເອງ. ຊັ້ນລະ ຄົນເຮົາກໍມີບາດເຄາະບາດໂຊກ ຜົວເຈົ້າຄືຊິກຶກໜັກແດ່ມັນກໍເລີຍຕົກມາໃສ່ຮອດເຈົ້ານຳ "

" ຕ້າຍ ແມ່ນແທ້ຫວະ ວ່າເຈົ້າກໍເຄີຍໄປ ໄຊບີເຣຍ ມາ ! ເບິ່ງ ເຈົ້າຄືບໍ່ຕ່າງຫຍັງເລີຍ . "

ຣີໂອ ແນມເບິ່ງເຂົາຂະນະມ້ຽນຫໍ່ເຂົ້າຄືນ ມີຫຍັງງ່າຍໆ ເປັນ ກັນເອງຢູ່ໃນໂຕຂອງເຂົາ ເຮັດໃຫ້ນາງຢາກເວົ້າຢາກລົມນຳຢ່າງ ເປີດເຜີຍ ບໍ່ຄືເວລານາງເວົ້າກັບຄົນ ຜູ້ມີການສຶກສາສ່ວນໃຫຍ່.

" ມີລູກຈັກຄົນລະ ? " ເຂົາຖາມຕໍ່

" ມີລູກຊາຍຜູ້ໜຶ່ງ ຫົກປີແລ້ວ, ມັນພໍເຂົ້າໂຮງຮຽນແລ້ວ ແຕ່ຂ້ອຍເອົາມັນໄປຈົດຊື່ເຂົ້າຢູ່ໂຕກຽວບໍ່ໄດ້, ຈັ່ງແມ່ນພວກພະນັກ ງານເພິ່ນຊ່າງເຮັດໃຫ້ປະຊາຊົນຫຍຸ້ງຍາກເນາະ ! " ຊາຍໜຸ່ມດຶງ ຜ້າຄຽນຫົວອອກມາເຊັດຈອກຊາສອງໜ່ວຍ ຈາກນັ້ນ ຈຶ່ງຫຍິ້ນນ້ຳ ຊາຮ້ອນໆ ໃສ່.

" ອື... ແຊບດີຢູ່ໃດ໋ຊານີ້ " ເຂົາເວົ້າຫລັງຈາກກືນລົງຄໍບາດ ແຮງໆ .

" ເຈົ້າມັກຢູ່ບໍ ? ມັນບໍ່ແມ່ນຊາຊັ້ນຍອດດອກ ລາຄາມີແຕ່ຫໍ່ລະຮ້ອຍເຢັນ... ອື່ມ ຄືເຈົ້າວ່ານັ້ ແຊບພໍກິນຢູ່ "

ຂະນະທີ່ພວກເຂົາລົມກັນຢູ່ນັ້ນ ລົມກໍພັດແຮງຂຶ້ນ ທັ່ງຕຳໃສ່ສັງກະສີຫລັງຄາຕູບ. ຣິໂອ ເສືອດຕາໄປຫາງປ່ອງຢ້ຽມ ທຳທ່າເຂັ້ມແຂງເພື່ອຍ່າງທາງໄກເມືອເຮືອນ.

" ຂ້ອຍຊິເອົາຊາເຈົ້າໄວ້ຈັກຫນ້ອຍ, ຈັກຫໍ່ເຄິ່ງ " ຊາຍຫນຸ່ມ. ບອກນາງ ພ້ອມທັງດຶງເງິນໃບລະຮ້ອຍເຢັນອາວຍັບຍໍ່ ອອກຈາກກົງໂສ້ງ.

" ບໍ່ຕ້ອງຈ່າຍດອກ, ຂ້ອຍເອົາໃຫ້ຊື່ໆ " ຣິໂອ ຟ້າເວົ້າຂຶ້ນ

" ບໍ່ໄດ້ ບໍ່ໄດ້ ຂອງຊື້ຂອງຂາຍຕ້ອງຈ່າຍລະນໍ້ ! " ເຂົາເວົ້າທັງຍັດເງິນໃສ່ມືນາງ " ຊັ້ນລະເນາະ , ເທື່ອຫນ້າກໍ່າວ່າເຈົ້າໄດ້ກາຍມາທາງນີ້ ກໍແວ່ເຂົ້າມາລົມກັນແດ່ "

" ເຈົ້າ , ຂອບໃຈແລ້ວ" ຣິໂອ ຕອບທັງເສືອດຕາເບິ່ງທົ່ວຫ້ອງນ້ອຍຂອງຕູບ " ແຕ່ວ່າ ເຈົ້າບໍ່ໄດ້ຢູ່ຫນີ້ ເປັນປະຈຳຕວ່າ ? "

" ຢູ່ລະບໍ ຢູ່ນີ້ແລ້ວ ຂ້ອຍເຝົ້າກອງເຫລັກທັ້ນ ແລະ ຊ່ວຍເຂົາຂົນຂຶ້ນລົດຂົນສົ່ງ, ຂ້ອຍຢູ່ຫນີ້ເກືອບຕະຫລອດເວລາແຫລະ ! "

ເຂົາໄຂປະຕູກ້ອງຮ້ານພະເຜີຍໃຫ້ເຫັນຫ້ອງນ້ອຍໆ ມີເສື່ອນອນປູໄວ້ຮຽບຮ້ອຍບ່ອນຫນຶ່ງ ຣິໂອ ສັງເກດເຫັນແຜ່ນຮູບສີນັກສະແດງຍິງນາງຢາມາດາ ອິຊຸສູ ຕິດຢູ່ທາງດ້ານຫລັງຂອງບານປະຕູ.

" ຂ້ອຍກໍວ່າແນວນັ້ນລະ " ທະສຶຣູຊິ ເວົ້າຫົວຫົວ " ແຕ່ກໍຢ່າ ມັນເຍີ ເຮັດຄືວ່ານັ້ນລະ... ໄປກັນເທາະ ! "

ເຂົາປົດເສື້ອຢາມຈາກຂໍຫ້ອຍມາປົກຫົວໃຫ້ ຣິອູກິຊິ ແລ້ວພາກັນແລ່ນຕາກຝົນໄປເຂົ້າໂຮງສາຍຮູບເງົາໃກ້ໆ ບ່ອນຫນຶ່ງ. ບໍ່ມີຕັ່ງນັ່ງແລ້ວ ເລີຍໄດ້ພາກັນຍືນເອົາ , ບໍ່ດົນ ເດັກນ້ອຍກໍເຫງົານອນ ແລະຫລັບໃສ່ບ່າຂອງ ທະສຶຣູຊິ . ປາກົດວ່າ ອາກາດຮ້ອນເອົາຂຶ້ນເລື້ອຍໆ ສຽງຝົນຫນ່າໃສ່ຫລັງຄາດັງບໍ່ຂາດສາຍ .

ເມື່ອອອກມາຈາກໂຮງຮູບເງົານັ້ນ ເປັນເວລາເກືອບມືດແລ້ວ ພວກເຂົາຟ້າວຍ່າງຕາກຝົນ ທີ່ກຸອກເຫລົງມາຢ່າງແຮງ ສຽງຂອງມັນດັງຊວ່າງໆ ພໍປານໃບຕ້ອງກ້ວຍກືກລົມຕີ . ໃນທີ່ສຸດ ກໍພໍ້ໂຮງແຮມນ້ອຍໆ ຫລັງຫນຶ່ງ. ເຈົ້າຂອງໂຮງແຮມພາເຂົ້າໄປພັກໃນຫ້ອງປູຜ້າພົມຢູ່ສຸດຮ່ອມທາງຍ່າງ. ຣິໂອ ກອດກົງຕີນປຽກອອກ, ເດັກນ້ອຍນັ່ງລົງອີງຝາແຈຫ້ອງບໍ່ດົນກໍລື້ມລົງຫລັບຕໍ່.

" ເອົ້າ ເອົານີ້ຫມູບທົວກ່ອນ " ທະສຶຣູຊິ ເວົ້າທັງຢິບເອົາເບາະເກົ້າຢູ່ຕັ່ງນັ່ງມາຢັດຮອງທົວໃຫ້ເດັກນ້ອຍ.

ນ້ຳຝົນໄຫລລົ້ນຮາງລິນ ຢູ່ເທິງຂອບປ່ອງຢ້ຽມ ຕົກລົງໃສ່ເດີ່ນບ້ານບໍ່ຂາດສາຍ ສຽງດັງພໍປາຍຕາຄນ້ຳເທິງພູໃນຊົນນະບົດ ກວ້າງໄກ.

ທະສຶຣູຊິ ດຶງແພມົນຜືນຫນຶ່ງອອກມາຈາກກົງໂສ້ງ ແລະ ເຊັດຜົມອັບປຽກຊຸ່ມຂອງ ຣິໂອ ນາງແນມເບິ່ງເຂົາດ້ວຍຄວາມຮູ້ສຶກເປັນສຸກຢ່າງບອກບໍ່ຖືກ. ມັນຄືກັບວ່າ ນ້ຳຝົນໄດ້ຊະລ້າງປັດເປົ່າຄວາມປ່ຽວພອຍ ວຽບເຫງົາ ທີ່ທັບກົມອັ່ງແຫນ້ນຢູ່ໃນຕົວຂອງນາງມາເປັນເວລາຫລາຍປີນັ້ນ ໄປນຳນ້ຳແລ້ວ !

ຣິໂອ ອອກໄປເບິ່ງວ່າ ຈະພໍສັ່ງຂອງກິນໄດ້ແດ່ບໍ່ ນາງພໍ້ສາວໃຊ້ໃນຊຸດເຄື່ອງນຸ່ງແບບຕາເວັນຕົກ ຍໍຖາດນໍ້າຊາມາໃຫ້ ຈຶ່ງສັ່ງຫມີ່ມາຕື່ມສອງກ້ວຍ. ຈາກນັ້ນ ນາງກັບທະສືຣູຊິ ກໍນັ່ງດື່ມນໍ້າຊາ ນຳກັນ. ທຳອິດ ທັງສອງນັ່ງຫັນຫນ້າໃສ່ກັນ ຢູ່ຄົນລະຟາກເຕົາໄຟທີ່ ມອດແລ້ວຕໍ່ມາ ທະສືຣູຊິ ຍ້າຍມານັ່ງລົງພື້ນຂ້າງໆນາງ ເອົາຫລັງເອື່ອຍຝາ ທັງຄູ່ແນມເບິ່ງທ້ອງຟ້າທີ່ມືດຄຶ້ມດ້ວຍເມກຝົນ .

" ຣິໂອ ເຈົ້າອາຍຸທໍ່ໃດແລ້ວ " ທະສືຣູຊິຖາມຂຶ້ນ " ຂ້ອຍເດົາວ່າບໍ່ກາຍຊາວຫ້າແມ່ນບໍ່ ? "

ຣິໂອຫົວ " ສິງໄສວ່າ ບໍ່ກີ່ກແລ້ວລະ ທະສືຣູຊິ ຂ້ອຍເຖົ້າແລ້ວ ເດ້ຕັ້ງຊາວແປດແລ້ວນ່າ . "

" ເປັນເອື້ອຍຂ້ອຍປີຫນຶ່ງພໍດີ ! "

" ຕ້າຍ ແທ້ໆ ຫວະ ? " ຣິໂອ ອຸທານ " ຂ້ອຍຄຶດວ່າຢ່າງຫນ້ອຍເຈົ້າຕ້ອງສາມສິບແລ້ວ . "

ນາງຈຶ່ງເບິ່ງຫນ້າເຂົາກົ່ງໆ ເຫັນແກ່ນຕາສີເຂັ້ມແຝງແວວອ່ອນໂຍນ ຢູ່ກ້ອງວົງຄິ້ວດົກດຳ , ປາກົດວ່າຊາຍຫນຸ່ມຫນ້າແດງຮຶນຂຶ້ນເລັກນ້ອຍ ເຂົາກົ້ມໄປກອດກົງຕີນຊຸ່ມໆ ອອກ.

ຝົນຍັງຄົງຕົກບໍ່ເຊົາ , ສາວໃຊ້ເອົາເສັ້ນຫມີ່ເຢັນກັບແກງມາ ໃຫ້. ຣິໂອ ປຸກລູກຊາຍຂຶ້ນມາກິນແກງ ເດັກນ້ອຍຊົດແກງ ທັງໆທີ່ເຫງົານອນຢູ່.

" ຣິໂອ ເບິ່ງແມ້ ! " ທະສືຣູຊິ ເວົ້າຂຶ້ນ " ພວກເຮົາຄືຈະຄ້າງຄືນຢູ່ໂຮງແຮມນີ້ນຳກັນສາແລ້ວລະ, ຝົນຕົກແຮງແນວນີ້ ເຈົ້າຊິເມືອໄດ້ບໍ ? ".

" ຂ້ອຍກໍວ່າແນວນັ້ນລະ " ຣີໂອ ເຫັນດີນຳ .

ທະສືຣູຊິ ອອກໄປນອກຄາວໜຶ່ງ ກໍກັບເຂົ້າມາ ພ້ອມເສື່ອ ນອນ ແລະ ກົງຜ້າຫົ່ມ ເຂົາຈັດແຈງປູເສື່ອລົງຈົນເກືອບເຕັມຫ້ອງ ຣີໂອ ແປງບ່ອນເອົາລູກຊາຍເຂົ້ານອນໃນກົງຜ້າຫົ່ມ ເດັກນ້ອຍນອນຫລັບ ແຈບຈົມ. ຈາກນັ້ນນາງຈຶ່ງມອດໄຟ. ນາງກອດເຄື່ອງນຸ່ງຊຸດນອກອອກ ແລ້ວເຂົ້ານອນໃນກົງຜ້າຫົ່ມ . ນາງໄດ້ຍິນສຽງ ທະສືຣູຊິ ແປງບ່ອນ ນອນດັງກຸກໆ ກັກໆ ຢູ່ສົ້ນຫ້ອງອີກເບື້ອງໜຶ່ງ .

" ຄົນຢູ່ຫນີ້ຄືຊິຄິດວ່າ ພວກເຮົາເປັນຄູ່ຜົວເມຍກັນເນາະ " ທະສືຣູ ຊິ ເວົ້າຂຶ້ນ ຫລັງຈາກມິດໄປຄາວໜຶ່ງ.

" ຢ້ານແມ່ນແນວນັ້ນລະ , ພວກເຮົາບໍ່ດີເລີຍ ເຮັດໃຫ້ຄົນເຂົ້າ ໃຈຜິດແນວນີ້ . "

ນາງຕອບ ເວົ້າຫລິ້ນໃຫ້ເປັນຕາຫົວ ແຕ່ໃນຂະນະດຽວກັນຕົນ ເອງຊ້ຳມານອນເກືອບປະເປືອຍຢູ່ໃນກົງຜ້າຫົ່ມແນວນີ້ ກໍເລີຍຮູ້ສຶກ ຜິດຄິດອາຍຂຶ້ນມາແທນ . ເປັນເທື່ອທຳອິດທີ່ນາງຮູ້ສຶກຄິດຮອດຜົວ ຫລາຍ ຕະຫລອດເວລາຫລາຍປີທີ່ຜ່ານໄປ . ນາງຄິດຫາເຫດຜົນມາ ອ້າງວ່າ ເປັນຍ້ອນຝົນທ່ານັ້ນດອກ ຈຶ່ງໄດ້ມານອນແຮມຄືນແນວນີ້ ຈາກນັ້ນ ຣີໂອ ກໍນອນຄຶດນັ້ນ ຄິດນີ້ໄປມ່ວນໆ ຈົນເຊືອບຫລັບໄປ.

ເມື່ອນາງຮູ້ເມື່ອຄີງຂຶ້ນມານັ້ນ ຟ້າຍັງມືດຢູ່ເລີຍ ນາງໄດ້ຍິນ ສຽງທະສືຣູຊິ ເອີ້ນຄ່ອຍໆ ມາແຕ່ແຈເບື້ອງເຂົານອນ ນາງຟ້າວລຸກ ຂຶ້ນນັ່ງ .

" ຣີໂອ ... ຣີໂອ ຂ້ອຍມາລົມກັບເຈົ້າຢູ່ໃກ້ໆ ໄດ້ບໍ່ ? "

" ບໍ່ ... ບໍ່ດີດອກ ທະສືຣູຊິ " ນາງຕອບ " ຂ້ອຍວ່າບໍ່ເຫມາະ

ປານໃດ " ສຽງຝົນຍັງດັງມາບໍ່ຂາດ ແຕ່ບໍ່ມີລົມແລ້ວ ນ້ຳຝົນຈາກ ຮາງລິນຕົກໃສ່ເດີ່ນບ້ານດັງຈ້ອກໆ . ຮີໂອ ປາກົດວ່າໄດ້ຍິນສຽງ ທະສືຮູຊິ ຫັນໃຈຄ່ອຍໆ .

" ນີ້ນ່າ ທະສືຮູຊິ " ນາງເວົ້າຂຶ້ນ ຫລັງຈາກມິດໄປຄາວໜຶ່ງ "ຂໍຖາມຫຍັງຈັກໜ້ອຍແດ່ ເຈົ້າເຄີຍມີເມຍແລ້ວຫວະ ? "

" ບໍ່ ດຽວນີ້ບໍ່ມີ ແຕ່ກ່ອນມີຢູ່ " ທະສືຮູຊິ ຕອບ

" ແປວ່າເຄີຍມີເນາະ ? "

" ເຈົ້າ , ແມ່ນລະ ເຄີຍມີຕອນກັບມາແຕ່ເສິກ ເມຍອ້ອຍໄປຢູ່ນຳຜູ້ໃໝ່ແລ້ວ ! "

" ຕ້າຍ ແລ້ວເຈົ້າບໍ່ຄຽດປານໄຟຫວະ ? "

" ຄຽດຫວະ ? ກະຄືຊິສົມຄວນແຫລະ ແຕ່ຊິເຮັດແນວໃດໄດ້ຈັ່ງໃດເຂົາກໍໄປແລ້ວ . "

ທັງສອງມິດໄປອີກ .

" ພວກເຮົາຊິລົມກັນເລື່ອງໃດດີຣີ ? " ຮີໂອ ຖາມຂຶ້ນ ທະສືຮູຊິ ຫົວ "ເອີ້ນໍ້ ຄືວ່າ ບໍ່ມີແນວຊິລົມປານໃດ ? ຂ້ອຍວ່າ ໜີ້ເຮົາບໍ່ແຊບປານໃດ ເຈົ້າວ່າບໍ່ ?

" ໂອະ ! ກໍບໍ່ລະເອີ້ຍ , ແນວນັ້ນຊິໄປເອີ້ນວ່າແຊບໄດ້ຈັ່ງໃດປານນັ້ນເອົາຕັ້ງກ້ວຍລະຮ້ອຍເຢັນພຸ້ນນ່າ ! "

" ຄັນ ຮີໂອ ກັບລູກ ມີຫ້ອງຢູ່ຕ່າງຫາກ ຄືຊິດີເນາະ ວ່າບໍ່ ? " ທະສືຮູຊິ ຕັ້ງຂໍ້ສັງເກດ .

" ໂອ້ ກະຊິຄັກລະບໍ້ ເຈົ້າຄິດວ່າຊິພໍຫາຫ້ອງເຊົ່າຢູ່ໃກ້ໆ ເຈົ້າ ໄດ້ບໍ່ ? ເວົ້າແທ້ໄດ໋ ຂ້ອຍຢາກຢູ່ໃກ້ໆ ເຮືອນເຈົ້າ ! "

" ຍາກແທ້ໆ , ທຸກມື້ນີ້ ຫາຫ້ອງເຊົ່າໃນເມືອງບໍ່ງ່າຍເລີຍ ຂ້ອຍຊິເບິ່ງໆ ໃຫ້ດອກ ແລ້ວຊິບອກເຈົ້າເອງ ຣິໂອ ເຈົ້ານີ້ຄັກແທ້ໆ ເນາະ ! "

" ຂ້ອຍນີ້ຫວະຄັກ ຢ່າເຍີ້ຍເທາະ ! " ຣິໂອ ເວົ້າຫົວໆຫົວ .

" ແທ້ໆ ໃດ ຄັກນ່າ ... ຄັກອີ່ຫລີ . "

ຣິໂອ ເອນຄີງລົງນອນ . ທັນທີທັນໃດນັ້ນ ນາງກໍຄຶດຢາກກອດທະສືຣູຊິ . ຢາກແນບຄີງໃສ່ກັບໂຕເຂົາ ນາງບໍ່ກ້າເວົ້າຫຍັງຕໍ່ ຢ້ານວ່າສຽງເວົ້າຈະທໍລະຍົດ ເຂົາຊິຈັບໄດ້ ນາງຫັນໃຈຢ່າງລຳບາກ ຮ່າງຄີງປາກົດວ່າ ສັ່ນສະທ້ານຂຶ້ນ . ສຽງລົດຍົນສິງຕອນເດິກຜ່ານປ່ອງຢ້ຽມໄປ .

" ພໍ່ແມ່ຂອງເຈົ້າໄປຢູ່ໃສເນາະ ? " ຄາວຫນຶ່ງນາງຈຶ່ງຖາມ ຂຶ້ນ

" ຢູ່ບ້ານນອກ ໃກ້ໆ ເມືອງ ຟູກຸໂອກາ . "

" ແຕ່ເຈົ້າມີເອື້ອຍຜູ້ຫນຶ່ງຢູ່ໂຕກຽວ ບໍ່ແມ່ນຫວະ ? "

" ແມ່ນແລ້ວ, ລາວຢູ່ຜູ້ດຽວ ຄືເຈົ້ານີ້ລະ ລ້ຽງລູກສອງຄົນ ມີຈັກຫຍິບຄັນຫນຶ່ງພໍຫາຢູ່ຫາກິນ , ຜົວລາວຕາຍຫລາຍປີແລ້ວ ຕັ້ງແຕ່ໄປເສິກຢູ່ຈີນພຸ້ນ ! "

ຣິໂອ ແນມອອກໄປທາງນອກປ່ອງຢ້ຽມ ແສງຮຸ່ງຂອງຍາມເຊົ້າກຳລັງປາກົດຕົວໃຫ້ເຫັນ ໃນທີ່ສຸດ ຄ່ຳຄືນທີ່ໄດ້ນອນຮ່ວມຫ້ອງ ກັນກໍຈະພົ້ນຜ່ານໄປ ແລ້ວນາງຮູ້ສຶກເສຍດາຍຢູ່ເລິກໆ ຄິດຢ່າງຫນຶ່ງນາງກໍຢາກໃຫ້ ທະສືຣູຊິ ເປັນຄົນບໍ່ຍອມງ່າຍໆ ແບບນີ້, ແນວ ໃດກໍຕາມນາງຈຳໃຈຄິດວ່າແບບນີ້ ແມ່ນດີທີ່ສຸດແລ້ວ , ຖ້າວ່າເຂົາເປັນຜູ້ຊາຍທີ່ນາງບໍ່ຮູ້ຈັກດີປານໃດ ນາງອາດຈະຍອມນອນກັບເຂົາງ່າຍໆ

ຢ່າງບໍ່ຄິດໜ້າຄິດຫລັງຫຍັງ ແຕ່ນີ້ແມ່ນ ທະສືຣູຊິ ... ມັນຕ້ອງຕ່າງໝູ່ແດ່ ຕ່າງຫລາຍສົມຄວນ.

" ຣິໂອ , ຂ້ອຍນອນບໍ່ຫລັບນ່າ " ເຂົາສົ່ງສຽງຊື່ມ ດັງອຸ່ມອີ່ມມາອີກ " ຂ້ອຍຂົ່ມຕາບໍ່ລົງເລີຍ , ຄືຊິແມ່ນຍ້ອນບໍ່ເຄີຍເລື່ອງແນວນີ້ ? "

" ເລື່ອງແນວນີ້ ... ເລື່ອງຫຍັງ ? "

" ກະ ເອີ້ ມານອນຮ່ວມຫ້ອງກັບຜູ້ສາວນີ້ເດ້ ! "

" ໂອ້ , ທະສືຣູ ... ຢ່າເວົ້າເດີ້ວ່າເຈົ້າບໍ່ເຄີຍມີຜູ້ສາວນະ ! "

" ກະເຄີຍຢູ່ ແຕ່ກັບພວກແມ່ຍິງຄືວ່ານັ້ນແລ້ວ . "

ຣິໂອ ຫົວ " ສຳລັບຜູ້ຊາຍ ແມ່ນເລື່ອງທຳມະດາເນາະ ຈັ່ງໃດກໍແປວ່າເຄີຍຢູ່ແລ້ວ . "

ນາງໄດ້ຍິນສຽງເຂົາເຫນັງແຮງໆ ແລ້ວໃນທັນໃດກໍຮູ້ສຶກວ່າທະສືຣູຊິ ມາບຽດຢູ່ຂ້າງຕົວນາງແລ້ວ ແລະ ພວມກົ້ມລົງມາໃສ່ . ຣິໂອໂຕແຂງ ບໍ່ເຫນັງ ແມ່ນແຕ່ຂະນະທີ່ຮູ້ສຶກວ່າມີອ້ອມແຂນຮັດໂຕໃບໜ້າຂອງເຂົາຕ່ຳລົງ ຈຸກັບໜ້າຂອງນາງ . ຕາທັງຄູ່ຂອງນາງມືນກວ້າງຢູ່ໃນຄວາມມືດ ສົ່ງປະກາຍຍິບຍັບ . ພິສົບຮ້ອນອຸ່ນຂອງຊາຍໜຸ່ມເນັ້ນແນບລົງໃສ່ພວງແກ້ມຂອງນາງ .

" ຣິໂອ ... ຣິໂອ ! "

" ມັນບໍ່ສົມຄວນໃດ໋, ຜົວຂ້ອຍຍັງຢູ່ " ນາງເວົ້າອຸ່ມໆ. ເວົ້າອອກໄປແລ້ວ ກໍເສຍໃຈນຳຄຳເວົ້ານັ້ນ.

ຂະນະທີ່ ທະສືຣູຊິ ກົ້ມຕົວລົງນັ້ນ ນາງເຫັນເງົາໜ້າຂອງເຂົາບັງແສງສະຫວ່າງຍາມຮຸ່ງເຊົ້າ. ທ່າກົ້ມຕ່ຳມາທາງໜ້າຂອງ

ເຂົາ ເບິ່ງຄືວ່າ ພວມນ້ອມກາຍສິ່ງໃດສິ່ງໜຶ່ງແກ່ພະເປັນເຈົ້າ.

ຣິໂອ ລັ່ງເລຢູ່ຄາວໜຶ່ງ ແລ້ວກໍຄ່ອຍໆ ຍົກແຂນທັງສອງຂຶ້ນໂອບກອດຄໍຂອງເຂົາ.

x x

x

ສອງມື້ຕໍ່ມາ ຣິໂອ ກໍພາລູກຊາຍມາຫາ ທະສືຣູຊິ ດ້ວຍຄວາມເບີກບານສົດໃສ ເມື່ອມາຮອດບໍລິເວນກຶກລະເບີດ ນາງຮູ້ສຶກປະຫລາດໃຈ ທີ່ບໍ່ເຫັນເຂົາຢືນຢູ່ຕໍ່ໜ້າຕູບນ້ອຍ ໂດຍມີຜ້າຄຽນຫົວສີແດງ ຄືເຄີຍເຫັນທຸກເທື່ອ . ທ້າວນ້ອຍ ຣິອູກິຊິ ແລ່ນອອກໜ້າ ລ່ວງເຂົ້າໄປເບິ່ງວ່າ ຜູ້ກ່ຽວຢູ່ເຮືອນບໍ່ ຄາວດຽວກໍອອກມາ .

" ມີໃຜບຸມາຢູ່ແມ່ ! " ທ້າວນ້ອຍບອກ .

ຣິໂອ ຕົກໃຈວາບ ນາງເລັ່ງບາດຕີນເຂົ້າໄປຫາຕູບ. ນາງເຫັນຄົນງານສອງຄົນພວມສົນລະວົນມ້ຽນເຄື່ອງຂອງ ຂອງທະສືຣູຊິ.

" ມີຫຍັງຫວາ ນາງ ? " ໜຶ່ງໃນສອງກາມຂຶ້ນທັງງວາກໜ້າມາເບິ່ງ .

" ຂ້ອຍມາຫາ ທະສືຣູຊິ "

" ໂອະ ເຈົ້າບໍ່ຮູ້ຫວະ ? ທະສືຣູຊິ ຕາຍແລ້ວເດ້ ມື້ວານນີ້ນ່າ"

" ຕາຍແລ້ວ ! " ນາງເວົ້າຊ້ຳ ຢາກເວົ້າຫຍັງຫລາຍກວ່າທັ້ນແຕ່ເວົ້າບໍ່ອອກ .

ນາງສັງເກດເຫັນ ທຽນໄຂເຫລັ້ມນ້ອຍ ໄຕ້ຮຸງຢູ່ເທິງຮ້ານບູຊາ ບັດນີ້ ນາງເຂົ້າໃຈໃນຄວາມຫມາຍອັນທັດທູໃຈຂອງມັນແລ້ວ !

" ເຈົ້າ " ຄົນງານເວົ້າຕໍ່ " ມື້ຄືນວານນີ້ຕອນແປດໂມງ . ລາວໄປນຳລົດຍົນສົ່ງກັບຫມູ່ຜູ້ຫນຶ່ງ ເອົາເຫລັກໄປສົ່ງຢູ່ ໂອມິຢະ ຂາກັບຕອນລ້ຽວເຂົ້າຂົວແຄບໆ ບ່ອນຫນຶ່ງລົດຂວ້ຳ ລາວກັບຜູ້ຂັບຕາຍກັບບ່ອນ. ມື້ນີ້ ເອື້ອຍລາວໄປ ໂອມິຢະ ກັບຄົນຂອງບໍລິສັດ ເພື່ອຈັດການເລື່ອງເຜົາ . "

ຣິໂອ ຢືນໂຕແຂງ ແສງຕາເລື່ອນລອຍໄປຂ້າງຫນ້າ ເບິ່ງຊາຍທັງສອງມ້ຽນເຄື່ອງຂອງ ທະສຶຣູຊິ ຂ້າງທຽນໄຂເທິງຮ້ານບູຊາ. ນາງເຫັນກິ່ງຊາສອງທໍ່ ທີ່ເຂົາຊື້ນຳນາງໃນມື້ທຳອິດທີ່ຮູ້ຈັກກັນ... ພຽງແຕ່ສອງອາທິດນັ້ນຫວະ ? ທໍ່ຫນຶ່ງບົກລົງເຄິ່ງຫນຶ່ງແລ້ວ ສ່ວນທໍ່ຫນຶ່ງຍັງບໍ່ທັນໄຂຊ້ຳ .

" ເຈົ້າຄືຊິເປັນຫມູ່ລາວເນາະ ນາງ ? ລາວຄົນຈົບໃດ໋ ທະສຶຣູຊິນີ້ບໍ່ຫນ້າຊິໄປໂອມິຢະ ນຳລົດເລີຍ ຫມໍຂັບລົດ ນັ້ນລະວ່າ ບໍ່ໄຄ່ສຳບາຍທະສຶຣູ ເລີຍອາສາໄປເປັນຫມູ່ຊ່ວຍຍົນເຄື່ອງລົງລົດ . ມັນຕັ້ງຮອດມື້ຮອດຍາມມັນແລ້ວ, ໄປເສີກຮອດ ໄຊບີເຣຍ ຍັງບໍ່ເປັນຫຍັງ ມາຕາຍຍ້ອນອຸບັດເຫດ ບໍ່ເປັນເລື່ອງແນວນີ້ . "

ກຳມະກອນຜູ້ຫນຶ່ງປົດຮູບກ່າຍຂອງ ຢາມາດະ ອິຊຸສູ ນັກສະແດງລະຄອນ ອອກຈາກບານປະຕູ ແລະ ປັດຂີ້ຝຸ່ນອອກ. ຣິໂອຢືນໃຈລອຍເບິ່ງເຄື່ອງຂອງ ທະສຶຣູຊິ ທີ່ວາງກອງກັນຢູ່ ເທິງພື້ນ ເຮືອນມີກາບ້ຳຫມໍ້ຂາງເກີບໂບກຢາງ, ເມື່ອນາງພາດແສງຕາ ເບິ່ງກະດານດຳຫ້ອຍຢູ່ຂ້າງປ່ອງຢ້ຽມ ຈຶ່ງເຫັນຕົວຫນັງສືຂຽນດ້ວຍສໍຂາວສີແດງ

ວ່າ " ຣິໂອ ຂ້ອຍຄອຍເຈົ້າ ຮອດບ່າຍສອງໂມງແລ້ວ ແລງໆ ຂ້ອຍຈຶ່ງ ຊິກັບເຂົ້າມາ "

ໂດຍບໍ່ຮູ້ສຶກຕົວ ຣິໂອ ກົ້ມຫົວຄຳນັບກຳມະກອນທັງສອງ ດຶງ ເອົາກົງເປ້ຂຶ້ນໃສ່ຫລັງ. ເມື່ອຈູງມືລູກຊາຍອອກຈາກຕູບມານັ້ນ ຣິໂອ ຮູ້ສຶກໂຕເບົາຍອງ ແຕ່ພໍຜ່ານບໍລິເວນກີກລະເບີດມາແລ້ວ ນ້ຳຕາ ອຸ່ນໆ ກໍລົ້ນໄຫລອອກມາຫລໍ່ເບົ້າຕາ.

" ນ້າບ່າວ ຜູ້ນັ້ນຕາຍຊັ້ນຫວະແມ່ ? "

" ອື ຕາຍແລ້ວລູກ "

" ເປັນຫຍັງຈຶ່ງຕາຍລະແມ່ ? "

" ຕົກນ້ຳ ນະລູກ ! "

ນ້ຳຕາໄຫລລົ້ນລົງອາບທັງສອງແກ້ມ ຢ່າງອົດກັ້ນໄວ້ບໍ່ຟັງ ນາງຢ່າງເລາະຊັດເຊໄປຕາມກະຫນົນໃນເມືອງ ຂ້າມຂົວໂກງ ຜ່ານ ນ້ຳຫ້ວຍ ຊູມິດາ ແລ້ວຍ່າງມຸ່ງຫນ້າໄປທາງເຫນືອ ລຽບຝັ່ງນ້ຳໄປ ຮອດຄຸ້ມ ຊິຮາຣິເກະ .

" ກ້າມີລູກ ກໍບໍ່ເປັນຫຍັງເດີ ຣິໂອ " ທະສືຣູຊິ ຊຶ່ມບອກນາງ ໃນຕອນຂ້ອນແຈ້ງມື້ນັ້ນຢູ່ ອາສາກູຊາ " ຂ້ອຍຊິຮັບຜິດຊອບເບິ່ງ ແຍງເຈົ້າ ບໍ່ວ່າຊິເປັນແນວໃດ " ເຂົາເວົ້າຕໍ່ " ຂ້ອຍກໍບໍ່ມີເງິນຫລາຍ ດອກ ແຕ່ກະຄືຊິພໍຊ່ອຍເຈົ້າໄດ້ເລັກໆ ນ້ອຍໆ. ຊິແບ່ງເງິນເດືອນໃຫ້ ເຈົ້າໃຊ້ເດືອນລະສອງພັນເຢັນ " ເຂົາພາລູກຊາຍໄປຮ້ານຄ້າ ທີ່ຂາຍ ສະເພາະສິນຄ້າຕ່າງປະເທດ ແລ້ວຊື້ຫມວກໃສ່ ເວລາຫລິ້ນເບສບອນ ທີ່ຂຽນຊື່ເດັກນ້ອຍໃສ່ນຳ ຈາກນັ້ນທັງສາມຄົນກໍຍ່າງລົມກັນໄປ ຢ່າງເບີກບານຕາມທາງລົດລາງ ບາງຄັ້ງກໍໂດດຂ້າມບວກນ້ຳຝົນທີ່

ກອກເຫລືອງຫວ່າງກາງຄືນ. ເມື່ອມາຮອດຮ້ານຂາຍນົມສົດ ທະສືຣຸຊິ ກໍພາເຂົ້າໄປ ແລະ ສັ່ງນົມຈອກໃຫຍ່ມາກິນຜູ້ລະຈອກ .

ສາຍລົມເຢັນໜາວ ພັດຂຶ້ນມາຈາກໜ້ານ້ຳສີຂຸ່ນດຳ ນົກເປັດຝູງໜຶ່ງຍືນເຈົ່າຈັບໜາວ ເປັນຕາດູຕົນຢູ່ອີກຟາກໜຶ່ງ ເຮືອລຳ ແປງ ພວມຂຶ້ນລ່ອງໄປຕາມໜ້ານ້ຳ.

" ແມ່ ລູກຢາກໄດ້ປຶ້ມແຕ້ມຮູບ ໃສ່ວ່າຊິຊື້ປຶ້ມແຕ້ມຮູບໃຫ້ ."

" ມື້ໜ້າຊາລູກ " ຣິໂອ ເວົ້າ " ບາດແລ້ວແມ່ຊິຊື້ໃຫ້ດອກ "

" ພວກເຮົາກາຍຮ້ານຂາຍປຶ້ມມາແລ້ວ , ມີປຶ້ມຕັ້ງຫລາຍ ແນວ, ຂ້ອຍຫິວເຂົ້ານ່າແມ່ ... ກິນຫຍັງກັນກ່ອນໄດ້ບໍ ? "

" ຈັກໜ້ອຍລູກ , ອີກຈັກໜ້ອຍເດີ້ບຶດດຽວ ! "

ສອງແມ່ລູກຍ່າງກາຍເຮືອນກໍ່ຫລັງຍາວ ແບບຄ້າຍທະຫານ ອາດຊິແມ່ນເຮືອນສ່ວນຕົວ, ຣິໂອ ຄຶດ ... ພວກທີ່ອາໄສຢູ່ໃນນີ້ ແຕ່ລະຄືນ ຄົງມີຫ້ອງພັກເປັນຂອງໃຜຂອງລາວ . ເສື່ອນອນຫ້ອຍຕາກຢູ່ໜ້າປ່ອງຢ້ຽມປ່ອງໜຶ່ງ ແມ່ຍິງຄົນໜຶ່ງພວມກວາດຫ້ອງ. ຣິໂອ ຮ້ອງຂຶ້ນຄ່ອຍ ໆ :

" ຊື້ຊາບໍ່ ? ຊາດີຈາກ ຊິສິໂອກະ ເດີ້ ! "

ບໍ່ມີຄຳຕອບ ຣິໂອ ຈຶ່ງຮ້ອງຊ້ຳແຮງຂຶ້ນກວ່າເກົ່າ .

" ບໍ່ຊື້ດອກນາງເອີຍ " ຍິງຄົນນັ້ນຮ້ອງຕອບ ດຶງເສື່ອນອນ ແລະ ອັດປ່ອງຢ້ຽມເຂົ້າ .

ຣິໂອ ຍ່າງຮ້ອງຂາຍເຄື່ອງຈາກເຮືອນໜຶ່ງຕໍ່ໃສ່ເຮືອນໜຶ່ງ ແຕ່ບໍ່ມີໃຜຊື້ຊາຂອງນາງເລີຍ ຣິອູກິຊິ ລູກຊາຍນ້ອຍຍ່າງນຳຫລັງຕ້ອຍໆ ທັງຈົ່ມນຳໆ ວ່າ ຫິວ ແລະ ເມື່ອຍ . ກົງເປ້ບັນຈຸຊາຂອງນາງ

24/7 ຫ້າມຈຳໜ່າຍ

ໜັກເຕັງໃສ່ບ່າ ບາງຄັ້ງນາງຕ້ອງຢຸດແປງດຶງສາຍຮັດໃຫ້ກົກບ່ອນ. ຄວາມຮູ້ສຶກຢ່າງໜຶ່ງບອກນາງວ່າ ເຈັບປວດທາງກາຍແດ່ ແນວນີ້ກໍດີຄືກັນ !

× ×

×

ມື້ຕໍ່ມາ ຣິໂອ ເຂົ້າມາໃນເມືອງຜູ້ດຽວ ປະລູກຊາຍນ້ອຍໄວ້ຢູ່ເຮືອນ ພໍມາຮອດບໍລິເວນກົກລະເບີດ ນາງກໍເຫັນວ່າຢູ່ໃນຕູບນ້ອຍມີໄຟໃນເຕົາລຸກວາບໆ ຢູ່ ຈຶ່ງຟ້າວເຂົ້າໄປຢູ່ຂ້າງໆ ເຕົາໄຟຂອງ ທະສຶຣູຊິ ມີຊາຍຊະລາຜູ້ໜຶ່ງ ໃນຊຸດເສື້ອຢ່າມສັ້ນກຳມະກອນນັ່ງຢູ່ພວມເອົາຟືນຕື່ມໃສ່ກອງໄຟ . ຄວັນໄຟມືດກຸ້ມຫ້ອງ ລອຍອອກທາງປ່ອງຢ້ຽມປ່ອງດຽວຂອງຫ້ອງ.

" ເຈົ້າເຂົ້າມາເຮັດຫຍັງ ? " ຊາຍຊະລາຖາມທັງແນມເບິ່ງໜ້ານາງ.

" ຂ້ອຍມາຂາຍ ຊາຊິຊິວກະ "

" ຊາຊິຊິວກະ ຊັ້ນຫວະ ? ຫຶຍ ! ຂ້ອຍມີຊາແຊບໆ ເຕັມຢູ່ພໍແຮງແລ້ວ "

ຣິໂອ ຫັນຫລັງກັບອອກມາ ປາກບໍ່ອອກຈັກຄວາມ ໃຈໜຶ່ງນາງຄຶດຢາກໄປຫາເອື້ອຍຂອງ ທະສຶຣູຊິ ຕາມບ່ອນຢູ່ທີ່ໄດ້ມາ ພໍໄດ້ຈູດທູບທຽນລະລຶກເຖິງເຂົາ ແຕ່ກໍບໍ່ເຫັນວ່າຊິມີຄວາມໝາຍຫຍັງ. ນາງຍ່າງໂຄ້ງກັບຄືນມາທາງຫ້ວຍນ້ຳ. ຕາເວັນຍາມບ່າຍຄ້ອຍ ພວມ

ສ່ອງແສງໃສ່ຫນ້ານ້ຳ ນາງນັ່ງລົງເຫິງຊາກເພພັງ ແຫ່ງຊີມັງບ່ອນຫນຶ່ງ . ຊາກແມວນ້ອຍຕາຍຕົວຫນຶ່ງ ນອນຫງາຍທ້ອງຢູ່ບໍ່ໄກທາງຫລັງນາງ. ນາງຄຶດຮອດ ທະສີຣູຊິ ສິມມຸດວ່າ ບໍ່ໄດ້ຮູ້ຈັກພົບພໍ້ ກັບເລີຍຊິດີກວ່ານີ້ບໍ່ ? ບໍ່ດອກ ! ນາງບໍ່ກິນແຫນງໃຈເລີຍ ທີ່ໄດ້ຮູ້ເຂົາ ແລະມີແນວພົວພັນກັບເຂົາ ແລະ ນາງກໍບໍ່ກິນແຫນງໃຈດອກທີ່ເຂົ້າມາຢູ່ກາງໂຕກຽວກ່ອນຫນ້ານີ້ເດືອນຫນຶ່ງ ຫລື ຫລາຍເດືອນກ່ອນຫັ້ນນາງຄຶດວ່າ ກ້າຫາຢູ່ຫາກິນບໍ່ໄດ້ ນາງກໍຈະກັບຄືນບ້ານນອກ ແຕ່ບັດນີ້ນາງຮູ້ແລ້ວວ່າ ນາງຄົງຈະຕ້ອງຢູ່ຫນີ້ ຢູ່ໂຕກຽວ ຫນີ້ລະ. ກະໂຕກາງເມືອງໂຕກຽວ ບ່ອນ ທະສີຣູຊິ ເຄີຍຢູ່ !

ນາງລຸກຂຶ້ນ ດຶງກົງເປ້ຂຶ້ນໃສ່ຫລັງ ຍ່າງຫ່າງອອກຈາກຫ້ວຍນ້ຳໄປ. ເມື່ອຍ່າງຊອກຊອນໄປຕາມກະຫນົນນ້ອຍໆ ແຫ່ງຫນຶ່ງນາງເຫັນຕູບນ້ອຍຫລັງຫນຶ່ງ ເບິ່ງຄືວ່າ ເອົາແຜ່ນໄມ້ເກົ່າໆ ມາຕອກຕໍ່ພໍແຕ່ຢູ່ຊື່ໆ ນາງຫຍັບເຂົ້າໄປໃກ້ໆ ປ່ອງປະຕູ ແລະ ຮ້ອງວ່າ " ຊາເດີ້ ... ມີໃຜຢາກຊື້ຊາແດ່ບໍ່ ? " ປະຕູໄຂແງ້ມອອກ ຍິງຄົນຫນຶ່ງປາກົດໂຕອອກມາ ນຸ່ງເຄື່ອງເກົ່າຂາດ ຍິ່ງກວ່າ ຣິໂອ ເອງຊ້ຳ.

" ຂາຍຈັ່ງໃດລະຫັ້ນ ? " ນາງຖາມຂຶ້ນ ແຕ່ພໍແນມເຫັນກົງເປ້ຂອງຣິໂອ ຈຶ່ງເວົ້າຕໍ່ວ່າ " ເອີ້ ... ເຂົ້າມານັ່ງເຊົາແຮງຢູ່ໃນພີ້ຈັກບຶດກ່ອນແມ້ ! ຂ້ອຍເບິ່ງກ່ອນ ວ່າມີເງິນພໍຊື້ຊາໄດ້ທໍ່ໃດ "

ຣິໂອ ກ້າວເຂົ້າໄປ ແລະ ປິດກົງເປ້ລົງ. ຢູ່ໃນຫ້ອງແຄບ ໆ ນັ້ນມີແມ່ຍິງສີ່ຄົນນັ່ງກັບພື້ນ ອ້ອມເຕົານ້ຳມັນ ພວມຫຍິບເຄື່ອງກອງໃຫຍ່

ມີທັງເສື້ອກົງຕີນ. ພວກເຂົາກໍບໍ່ຕ່າງຫຍັງກັບນາງ. ຣິໂອ ຄຶດ ເມື່ອແນມ ນ້ຳປາຍເຂັມ ທີ່ພວມດິ້ນຂຶ້ນດິ້ນລົງຕາມເນື້ອຜ້າ. ຄວາມຮູ້ສຶກອົບອຸ່ນຢ່າງໜຶ່ງແຜ່ກະຈາຍໄປທົ່ວຮ່າງຄີງຂອງນາງ.

# ລົດພະລັງກ່ານ

ໂດຍ ***ອິບຸເຊະ ມາສຸຈິ***

ເມື່ອເດີນທາງໄປຢາມບ້ານຫວ່າງມໍ່ໆນີ້ ຂ້ອຍມີໂອກາດໄດ້ຂີ່ລົດເມສາຍບີບັງອີກ. ຂ້ອຍບໍ່ໄດ້ຂີ່ລົດສາຍນີ້ມາດົນເຕີບແລ້ວ ບໍ່ຂີ່ມາຕັ້ງແຕ່ສົງຄາມພຸ້ນລະ ຈັ່ງໃດກໍຕາມ ຂ້ອງຍັງຈື່ຈໍາມັນໄດ້ດີ.

ສະໄຫມສົງຄາມ ລົດເມໂດຍສານທົ່ວປະເທດຊຸດໂຊມເປ່ເພຂະຫນາດແລ້ວ ແລະລົດສາຍບີບັງກໍຢູ່ໃນລະດັບຂອງມັນເອງ. ເກືອບບໍ່ມີຈັກເທື່ອທີ່ມັນຈະແລ່ນບໍລິການໂດຍບໍ່ມີອຸບັດເຫດເລັກໆນ້ອຍໆ : ອັນທີຫນຶ່ງ ເລື່ອງກົງເວລາ ຕໍ່ມາຕິດຈັກບໍ່ໄດ້ ພໍແປງໄດ້ກໍແມ່ນກະປຸກເກຍມີບັນຫາ ບານປ່ອງຢ້ຽມເກືອບທຸກປ່ອງເປ່ເພແລ້ວ ບາງທີໄຂໄດ້ກໍເອົາເຈ້ຍ ຫລືແຜ່ນໄມ້ມາຕິດໄວ້.

ປັດນີ້, ສົງຄາມຜ່ານໄປຫ້າປີແລ້ວ ລົດເມຍັງແລ່ນໂດຍໃຊ້ກ່ານຫີນຢູ່ເກົ່າງວ່າກະໂຕລົດທາສີໃຫມ່ ປ່ອງຢ້ຽມທຸກບານກໍປົວແປງດີແລ້ວກໍຕາມ. ຜູ້ຂັບເປັນຊາຍຫນຸ່ມເຊື່ອງຂ້ອຍຈື່ໄດ້ຕອນຍັງເປັນເສິກຢູ່,



ເວລານັ້ນ ຫມໍເປັນພຽງແອັດລົດ (ຜູ້ຊ່ອຍຂັບເຄື່ອງ). ເບິ່ງແລ້ວກໍຮູ້ວ່າ ຫມໍໄດ້ຕຳແຫນ່ງແທນທ້າວມີຫນວດຍຸ່ມຍຸ່ ຊຶ່ງແຕ່ກ່ອນເປັນທັງ ຜູ້ຄອບຄອງຕັ່ງຄົນຂັບ, ຂ້ອຍຄິດສົງໄສວ່າທັງຫມົດນີ້ ມັນຄົງມີຄວາມ ຫມາຍພິເສດອັນໃດອັນຫນຶ່ງ.

"ຊັ້ນຫມໍຂັບກັບຫມໍແອັດລົດນີ້ປ່ຽນຕຳແຫນ່ງກັນໄດ້ຫວະ ?" ຂ້ອຍເວົ້າກັບແມ່ຍິງຄົນຫນຶ່ງ ທີ່ນັ່ງຢູ່ຕໍ່ຫນ້າຂ້ອຍ " ແນ່ນອນວ່າຫມໍ ແອັດລົດນັ້ນ ແມ່ນຄົນຂັບເກົ່າ ຄືຊິແມ່ນມັນມີອຸບັດເຫດແນວໃດແນວ ຫນຶ່ງ ມັນຈຶ່ງຂັບລົດບໍ່ໄດ້ອີກແມ່ນບໍ່ ?"

"ບໍ່ແມ່ນ" ຜູ້ຊາຍທີ່ມາກັບແມ່ຍິງຄົນນັ້ນຕອບ " ມັນກຶກຄົນຊັງ ແຮງ ຕອນເປັນເສິກຫັ້ນເລີຍກຶກປົດ. ມັນຈອງຫອງເຮັດພິລຶກກັບຜູ້ ໂດຍສານຄືຫຍັງນີ້, ຈັ່ງຊັ້ນພໍແລ້ວເສິກ ກໍເລີຍມີຜູ້ຂຽນຈົດຫມາຍໄປ ຫາບໍລິສັດຟ້ອງມັນ ເລື່ອງມັນເຮັດບໍ່ຈົບບໍ່ດີກັບຜູ້ໂດຍສານທັງສະ ເຫນີສຳຫລວດກວດລ້າງມັນ ! ເອີ້...ພວກເຮົາຮອດບ່ອນລົງແລ້ວເດີ!"

ຊາຍຍິງຄູ່ນັ້ນງຶກຫົວໃສ່ຂ້ອຍ ແລ້ວລົງຈາກລົດໂດຍສານ ຊາຍ ຊະລາໃນຊຸດໂສ້ງຂາສາມສ່ວນແບບຊາວນາ ທີ່ນັ່ງຟັງການໂອ້ລົມ ຂອງພວກເຮົາຫຍັບມານັ່ງແທນບ່ອນແມ່ຍິງທີ່ລົງໄປ.

"ແມ່ນແນວນັ້ນແທ້ໆລະ !" ລາວເວົ້າຂຶ້ນທັນທີທີ່ນັ່ງລົງ " ແຕ່ ວ່າອີກບໍ່ດົນຫມໍແອັດລົດຫັ້ນ ກໍຈະກັບມາຄອບຄອງຕຳແຫນ່ງເກົ່າ ຂອງມັນລະ ເຊື່ອຂ້ອຍໂລດ, ແມ່ນຢູ່ວ່າຕອນຫລັງສົງຄາມຫັ້ນຄົນຊັງ ມັນຈົນວ່າເພິ່ນບໍ່ສາມາດສຳຫລວດກວດກາມັນໄດ້, ເພິ່ນຫລຸດເງິນ ເດືອນ ແລະ ກໍຍ້າຍມັນມາເປັນແອັດ. ແຕ່ມື້ນີ້ພວກກຶກສຳຫລວດທັງ ຫມົດນັ້ນ ຊ້ຳຜັດກັບຄືນມາມີອຳນາດວາດສະຫນາອີກ. ແມ່ນຄົນ

ຄືຫມໍນີ້ລະຊິກັບມາເປັນຫົວຫນ້າອີກ " ພໍ່ເຖົ້າທັງເວົ້າທັງງຶກຫົວໄປ ນໍາ ແລະ ຈົ່ມພຶມໆຄືເວົ້າກັບໂຕເອງ "ຊັ້ນລະ...ເລື່ອງລາວມັນປັ້ນ ປ່ຽນໄປຫມົດສູ່ມື້ນີ້ !"

ຂ້ອຍເສືອດຕາໄປເບິ່ງຫມໍແອັດລົດ - ຈັ່ງແມ່ນຂ້ອຍຈື່ຫມວດ ຍ່ອມເຍາະຂອງມັນໄດ້ຄັກ - ມັນຍືນຢູ່ທ້າຍລົດ ແລະ ພວມເບິ່ງຂ້າມ ປ່ອງຢ້ຽມອອກໄປ. ພວກເຮົາແລ່ນຜ່ານຂ້າມຂົວແມ່ນ້ຳ ທີ່ແຫ້ງ ຂອດ ຟາກທົ່ງນາໄປມັນແມ່ນສາຍພູຫົວໂຫລ້ນ. ຕອນແລ່ນຜ່ານຫໍໄຫວ້ຊິ້ນໂຕ ແຄມທາງນັ້ນຫມໍແອັດລົດດຶງຫມວກແງັບອອກ ແລະ ເຊັດເຫື່ອ ຂອງຫມໍຢູ່ຫນ້າຜາກຂອງຫມໍອອກ ທັງກົ້ມຫົວແດ່ເລັກນ້ອຍ ຂ້ອຍ ສິງໄສວ່າ ນັ້ນມັນຫມາຍຄວາມວ່າຫມໍສະແດງຄວາມເຄົາລົບຫໍໄຫວ້ບໍ່ ເພາະການສະແດງອອກແບບນີ້ບໍ່ເປັນທີ່ນິຍົມກັນມາລະຍະຫນຶ່ງແລ້ວ ພາຍຫລັງສົງຄາມ ແຕ່ມາປັດນີ້ຊ້ຳພວມມີຜູ້ນິຍົມຫລາຍຂຶ້ນໆ. ທ່າທີ ຂອງຫມໍແອັດລົດຕັ້ງວ່າບໍ່ຈະແຈ້ງເລີຍ.

ຄວາມຊົງຈຳຂອງຂ້ອຍກ່ຽວກັບຊາຍຄົນນີ້ ບໍ່ຄັກຈັກຫນ້ອຍ, ຕະຫລອດເວລາອັນຍາວນານ ທີ່ມັນປະຕິບັດພາລະກິດ ເປັນຄົນຂັບ ລົດໂດຍສານສາຍນີ້ມັງນີ້ ມັນບໍ່ພາດໂອກາດສະແດງທ່າໃຫຍ່ຂົ່ມເຫງ ທ້າວຜູ້ເປັນແອັດລົດໃຫ້ມັນໃນຄາວນັ້ນຈັກເທື່ອ. ວິທີຂົ່ມເຫງຂອງມັນ ມັກຈະເປັນການຕູ່ໂທດຜູ້ໂດຍສານ ແບບເກາະຜິດຫຍາບໆ ແລະ ຫົວເລື່ອງທີ່ມັນມັກໂຈມຕີທີ່ສຸດກໍແມ່ນກົງເປ້ ຜູ້ໂດຍສານ.

"ບໍ່ໃຫ້ມີກົງເປ້ໃນລົດເດັດຂາດ" ຫມໍມັກຮ້ອງໃສ່ຫູແອັດລົດ. "ມຶງອິດສາບອກຜູ້ໂດຍສານດີໆແດ່ ຢ່າເອົາກົງເປ້ເຂົ້າມານໍາ

ມຶງເອງກໍຮູ້ຢູ່ດີແລ້ວວ່າ ບໍ່ໃຫ້ເຮັດແນວນັ້ນ ແລ້ວມຶງຄືມາເສີຍມົ່ງຢູ່ ມຶງບອກເຂົາເອົາອອກແມ້ !"

ແນ່ນຢູ່ວ່າ ມີລະບຽບກວດກາທ່າທີ່ບຸກແນວ ນັບທັງກົງເປ້ ນໍາ, ທັງຕ້ອງຈ່າຍຄ່າບ່ອນ ແລ້ວຕ້ອງເອົາຂຶ້ນມ້ຽນເທິງຫລັງຄາລົດ. ບາງຄັ້ງບາງຄາວ ຕໍາຫລວດຈະຢຸດລົດ ແລ້ວກວດຄົ້ນຫີບເຄື່ອງຫາ ສິນຄ້າເຖື່ອນເຊັ່ນ ເຂົ້າຫລືຝິ່ນ, ຖ້າມີການຄົ້ນພົບກໍຫມາຍເຖິງການ ຍຶດ ແລະ ປັບໄຫມ. ເມື່ອເປັນແນວນີ້ ແນ່ນອນໃຜໆກໍຢາກມ້ຽນຫີບໄວ້ ກັບຕົນເອງ ໂດຍເອົາຢັດເຂົ້າກ້ອງຕັ່ງນັ່ງ ແຕ່ການລັກເຮັດແບບນີ້ ກໍ ເທົ່າໄປເຮັດໃຫ້ທ່ານຫນວດຍ່ອມເຍາະນັ້ນ ເປັນຟືນເປັນໄຟຂຶ້ນ, ທັງໆ ທີ່ວ່າກະໂຕທີ່ວມັນເອງນັ້ນກໍບໍ່ອາຍທີ່ເຊື່ອງຫົວກາອົດ, ຫມາກກົ່ວ ແລະ ສິນຄ້າເຖື່ອນອື່ນໆ ໃສ່ກະໂລ່ງປັກໃຫຍ່ ວາງໄວ້ຂ້າງຕັ່ງນັ່ງຂອງມັນ ຄືກັນ.

ບໍ່ມີແຕ່ຂ້ອຍ ກັບຜູ້ໂດຍສານຄົນທໍາມະດາສາມັນອື່ນໆດອກ ທີ່ ບໍ່ມັກຫນັງຫນ້າຄົນຂັບຜູ້ນີ້ ແຕ່ພວກເຮົາຍັງບໍ່ນັບຖືມັນຈັກຫນ້ອຍ ໃນ ເລື່ອງຄວາມສາມາດປັບຊາລົດ. ມັນບໍ່ເດືອດຮ້ອນນໍາເລື່ອງອອກລົດ ຊ້າກັບລົດເພເປັນປະຈໍາຫັ້ນເລີຍ. ພໍແຕ່ວ່າຈັກລົດຕິດຂັດແດ່ ມັນກໍ ຈະຮ້ອງປະກາດດ້ວຍສຽງກັງວານວ່າ "ຜູ້ໂດຍສານລົງຊຸກລົດ... ຫມົດ ທຸກຄົນ !" ເມື່ອຊຸກໄປໄດ້ຈັກຫ້າຫົກສິບຫລາ ຈັກລົດກໍຈະຕິດ ແລ້ວມັນ ກໍອອກຄໍາສັ່ງໃຫ້ທຸກຄົນຂຶ້ນລົດ.

ກ່ອນໃກ້ໆສົງຄາມຍຸຕິ, ສະພາບຕິດຂັດເປັນປະຈໍາ ນັບວ່າ ຮ້າຍ ແຮງຫລາຍ ແລະ ຄັ້ງສຸດທ້າຍ ທີ່ຂ້ອຍຂຶ້ນລົດໂດຍສານສາຍນີ້ (ກ່ອນ ຫນ້າການກົ້ມລະເບີດໃສ່ ຮິໂຣຊິມາ ຫນ້ອຍຫນຶ່ງ) ຂ້ອຍໄດ້ ຊ່ວຍຊຸກລົດ

ບໍ່ຕໍ່າກວ່າສີ່ໄມ. ຂ້ອຍອອກໄປຕຶກເບັດຢູ່ໃນຫ້ວຍເທິງພູ ນອນຄືນຫນຶ່ງ ຢູ່ໂຮງແຮມ ແລ້ວເຊົ້າມື້ຕໍ່ມາ ແຕ່ເຊົ້າກໍອອກມາລັດລົດເມຢູ່ປ້າຍຂົວ ໂອຕະກີ. ມີຄົນມາກ້າຂຶ້ນລົດຢູ່ແລ້ວ ປະມານສີ່ສິບຄົນ. ກາຍໂມງທີ່ລົດ ຄວນມາຮອດແຕ່ດົນແລ້ວ ແຕ່ມັນກໍບໍ່ມາ. ຜູ້ມາລໍຖ້າ ຈໍານວນຫນ້ອຍ ຫນຶ່ງຍອມຈໍານົນລ່າກອຍໄປ, ພວກຫນຶ່ງຈົ່ມວ່າດ້ວຍຄວາມລໍາຄານ ຫມຸດຫມິດທັງປ້ອຍແຊ່ງຄົນຂັບ ດ້ວຍຄໍາສັບຊະນິດ ທີ່ແມ່ນແຕ່ພວກເຂົາ ເອງກໍບໍ່ຢາກໃຫ້ດັງໄປຮອດຫູຫມໍດອກ. ໃນທີ່ສຸດ ເມື່ອລົດເມມາແທ້ໆ ກໍເຫລືອຜູ້ໂດຍສານຢູ່ບໍ່ຮອດເຄິ່ງ ! ຕອນນັ້ນມັນ ຊ້າໄປກວ່າສອງຊົ່ວ ໂມງແລ້ວ.

ຂ້ອຍເອົາປີ້ໂດຍສານຂາກັບ ກັບທີບໃຫ້ແອັດລົດກວດກາ ທັງ ໂຍນເປ້ຫລັງໃຫ້ມັນແລ້ວຈຶ່ງກ້າວຂຶ້ນລົດ. ມີບ່ອນນັ່ງພຽງພໍສໍາລັບ ພວກເຮົາທຸກຄົນ. ເມື່ອແອັດລົດເອົາກ່ານໃສ່ເຕົາໄຟແລ້ວ ຜູ້ຂັບຈຶ່ງ ຕິດຈັກລົດ ມິດຈັ໊ດ ! ມັນເອົາມືອົມບ່ອນຕິດຈັກອີກຫລາຍຄັ້ງ ແຕ່ບໍ່ມີ ຫຍັງເກີດຂຶ້ນ... ຈັກບໍ່ຍອມຕິດ ເລື່ອງນີ້ ກໍຄືວ່ານັ້ນແລ້ວ, ເປັນເລື່ອງ ທໍາມະດາໆ ແທ້ໆ. ໂດຍບໍ່ຄອງໃຫ້ມັນບອກ, ພວກເຮົາຫມົດທຸກຄົນ ລົງຈາກລົດ ແທ້ໆແລ້ວກໍບໍ່ຫມົດທຸກຄົນດອກ. ມີຜົວເມຍໃຫມ່ຄູ່ຫນຶ່ງ ບໍ່ຍອມລົງ ນັ່ງເສີຍຢູ່. ເບິ່ງຊົງພວກເຂົາ ຄືຊິບໍ່ລົ້ງກັບລົດໂດຍສານ ສາຍບີນັ້ງເທື່ອ.

ໂດຍບໍ່ຊັກຊ້າ ພວກເຮົາລົງມືຊຸກໂລດ. ຍ້ອນວ່າເຕົາໄຟທີ່ຕິດຢູ່ ທ້າຍລົດ ຮ້ອນພໍແຮງແລ້ວ ພວກເຮົາກໍເລີຍ ແຍກອອກເປັນສອງຈຸ ຊຸກຢູ່ຈຸລະເບື້ອງ. ຜູ້ໂດຍສານທົ່ວແຫລມ ຜູ້ຫນຶ່ງເອົາໄມ້ແປ້ນຍາວມາ ທັງຄັນໃສ່ບ່ອນເຕົາໄຟແລ້ວຈຶ່ງຊຸກ. ຫມໍແອັດລົດກໍໂຕນລົງມາຊ່ວຍກັນ

ຊຸກ. ກະຫນົນຕອນນີ້ຄ້ອຍລົງຫນ້ອຍຫນຶ່ງ ແລ້ວລົດຈຶ່ງເຄື່ອນໄປແບບສະບາຍໆ ໂດຍທີ່ພວກເຮົາບໍ່ຕ້ອງອອກແຮງປານໃດ. ທ້າວຜູ້ຂັບນັ່ງວາງທ່າເຂັ່ງຂຶມຢູ່ເທິງຕັ່ງ. ໃນທັນໃດກໍໄດ້ຍິນສຽງຮ້າຍດັງອອກມາຈາກລົດ ແມ່ນທ້າວຂັບລົດນັ້ນເອງ ຫາກໍສັງເກດເຫັນວ່າ ມີຜົວຫນຸ່ມເມຍສາວຄູ່ຫນຶ່ງ ບໍ່ໄດ້ລົງຈາກລົດ.

"ເຮີ້ຍ ! ສອງຄົນນີ້ນ່າ " ມັນຄາງຮື້ມໃສ່ "ພວກສູເຮັດຕາຍສັງຢູ່ ? ບໍ່ເຫັນຫວະ ວ່າຜູ້ອື່ນໆ ເຂົາລົງໄປຊຸກລົດກັນຫມົດ ລົງໄປແມ້ ນັ່ງຕາຍສັງຢູ່ຫນີ້ !"

ສຽງຜູ້ຊາຍຕອບຄືນຢ່າງສຸພາບວ່າ " ເຈົ້າບໍ່ຮ້ອງໃສ່ຂ້ອຍໄດ້ບໍ່ ? ຂ້ອຍອາດຊິບໍ່ທັນໄດ້ເດີນທາງຫລາຍ ແຕ່ຂ້ອຍກໍຄິດວ່າລົດເມມັນແລ່ນໄປດ້ວຍຈັກ."

"ເອີ້ ! " ຄົນຂັບລົດເວົ້າ "ເຂົ້າໃຈແລ້ວວ່າມຶງຄິດແນວໃດ ມຶງຄິດວ່າ ມຶງຫັ້ນວິເສດກວ່າຫມູ່... ບໍ່ສົມຊິໄປຊຸກລົດ. ຂໍບອກອັນຫນຶ່ງເດີ້ກູບໍ່ສົນດອກວ່າ ພວກສູເປັນຜົວໃຫມ່ ເມຍໃຫມ່ຫລືບໍ່ ຄັນບໍ່ລົງໄປຊຸກລົດນຳຫມູ່ດຽວນີ້ ມຶງຊິເຫັນດີກັບກູສັກໆ ເດີ."

"ຄັນຊິເວົ້າກັນຕໍ່" ຊາຍຫນຸ່ມຕອບ "ເວົ້ານຳກັນດີໆກໍໄດ້"

ມິດໄປຄາວຫນຶ່ງບຶດດຽວທີ່ນັ້ນ ພໍແຕ່ລົດແລ່ນກາຍປ່ານ້ອຍງຽບສະຫງັດ ບ່ອນຫນຶ່ງ ສຽງຄົນຂັບກໍດັງຜ່າຄວາມງຽບມິດຂຶ້ນ.

"ເຮີ້ຍ ສູສອງຄົນ ນັ່ງຢູ່ຫັ້ນນ່າ ! ສັງມາຫນ້າມືນບອກຍາກແທ້ ! ເຮັດແນວໃດວ່ານັ່ງເສີຍສະບາຍຢູ່ໄດ້ ຂະນະທີ່ຫມູ່ເຫື່ອຍ້ອຍເຫື່ອຍັ່ງ ! ລົດຊິຂຶ້ນຄ້ອຍແລ້ວ ລົງໄປຊ່ວຍໄວ !"

"ເຈົ້າຫາດາເອົາໃຈໃສ່ຕິດຈັກລົດຫັ້ນນ່າ !" ຊາຍຫນຸ່ມຕອບ

ສຽງຫນັກແຫນ້ນ "ເຈົ້າທັ້ນກະຫນ້າມືນເວົ້າຍາກ ມາສິນແຕ່ຊິໃຫ້ພວກເຮົາລົງໄປຊຸກ ແທນທີ່ຊິພະຍາຍາມຕິດຈັກລົດ ! ເອົາໃຈໃສ່ວຽກໂຕແດ່ແມ້ ເຮັດຄືຄົນອັບອື່ນໆແດ່. ເຈົ້າເຮັດຂາຍຫນ້າລະບົບອົບສິ່ງມວນຊົນເດີ້ !"

"ມິດໄດ໋ ! " ຄົນອັບລົດເວົ້າ, ດ້ວຍນ້ຳສຽງອ່ອນນວນລົງແດ່ ເຂົາເວົ້າຕໍ່ວ່າ "ນີ້ບ່າທ້າວ, ພວກເຮົາພວມຊິຂຶ້ນຄ້ອຍຊຳປຸງ ໂຕກະບໍ່ມີວ່າຊິກິນແຮງຫມູ່... ເບິ່ງທັ້ນພວກເຂົາເຫື່ອຍ້ອຍຫນ້າຍ້ອຍຫລັງຫມົດລະ."

ຄ້ອຍຂຶ້ນພູຊຳປຸງ ຊັນກິ່ງດິ່ງ, ສອງຟາກທາງເປັນຜາຊັນດິນຫນຽວ ພວກເຮົາສຸມກຳລັງທັງຫມົດໃສ່ເພື່ອໃຫ້ລົດເຄື່ອນຫວິດຈາກໂນນແລ້ວ ກຸະຫນົບກໍລາດຕ່ຳລົງ ກ້າວ່າຈັກລົດບໍ່ຕິດຕອນນີ້ ບໍ່ຮູ້ວ່າ ມັນຊິໄປຕິດຂຶ້ນບ່ອນຈັ່ງໃດ. ພວກເຮົາພາກັນຢຸດ ປ່ອຍໃຫ້ລົດແລ່ນລົງຄ້ອຍໄປກຸ່ນໆ ສຸດຄວາມໄວຂອງມັນ. ລົດແລ່ນກາຍອ່າງນ້ຳຊົນລະປະທານອອກຂ້າງກຸະຫນົບ ຕົ້ນໄມ້ແຄມທາງບັງມັນໄວ້ຈາກສາຍຕາ ພວກເຮົາໂຕ່ງຫູຄອງຟັງສຽງຈັກລົດ. ເວລານັ້ນ ທ້າວແອັດລົດພວມແລ່ນລົງຄ້ອຍນຳກົ້ນລົດໄປ.

ຊາຍຄົນຫນຶ່ງໃສ່ເສື້ອ ບໍ່ຕິດດຸມເອິກ, ໃສ່ຫມວກແງັບ ແລະ ນຸ່ງໂສ້ງຂາສາມສ່ວນກວ້າງໆ ສີກາກີ ຍ່າງມາຫາຂ້ອຍ. ຖາມວ່າ "ເຈົ້າໄດ້ຍິນສຽງຈັກລົດບໍ່ ?"

"ຂ້ອຍວ່າ ມັນຕິດແລ້ວ !" ສາວນ້ອຍຄົນຫນຶ່ງໃນຊຸດໂສ້ງກິລາທີ່ຢືນຢູ່ຕໍ່ຫນ້າຂ້ອຍເວົ້າຂຶ້ນ "ຂ້ອຍຄືວ່າໄດ້ຍິນສຽງຈັກນີ້ລະ ຫລື ອາດຊິແມ່ນຂ້ອຍຄຶດໄປເອງ !"

"ຂ້ອຍບໍ່ໄດ້ຍິນຫຍັງຈັກໜ້ອຍ !" ຜູ້ຊາຍໃນໂສ້ງແບບຊາວນາ ເວົ້າ "ແລ້ວໜີ້ມັນອີກໄກປານໃດຈຶ່ງຊິຮອດໃນເມືອງ ?"

"ປະມານສີ່ໄມເຄິ່ງນີ້ລະ !" ສາວນ້ອຍຕອບ "ແຕ່ຍັງອີກສອງໄມ ບ່ອນສາມແຍກຫັ້ນພວກເຮົາລັດຂຶ້ນລົດຄັນໃຫມ່ດີໆກໍໄດ້."

"ແລ້ວຂ້ອຍຍັງມາເລືອກຂຶ້ນລົດເມຄັນນີ້ເພື່ອຊິໄປຕໍ່ຢູ່" ຊາຍຜູ້ ຢູ່ໃນຊຸດຊາວນາເວົ້າແຮງໆ "ຈັ່ງແມ່ນຂ້ອຍອີ່ມລົດແລ່ນກຸານບໍ່ເປັນ ເລື່ອງຄັນນີ້."

ເວລານັ້ນທ້າວແອັດລົດອອກມາຢືນຢູ່ຕີນຄ້ອຍ ມັນຢືນຢູ່ຫັ້ນ ຍົກແຂນຂຶ້ນແກວ່ງ ທັງສັ່ນຫົວໄປມາກ່ອນຈະແລ່ນລັບຕາບັງແກວ ຕົ້ນໄມ້ໄປອີກ.

"ພວກເຮົາບໍ່ເຄີຍຊຸກລົດໄປໄກຂະໜາດນີ້ຈັກເທື່ອ !" ສາວ ນ້ອຍໃນຊຸດກິລາເວົ້າ ຂະນະທີ່ພາກັນຍ່າງລົງຄ້ອຍດ້ວຍຄວາມຈຳໃຈ "ຜົວເມຍຄູ່ນັ້ນມາເຮັດໃຫ້ອີ່ຕາອັບລົດໂມໂຫ. ລາວເລີຍມາໂຍນໃສ່ ພວກເຮົາຫມົດ."

"ແມ່ນແລ້ວ, ຂ້ອຍຫມັ້ນໃຈວ່າມັນຢາກໃຫ້ພວກເຮົາຊຸກລົດໄປ ຈົນສຸດທາງພຸ້ນລະ" ຊາຍຜູ້ຢູ່ໃນຊຸດຊາວນາເວົ້າດ້ວຍຄວາມບໍ່ພໍໃຈ "ມີແນວດຽວທີ່ພວກເຮົາຊິໄດ້ເຮັດ... ທຳທ່າເມື່ອຍໃຫ້ຄືໆ, ພວກ ເຮົາຕ້ອງໃຫ້ມັນຄຶດວ່າຂາລ່ອຍຫມົດແຮງຊິໄປແລ້ວ ແນວນີ້ມັນອາດ ຊິປ່ຽນໃຈແດ່" ເວົ້າແລ້ວ ເຂົາກໍດຶງເສື້ອອອກຈາກໂສ້ງ ເຂົ້າກັບທ່າ ທາງອິດອ່ອນ.

ໃນທີ່ສຸດ ພວກເຂົາກໍແນມເຫັນລົດຈອດຢູ່ຕໍ່ໜ້າກຸຽວນາ ໃກ້ໆ ຕົ້ນໄມ້. ທ້າວຜູ້ຂັບຢືນກອດແຂນຢູ່ຂ້າງໆ ຂະນະທີ່ຫມໍແອັດລົດສີນລະ

ວິນຢູ່ກັບການໃຊ້ເຄື່ອງມື ເພື່ອເອົາກ່ານໃສ່ເຕົາ. ຂ້ອຍແນມເຫັນແມ່ຍິງສາວຄົນຫນຶ່ງ ໃນເສື້ອຜ້າສີຂຽວໆພວມສາວບ້າຢູ່ສ້າງ.

"ບໍ່ແມ່ນສາວທີ່ນັ່ງຢູ່ໃນລົດຫວະຫັ້ນ ?" ຂ້ອຍໃຫ້ຂໍ້ສັງເກດ.

"ກະແມ່ນລະບໍ້" ຜູ້ຊາຍຫນ້າຍາວໆຄືມ້າ ໃນຊຸດທະຫານ ເກົ່າໆ ທັງມີຜ້າພັນບາດເປື້ອນເວົ້າຂຶ້ນ "ຂ້ອຍສັງຫອນໃຈວ່າມັນ ຕ້ອງມີເລື່ອງ. ເບິ່ງຫັ້ນສາວນັ້ນຫົວກັ່ງນ້ຳເຂົ້າໄປໃນລົດ ! ເຮີ້ຍ ສູມີເລື່ອງຫຍັງກັນຫວະ ?" ລາວຮ້ອງໃສ່ຜູ້ຂັບ "ມຶງເຮັດຫຍັງຢູ່ລະຫັ້ນ ຍືນຄ້ຳແອວກິນອາກາດເສີຍ ຊັ້ນຫວາ ? ມຶງຍອມແລ້ວບໍ່ເລື່ອງຂັບ ລົດຫນີ້ ຫລືວ່າ ແນວໃດ !"

"ເອີ່... ແມ່ນແລ້ວ !" ຄົນຂັບລົດຮ້ອງຕອບທັງເອົານິ້ວມືລູບຫນວດ "ລາອອກແລ້ວ"

"ມຶງແປວ່າແນວໃດ ລາອອກຫັ້ນ ?" ຊາຍຫນ້າຍາວຄືມ້າ ຖາມ.

"ບັກຂີ້ໂງ່ເຫງີກຫງາກ ນັ່ງມານີ້ລະບໍ່ຍອມອອກຈາກລົດລົງ ໄປຊຸກລົດນຳຫມູ່ ບອກບໍ່ຟັງກໍເລີຍຊັດໃຫ້ຊະຄັກໆບາດຫນຶ່ງ ແຕ່ຂ້ອຍລາອອກຈາກຫນ້າທີ່ກ່ອນເດີ ! ເພາະວ່າພະນັກງານໄທເຮົາບໍ່ມີສິດຕີຜູ້ໂດຍສານເດ້ ຈັ່ງຊັ້ນຂ້ອຍກໍລາອອກຈາກຫນ້າທີ່ ບັດນີ້ຂ້ອຍເປັນເອກະຊົນທຳມະດາ. ຂ້ອຍສາມາດຟາດຫນ້າມັນໄດ້ສົມກັບຄວາມຜິດຂອງມັນ."

"ເອົາລະ ໆ !" ຊາຍຫນ້າຍາວຄືມ້າວ້າ "ເທື່ອນີ້ເຈົ້າໂພດໄປແລ້ວ... ຄັນເຈົ້າບໍ່ຂັບລົດແລ້ວຊິໃຫ້ໃຜຂັບໄປລະຫນີ້ ?"

ຄົນຂັບລົດຍັກບ່າໄຫລ່, ເອົາສິ່ງແສງຕາເຍາະເຍີ້ຍ ມາໃສ່ຜູ້ໂດຍສານທີ່ມາຍືນຫຸ້ມຢູ່ຂ້າງໆລົດ.

"ຂ້ອຍຂັບບໍ່ໄດ້ອີກແລ້ວ" ເຂົາເວົ້າຢ່າງດື້ດຶງ "ຂ້ອຍບອກແລ້ວເດວ່າ ລາອອກແລ້ວ."

ເວລານັ້ນມີຊາຍຊະລາຄົນຫນຶ່ງ ຮ່າງຈ່ອຍສູງ ຍ່າງຊ້າໆອອກມາແຕ່ກຽງນາ "ກູໄດ້ຍິນມາເຕັມຫູແລ້ວເດີ້ !" ລາວຮ້ອງໃສ່ຄົນຂັບລົດ "ກູເຫັນຫມົດວ່າ ເລື່ອງມັນເປັນແນວໃດ ກູເຫັນຮອດມຶງຂູ່ເຂັນຜົວເມຍດີໆຄູ່ນັ້ນແນວໃດ ? ເຮັດແນວນີ້ມຶງວ່າມຶງຄັກແລ້ວຫວະ ຫນີ້ມັນຕໍ່ຫນ້າເຮືອນກູເດີ ?"

"ກູເປັນເອກະຊົນເວີຍ" ຄົນຂັບລົດກຽງຄືນ "ກູມີສິດເຕັມຂີດຢາກຟາດປາກໃຜກະໄດ້"

"ມຶງຢ່າເວົ້າບ້າໆໃດ໋" ພໍ່ເຖົ້າຊາວນາເວົ້າ "ຂໍເຊີນເອົາລົດອອກຫນີຈາກຫນ້າບ້ານກູໄດ້ ໄປ ກູຊິຊຸກລົດຂີ້ດຽດຄັນນີ້ແທນບ່ອນຜົວເມຍໃຫມ່ຄູ່ນີ້ດອກ ຄັນວ່າແມ່ນເລື່ອງນີ້ ເຮັດໃຫ້ມຶງຫິວເສຍນະ. ແມ່ເຖົ້າກູມາຊ່ວຍອີກມືຫນຶ່ງກໍຍັງໄດ້ນ່າ... ມຶງຫາດາເຂົ້າໄປແລ້ວ ລອງຕິດຈັກຫັ້ນ !"

ພວກເຮົາຫມົດທຸກຄົນ ຍ່າງນໍາສອງເຖົ້າຜົວເມຍໄປຍັງທ້າຍລົດເມໂດຍສານ ກາຍປ່ອງຢ້ຽມປ່ອງຫນຶ່ງ ຂ້ອຍເລີຍສ່ອງຫນ້າເຂົ້າ ໄປ ຊາຍຫນຸ່ມນອນຫງາຍຫລັງໃສ່ຕັ່ງ ມີເຈ້ຍເຊັດມືອ່ອນໆປຸ້ມອັດດັງຕາເບື້ອງຫນຶ່ງແດງແລະໃນອອກ. ຍິງສາວໃນຊຸດສີຂຽວ ຫາກໍເຊັດຕາໃຫ້ລາວແລ້ວ ນາງຫິ້ວກົງນ້ໍາກັບຄືນມາທ້າຍລົດ ແລ້ວຍື່ນໃຫ້ຜູ້ໂດຍສານຄົນຫນຶ່ງ ເພື່ອເອົາກົງຄືນໄປໄວ້ນ້ໍາສ້າງ.

ຄົນຂັບລົດຢືນກອດແຂນເສີຍ ບໍ່ຍອມຂຶ້ນໄປນັ່ງຕັ່ງຄົນຂັບ ສອງຜົວເມຍເຖົ້າລົງມືຊຸກລົດຈົນສຸດກໍາລັງ ມັນບໍ່ເຫນັງເລີຍ !

"ເຮີ້ຍ ພວກສູຫມົດຊູ່ຄົນຫັ້ນບ່າ !" ຊາຍຊະລາຮ້ອງໃສ່ "ມາຊ່ວຍກັນດຸ !"

"ເຈົ້າເວົ້າຖືກແລ້ວລະ !" ຜູ້ຊາຍຫນ້າຍາວຄືມ້າເວົ້າແລ້ວແລ່ນໄປຫາງອ້າງລົດ "ມາໄວພວກເຮົາ. ມາຫມົດທຸກຄົນນັ້ນລະ !" ລາວຮ້ອງ "ມາຊຸກຊ່ວຍກັນ ໂຮ້ ຮິວ ໆ !"

ພວກເຮົາທຸກຄົນຊ່ວຍກັນຊຸກລົດເຫນັງຍຸດ ທ້າວຂັບລົດ ເຮັດຕາຕີ່ດ້ວຍຄວາມຕົກໃຈ "ຮວ້າຍ...ຟ້າວກ່ອນ !" ມັນຮ້ອງຂຶ້ນ

"ຢ່າເຮັດຕາຍໆ ແນວນີ້ແມ້ ໃຫ້ກູໄປຈັບພວງມາໄລ ກ່ອນຕີ້ !" ມັນແລ່ນນຳລົດ ໂດດຂຶ້ນໄປຫາບ່ອນຂັບ ມືຄວາໃສ່ບ່ອນຂົມຕິດຈັກລົດກ່ອນກົ້ນຊິຮອດຕັ່ງຊ້ຳອີກ. ບັດນີ້ ພວກເຮົາທຸກຄົນຕ່າງກໍສຸມກຳລັງໃສ່ເປັນສອງເທົ່າ ດ້ວຍຄວາມຮູ້ສຶກວ່າ ເປັນຜູ້ກຳສະກຸນະການໄວ້ໃນກຳມື. ຢ່າງຫນ້ອຍກໍຊົ່ວລະຍະຫນຶ່ງ. ກະຫນົບລະຍະນີ້ຊື່ດີ ຈັ່ງຊັ້ນລົດກໍເລີຍແລ່ນໄປໄດ້ດ້ວຍຄວາມໄວພໍສົມຄວນ

"ຮວ້າຍ ! ຜູ້ຂັບຫັ້ນບ່າ. " ຊາຍຫນ້າຍາວຄືມ້າຮ້ອງໃສ່ "ປານໃດມຶງຊິຈັດການໃຫ້ຈັກຕິດເອີ້ຍ ! ມຶງຄັກໃຈແລ້ວບໍ່ວ່າຈັບບໍ່ຜິດບ່ອນນະ !"

"ຢ່າເວົ້າໂລເລແມ້" ຜູ້ຂັບລົດຕອບ "ຊິເຮັດແນວໃດໄດ້ຈັກມັນຫາກບໍ່ຕິດເອງ ຈັກມັນເກົ່າພໍແຮງ ຫມໍ້ໄຟກະບໍ່ເກັບໄຟແລ້ວ, ເວົ້າໄປຫລາຍ ຄົນຄືພວກເຈົ້າບໍ່ຮູ້ເລື່ອງຫມູ່ນີ້ດອກ !"

"ອັນນີ້ກະແມ່ນຢູ່ " ຜູ້ຊາຍຄົນຫນຶ່ງເວົ້າຂຶ້ນ, ເຂົານຸ່ງເສື້ອສີເຫລືອງອ່ອນໆ ແລະ ຄຸມດ້ວຍເສື້ອຍ່າມ ທີ່ສະແດງໃຫ້ຮູ້ວ່າເປັນພະສົງໃນສາສະຫນາພຸດ "ພວກເຮົາຄາລະວາດນີ້ດີແຕ່ຊຸກລົດນັ້ນລະ

ຊຸກບໍ່ຕ້ອງການຫຍັງ ! ນີ້ລະຄຳຂວັນຂອງບໍລິສັດລົດນີ້ !"

"ເອີ້ແມ່ນ, ມັນໂພດໄປແລ້ວເດີ້ເທື່ອນີ້" ຊາຍຫນ້າຍາວຄືມ້າ ເວົ້າ "ພວກເຮົາຢາກຊຸກ ຫລື ບໍ່ຊຸກ ມັນແມ່ນເລື່ອງຂອງພວກເຮົາ ມັນບໍ່ແມ່ນວ່າໃຜຕໍ່ໃຜ ຊິເຈົ້າກີ້ເຈົ້າການມາບອກພວກເຮົາ ວ່າລົດຮ່າຄັນນີ້ມັນເປັນຫຍັງ ! ໂອ້ຍກູເມື່ອຍຊິຕາຍແລ້ວ !"

ຜູ້ຂັບລົດງວາກຫລັງ ປາກຄາບກອກຢາ.

"ເຮີຍ ສູສອງຄົນນີ້ນ່າ" ເຂົາຮ້ອງໃສ່ຄູ່ຜົວເມຍໃຫມ່ "ໄດ້ຍິນບໍ່ວ່າຄົນໂດຍສານຜູ້ນີ້ເວົ້າແນວໃດ ? ມັນເມື່ອຍຊິຕາຍແລ້ວ. ພວກເຂົາຫມົດທຸກຄົນເມື່ອຍຍ້ອນຄວາມເຫັນແກ່ໂຕ ຂອງພວກສູທັງສອງຄົນ! ບໍ່ຫນ້າອາຍແດ່ຫວະ ? ຟັງສຽງມະຫາຊົນ ຢູ່ທາງຫລັງຫັ້ນແດ່ແມ້ລົງຈາກລົດດຽວນີ້ ໄວ... ໄປຍູ້ຊ່ວຍຫມູ່ ທັງສອງຫັ້ນ !"

"ເຈົ້າ ຍັງມີຫຍັງມາສົນບໍາພວກເຮົາອີກ. ທ້າວຜີບ້າ !" ຊາຍຫນຸ່ມເວົ້າຂຶ້ນ "ຂ້ອຍບອກເຈົ້າແລ້ວເດ້ວ່າ ຢ່າມາສົນບໍາພວກເຮົາຫາດາສຸມໃສ່ຕິດຈັກ ຫລື ເບິ່ງຫມໍ້ໄຟອີ່ສັງຕໍ່ອີ່ສັງຂອງເຈົ້າຫັ້ນ. ເຈົ້າເກັບຄ່າປີ້ແພງພໍແຮງແລ້ວ ຍັງຊິມາໃຫ້ພວກເຮົາຊຸກລົດເມື່ອຍລ້າອີກ. ຂ້ອຍມີແນວຊິເວົ້າຫລາຍຢູ່ດອກກ່ຽວກັບເລື່ອງນີ້ ໃຫ້ໄປຮອດກ່ອນຂໍເຕືອນໄວ້ກ່ອນເດີ້ !"

"ແມ່ນຫຍັງຫວາ ? ອ້າຍຂີ້ໂງ່ ?" ທ້າວແອັດລົດຮ້ອງໃສ່ "ເຈົ້າຢາກກຶກຕີອີກຊັ້ນຫວາ ?"

"ເຈົ້າບອກໃຫ້ຂ້ອຍຟັງສຽງມະຫາຊົນ" ຊາຍຫນຸ່ມຕອບຢ່າງເອັ້ງຂຶມ "ການທີ່ຂ້ອຍຂໍຮ້ອງສະເຫນີແນວນີ້ ກໍຍ້ອນຂ້ອຍຢາກໃຫ້ມັນເຂົ້າຫູເຈົ້ານໍາ ຫັ້ນລະ !"

"ຊັ່ນ ! ມຶງຍັງຄຶດວ່າ ໂຕເອງສະຫລາດຢູ່ຕວ່ານີ້ ?" ຄົນຂັບລົດຮ້ອງຂຶ້ນທັງສັ່ນປຶ້ນໆ ດ້ວຍຄວາມໂມໂຫ "ຍັງຄຶດວ່າໂຕເອງວິເສດກວ່າຫມູ່ຊັ່ນຫວາ ? ເອົາລະ ! ກູຊິໃຫ້ມຶງເຫັນເອງ. ມຶງມັກແບວນີ້ເດ໋!" ເຂົາລຸກຂຶ້ນຢືນ.

"ນັ່ງລົງບ່າ ນັ່ງລົງ !" ຊາຍຜູ້ຫນ້າຍາວຄືຫນ້າມ້າຮ້ອງໃສ່ຊື່ງປັດນີ້ ກາຍເປັນຜູ້ຕາງຫນ້າພວກເຮົາໄປແລ້ວ " ມຶງຢ່າປ່ອຍພວງມາໄລໃດ໋" ຈາກນັ້ນລາວກໍ່ງວາກມາບອກພວກເຮົາ "ເອົາລະ, ພວກເຮົາຊຸກໄວໆ ເອົາແຮງໆ ຢ່າໃຫ້ບັກຂັບມັນອອກຈາກພວງມາໄລ ຊຸກອອກທາງເລີຍ !"

ພວກເຮົາຊຸກສຸດແຮງທີ່ມີຢູ່ ລົດແລ່ນໄປຢ່າງໄວ ຕາມເສັ້ນທາງອ່າວຊື່ແຕ່ແຄບໆ. ທາງຊ້າຍມື ແມ່ນກຳແພງຫີນເຕ້ຍໆ ລຽບຕ່ຳລົງໄປແມ່ນທົ່ງນາ. ທາງດ້ານຂວາແມ່ນຫ້ວຍນ້ຳອ່າວເລິກ. ຜູ້ຂັບບໍ່ສາມາດຍອມໃຫ້ລົດແລ່ນອອກນອກເສັ້ນທາງໄດ້ ລົດຄັນຫນຶ່ງພວມແລ່ນໃກ້ເຂົ້າມາ.

"ຢຸດກ່ອນ ເວີ້ຍ !" ຄົນຂັບຮ້ອງຂຶ້ນ "ຂໍຊັດປາກບັກຜີບ້ານີ້ອີກຈັກບາດກ່ອນ "

"ບໍ່ມີທາງ ມຶງເຮັດບໍ່ໄດ້ດອກ!" ຊາຍຫນ້າຍາວຄືຫນ້າມ້າເວົ້າ "ເອົາເລີຍ ພວກເຮົາຊຸກໄປເລີຍເອົາລົດຂີ້ຫມ້ຽງແລ່ນໃຫ້ໄດ້." ພວກເຮົາຊຸກເອົາແທ້ເອົາວ່າ ຕິດກັບລົດອ້ອຍຕ້ອຍ. ດ້ວຍຄວາມຂຶ້ນໃຈແຮງພວກເຮົາລືມໄປວ່າ ຄັນຜູ້ຂັບມັນຢາກຢຸດລົດມັນກໍ່ເຮັດໄດ້ໂລດ ພໍພຽງແຕ່ຢຽບຫ້າມທໍ່ນັ້ນ. ປັດນີ້ແຕ່ລະຄົນພວກເຮົາທັນໃຈກັບທີ່ດທອບຫມົດແລ້ວ ແຕ່ບໍ່ມີຫຍັງຈະມາຍັບຍັ້ງໄດ້.

"ຮວ້າຍ ແມ່ນພວກເຈົ້າເປັນຫຍັງ ມາຄືພາກັນເຂົ້າຂ້າງບັກອີ້ສູດນີ້ຫມົດ !" ຄົນອັບຮ້ອງໃສ່ພວກເຮົາ "ພວກເຈົ້າເມື່ອຍຊີຕາຍຢູ່ຫັ້ນ ກໍຍ້ອນມັນຫັ້ນຕວ່າ !"

"ມຶງບໍ່ຕ້ອງວ່າພວກກູດອກ" ຊາຍຫນ້າຍາວຄືມ້າຕອບ "ມຶງອັບດີໆ ຫັ້ນ ! ມຶງວາງມືຈາກພວງມາໄລເບິ່ງເທາະ ມຶງແຈບຫມາໂລດລະ !"

"ແມ່ນແລ້ວ !" ຊາຍຜູ້ຄຸມຜ້າຄູບາເວົ້າຕື່ມ "ມຶງຊິໄດ້ໄປເມືອງໄກບໍ່ອັນຢ່າງບໍ່ຮູ້ເມື່ອລະ !"

ພໍດີລົດເມໃຫຍ່ຫຍັບເຂົ້າມາໃກ້ເກືອບຈະສວນທາງຢູ່ແລ້ວ, ລົດພວກເຮົາສະດຸດຈຶກບາດຫນຶ່ງ ຊັດເອົາພວກເຮົາເສຍຫລັກໄປຫມົດ, ກ່ອນຫນ້ານັ້ນຫນ້ອຍດຽວ ຂ້ອຍທັນເຫັນວ່າ ຫມໍອັບໃຊ້ຫ້າມລໍ້. ພວກເຮົາແນມເບິ່ງຫນ້າກັນດ້ວຍຄວາມຜິດຫວັງ.

"ເອົາລະ ! ຢ່າງຫນ້ອຍ ພວກເຮົາກໍມາຮອດທາງແບ່ງແລ້ວ" ຊາຍຫນ້າຍາວຄືມ້າ ໃຫ້ຂໍ້ສັງເກດ "ພວກເຮົາຊຸກມາໄດ້ຕັ້ງສີ່ໄມ, ຂ້ອຍວ່າ ພວກເຮົາເຮັດໄດ້ຄັກແລ້ວ ແຕ່ຂ້ອຍພໍລະ ຊິຕໍ່ລົດຄັນໃຫມ່ໄປດອກ !"

ລາວເດ່ປີ້ເອົາຫີບໃຫ້ແອັດລົດ, ດຶງເອົາກົງເປ້ຂຶ້ນໃສ່ຫລັງແລ້ວມຸ່ງຫນ້າໄປຫາທາງແບ່ງ, ຂ້ອຍຕົກລົງໃຈ ໄປຂີ່ລົດຄັນອື່ນ, ຊາຍຜູ້ຢູ່ໃນໂສ້ງຊາວບາກໍເຮັດຄືກັນ, ສາວຜູ້ນຸ່ງຊຸດກິລາ ແລະ ຄົນອື່ນໆອີກຈຳນວນຫນ້ອຍຫນຶ່ງຕິດຕາມໄປ, ສ່ວນພວກທີ່ເຫລືອຍັງ ຈະຊຸກຕໍ່ອີກເພາະພວກເຂົາເຊື່ອວ່າລົດເກືອບຊິຕິດໄດ້ຢູ່ແລ້ວ, ອີກພວກຫນຶ່ງໄປເວົ້າກັບຄົນອັບ ບໍ່ໃຫ້ເຮັດຫຍັງກັບຄູ່ຜົວເມຍ ເພາະພວກເຂົາບໍ່ຢາກເສຍ

ເງິນຄ່າລົດໄປລ້າ. ທັງສອງຜົວເມຍ ຫນ້າດ້ານຍັງ ຄົງຢູ່ໃນລົດຕໍ່. ຊາຍຜູ້ຢູ່ໃນໂສ້ງຊາວນາຍ່າງໄປເອົາຫີບຂອງລາວ ແລ້ວເອົ້າມາສົມຫີບພວກເຮົາຢູ່ທາງແບ່ງ.

"ພວກເອົາ ນັ່ງກິນເອົ້າທ່ຽງເສີຍ !" ລາວລາຍງານ "ມີຊີ້ນງົວແຫ້ງ ຕ່ອນຫນຶ່ງ !"

"ແລ້ວ ບັກຂັບລົດເດ້ ເປັນແນວໃດ ?"

"ຄືວ່າ ມັນຊິໃຫ້ເອົາກິນເອົ້າແຊບໆ ໄປກ່ອນ, ປາກົດວ່າພວກເອົາມີເຫລົ້າແກ້ວຫນຶ່ງນຳອີກ !"

ຂ້ອຍງວາກ ໄປເບິ່ງລົດເມແລ່ນກ່ານ ເຫັນທ້າວຄົນຂັບລົດໄຂຝາປົກຈັກລົດອອກ ແລະ ພະຍາຍາມເອົາເຫລັກໄຂຄວງອັນຫນຶ່ງແຕະຫັ້ນແຕະຫນີ້ພໍຄື ຫລາຍກວ່າຊິແປງແທ້ໆ. ຫມໍແອັດລົດເອົາກ່ານຕື່ມໃສ່ເຕົ່າ ແລະ ຫມຸນມືຫັນເປົ່າລົມຢ່າງແຮງ. ເບິ່ງຊົງມັນຊິບໍ່ໄວ້ໃຈຈັກພໍປານໃດ. ຂ້ອຍສັງເກດເຫັນວ່າ ເຖົ້າພໍ່ນາກັບເມຍລາວພາກັນຍ່າງເຕື່ອຍໆ ກັບເມືອເຮືອນຂອງເອົາເຈົ້າແລ້ວ.

# ກ່ຽວກັບນັກຂຽນ

**ມີຊິມະ ຢູກິໂອະ ( Mishima Yukio )**

ເກີດປີ 1925, ກືກັນໂດຍທົ່ວໄປວ່າ ເປັນນັກຂຽນຢູ່ໃນແຖວໜ້າ ສຳເລັດຈາກມະຫາວິທະຍາໄລໂຕກຽວ ເມື່ອປີ 1947 ແຕ່ມີຜົນງານວັນນະກຳພິມອອກເປັນເທື່ອທຳອິດໃນປີ 1944 ຄືເລື່ອງ The Flowering Grove. ທຳອິດເປັນພະນັກງານຂອງລັດຖະບານພຽງໄລຍະສັ້ນໆ ຕໍ່ມາກໍອຸທິດຕົນເພື່ອການສ້າງສັນວັນນະກຳຈົນຮອດປີ 1970 ກໍຂ້າຕົວຕາຍ. ມີຊິມະ ປະສົບຄວາມສຳເລັດ ຍ້ອນໜັງສືຂອງເຂົາ ຜົນລະ ບາສະພາບແນວຄິດ ແລະ ພຶດຕິກຳຂອງຊາວໜຸ່ມຍີ່ປຸ່ນສະໄໝຫລັງສົງຄາມໂລກຄັ້ງທີສອງ, ນັ້ນຄືແນວຄິດທີ່ເຕັມໄປດ້ວຍຄວາມສັບສົນ, ຄວາມສິ້ນຫວັງ ແລະ ຄວາມຮູ້ສຶກທີ່ເຈັບປວດອ້າງ ວ້າງອັນເປັນອາລົມຈິດຂອງຊາວໜຸ່ມຍີ່ປຸ່ນໂດຍ ທົ່ວໄປຕອນ ຫລັງສົງຄາມ

ເລື່ອງສັ້ນ " ໃນຜ້າອ້ອມ " ( Swaddling Clothes ) ເປັນເລື່ອງໜຶ່ງທີ່ນັກອ່ານທົ່ວໄປທັງຍີ່ປຸ່ນ ແລະ ຕ່າງປະເທດຮູ້ຈັກດີ.

**ຊິກະ ນາໂອຢະ ( Shiga Naoya )**

ເກີດໃນຄອບຄົວຊັ້ນສູງໃນປີ 1883, ຮຽນໂຮງຮຽນມັດທະຍົມ Peer's Shool ອັນເປັນໂຮງຮຽນດຽວກັບ ມິຊິມະ ຢູກິໂອະ. ຕໍ່ມາເຂົ້າມະຫາວິທະຍາໄລ ໂຕກຽວແຫ່ງພະຈັກກະພັດ ພາກວິຊາວັນນະຄະດີອັງກິດ ແຕ່ຮຽນບໍ່ທັນຈົບກໍອອກມາເພື່ອອຸທິດຕົນໃຫ້ແກ່ງານສ້າງສັນວັນນະສິນ ໂດຍຮ່ວມມືກັບນັກຂຽນຫນຸ່ມ ຈັດພິມວາລະສານວັນນະຄະດີ ຊື່ວ່າ Shirakaba ຊຶ່ງດຳເນີນມາຈົນຮອດຕົ້ນຊຸມປີ 1920. ສັດຈະທັດນິຍົມໃນວັນນະກຳຂອງເຂົາມີອິດທິພົນ ຕໍ່ວັນນະຄະດີສະໄຫມໃຫມ່ຂອງຍີ່ປຸ່ນ ພາຍຫລັງປີ 1920 ເປັນຕົ້ນມາ. ເຂົາເປັນນັກຂຽນທີ່ຂຽນເລື່ອງສັ້ນ ເປັນສ່ວນໃຫຍ່ ຊຶ່ງຕະຫລອດສີ່ທົດສະວັດ ເລື່ອງສັ້ນຂອງເຂົາກໍ່ຖືກຜະລິດອອກມາຢ່າງຕໍ່ເນື່ອງ. ເລື່ອງ "ເຊເບກັບຫມາກນ້ຳເຕົ້າ " ເປັນເລື່ອງສັ້ນທີ່ຂຽນແບບງ່າຍໆ ສັ້ນໆ, ລະອຽດອ່ອນ ແລະເຈືອໄວ້ດ້ວຍການສຽດສີສັງຄົມ.

**ໂມຣິ ໂອກາອິ ( Mori Ogai )**

ເກີດປີ 1862 ເສຍຊີວິດປີ 1922. ເປັນແພດທະຫານສັງກັດໃນກອງທັບແຫ່ງຈັກກະພັດ, ເຄີຍໄປສຶກສາເພີ່ມເຕີມທີ່ປະເທດເຢຍລະມັນໃນປີ 1884, ດັ່ງນີ້ ຈຶ່ງເວົ້າກັນວ່າ ເປັນນັກຂຽນຜູ້ທຳອິດທີ່ໄດ້ໄປສຳຜັດກັບສັງຄົມ - ວັດທະນະທຳຂອງເອີຣົບດ້ວຍຕົນເອງ. ຜົນງານຂັ້ນຕົ້ນແມ່ນການແປບົດກະວີ ແລະ ເລື່ອງສັ້ນເຢຍລະມັນ. ຜົນງານປະດິດແຕ່ງຫົວທຳອິດຂອງເຂົາພິມອອກເມື່ອປີ 1890 ( The Dancing Girl ) ເປັນທີ່ປະຕິເສດບໍ່ໄດ້ວ່າ ເຂົາເປັນຜູ້ມີບົດບາດລີ

ເລີ່ມໃນການຂະຫຍາຍຕົວຂອງວັນນະຄະດີ ສະໄຫມໃຫມ່ຂອງຍີ່ປຸ່ນ, ແລະ ເປັນຜູ້ທີ່ນຳເອົາຮູບແບບເລື່ອງສັ້ນ ຂອງຊາວຕາເວັນຕົກມາສູ່ຍີ່ປຸ່ນ. ເລື່ອງ "ການປັບປຸງ" ນີ້ຂຽນເມື່ອປີ 1910 ພັນລະນາພາບນະຄອນໂຕກຽວທີ່ພວມຢູ່ໃນໄລຍະກໍ່ສ້າງປັບປຸງ ອັນເປັນພາບຕົວແທນຂອງປະເທດຍີ່ປຸ່ນທີ່ພວມຢູ່ໃນໄລຍະປັບປຸງກໍ່ສ້າງ ພາຍຫລັງ ໄຊຊະນະໃນສົງຄາມຕໍ່ສູ້ກັບລັດເຊຍ.

## ນາງາອິ ກາຟູ ( Nagai Kafu )

ເກີດຢູ່ໂຕກຽວ ປີ 1879 ແລະ ເສຍຊີວິດປີ 1959, ເປັນຄົນທີ່ສືບເຊື້ອສາຍມາຈາກຕະກຸນຊາມູໄຣ ແຕ່ກໍເຊື່ອມຊຶມເອົາແນວຄິດຈິດໃຈຂອງຊົນຊັ້ນພໍ່ຄ້າພານິດອັນເປັນພື້ນຖານວັດທະນະທຳສະໄຫມເອໂດະ ເຂົາເຄີຍໄປສະຫະລັດອາເມລິກາ ແລະ ປະເທດຝຣັ່ງ (ປີ 1907) ແລ້ວກໍມີຜົນງານວັນນະກຳ ສຳຄັນອອກມາຕອນຕົ້ນສະຕະວັດທີ 20 ໂດຍມີອິດທິພົນຂອງຝຣັ່ງຢ່າງແຈ່ມແຈ້ງ. ຜົນງານເດັ່ນເລື່ອງຫນຶ່ງຊື່ວ່າ " The River Sumida " ເລື່ອງສັ້ນຂອງເຂົາມີຮ່ອງຮອຍອິດທິພົນຂອງ Maupassant ແລະ Musset ຊຶ່ງເປັນນັກຂຽນຝຣັ່ງຍຸກສະຕະວັດທີ 19. ເລື່ອງ "ດອກໄຂ່ມຸກປ່ຽນສີ" ຂຽນເມື່ອເຂົາອາຍຸ 52 ປີ ແລະ ພິມອອກໃນປີ 1931.

## ນາງາອິ ທັດຊຸໂອະ ( Nagai Tatsuo )

ເກີດປີ 1904 . ເລີ່ມຂຽນເລື່ອງສັ້ນ ແລະ ບົດລະຄອນເມື່ອອາຍຸຊາວປີປາຍ. ອາຊີບຕົ້ນຕໍຄືເປັນທັງນັກຫນັງສືພິມ ແລະ ນັກຂຽນທີ່ມີ

ຊື່ສຽງໂດ່ງດັງໃນຍີ່ປຸ່ນ. ການຂຽນຂອງເຂົາເນັ້ນການບັນຍາຍທີ່ສະທ້ອນພາບຊີວິດຄົນທຳມະດາ ທີ່ມີເອກະລັກໜ້າສົນໃຈ ແລະ ບາງຄັ້ງກໍເປັນຕາຫົວປະສົມກັນໄປ " ນາງໃນອູບແກ້ວ " ເປັນເລື່ອງທີ່ຂຽນດ້ວຍລີລາງ່າຍດາຍ, ໜ້າຮັກ ແຕ່ມີຄວາມເລິກແລບໃຫ້ນັກອ່ານເຈາະຈົ້ມ.

**ຄາວະບາຕະ ຢາສຸນາຣິ ( Kawabata Yasunari )**

ເກີດປີ 1899 ແລະ ເປັນກຳພອຍແຕ່ຍັງເປັນເດັກນ້ອຍອາຍຸ 3-4 ປີ, ເລີ່ມຂຽນບົດຄວາມ ແລະ ເລື່ອງສັ້ນ ລົງໃນວາລະສານແຕ່ຕອນຮຽນຢູ່ຊັ້ນມັດທະຍົມ ຊຶ່ງໄລຍະເວລາດັ່ງກ່າວ ເຂົາໃຊ້ເວລາສ່ວນໃຫຍ່ອ່ານວັນນະຄະດີຂອງປະເທດໃນກຸ່ມສະແກນດິເນເວຍ. ເມື່ອອອກຈາກໂຮງຮຽນມັດທະຍົມໃນປີ 1920 ເຂົາເລືອກຮຽນພາກວິຊາວັນນະຄະດີອັງກິດໃນມະຫາວິທະຍາໄລໂຕກຽວ ແຫ່ງພະຈັກກະພັດ, ແລະ ໃນປີກັດມາ ກໍຮ່ວມກັບເພື່ອນນັກສຶກສາຈັດພິມວາລະສານກ່ຽວກັບວັນນະຄະດີ. ລະຫວ່າງປີ 1923 ຫາ 1924 ເຂົາເຂົ້າຮ່ວມເປັນຄະນະ ຈັດທຳວາລະສານ ກ່ຽວກັບວັນນະຄະດີສອງສະບັບ ຊຶ່ງຖືກັນວ່າ ເປັນການເລີ່ມຕົ້ນກະແສວັນນະຄະດີແນວໃໝ່ໃນຍີ່ປຸ່ນ ( Shinkankaku-ha ).

ນອກຈາກເປັນນັກຂຽນແລ້ວ ຄາວະບາຕະ ຍັງເປັນນັກວິຈານ, ເປັນຜູ້ຄົ້ນຫານັກຂຽນໜຸ່ມ ຊຶ່ງໃນຈຳນວນນີ້ລວມທັງ ມິຊິມະ ຢຸກິໂອະ. ໃນປີ 1948 ເຂົາໄດ້ຮັບເລືອກເປັນປະທານສະໂມສອນນັກຂຽນ ຫລື P.E.N. Club ປະຈຳຍີ່ປຸ່ນ. ເລື່ອງສັ້ນທີ່ພິມຢູ່ໃນປຶ້ມຫົວນີ້ ໄດ້ຮັບການ

ພິມອອກເປັນເທື່ອທຳອິດໃນປີ 1953 ເມື່ອເຂົາອາຍຸ 54 ປີ. ເຂົາເສຍຊີວິດໃນປີ 1972 ດ້ວຍການຂ້າຕົວຕາຍ.

**ຊາໂຕມິ ຕົນ ( Satomi Ton )**

ເກີດປີ 1888, ເປັນນັກຂຽນສັງກັດກຸ່ມທີ່ປະກາດຕົນເອງວ່າເປັນຜູ້ຕໍ່ຕ້ານແນວຄິດວັດຖຸນິຍົມ ແລະ ແນວຄິດເບິ່ງໂລກໃນແງ່ລົບຂອງກຸ່ມທີ່ຊື່ວ່າ ນັກທຳມະຊາດນິຍົມ. ເຂົາເອງນັ້ນ ເປັນຄົນປະເພດນອກຮີດ ຫລື ນອກຫລັກການຂອງຄົນສ່ວນໃຫຍ່ ນັບແຕ່ເລີ່ມ ຕົ້ນຊີວິດໃນວົງການຂີດຂຽນ. ເວລາຕໍ່ມາ ເຂົາໄດ້ພັດທະນາແນວຄວາມຄິດທີ່ເຂົາເອງເອີ້ນວ່າ " ປັດຊະຍາແຫ່ງຄວາມຈິງໃຈ" ຊຶ່ງຢູ່ໃນນິດວັນນະກຳເດັ່ນຂອງເຂົາ ທີ່ອີງລັດທິຂົງຈື້ ນັ້ນ ປາກົດຄື ຢາກກືວ່າ ບໍ່ຄວນປະນາມພຶດຕິກຳໃດໆ ກ້າວ່າຜູ້ກະທຳໄດ້ເຮັດໄປ ດ້ວຍຄວາມ ເຕັມໃຈ.

ເລື່ອງຊຸບາກິ ພິມເທື່ອທຳອິດປີ1923 ເມື່ອຜູ້ຂຽນອາຍຸ 35 ປີ. ມັນສະທ້ອນໃຫ້ເຫັນປັດຊະຍາຂອງເຂົາອີກພາກສ່ວນຫນຶ່ງ ນັ້ນຄືຄວາມເຊື່ອໃນພະລັງຂອງຄຸນຄ່າວັນນະຄະດີ. ເລື່ອງນີ້ຂຽນຂຶ້ນພາຍຫລັງເກີດແຜ່ນດິນໄຫວຢ່າງຮ້າຍແຮງໃນເຂດໂຕກຽວ - ໂຢໂກຮາມາ, ສາເຫດທີ່ພາໃຫ້ແມ່ຍິງຢ້ານຈົນຂວັນຫນີຄືງນັ້ນ ກໍເປັນທີ່ແຈ່ມແຈ້ງແລ້ວ ກ້າບໍ່ລືມກັນວ່າ ຊາວຍີ່ປຸ່ນນັ້ນ ມີຄວາມເຊື່ອງົມງວາຍຄືຢ້ານດອກຊຸບາກິ ທັງນີ້ ເພາະເມື່ອດອກຊຸບາກິບານ ດົນໄປມັນຈະບໍ່ຫລົ່ນເທື່ອລະກີບ ແຕ່ຫມົດທັງດອກຫລຸດຫລົ່ນຈາກຂວັ້ນຄ້າຍຄືຫົວຄົນກືກຕັດຂາດທີ່ຄໍ. ດອກຊຸບາກິນີ້ ຄ້າຍຄືດອກໄມ້ຊະນິດຫນຶ່ງຢູ່ພາກເຫນືອຂອງລາວ ຊຶ່ງຄົນທ້ອງຖິ່ນເອີ້ນວ່າ ດອກຊາ.

**ຮາຢາມະ ໂຢຊິກິ ( Hayama Yoshiki )**

ເກີດປີ 1894 ແລະ ເສຍຊີວິດໃນປີ 1945 ຢ່າງຜູ້ອະນາຖາ ທີ່ສຸດເພາະເຂົາເປັນນັກຂຽນກຳມາຊີບ, ມີຊີວິດວົນວຽນຢູ່ກັບຄຸກ ແລະບົດວັນນະກຳຈຳນວນຫລາຍຂຽນຂຶ້ນ ຂະນະທີ່ເຂົາຖືກຈັບກຸມຄຸມຂັງ. ເຂົາຮຽນໃນມະຫາວິທະຍາໄລວາເຊະດະ ແຕ່ຖືກໄລ່ອອກ ເພາະໄປຮຽນບໍ່ເປັນປົກກະຕິ. ຫລັງຈາກນັ້ນ ກໍໄປເປັນກຳມະກອນໃນເຮືອຂົນສິນຄ້າ ແລະ ເຮືອຂົນຖ່ານຫີນ, ຈາກປະສົບການນີ້ ເຂົາຂຽນນະວະນິຍາຍເດັ່ນຊື່ວ່າ " ຜູ້ອາໄສຢູ່ກາງທະເລ " ອອກຈາກທະເລ ແລ້ວເຂົາປະກອບອາຊີບຫລາຍຢ່າງ, ເປັນພະນັກງານຂັ້ນຕ່ຳ, ເປັນກຳມະກອນໃນໂຮງໄຟຟ້າ ແລະ ໂຮງງານຊີມັງ. ເລື່ອງສັ້ນ "ຈົດຫມາຍໃນຖັງຊີມັງ " ຂຽນຈາກປະສົບການຊີວິດຂອງເຂົາ ແລະ ພິມເປັນເທື່ອທຳ ອິດໃນປີ 1926 ເມື່ອເຂົາອາຍຸ 32 ປີ.

**ຮາຢາຊິ ຟູມິໂກະ ( Hayashi Fumiko )**

ເກີດປີ 1904 ເປັນລູກສາວຂອງຄອບຄົວພໍ່ຄ້າພະເນຈອນທີ່ເຄື່ອນຍ້າຍໄປຕາມທ້ອງຖິ່ນຕ່າງໆ ໃນທົ່ວປະເທດ. ຍ້ອນເງື່ອນໄຂຊີວິດບໍ່ອຳນວຍຈຶ່ງຮຽນຈົບຂັ້ນປະຖົມ ແລ້ວກໍຫາລ້ຽງຊີບໂດຍເຮັດວຽກທຸກຢ່າງຊະນິດບໍ່ເລືອກ, ແຕ່ມີຄວາມຮັກວັນນະຄະດີໃນຫົວໃຈ. ພໍມີເວລາຫວ່າງຈາກວຽກງານ ນາງກໍຂຽນເລື່ອງສັ້ນ, ບົດກະວີ ແລະນິທານສຳລັບເດັກ ເລື່ອງສັ້ນແລະ ນະວະນິຍາຍຂອງນາງ ພັນລະນາຄວາມທຸກຍາກກາກກຳ ຂອງຊົນຊັ້ນຕ່ຳໃນນະຄອນໂຕກຽວ ຊຶ່ງນາງເອງເຄີຍປະສົບມາດ້ວຍຕົນເອງ. ນາງຂຽນຂຶ້ນດ້ວຍຄວາມຮູ້ສຶກເຫັນ

ອີກເຫັນໃຈ ຄົນທຸກຍາກ ແລະ ຂຽນຕາມແນວຄິດສັດຈະ ທັດນິຍົມ. ພາຍຫລັງສົງຄາມໂລກຄັ້ງທີສອງ ວັນນະກຳຂອງນາງຈຶ່ງໄດ້ຮັບຄວາມຍອມຮັບນັບຖືໂດຍທົ່ວໄປ ແລະ ເມື່ອນາງເສຍຊີວິດ ລົງໃນປີ 1951 ນັ້ນກໍ່ກັບວ່າ ນາງເປັນນັກຂຽນແມ່ຍິງ ທີ່ມີຄົນນິຍົມທີ່ສຸດ.

ເລື່ອງສັ້ນ "ໃນກາງເມືອງ" ພິມອອກເປັນເທື່ອທຳອິດປີ 1948 ເມື່ອນາງມີອາຍຸ 44 ປີ.

**ອິບຸເຊະ ມາສຸຈິ ( Ibuse Masuji )**

ເກີດປີ 1898, ເຂົາເລີ່ມຕົ້ນຂຽນບົດກະວີກ່ອນ ແຕ່ຕໍ່ມາປ່ຽນໄປຂຽນນະວະນິຍາຍ ແລະ ສາລະຄະດີ. ໃນຕົ້ນຊຸມປີ 1930 ເຂົາເຂົ້າຮ່ວມໃນກຸ່ມນັກຂຽນທີ່ມຸ່ງປາຍປາກກາ ເພື່ອການປົດປ່ອຍວັນນະກຳອອກຈາກອິດທິພົນຂອງກຸ່ມນັກຂຽນກຳມາຊີບ ແລະ ເນັ້ນຄວາມສົມບູນແບບຂອງວາດສຳນວນທາງວັນນະສິນ, ເຂົາຈຶ່ງເປັນ ນັກຂຽນທີ່ມີຊື່ສຽງດ້ານວາດສຳນວນລະອຽດອ່ອນ ແລະ ມີເອກະລັກສະເພາະດ້ານຕະຫລົກສຽດສີ.

ເລື່ອງ "ລົດພະລັງກ່ານ" ພິມອອກເປັນເທື່ອທຳອິດໃນປີ 1952 ເມື່ອຜູ້ຂຽນອາຍຸ 54 ປີ.